# ຄູ່ມືຄູ

# ການຈັດກິດຈະກໍາ ການຮຽນ-ການສອນ ແລະ ການຕິດຕາມພັດທະນາການເດັກ

## ຊັ້ນອະນຸບານສຶກສາປີທີ 3

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ຄູ່ມືຄູ ການຈັດກິດຈະກໍາການຮຽນ-ການສອນ ແລະ ການຕິດຕາມພັດທະນາການເດັກ ຊັ້ນອະນຸບານສຶກສາປີທີ 3 2016

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈໍາລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ..............
ຂະໜາດ 21x29,7 ຊມ ຈໍານວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2015
ສະຫງວນລິຂະສິດ

# ປື້ມຄູ່ມື

## ການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມພັດທະນາການເດັກ

## ຊັ້ນອະນຸບານສຶກສາປີທີ 3


ຮຽບຮຽງໂດຍ: ປາກຮຽນ ຫຼວງໄຊຊະນະ
ແສງມະນີ ສຸພັນທະລິບ
ຈຸນລາ ເຂັມທອງ
ສະຫວຽນ ສີຍະວັນນຸວົງ
ວຽງແກ້ວ ພົມມະຈັກ
ອ່າງຄຳ ບຸດສະດີ
ມະນີວອນ ອາດຜາສຸກ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ສີພາພອນ ມະນີວັນ

ເອົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---====000====----

7498-

ກະຊວງສຶກສາທິການ ແລະ ກິລາ — ເລກທີ ສສກ.ສວສ

ນະຄອນຫຼວງວຽງຈັນ, ວັນທີ 09 DEC 2015

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ**

**ສຳລັບຊັ້ນອະນຸບານສຶກສາ ປີທີ 3**

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 3 ສະບັບປະຕິຮູບ ໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ລິຕູ ບົວປາວ

# ຄຳນຳ

ຄູ່ມືການຈັດກິດຈະກຳການຮຽນການສອນ ແລະ ການຕິດຕາມພັດທະນາການເດັກ ຊັ້ນອະນຸບານສຶກສາປີທີ 3 ເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອໃຫ້ຄູສອນອະນຸບານນຳໃຊ້ເຂົ້າໃນການຈັດການຮຽນ-ການສອນ ໃຫ້ມີຄວາມແທດເໝາະກັບພັດທະນາການ ແລະ ການຮຽນຮູ້ຂອງເດັກ,ສະພາບແວດລ້ອມ ແລະ ສະພາບຄວາມເປັນຈິງຂອງທ້ອງຖິ່ນ ໂດຍອີງໃສ່ຫຼັກການຈັດກິດຈະກຳການຮຽນແບບບູລະນາການ, ເອົາເດັກເປັນໃຈກາງ, ສົ່ງເສີມທັກສະພື້ນຖານການເຄື່ອນໄຫວໃນກິດຈະກຳການຫຼິ້ນ ແລະ ຮຽນຕາມລຳດັບ 1 ແຕ່ງ່າຍໄປຫາຍາກ, ໃຫ້ເດັກໄດ້ພັດທະນາຕາມສະມັດຖະພາບການກຽມຄວາມພ້ອມສຳລັບເດັກຊັ້ນອະນຸບານສຶກສາປີທີ 3.

ຄູ່ມືຄູເຫຼັ້ມນີ້ໄດ້ກ່າວເຖິງຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຫຼັກສູດ, ການຈັດການຮຽນ-ການສອນເດັກຊັ້ນອະນຸບານສຶກສາປີທີ 3, ການຕິດຕາມປະເມີນຜົນພັດທະນາການ, ການເລືອກອຸປະກອນການຮຽນ-ການສອນ ແລະ ເຄື່ອງຫຼິ້ນ, ປຶ້ມອ່ານເສີມປະສົບການສຳລັບເດັກອາຍຸ 5-6 ເຊິ່ງປະກອບມີ 4 ພາກດັ່ງນີ້:

ພາກທີໜຶ່ງ: ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຫຼັກສູດຊັ້ນອະນຸບານສຶກສາປີທີ 3 ປະກອບມີຈຸດໝາຍການສຶກສາຊັ້ນອະນຸບານສຶກສາ, ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 5-6 ປີ. ຫຼັກການຈັດການສຶກສາຂັ້ນອະນຸບານ, ການຈັດກຸ່ມອາຍຸເດັກ, ການຈັດເວລາຮຽນ ແລະ ເນື້ອໃນຄວາມຮູ້ຄວາມເຂົ້າໃຈກ່ຽວກັບຫຼັກສູດ ແລະໜ່ວຍການສອນ 1-8.

ພາກທີສອງ: ການຈັດການຮຽນ-ການສອນ ເດັກຊັ້ນອະນຸບານສຶກສາປີທີ 3 ປະກອບມີຄວາມເຂົ້າໃຈກ່ຽວກັບພັດທະນາການຮຽນຮູ້ຂອງເດັກ, ການຈັດການຮຽນ-ການສອນ ແລະ ປະສົບການທີ່ຄວນສົ່ງເສີມຕາມຄຸນລັກສະນະພັດທະນາການເດັກອາຍຸ 5-6 ປີ, ການຈັດກິດຈະກຳຫຼິ້ນ, ການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ, ການຈັດກິດຈະກຳສົ່ງເສີມການຄົ້ນຄິດ. ການຈັດກິດຈະກຳເສີມ, ການຈັດກະດານຂ່າວ ແລະ ການຈັດສະແດງຜົນງານເດັກ, ການຈັດສະພາບແວດລ້ອມສຳລັບເດັກ.

ພາກທີສາມ: ການຕິດຕາມພັດທະນາການປະກອບມີຄວາມໝາຍການຕິດຕາມພັດທະນາການ, ຫຼັກການຕິດຕາມພັດທະນາການ, ການບັນທຶກຂໍ້ມູນການຕິດຕາມພັດທະນາການ.

ພາກທີສີ່: ການເລືອກອຸປະກອນການຮຽນ-ການສອນແລະການເລືອກປຶ້ມອ່ານເສີມປະສົບການ.

ນອກນັ້ນປຶ້ມເຫຼັ້ມນີ້ຈະຊ່ວຍໃຫ້ຜູ້ບໍລິຫານການສຶກສາ ແລະ ພະນັກງານວິຊາການທຸກຂັ້ນ ແລະ ຜູ້ກ່ຽວຂ້ອງ, ມີຄວາມເຂົ້າໃຈ ແລະ ສາມາດໃຫ້ຄຳແນະນຳແກ່ຄູສອນໃນການນຳໃຊ້ຫຼັກສູດ, ການຈັດການຮຽນ-ການສອນ ເດັກຊັ້ນອະນຸບານສຶກສາປີທີ 3, ການຕິດຕາມພັດທະນາການ, ການເລືອກອຸປະກອນການຮຽນ-ການສອນ ແລະ ປຶ້ມອ່ານເສີມປະສົບການສຳລັບເດັກອາຍຸ 5-6 ປີໃຫ້ມີຄຸນນະພາບ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມເຫຼັ້ມນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມດັ່ງກ່າວໃຫ້ນັບມື້ດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


ໜ້າ

**ພາກທີ I: ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຫຼັກສູດຊັ້ນອະນຸບານສຶກສາປີທີ 3**

1. ຈຸດໝາຍການສຶກສາເດັກຂັ້ນອະນຸບານ 1
2. ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 5-6 ປີ 1
3. ຫຼັກການຈັດການສຶກສາຂັ້ນອະນຸບານ 2
4. ການຈັດກຸ່ມອາຍຸເດັກ ແລະ ການຈັດເວລາຮຽນ 2
5. ເນື້ອໃນຄວາມຮູ້ໃນຫຼັກສູດ ແລະ ໜ່ວຍການສອນທີ 1-8 4

**ພາກທີ II: ການຈັດການຮຽນ-ການສອນໃນຊັ້ນອະນຸບານສຶກສາປີທີ 3**

1. ຄວາມເຂົ້າໃຈກ່ຽວກັບພັດທະນາການຮຽນຮູ້ຂອງເດັກ 85
2. ການຈັດການຮຽນ-ການສອນຕາມສະມັດຖະພາບການກຽມຄວາມພ້ອມ 86
3. ການຈັດກິດຈະກຳການຫຼິ້ນ 89
4. ການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ 91
5. ການຈັດກິດຈະກຳສົ່ງເສີມການຄົ້ນຄິດ 92
6. ການຈັດກິດຈະກຳສົ່ງເສີມປະສົບການຊີວິດ 95
7. ການຈັດກະດານຂ່າວ ແລະ ການຈັດສະແດງຜົນງານ 96
8. ການຈັດສະພາບແວດລ້ອມສຳລັບການຫຼິ້ນ ແລະ ຮຽນ 97
9. ການຈັດການສຶກສາຮຽນຮ່ວມ 98

**ພາກທີ III: ການຕິດຕາມປະເມີນຜົນພັດທະນາການເດັກຊັ້ນອະນຸບານສຶກສາປີທີ 3**

1. ຄວາມໝາຍການຕິດຕາມພັດທະນາການເດັກ 102
2. ຫຼັກການຕິດຕາມພັດທະນາການເດັກ 102
3. ການບັນທຶກຂໍ້ມູນການຕິດຕາມພັດທະນາການເດັກ 103
4. ການບັນທຶກຂໍ້ມູນປຶ້ມຕິດຕາມຜົນງານສິລະປະສ້າງສັນປະຈຳເດືອນ 108
5. ການບັນທຶກຂໍ້ມູນປຶ້ມຕິດຕາມພັດທະນາການເດັກປະຈຳພາກຮຽນ 109
6. ການບັນທຶກຂໍ້ມູນປຶ້ມຮຽກຊື່ ແລະ ບັນທຶກພັດທະນາການເດັກ 117
7. ການເກັບຜົນງານໃນແຟ້ມສະສົມຜົນງານຂອງເດັກ 120

**ພາກທີ IV: ການເລືອກອຸປະກອນການຮຽນ-ການສອນ ແລະ ເຄື່ອງຫຼິ້ນ, ການເລືອກປຶ້ມອ່ານເສີມປະສົບການຊັ້ນອະນຸບານສຶກສາປີທີ 3**

1. ການເລືອກອຸປະກອນການຮຽນ ແລະ ເຄື່ອງຫຼິ້ນ 122
2. ການເລືອກປຶ້ມອ່ານເສີມປະສົບການ 124

- ອະທິບາຍຄຳສັບ 125
- ເອກະສານອ້າງອີງ 125

# ພາກທີ I: ຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບຫຼັກສູດຊັ້ນອະນຸບານສຶກສາປີທີ 3

## 1. ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາ

ການສຶກສາຊັ້ນອະນຸບານສຶກສາເປັນການພັດທະນາເດັກອາຍຸ 3 ຫາ 6 ປີຕາມ 5 ຫຼັກມູນການສຶກສາຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພະລະສຶກສາ, ແຮງງານສຶກສາ, ໂດຍຈັດການສຶກສາອົບຮົມ, ລ້ຽງດູ, ສົ່ງເສີມຂະບວນການຮຽນຮູ້ທີ່ຕອບສະໜອງຕໍ່ທຳມະຊາດ ແລະ ພັດທະນາການຂອງເດັກແຕ່ລະຄົນພາຍໃຕ້ສັງຄົມ-ວັດທະນາທຳທີ່ເດັກອາໄສຢູ່ດ້ວຍຄວາມຮັກແພງ, ຄວາມເຂົ້າໃຈຂອງທຸກຄົນ ເພື່ອສ້າງພື້ນຖານຄຸນນະພາບຊີວິດໃຫ້ເດັກພັດທະນາໄປສູ່ຄວາມເປັນພົນລະເມືອງລາວ ເຊິ່ງປະກອບໄປດ້ວຍຄວາມຮູ້, ຄວາມສາມາດທາງດ້ານວິທະຍາສາດ ແລະ ຄຸນສົມບັດສິນທຳປະຕິວັດ, ດຳລົງຊີວິດຢູ່ໃນຄອບຄົວ ແລະ ສັງຄົມພາຍໃຕ້ຮີດຄອງປະເພນີອັນດີງາມຂອງຊາດລາວ.

## 2. ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 5-6 ປີ

ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 5-6 ປີປະກອບມີ 13 ມາດຖານໃນນັ້ນໄດ້ຈັດແບ່ງຕາມພັດທະນາການດ້ານຕ່າງໆມີດັ່ງນີ້:

2.1 ພັດທະນາການທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ

- ມາດຖານທີ 1: ສົ່ງເສີມໃຫ້ເດັກມີສຸຂະພາບດີ, ຮ່າງກາຍຈະເລີນເຕີບໃຫຍ່ຕາມໄວອາຍຸ, ມີນິດໄສໃນການອະນາໄມ, ມີການປ້ອງກັນຄວາມປອດໄພໃນການຫຼິ້ນ ແລະ ຮຽນ.
- ມາດຖານທີ 2: ສົ່ງເສີມໃຫ້ເດັກໄດ້ນຳໃຊ້ກ້າມຊີ້ນໃຫຍ່, ກ້າມຊີ້ນນ້ອຍໃຫ້ມີການເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວ ແລະ ປະສານສຳພັນກັນ.
- ມາດຖານທີ 3: ສົ່ງເສີມໃຫ້ເດັກໄດ້ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ.

2.2 ພັດທະນາການທາງດ້ານອາລົມ-ຈິດໃຈ

- ມາດຖານທີ 4: ສົ່ງເສີມໃຫ້ເດັກມີອາລົມ-ຈິດໃຈທີ່ດີ, ມີຄວາມສຸກໃນການຫຼິ້ນ ແລະ ຮຽນ.
- ມາດຖານທີ 5: ສົ່ງເສີມໃຫ້ເດັກມີມາລະຍາດ, ມີລະບຽບວິໄນແລະຄວາມຮັບຜິດຊອບ, ມີຄວາມສັດຊື່ ແລະ ມີຈິດໃຈທີ່ດີງາມ.
- ມາດຖານທີ 6: ສົ່ງເສີມໃຫ້ເດັກມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າຫານສະແດງອອກທາງສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ.

2.3 ພັດທະນາການທາງດ້ານສັງຄົມ

- ມາດຖານທີ 7: ສົ່ງເສີມໃຫ້ເດັກຮັກທຳມະຊາດສິ່ງແວດລ້ອມ,ວັດທະນາທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ.
- ມາດຖານທີ 8: ສົ່ງເສີມໃຫ້ເດັກປະຕິບັດຕົນເປັນສະມາຊິກທີ່ດີຂອງຄອບຄົວ, ໂຮງຮຽນ ແລະ ສັງຄົມ.

2.4 ພັດທະນາການທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ

- ມາດຖານທີ 9: ສົ່ງເສີມໃຫ້ເດັກມີຄວາມສາມາດໃນການຄິດ ແລະ ການແກ້ໄຂບັນຫາໄດ້ເໝາະສົມກັບໄວອາຍຸ.
- ມາດຖານທີ 10: ສົ່ງເສີມໃຫ້ເດັກມີຄວາມສົນໃຈຮຽນຮູ້ສິ່ງຕ່າງໆ ແລະ ສະແຫວງຫາຄວາມຮູ້ທົ່ວໄປໄດ້ເໝາະສົມກັບໄວອາຍຸ.

2.5 ພັດທະນາການທາງດ້ານພາສາ

ມາດຖານທີ 11: ສົ່ງເສີມໃຫ້ເດັກຟັງ, ເບິ່ງ,ເວົ້າສື່ສານໃນຊີວິດປະຈໍາວັນໄດ້ເໝາະສົມກັບໄວອາຍຸ.

ມາດຖານທີ 12: ສົ່ງເສີມໃຫ້ເດັກໄດ້ອ່ານປຶ້ມ ແລະ ສ້າງຄວາມຮູ້,ທັກສະໃນການອ່ານ ແລະ ສ້າງນິດໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ.

ມາດຖານທີ 13: ສົ່ງເສີມໃຫ້ເດັກໄດ້ຂຽນຕົວອັກສອນລາວ ແລະ ສ້າງຄວາມຮູ້, ທັກສະໃນການຂຽນສ້າງນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ.

## 3. ຫຼັກການຈັດການສຶກສາຊັ້ນອະນຸບານສຶກສາ

ຫຼັກການສຶກສາຊັ້ນອະນຸບານສຶກສາ ແມ່ນອີງໃສ່ຫຼັກການພັດທະນາເດັກແບບຮອບດ້ານໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມຈິດໃຈແລະດ້ານສັງຄົມ ເພື່ອໃຫ້ເດັກມີຄວາມຮູ້ພື້ນຖານທີ່ຈະໄປຮຽນຕໍ່ໃນ ຂັ້ນປະຖົມສຶກສາປີທີ 1 ຢ່າງມີຄຸນນະພາບ.

**ຫຼັກການຈັດການສຶກສາຊັ້ນອະນຸບານສຶກສາປະກອບດ້ວຍ 6 ຫຼັກການດັ່ງນີ້:**

3.1 ສົ່ງເສີມຂະບວນການກຽມພ້ອມໃນການຮຽນຮູ້ ແລະ ພັດທະນາການຂອງເດັກອາຍຸ 3 ຫາ 6 ປີ.

3.2 ເບິ່ງແຍງ, ລ້ຽງດູເດັກໃຫ້ເຕີບໃຫຍ່ຕາມໄວອາຍຸ ແລະ ສຶກສາອົບຮົມໃນການຮຽນ ໂດຍຄໍານຶງເຖິງພັດທະນາການຂອງເດັກແຕ່ລະຄົນ, ແບບແຜນດໍາລົງຊີວິດໃນສັງຄົມ, ວັດທະນະທໍາຂອງຊາດ ແລະ ທ້ອງຖິ່ນ.

3.3 ພັດທະນາການຮຽນຮູ້ເດັກໂດຍຜ່ານການຫຼິ້ນ ແລະ ປະຕິບັດກິດຈະກໍາດ້ວຍຫຼາຍຮູບແບບທີ່ເໝາະສົມກັບໄວອາຍຸ, ເພດ, ເຜົ່າ ແລະ ຕາມສະພາບຕົວຈິງໃນແຕ່ລະທ້ອງຖິ່ນ.

3.4 ຈັດປະສົບການໃຫ້ເດັກໄດ້ຮຽນຮູ້ ແລະ ນໍາໃຊ້ເຂົ້າໃນຊີວິດປະຈໍາວັນໄດ້ຢ່າງມ່ວນຊື່ນ ແລະ ມີຄຸນນະພາບ.

3.5 ຈັດການຮຽນ-ການສອນແບບບູລະນາການທາງດ້ານເນື້ອໃນຄວາມຮູ້ທາງດ້ານວິທະຍາສາດ, ພາສາລາວ ແລະ ຄະນິດສາດ ໂດຍຜ່ານກິດຈະກໍາການຫຼິ້ນ ແລະ ຮຽນ ເຊິ່ງປະກອບມີກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ, ກິດຈະກໍາໃນວົງມົນ, ກິດຈະກໍາສິລະປະສ້າງສັນ, ການຫຼິ້ນຕາມມູມ ແລະ ກິດຈະກໍາການຫຼິ້ນກາງແຈ້ງ, ກິດຈະກໍາເກມການສຶກສາ.

3.6 ພັດທະນາເດັກແບບຮອບດ້ານ ເພື່ອໃຫ້ການຮຽນໃນຊັ້ນອະນຸບານສຶກສາ ແລະ ຂັ້ນປະຖົມສຶກສາປີທີ 1 ມີການເຊື່ອມຕໍ່ກັນ.ພ້ອມກັນນັ້ນກໍມີການຮ່ວມມື ແລະ ປະສານງານລະຫວ່າງໂຮງຮຽນ, ຄອບຄົວ ແລະ ຊຸມຊົນ.

## 4. ການຈັດກຸ່ມອາຍຸເດັກ ແລະ ການຈັດເວລາຮຽນ

4.1 ການຈັດກຸ່ມອາຍຸເດັກ

- ອະນຸບານ 3 ຮັບເດັກອາຍຸ 5-6 ປີ ໂດຍໃຫ້ນັບວັນເດືອນປີເກີດເດັກໃນວັນທີ 1 ເດືອນກັນຍາ (9) ມື້ເລີ່ມຕົ້ນໄຂສົກຮຽນໃໝ່ທຸກປີເດັກຕ້ອງໄດ້ອາຍຸ 4 ປີ 09 ເດືອນຂຶ້ນໄປ.
- ກໍລະນີທີ່ເດັກອາຍຸຕໍ່າກວ່າ 5 ປີ ແມ່ນໃຫ້ກໍານົດເອົາເດັກອາຍຸ 4 ປີ 9 ເດືອນ ຂຶ້ນໄປ ໂດຍອີງຕາມສູດຄິດໄລ່ອາຍຸຕົວຈິງຂອງເດັກ.

4.2 ການຈັດເວລາຮຽນ

- ໄລຍະເວລາຮຽນໃນ 1 ປີຮຽນ ຫຼື ສົກຮຽນມີ 36 ອາທິດ:
- ວັນຮຽນ ໃນ 1 ອາທິດຮຽນ 5 ວັນ (ວັນຈັນ ເຖິງ ວັນສຸກ).
- ເວລາຮຽນ 32 ອາທິດ.
- ປະເມີນພັດທະນາການເດັກໃນທ້າຍພາກຮຽນ 2 ອາທິດ.

- ພັກພາກຮຽນ 2 ອາທິດ.
- ພາກຮຽນທີ 1 ມີ 20 ອາທິດ: ຮຽນ 17 ອາທິດ ແລະ ປະເມີນພັດທະນາການເດັກໃນທ້າຍພາກຮຽນ 1 ອາທິດ (ອາທິດທີ 2 ຂອງເດືອນມັງກອນ) ແລະ ພັກພາກຮຽນທີ 1 ທ້າຍເດືອນມັງກອນ 2 ອາທິດ.
- ພາກຮຽນທີ 2 ມີ 16 ອາທິດ: ຮຽນ 15 ອາທິດ ແລະ ປະເມີນພັດທະນາການເດັກໃນທ້າຍພາກຮຽນ 1 ອາທິດ (ອາທິດທີ 4 ຂອງເດືອນພຶດສະພາ).

4.3 ຕາຕະລາງກິດຈະກຳປະຈຳວັນ

| ໄລຍະເວລາ | ລາຍການ |
|---|---|
| 20-25 | ຮັບເດັກ,ຫຼິ້ນ,ທັດກາຍບໍລິຫານຫຼືເຄົາລົບທຸງ |
| 30-35 | ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ |
| 5-10 | ພັກຜ່ອນ, ເຂົ້າຫ້ອງນ້ຳ |
| 30-35 | ກິດຈະກຳວົງມົນ |
| 20-25 | ກິດຈະກຳຫຼິ້ນກາງແຈ້ງ |
| 5-10 | ພັກຜ່ອນ, ເຂົ້າຫ້ອງນ້ຳ |
| 30-35 | ກິດຈະກຳສິລະປະສ້າງສັນ |
| 30-35 | ພັກ(ອາຫານທ່ຽງ) |
| 10-15 | ອະນາໄມປາກ, ແຂ້ວ, ມື ແລະ ຕີນຕົວ |
| 50-55 | ນອນພັກຜ່ອນຕອນທ່ຽງ ແລະ ເກັບມ້ຽນບ່ອນນອນ |
| 20-25 | ກິດຈະກຳຫຼິ້ນຕາມມຸມ |
| 10-15 | ພັກ (ອາຫານຫວ່າງ) |
| 30-35 | ກິດຈະກຳເກມການສຶກສາ |
| 20-25 | ຫຼິ້ນ, ເຄື່ອນໄຫວກິດຈະກຳຕາມໃຈ |
| 20-25 | ອະນາໄມເດັກ, ກຽມຖົງເຄື່ອງໃຊ້ເດັກ ແລະ ສົ່ງເດັກໃຫ້ຜູ້ປົກຄອງ |

ໝາຍເຫດ: ເວລາຮຽນຕອນເຊົ້າເລີ່ມແຕ່ 8:00-16:00 ໂມງ ຕາມເວລາລັດຖະການລາຍລະອຽດ ການຈັດຕາຕະລາງຮຽນຂຶ້ນກັບແຕ່ລະໂຮງຮຽນ.

4.4 ການດຳເນີນກິດຈະກຳຕາມຕາຕະລາງປະຈຳວັນ

1) ການຮັບເດັກ, ກວດສຸຂະພາບ, ສົນທະນາບັນທຶກຄຳເວົ້າ, ແນະນຳການປະຕິບັດຕົນ
   - ການຮັບເດັກເຊັ່ນ:ການທັກທາຍເດັກລາຍບຸກຄົນ, ກ່າວຄຳວ່າສະບາຍດີ, ສຳຜັດໂອບກອດ ເພື່ອໃຫ້ເດັກທຸກຄົນມີຄວາມອົບອຸ່ນ ແລະ ມີຄວາມສຸກໃນການເຄື່ອນໄຫວກິດຈະກຳຕ່າງໆໃນໂຮງຮຽນ.
   - ການກວດສຸຂະພາບເດັກເຊັ່ນ: ສອບຖາມກ່ຽວກັບສຸຂະພາບ, ກວດຜົມ, ຕາ, ປາກແຂ້ວ, ເລັບມື, ເລັບຕີນ, ຜິວໜັງ, ເຄື່ອງນຸ່ງ.
   - ການສົນທະນາ ແລະ ຈົດບັນທຶກຄຳເວົ້າເດັກເຊັ່ນ: ການສົນທະນາລະຫວ່າງຄູກັບເດັກ ເພື່ອບັນທຶກຜົນງານເດັກປະຈຳວັນເປັນລາຍບຸກຄົນ.
   - ການປະຕິບັດຕົນໃນກິດຈະກຳປະຈຳວັນໃນໂຮງຮຽນເຊັ່ນ: ການລຽນແຖວເຄົາລົບທຸງ, ການໃຊ້ຫ້ອງນ້ຳ ຫຼື ຫ້ອງຖ່າຍ ແລະ ການຫຼິ້ນ.

2) ສົນທະນາເລົ່າຂ່າວກ່ຽວກັບເຫດການ ແລະ ສ້າງຂໍ້ຕົກລົງຮ່ວມກັນໃນການປະຕິບັດກິດຈະກໍາ.
   - ການເລົ່າຂ່າວ ຫຼື ເຫດການທີ່ເດັກພົບເຫັນໃນໜຶ່ງອາທິດຄູໃຫ້ເດັກທຸກຄົນໄດ້ເລົ່າ.
   - ການຕົກລົງວາງແຜນປະຕິບັດກິດຈະກໍາຮ່ວມກັນໃນແຕ່ລະວັນ.

## 5. ເນື້ອໃນຄວາມຮູ້ທີ່ກໍານົດໃນຫຼັກສູດ ແລະ ໜ່ວຍການສອນທີ 1-8

5.1 ເນື້ອໃນຄວາມຮູ້ທີ່ກໍານົດໃນຫຼັກສູດ

ເນື້ອໃນຄວາມຮູ້ລວມທີ່ກໍານົດໃນຫຼັກສູດປະກອບມີ 4 ຫົວຂໍ້ໃຫຍ່ດັ່ງນີ້:

1) ເລື່ອງກ່ຽວກັບຕົວເດັກ:ປະກອບມີຫົວຂໍ້ກ່ຽວກັບເລື່ອງໂຮງຮຽນ, ຕົນຕົວ, ຄອບຄົວ,ມາລະຍາດ, ການປະຕິບັດຕົນ, ຄວາມປອດໄພ ແລະ ສຸຂະພາບ.
2) ເລື່ອງກ່ຽວກັບບຸກຄົນ, ອາຊີບ ແລະ ທ້ອງຖິ່ນ: ປະກອບມີຫົວຂໍ້ກ່ຽວກັບເລື່ອງບຸກຄົນໃນຄອບຄົວ, ທີ່ຢູ່ອາໄສ, ອາຊີບຂອງຄົນໃນທ້ອງຖິ່ນ, ບຸກຄົນສໍາຄັນຂອງຊາດ ແລະ ທ້ອງຖິ່ນ.
3) ເລື່ອງກ່ຽວກັບສະຖານທີ່ ແລະ ວັດທະນາທໍາ: ປະກອບມີຫົວຂໍ້ກ່ຽວກັບເລື່ອງບ້ານ, ເມືອງ, ແຂວງ, ສະຖານທີ່ສໍາຄັນຂອງຊາດ, ສະຖານທີ່ທ່ອງທ່ຽວ, ວັດທະນາທໍາຂອງທ້ອງຖິ່ນ, ວັດທະນະທໍາລາວ, ວັນບຸນປະເພນີ, ວັນບຸນສໍາຄັນຂອງຊາດ ແລະ ພູມີປະເທດລາວ. ທຸງຊາດລາວ ແລະ ທຸງຊາດບັນດາປະເທດອາຊຽນ.
4) ເລື່ອງກ່ຽວກັບທໍາມະຊາດ ແລະ ສິ່ງແວດລ້ອມ: ປະກອບມີຫົວຂໍ້ກ່ຽວກັບເລື່ອງນໍ້າ, ອາກາດຢູ່ຮອບຕົວ, ຊັບພະຍາກອນທໍາມະຊາດ (ດິນ, ຫີນ, ຊາຍ); ລະດູການ (ລະດູແລ້ງ, ລະດູຝົນ); ກາງເວັນ-ກາງຄືນ, ວັນເວລາ(ມື້ນີ້, ມື້ວານ, ມື້ອື່ນ), ສັດ(ແມງໄມ້, ສັດປີກ, ສັດນໍ້າ), ພືດ(ຕົ້ນໄມ້, ໝາກໄມ້, ດອກໄມ້, ເຂົ້າ, ຜັກ), ນໍ້າດື່ມສະອາດ, ການຄົມມະນາຄົມ, ການສື່ສານ, ປະສາດສໍາຜັດທັງ 5 (ເບິ່ງ, ຟັງສຽງ, ຊີມລົດ, ດົມກິ່ນ, ຈັບບາຍ) ພະລັງງານ, ຕົວເລກ, ຕົວອັກສອນລາວ, ຮູບຊົງເລຂາຄະນິດ, ເງິນກີບ, ການວັດແທກ, ສັນຍາລັກ ແລະ ເຄື່ອງໝາຍຕ່າງໆ, ເຄື່ອງຫຼິ້ນ, ເຄື່ອງນຸ່ງຫົ່ມ, ເຄື່ອງມື, ເຄື່ອງໃຊ້.

5.2 ເນື້ອໃນຄວາມຮູ້ທີ່ກໍານົດໃນໜ່ວຍການສອນ 1-8

ເນື້ອໃນຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທີ່ກໍານົດໃນໜ່ວຍການສອນແຕ່ໜ່ວຍທີ 1-8 ໄດ້ຜັນຂະຫຍາຍເປັນແຜນການສອນລະອຽດໃນແຕ່ລະວັນ ໂດຍອີງໃສ່ຕາຕະລາງວິເຄາະເນື້ອໃນຄວາມຮູ້ຕາມຫຼັກສູດດັ່ງນີ້:

## ຕາຕະລາງທີ 1: ວິເຄາະເນື້ອໃນຄວາມຮູ້ທາງດ້ານວິທະຍາສາດທຳມະຊາດ ແລະ ສັງຄົມ

### ໜ່ວຍທີ 1: ຕົວຂອງຂ້ອຍ

| ຫົວຂໍ້ / ອາທິດ | ຫົວຂໍ້/ວັນ | ເນື້ອໃນ |
|---|---|---|
| 1. ຮ່າງກາຍຂອງຄົນເຮົາ. | 1.ຮ່າງກາຍຂອງຄົນເຮົາ. | **1. ຊື່, ນາມສະກຸນຕົນເອງ, ໝູ່ເພື່ອນ ແລະ ສ່ວນປະກອບຂອງຮ່າງກາຍ**<br>1.1 ຊື່ ແລະ ນາມສະກຸນຕົນເອງ ແລະ ໝູ່ເພື່ອນ: ທ້າວ..... ເພດຊາຍ; ນາງ.... ເພດຍິງ.<br>1.2 ຮູບຮ່າງລັກສະນະຕົນເອງ ແລະ ໝູ່ເພື່ອນ:ຕຸ້ຍ, ຈ່ອຍ, ຕ່ຳ. ສູງ.<br>1.3 ຮ່າງກາຍຄົນເຮົາປະກອບດ້ວຍ 3 ພາກສ່ວນ: ຫົວ, ເລົາຄີງ, ແຂນ ແລະ ຂາ. |
| | 2. ຫົວຂອງຄົນເຮົາ. | **2. ຫົວຂອງຄົນເຮົາປະກອບມີ:** ຜົມ, ໃບໜ້າ<br>2.1 ຜົມ:<br>- ສີ: ສີຜົມຕາມທຳມະຊາດ (ດຳ, ຂາວ, ເຫຼືອງ ຫຼື ທອງ); ສີຜົມທີ່ຄົນສ້າງຂຶ້ນ (ມ່ວງ, ແດງ, ຂຽວ),<br>- ລັກສະນະ: ຜົມກູດ, ຜົມຊື່.<br>- ຂະໜາດ: ຜົມສັ້ນ, ຜົມຍາວ.<br>2.2 ໃບໜ້າ: ສ່ວນປະກອບ ໜ້າຜາກ, ຄິ້ວ, ຕາ, ດັງ, ຫູ, ແກ້ມ, ປາກ, ຄາງ, ຄໍ. |
| | 3. ຜົມ. | **3. ຜົມ:** ຄຸນປະໂຫຍດ ແລະ ການບົວລະບັດຮັກສາຜົມ<br>3.1 ຄຸນປະໂຫຍດຂອງຜົມ: ປົກຫຸ້ມໜັງຫົວ, ເຮັດໃຫ້ໃບໜ້າປ່ຽນແປງ ແລະ ສວຍງາມ.<br>3.2 ການບົວລະບັດຮັກສາຜົມ: (ເຝິກປະຕິບັດ)<br>- ເຄື່ອງໃຊ້ໃນການສະຜົມ: ຢາສະຜົມ, ນ້ຳມັນທາຜົມສຳລັບເດັກ, ຫວີ, ຄຸນ້ຳ, ຊາມນ້ຳ, ໂອ, ຜ້າເຊັດຜົມ, ນ້ຳສະອາດ.<br>- ຂັ້ນຕອນການສະຜົມ: ລ້າງຜົມໃຫ້ປຽກນ້ຳ, ໃສ່ຢາສະຜົມ, ລ້າງຢາສະຜົມດ້ວຍນ້ຳ, ເຊັດຜົມໃຫ້ແຫ້ງ, ຫວີຜົມ, ທານ້ຳມັນ. |

| | | |
|---|---|---|
| | 4. ໃບໜ້າ.<br><br><br><br><br><br>5. ໃບໜ້າ (ຕໍ່). | - ຂັ້ນຕອນໃນການແຕ່ງຊົງຜົມ: ຊົງຜົມປອຍຊື່ (ຫວີ, ລີດ), ຊົງຜົມປອຍໂກບ ຫຼື ກູດ(ຫວີ, ໄດ), ຊົງຜົມມັດ (ສູງ, ຕໍ່າ, ມັດຂ້າງຫຼືກາງ, ມັດໜຶ່ງ ຫຼື ສອງ), ຊົງຜົມເປຍ, ຊົງຜົມດັດ(ກູດ), ຕັດຫຼືສອຍຜົມ (ສັ້ນ, ຍາວ).<br>**4. ໃບໜ້າ:** ລັກສະນະ ແລະ ການສະແດງອາລົມອອກທາງສີໜ້າ (ເຝິກປະຕິບັດ)<br>4.1 ລັກສະນະໃບໜ້າ: ວົງມົນ(ມົນ, ກົມ), ສີ່ຫຼ່ຽມ, ສາມຫຼ່ຽມ<br>4.2 ການສະແດງອາລົມອອກທາງສີໜ້າ<br>- ການຍິ້ມ (ຍິ້ມສະແດງຄວາມພໍໃຈຫຼາຍ ຫຼື ໜ້ອຍ),<br>- ການຫົວ (ສຽງຫົວແຮງ ຫຼື ຄ່ອຍ).<br>- ການຮ້າຍ (ສະແດງສີໜ້າຄຽດ, ເວົ້າດັງ).<br>**5. ໃບໜ້າ:** ການບົວລະບັດຮັກສາໃບໜ້າ<br>5.1 ຄຸນປະໂຫຍດຂອງໃບໜ້າ: ສ່ວນປະກອບໃນໃບໜ້າ (ໜ້າຜາກ, ຄິ້ວ, ຕາ, ດັງ, ຫູ, ແກ້ມ, ປາກ, ຄາງ, ຄໍ). ຊ່ວຍໃຫ້ຄົນເຮົາມີຄວາມງາມ<br>5.2 ການບົວລະບັດຮັກສາໃບໜ້າ (ເຝິກປະຕິບັດ).<br>- ເຄື່ອງໃຊ້ລ້າງໜ້າ: ສະບູ, ແປ້ງ, ຄີມທາໜ້າສໍາລັບເດັກ, ນໍ້າສະອາດ, ຜ້າເຊັດໜ້າ, ໂອ.<br>- ຂັ້ນຕອນການລ້າງໜ້າ: ພົມນໍ້າ, ທາສະບູ, ລ້າງສະບູອອກຈາກໜ້າ ແລະ ເຊັດໜ້າຜາກ, ຕາ, ແກ້ມໃຫ້ແຫ້ງ.<br>- ຂັ້ນຕອນແຕ່ງໜ້າ: ທາແປ້ງ, ທາຄີມ (ຖອກແປ້ງ ຫຼື ຄີມທາໜ້າໃສ່ມື, ທາໃສ່ໃບໜ້າໃຫ້ທົ່ວ). |
| 2. ຮ່າງກາຍຂອງ ຄົນເຮົາ (ຕໍ່). | 6. ຕາ. | **6. ຕາ:** ສ່ວນປະກອບ , ຄຸນປະໂຫຍດ, ການບົວລະບັດຮັກສາຕາ ແລະ ການປ້ອງກັນພະຍາດຕາແດງ<br>6.1 ສ່ວນປະກອບ ແລະ ຄຸນປະໂຫຍດຂອງຕາ:<br>- ສ່ວນປະກອບຂອງຕາ: ໜ່ວຍຕາ(ວົງມົນນ້ອຍ-ໃຫຍ່, ສີຂາວ-ດໍາ), ຂົນຕາ(ສັ້ນ-ຍາວ)<br>- ຄຸນປະໂຫຍດຂອງຕາ: ໜ່ວຍຕາ(ໃຊ້ໄວ້ເບິ່ງ ແລະ ສັງເກດສິ່ງຕ່າງໆທີ່ຢູ່ອ້ອມຕົວ). ຂົນຕາ(ປົກປ້ອງ ບໍ່ໃຫ້ຂີ້ເຫຍື່ອເຂົ້າຕາ).<br>6.2 ການບົວລະບັດຮັກສາຕາ ແລະ ການປ້ອງກັນພະຍາດຕາແດງ:<br>- ການບົວລະບັດຮັກສາຕາ: ລັບຕາ ຫຼື ເອົາມືອັດຕາໃນບ່ອນທີ່ມີຂີ້ຝຸ່ນ. ຫຼີ້ນໃນບ່ອນທີ່ບໍ່ມີແມງໄມ້ນ້ອຍ (ແມງມີ່, ແມງແຄງນ້ອຍ), ມືເປື້ອນບໍ່ສີຕາ,ອ່ານປຶ້ມ ແລະ ຫຼີ້ນໃນບ່ອນມືດບໍ່ມີແສງສະຫວ່າງພຽງພໍ. ກາງແດດກ້າບໍ່ເບິ່ງ |

7

| | | |
|---|---|---|
| | 7. ຫູ.<br><br><br><br><br><br><br>8. ດັງ.<br><br><br><br><br><br><br>9. ປາກ. | ສິ່ງຂອງທີ່ມີສີຂາວ.<br>- ການປ້ອງກັນພະຍາດຕາແດງ: ລະວັງບໍ່ເອົາມືເປື້ອນສີຕາ, ບໍ່ໃຫ້ຂີ້ຝຸ່ນເຂົ້າຕາ ແລະ ບໍ່ເອົານ້ຳເປື້ອນລ້າງຕາ. ກິນອາຫານທີ່ມີທາດບຳລຸງຕໍ່ສາຍຕາ.<br>**7. ຫູ:** ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫູ<br>7.1 ສ່ວນປະກອບ ແລະ ຄຸນປະໂຫຍດ:<br>- ສ່ວນປະກອບຂອງຫູ: ໃບຫູ(ລັກສະນະສີ່ຫຼ່ຽມ, ສາມຫຼ່ຽມ), ຮູຫູ(ຂະໜາດນ້ອຍ, ໃຫຍ່).<br>- ຄຸນປະໂຫຍດຂອງຫູ: ໃຊ້ໄວ້ຟັງ ແລະຈຳແນກສຽງດັງຄ່ອຍ, ດັງແຮງຂອງຄົນ, ສັດ, ວັດຖຸສິ່ງຂອງ, ທຳມະຊາດ, ເຄື່ອງດົນຕີ.<br>7.2 ການບົວລະບັດຮັກສາຫູ:<br>- ໃບຫູ: ລ້າງ, ເຊັດໃບຫູດ້ວຍສຳລີ ຫຼື ຜ້າທີ່ສະອາດ.<br>- ຮູຫູ: ຟັງສຽງຄ່ອຍບໍ່ດັງເກີນໄປ, ຜັນຫູດ້ວຍຝ້າຍຜັນຫູສຳລັບເດັກ ນ້ຳ, ແມງໄມ້ບໍ່ໃຫ້ເຂົ້າຫູ,<br>**8. ດັງ:** ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາດັງ<br>8.1 ສ່ວນປະກອບ ແລະ ຄຸນປະໂຫຍດຂອງດັງ:<br>- ສ່ວນປະກອບຂອງດັງ: ໂຄງດັງ(ສູງ(ໂມ), ຕ່ຳ(ແມບ) ແລະ ຮູດັງ(ວົງມົນ, ສອງຮູ).<br>- ຄຸນປະໂຫຍດຂອງດັງ: ໃຊ້ໄວ້ຫາຍໃຈ ແລະ ດົມກິ່ນ(ຫອມ, ເໝັນ, ຂີວ, ຄາວ) (ເຝິກປະຕິບັດ).<br>8.2 ການບົວລະບັດຮັກສາ:<br>- ໂຄງດັງ: ລ້າງ, ເຊັດໂຄງດັງດ້ວຍຜ້າສະອາດ ຫຼື ເຈ້ຍສຳລັບເສັດໃບໜ້າ,<br>- ຮູດັງ: ສັ່ງ ແລະ ເຊັດຂີ້ມູກດ້ວຍຜ້າທີ່ສະອາດ ຫຼື ເຈ້ຍສຳລັບເສັດໃບໜ້າ.<br>**9. ປາກ:** ສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາປາກ<br>9.1 ສ່ວນປະກອບ ແລະ ຄຸນປະໂຫຍດຂອງປາກ.<br>- ສ່ວນປະກອບຂອງປາກ: ຮີມປາກ, ແຂ້ວ ແລະ ລີ້ນ.<br>- ຄຸນປະໂຫຍດຂອງປາກ: ແຂ້ວຫຍ້ຳອາຫານ (ອ່ອນ,ແຂງ), ລີ້ນຊີມລົດຊາດ (ຫວານ, ສົ້ມ, ເຜັດ, ເຄັມ, ຂົມ). ຮີມປາກໃຫ້ຄວາມງາມ (ສີແດງ, ບົວ). |

| | | |
|---|---|---|
| | 10. ເລົາຕີ. | 9.2 ການບົວລະບັດຮັກສາປາກ:<br>- ບ້ວນປາກ:ອົມນໍ້າ, ບ້ວນປາກ, ຖົ່ມນໍ້າຖິ່ມ, ເຊັດປາກດ້ວຍຜ້າທີ່ສະອາດ.<br>- ຖູແຂ້ວ: ປະຕິບັດຂັ້ນຕອນຖູແຂ້ວ (ສຸຂະສຶກສາຂອງກະຊວງສາທາລະນະສຸກ) ກໍານົດໄວ້.<br>**10.** **ເລົາຕົງ:** ສ່ວນປະກອບ, ຄຸນປະໂຫຍດ, ການບົວລະບັດຮັກສາເລົາຕົງ<br>10.1 ສ່ວນປະກອບ ແລະ ຄຸນປະໂຫຍດເລົາຕົງ:<br>- ສ່ວນປະກອບຂອງເລົາຕົງ: ບ່າໄຫຼ່, ໜ້າເອິກ, ນົມ, ທ້ອງ, ແອວ, ກະໂພກ.<br>- ຄຸນປະໂຫຍດ: ບ່າໄຫຼ່(ພາຍ,ຫາບ), ນົມ(ລ້ຽງລູກ), ແອວ, ໜ້າເອິກ, ທ້ອງ, ກະໂພກຊ່ວຍໃຫ້ຄວາມງາມ.<br>10.2 ການບົວລະບັດຮັກສາ:<br>- ເຄື່ອງໃຊ້ອາບນໍ້າ: ສະບູ, ແປ້ງ, ຄີມທາຜິວສໍາລັບເດັກ, ນໍ້າສະອາດ, ຜ້າເຊັດໂຕ, ໂອ. ຊາມ, ຄຸ<br>- ຂັ້ນຕອນການອາບນໍ້າ: ພົມ ຫຼື ຫົດນໍ້າ, ທາສະບູ, ລ້າງສະບູຕາມຕົນຕົວ ແລະ ເຊັດຕົນຕົວ (ບ່າໄຫຼ່, ໜ້າເອິກ, ນົມ, ທ້ອງ, ແອວ, ກະໂພກ. ແຂນ, ຂາ ແລະ ໃບໜ້າໃຫ້ແຫ້ງ).<br>- ຂັ້ນຕອນແຕ່ງຕົວ: ທາແປ້ງ, ທາຄີມທາຜິວ(ຖອກແປ້ງໃສ່ມື, ທາຕົນຕົວ, ແຂນ ແລະ ຂາ). |
| 3. ຮ່າງກາຍຂອງ ຄົນເຮົາ (ຕໍ່). | 11. ແຂນ.<br><br><br><br><br><br>12. ການບົວລະ ບັດຮັກສາມື. | **11.** **ແຂນ:** ສ່ວນປະກອບ, ຄຸນປະໂຫຍດຂອງແຂນ.<br>11.1 ສ່ວນປະກອບຂອງແຂນ:<br>- ແຂນ: ກົກແຂນ, ແຂນສອກ, ຄໍ່ມື, ມື, ນິ້ວມື.<br>- ມື: ຝ່າມື, ຫຼັງມື, ຂໍ້ມື, ເລັບມື. ນິ້ວມື.<br>- ນິ້ວມື້: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ.<br>11.2 ຄຸນປະໂຫຍດ: ແຂນ ແລະ ມືໃຊ້ໄວ້ຈັບ, ຖື(ຫິ້ວ)ເຄື່ອງ ແລະ ສໍາຜັດ(ອ່ອນ, ແຂງ, ກ້ຽງ, ຊາ)<br>**12.** **ການບົວລະບັດຮັກສາມື:**<br>- ເຄື່ອງໃຊ້ລ້າງມື: ສະບູ, ນໍ້າ, ຜ້າເຊັດມື, ໂອ. ຊາມ, ມີດຕັດເລັບ.<br>- ຂັ້ນຕອນການຕັດເລັບມື: ຕັດເລັບມືໃຫ້ສັ້ນ, ລ້າງຂີ້ເລັບມື.<br>- ຂັ້ນຕອນການລ້າງມື: ປະຕິບັດຂັ້ນຕອນລ້າງມື (ສຸຂະສຶກສາຂອງກະຊວງສາທາລະນະສຸກ) ກໍານົດໄວ້,<br>- ຂັ້ນຕອນການໃສ່ຖົງມື: ຖົງມືໃສ່ໃຫ້ຖືກນິ້ວມື ແລະ ເບື້ອງຊ້າຍ-ຂວາ. |

| | | |
|---|---|---|
| | 13. ຂາ.<br><br><br><br><br><br>14. ການບົວລະ ບັດຮັກສາຕີນ.<br><br><br><br><br>15. ການນຸ່ງ ເຄື່ອງ. | **13. ຂາ:** ສ່ວນປະກອບ, ຄຸນປະໂຫຍດຂອງຂາ<br>13.1 ສ່ວນປະກອບຂອງຂາ:<br>- ຂາ: ກົກຂາ, ຫົວເຂົ່າ, ແຂ່ງ, ຂໍ່ຕີນ ແລະ ຕີນ.<br>- ຕີນ: ຝ່າຕີນ, ຫຼັງຕີນ, ຂໍ້ຕີນ, ເລັບຕີນ.<br>- ນິ້ວຕີນ: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ.<br>13.2 ຄຸນປະໂຫຍດ: ຂາ ແລະ ຕີນໃຊ້ໄວ້ຢືນ, ຍ່າງ, ແລ່ນ, ເຕັ້ນ ແລະ ໂດດ.<br>**14. ການບົວລະບັດຮັກສາຕີນ:**<br>- ເຄື່ອງໃຊ້ລ້າງຕີນ: ສະບູ, ນໍ້າ, ແປງຖູຕີນ, ຜ້າເຊັດຕີນ, ໂອ. ຊາມ,<br>- ຂັ້ນຕອນການລ້າງຕີນ: ພົມນໍ້າ,ທາສະບູ, ຮຸກຂີ້ໄຄຫຼືຖູດ້ວຍແປງ, ລ້າງສະບູຕາມຕີນ ແລະ ເຊັດຕາມບໍລິເວນນິ້ວຕີນໃຫ້ແຫ້ງ.<br>- ຂັ້ນຕອນການໃສ່ຖົງຕີນແລະເກີບ: ຖົງຕີນໃສ່ໃຫ້ຖືກນິ້ວຕີນ ແລະ ເບື້ອງຊ້າຍ-ຂວາ; ເກີບເບື້ອງຊ້າຍ-ຂວາ. ມັດສາຍຫຼືຕິດດຸມເກີບ.<br>**15. ການນຸ່ງເຄື່ອງ**<br>- ເຄື່ອງນຸ່ງ: ສິ້ນ, ໂສ້ງ, ກະໂປ້ງ, ເສື້ອ<br>- ຂັ້ນຕອນການນຸ່ງສິ້ນ ແລະ ກະໂປ້ງ: ສຸບ, ປ້າຍໃຫ້ຖືກເບື້ອງ. ເກາະຂໍ.<br>- ຂັ້ນຕອນການນຸ່ງໂສ້ງ: ສຸບ, ເກາະຂໍ, ຮູດຊິບ.<br>- ຂັ້ນຕອນການນຸ່ງເສື້ອ: ສຸບ, ຕິດກະດຸມ (ແຕບ, ດຸມຍ່ວງ, ຮູດຸມ). |
| 4. ອາຫານ, ການ ຮັກສາສຸຂະພາບ. | 16. ອາຫານ. | **16. ອາຫານຊ່ວຍໃຫ້ພະລັງງານໃນການເຄື່ອນໄຫວ, ອາຫານຊ່ວຍໃຫ້ຮ່າງກາຍເຕີບໃຫຍ່, ອາຫານຊ່ວຍໃຫ້ຮ່າງກາຍແຂງແຮງ,**<br>16.1 ອາຫານຊ່ວຍໃຫ້ພະລັງງານໃນການເຄື່ອນໄຫວ ແລະ ການປຸງແຕ່ງ<br>- ຊື່ອາຫານ: ຊີ້ນສັດໃຫຍ່, ປາ, ໄຂ່, ນົມ, ຖົ່ວເຫຼືອງ.<br>- ລັກສະນະ: ກ້ອນ, ຕອນຫຼືທ່ອນ (ວົງມົນ ຫຼື ກົມ, ສີ່ຫຼ່ຽມ, ສາມຫຼ່ຽມ, ຈະຕຸລັດ),<br>- ສີ: ແດງ, ບົວ, ຂາວ, ເຫຼືອງ. |

| | | |
|---|---|---|
| 10 | 17. ອາຫານ (ຕໍ່).<br><br>18. ອາຫານ (ຕໍ່). | 16.2 ການປຸງແຕ່ງ: ຕົ້ມໄຂ່.<br>- ເຄື່ອງໃຊ້: ໝໍ້, ເຕົາໄຟ, ນໍ້າ, ໄຂ່ເປັດ, ໄກ່, ນົກກະທາ.<br>- ຂັ້ນຕອນຕົ້ມ: ລ້າງໄຂໃຫ້ສະອາດ, ເອົາໄຂ່ລຽນລົງໃນໝໍ້ໃສ່ນໍ້າໃຫ້ຖ້ວມ, ເອົາໝໍ້ຕັ້ງໄຟຕົ້ມໃຫ້ສຸກ,ແຊ່ລ້າງນໍ້າເຢັນ.<br>- ຂັ້ນຕອນກິນ: ປອກເປືອກ, ຜ່າຫຼືບິທາງໃນມີມອນເປັນໜ່ວຍມົນສີເຫຼືອງ, ກ້າມ ຫຼື ເປືອກນອກເປັນຊັ້ນມີສີຂາວ ແລະ ກິນ.<br>**17. ອາຫານຊ່ວຍໃຫ້ຮ່າງກາຍເຕີບໃຫຍ່ ແລະ ການປຸງແຕ່ງ.**<br>17.1 ອາຫານຊ່ວຍໃຫ້ຮ່າງກາຍເຕີບໃຫຍ່:<br>- ຊື່ອາຫານ: ເຂົ້າ, ເຜືອກ, ມັນ, ສາລີ, ໝາກງາ, ໝາກພ້າວ, ນໍ້າມັນສັດ, ນໍ້າຕານ.<br>- ລັກສະນະ: ເມັດ, ຫົວ, ຝັກ, ໜ່ວຍ (ວົງມົນ ຫຼື ກົມ, ສີ່ຫຼ່ຽມ, ສາມຫຼ່ຽມ, ຈະຕຸລັດ),<br>- ສີ: ແດງ, ບົວ, ຂາວ, ເຫຼືອງ.<br>17.2 ການປຸງແຕ່ງ: ຕົ້ມເຜືອກ, ມັນ, ສາລີ.<br>- ເຄື່ອງໃຊ້: ໝໍ້, ເຕົາໄຟ, ນໍ້າ, ເຜືອກ, ມັນ ຫຼື ສາລີ.<br>- ຂັ້ນຕອນຕົ້ມ: ເຜືອກ, ມັນ ຫຼື ສາລີປອກເປືອກ, ລ້າງ, ລຽນ ເຜືອກ, ມັນ ຫຼື ສາລີລົງໃນໝໍ້, ໃສ່ນໍ້າໃຫ້ຖ້ວມ, ເອົາໝໍ້ຕັ້ງໄຟຕົ້ມໃຫ້ສຸກ, ຂັ້ນຕອນກິນ: ເຜືອກ, ມັນ ຫຼື ສາລີ. (ໄຂ່ບໍ່ປຸງແຕ່ງ, ໄຂ່ປຸງແຕ່ງໄປຕົ້ມເຄັມ, ໃສ່ຍໍ້າສະລັດ)<br>**18. ອາຫານຊ່ວຍໃຫ້ຮ່າງກາຍແຂງແຮງ ແລະ ການປຸງແຕ່ງ**<br>18.1 ອາຫານຊ່ວຍໃຫ້ຮ່າງກາຍແຂງແຮງ:<br>- ຊື່ອາຫານ: ໝາກໄມ້ສຸກ, ນໍ້າສະອາດ ແລະ ຜັກ.<br>- ລັກສະນະ: ກ້ອນ, ຕອນຫຼືທ່ອນ (ວົງມົນ ຫຼື ກົມ, ສີ່ຫຼ່ຽມ, ສາມຫຼ່ຽມ, ຈະຕຸລັດ),<br>- ສີ: ແດງ, ບົວ,ຂາວ,ເຫຼືອງ.<br>18.2 ການປຸງແຕ່ງ: ນໍ້າໝາກໄມ້ສົດ (ໝາກນາວ.ໝາກກ້ຽງ)<br>- ເຄື່ອງໃຊ້: ຈອກ, ມີດ, ນໍ້າ, ນໍ້າຕານ. ໝາກນາວ, ໝາກກ້ຽງ |

| | | | |
|---|---|---|---|
| 11 | | 19. ອາຫານ (ຕໍ່).<br><br>20. ການຮັກສາສຸຂະພາບ. | - ຂັ້ນຕອນການປຸງແຕ່ງ: ລ້າງໝາກນາວ, ເອົາມີດປາດເປັນສອງປ່ຽງ ຫຼື ເຄິ່ງ, ບີບນໍ້າໝາກນາວໃສ່ຈອກ, ນໍ້າຕານລະລາຍໃນນໍ້າໃຫ້ເປື່ອຍ. ຖອກປະສົມກັນລະຫວ່າງນໍ້າໝາກນາວ ແລະ ນໍ້າຕານ, ຊີມ ແລະ ຕື່ມນໍ້າຕານຕາມຄວາມມັກ.<br>- ຂັ້ນຕອນດື່ມ: ເຍັນໃສ່ຈອກ, ຄ່ອຍດື່ມ ແລະ ບໍ່ຄວນດື່ມຫຼາຍເກີນຄວາມຕ້ອງການຂອງຮ່າງກາຍຈະພາໃຫ້ອ້ວນເກີນໄປ.<br>**19. ອາຫານທີ່ບໍ່ຄວນກິນ ແລະ ເວລາກິນອາຫານ**<br>19.1 ອາຫານ ແລະ ເຄື່ອງດື່ມທີ່ບໍ່ຄວນກິນ:<br>- ປະເພດອາຫານ: ອາຫານບູດເນົ່າ, ອາຫານທີ່ມີແມງວັນຕອມ, ອາຫານທີ່ໃສ່ສີ.<br>- ປະເພດເຄື່ອງດື່ມ: ນໍ້າອັດລົມ, ນໍ້າຊີໂລ.<br>19.2 ເວລາກິນອາຫານ: ເຊົ້າ, ສວາຍ, ແລງ.<br>- ຕອນເຊົ້າ: ກິນເຂົ້າເຊົ້າ (ເຂົ້າຈ່າວ, ໝຽວກັບປາຫຼືຊີ້ນ ແລະ ນໍ້າ ຫຼື ນົມ) ເວລາ 6:00 ຫາ 7:00 ໂມງ ເຊົ້າ. ກ່ອນມາໂຮງຮຽນ.<br>- ຕອນທ່ຽງ: ກິນເຂົ້າທ່ຽງ ຫຼື ສວາຍ(ເຂົ້າຈ່າວ, ໝຽວກັບປາຫຼືຊີ້ນ ແລະ ນໍ້າ, ນໍ້າໝາກໄມ້) ເວລາ 11: 00ໂມງ ຫຼື 12:00 ໂມງ. ກ່ອນນອນພັກຜ່ອນຕອນທ່ຽງ.<br>- ຕອນແລງ: ກິນເຂົ້າແລງ (ເຂົ້າຈ່າວ, ໝຽວກັບປາຫຼືຊີ້ນ ແລະ ນໍ້າ ຫຼື ນົມ) ເວລາ 6:00-7:00 ໂມງແລງ ກ່ອນນອນກາງຄືນ.<br>**20. ການຮັກສາສຸຂະພາບ:** ອອກກຳລັງກາຍ, ພັກຜ່ອນ, ຂັບຖ່າຍ ແລະ ຫຼິ້ນ.<br>20.1 ການອອກກຳລັງກາຍ ແລະ ຄວາມປອດໄພ:<br>- ການອອກກຳລັງກາຍ: ຫັດກາຍບໍລິຫານ, ເວລາຍ່າງ, ເວລາແລ່ນ ແລະ ເຕັ້ນ.<br>- ຄວາມປອດໄພ: ຍ່າງ, ແລ່ນ ແລະ ເຕັ້ນໃຫ້ຖືກວິທີ.<br>20.2 ການພັກຜ່ອນ ແລະ ຄວາມປອດໄພ:<br>- ການພັກຜ່ອນ: ນອນໃຫ້ພຽງພໍ ແລະ ຖືກເວລາ.<br>- ຄວາມປອດໄພ: ນອນບ່ອນທີ່ສະອາດ (ບໍ່ໃຫ້ມີມົດ ແລະ ແມງໄມ້). |

| | | |
|---|---|---|
| | | 20.3 ການຂັບຖ່າຍ ແລະ ຄວາມປອດໄພ:<br>- ການຂັບຖ່າຍ: ຖ່າຍໃສ່ວິດ ຫຼື ສ້ວມຖ່າຍ, ຂັບຖ່າຍເປັນເວລາ (ຝຶກແອບຂັບຖ່າຍຕອນເຊົ້າທຸກໆວັນ).<br>- ຄວາມປອດໄພ: ນຳໃຊ້ເຄື່ອງໃຊ້, ນ້ຳຢາ, ສະບູໃຫ້ຖືກວິທີ.<br>20.4 ການຫຼິ້ນ ແລະ ຄວາມປອດໄພ:<br>- ການຫຼິ້ນ: ຫຼິ້ນເປັນເວລາ, ຫຼິ້ນຖືກວິທີ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.<br>- ຄວາມປອດໄພ: ລະວັງບໍ່ຫຼິ້ນສິ່ງຂອງຕ່າງໆແຮງເກີນຄວນ. |

**ໜ່ວຍທີ 2: ຄອບຄົວຂອງຂ້ອຍ**

| ຫົວຂໍ້ / ອາທິດ | ຫົວຂໍ້ /ວັນ | ເນື້ອໃນ |
|---|---|---|
| 1. ຄອບຄົວ ແລະ ຍາດພີ່ນ້ອງ. | 1. ສະມາຊິກໃນຄອບຄົວ. | **1. ສະມາຊິກໃນຄອບຄົວ**<br>1.1 ສະມະຊິກໃນຄອບຄົວປະກອບມີ: ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ພໍ່ເຖົ້າ, ແມ່ເຖົ້າ, ພໍ່ປູ່, ແມ່ຍ່າ.<br>1.2 ຈຳນວນ ແລະ ຊື່ຂອງແຕ່ລະຄົນໃນຄອບຄົວ. |
| | 2. ວຽກຂອງແຕ່ລະຄົນໃນຄອບຄົວ. | **2. ວຽກຂອງແຕ່ລະຄົນໃນຄອບຄົວ.**<br>2.1 ວຽກຂອງພໍ່ ແລະ ແມ່: ເກືອເປັດ, ເກືອໄກ່, ປຸງແຕ່ງອາຫານ, ຊັກເຄື່ອງ, ລີດເຄື່ອງນຸ່ງ.<br>2.2 ວຽກຂອງອ້າຍ ແລະ ເອື້ອຍ: ຖູເຮືອນ, ລ້າງຖ້ວຍ; ຫຼິ້ນຮ່ວມກັບນ້ອງ, ເບິ່ງແຍງນ້ອງ.<br>2.3 ວຽກຂອງຕົນເອງ: ຊ່ວຍອ້າຍ, ເອື້ອຍມ້ຽນຖ້ວຍ, ບ່ວງ ແລະ ຈອກຫຼັງຈາກກິນອາຫານ. |
| | 3. ການຊ່ວຍເຫຼືອ ແລະ ການປະຢັດ. | **3. ການຊ່ວຍເຫຼືອ ແລະ ການປະຢັດ.**<br>3.1 ການຊ່ວຍເຫຼືອກັນໃນຄອບຄົວ: ຊ່ວຍພໍ່ແມ່ແຕ່ງກິນ, ອະນາໄມເຮືອນ, ເບິ່ງແຍງນ້ອງ, ເກັບມ້ຽນເຄື່ອງຮຽນ ແລະ ເຄື່ອງໃຊ້.<br>3.2 ການປະຢັດນ້ຳ, ປະຢັດໄຟ: ນ້ຳບໍ່ເປີດນ້ຳຫຼິ້ນ, ປິດກັອກນ້ຳໃຫ້ແໜ້ນຫຼັງໃຊ້. ໄຟບໍ່ເປີດໂທລະທັດພັດລົມປະໄວ້. |
| | 4. ຍາດຕິພີ່ນ້ອງ. | **4. ຍາດຕິພີ່ນ້ອງຂອງພໍ່ ແລະ ແມ່.** |

| | | |
|---|---|---|
| | | 4.1 ຍາດຕິພີ່ນ້ອງຂອງພໍ່: ພໍ່ປູ່(ພໍ່ຂອງພໍ່), ແມ່ຍ່າ(ແມ່ຂອງພໍ່), ປ້າ(ເອື້ອຍແມ່ຫຼືພໍ່), ລຸງ(ອ້າຍແມ່ຫຼືພໍ່), ອາວ(ນ້ອງຊາຍພໍ່), ອາ(ນ້ອງສາວພໍ່),<br>4.2 ຍາດຕິພີ່ນ້ອງຂອງແມ່: ແມ່ເຖົ້າ(ແມ່ຂອງແມ່), ພໍ່ເຖົ້າ(ພໍ່ຂອງແມ່), ປ້າ(ເອື້ອຍແມ່ຫຼືພໍ່), ລຸງ(ອ້າຍແມ່ຫຼືພໍ່), ນ້າບາວ(ນ້ອງຊາຍແມ່), ນ້າສາວ(ນ້ອງສາວແມ່)<br>4.3 ການຊ່ວຍເຫຼືອຍາດຕິພີ່ນ້ອງ: ແບ່ງປັນອາຫານ,ສິ່ງຂອງ, ຢ້ຽມຢາມ ແລະ ເບິ່ງແຍງໃນເວລາເຈັບເປັນ. |
| | 5. ຄວາມອົບອຸ່ນໃນຄອບຄົວ. | **5. ຄວາມອົບອຸ່ນໃນຄອບຄົວ:** ການສະແດງອອກທາງກາຍ, ທາງວາຈາ (ເຝິກປະຕິບັດ)<br>5.1 ການສະແດງອອກທາງກາຍ: ການໂອບກອດ, ອູ້ມ, ຫອມແກ້ມ ແລະ ລູບຫົວ.<br>5.2 ການສະແດງອອກທາງວາຈາ: ການໃຊ້ຄຳເວົ້າອ່ອນໂຍນ(ຊົມເຊີຍ, ດີຫຼາຍ, ຄຳຮູ້, ງາມຫຼາຍ, ເກັ່ງຫຼາຍ). |
| 2. ການປະຕິບັດຕົນໃນຄອບຄົວ. | 6.ການກິນ ແລະ ດື່ມ. | **6. ການປະຕິບັດຕົນໃນການກິນ ແລະ ການດື່ມ** (ເຝິກປະຕິບັດ)<br>6.1 ການກິນ: ກິນອາຫານທີ່ມີປະໂຫຍດຖືກເວລາ, ຕັກອາຫານໃຫ້ພໍດີກິນອີ່ມ, ຫຍ້ຳອາຫານບໍ່ໃຫ້ມີສຽງດັງ ແລະ ໃຫ້ແຫຼກຈຶ່ງກືນ; ນຳໃຊ້ບ່ວງກາງຕັກອາຫານ ແລະ ບໍ່ໃຫ້ອາຫານຕົກເຮ່ຍ.<br>6.2 ການດື່ມ: ຖອກນ້ຳໃສ່ຈອກໃຫ້ພໍດີບໍ່ໃຫ້ນ້ຳເຮ່ຍ, ຈັບຈອກທາງລຸ່ມໃຫ້ແໜ້ນ, ດື່ມນ້ຳຄ່ອຍໆກືນບໍ່ໃຫ້ມີສຽງດັງ. |
| | 7. ການນັ່ງ, ຍ່າງ ແລະ ນອນ. | **7. ການປະຕິບັດຕົນໃນການນັ່ງ, ການຍ່າງ ແລະ ການນອນ** (ເຝິກປະຕິບັດ)<br>7.1 ການນັ່ງ:<br>- ການນັ່ງຕັ່ງ: ຫຍັບຕັ່ງໃຫ້ພໍດີກັບໂຕະ, ນັ່ງໃຫ້ຫຼັງຊື່, ແຂນທັງສອງເບື້ອງວາງໄວ້ເທິງໂຕະ.<br>- ການນັ່ງພື້ນ: ແມ່ຍິງນັ່ງພັບແພບ, ຜູ້ຊາຍນັ່ງຂັດສະໝາດ, ນັ່ງຕ່ຳກ່ອນຜູ້ໃຫຍ່.<br>7.2 ການຍ່າງ: ຍ່າງຢືດຕົວຊື່, ກ້າວຂາຍ່າງໃຫ້ພໍດີບໍ່ກ້າວ, ຍ່າງກາຍຜູ້ໃຫຍ່ຢໍ້ຕົວກົ້ມຫົວລົງໜ້ອຍໜຶ່ງ.<br>7.3 ການນອນ: ນອນຢຽດຕົວຊື່, ບໍ່ເອົາຂາກ່າຍຄົນອື່ນ, ນອນແຕ່ຫົວຄ່ຳ ແລະ ຕື່ນນອນແຕ່ເຊົ້າ. |
| | 8. ການຂໍອະນຸຍາດ ແລະ ຮັບສິ່ງຂອງ. | **8. ການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ** (ເຝິກປະຕິບັດ)<br>8.1 ການຂໍອະນຸຍາດ: ກ່ອນຈະໃຊ້ເຄື່ອງໃຊ້ຂອງຜູ້ອື່ນເວົ້າຄຳ (ຂໍອະນຸຍາດ) ຈາກເຈົ້າຂອງເຄື່ອງ.<br>8.2 ການຮັບສິ່ງຂອງ: ເມື່ອໄດ້ຮັບສິ່ງຂອງຈາກຜູ້ອື່ນຍໍມືນົບ ແລະ ກ່າວຄຳຂອບໃຈ. |
| | 9. ການນົບ. | **9. ການນົບ: ມາລະຍາດໃນການນົບ ແລະ ໄຫວ້** (ເຝິກປະຕິບັດ) |

| | | |
|---|---|---|
| | 10. ການປະຢັດ. | 9.1 ການນົບໄຫວ້ພະສົງຫຼືພະພຸດທະຮູບ: ນັ່ງຂຸເຂົ່າ, ຍໍມືນົບໂດຍການຍໍມືຊ້າຍ ແລະ ມືຂວາແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ຍໍມືຂຶ້ນໃຫ້ປາຍນິ້ວມືຈຸຕີນຜົມແລ້ວກາບລົງສາມເທື່ອ.<br>9.2 ການນົບຖາມສະບາຍດີ ແລະ ນົບຂໍອະນຸຍາດຜູ້ໃຫຍ່: ຍົກມືຊ້າຍ ແລະ ມືຂວາແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ກົ້ມຫົວລົງໃຫ້ປາຍນິ້ວມືຈຸຫວ່າງຄິ້ວ ຫຼື ຈຸປາຍດັງ.<br>**10. ການປະຢັດເຄື່ອງຮຽນ, ເຄື່ອງນຸ່ງ ແລະ ເຄື່ອງຫຼິ້ນ**<br>10.1 ເຄື່ອງຮຽນ:<br>- ຊື່ເຄື່ອງຮຽນ: ປຶ້ມ, ສໍດຳ, ສໍສີ.<br>- ການປະຢັດ: ປຶ້ມຂຽນທຸກໜ້າ, ບໍ່ຈີກປຶ້ມ; ສໍແຫຼມຫຼັງຈາກໃຊ້ແລ້ວ ແລະ ເກັບມ້ຽນເປັນລະບຽບ.<br>10.2 ເຄື່ອງນຸ່ງ:<br>- ຊື່ເຄື່ອງນຸ່ງ: ໂສ້ງ, ເສື້ອ, ສິ້ນ, ກະໂປງ.<br>- ການປະຢັດ: ໂສ້ງ, ເສື້ອ, ສິ້ນ, ກະໂປງຫຼັງຈາກນຸ່ງແລ້ວຊັກ, ຕາກ ແລະ ພັບໃຫ້ເປັນລະບຽບ.<br>10.3 ເຄື່ອງຫຼິ້ນ:<br>- ຊື່ເຄື່ອງຫຼິ້ນ: ຕຸກກະຕາ, ລົດ, ຊຸດຕິດຕໍ່.<br>- ການປະຢັດ: ຫຼິ້ນຖືກວິທີບໍ່ມ້າງເພ, ຫຼິ້ນແລ້ວເຊັດ, ລ້າງໃສ່ຖົງຫຼືກັບ, ເກັບມ້ຽນໃຫ້ເປັນລະບຽບ. |
| 3. ເຮືອນ ແລະ ການຮັກສາ ຄວາມສະອາດ. | 11. ເຮືອນ.<br><br><br><br>12. ເຮືອນໄມ້. | **11. ເຮືອນ:** ປະເພດ ແລະ ລັກສະນະເຮືອນ<br>11.1 ປະເພດເຮືອນ: ເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້.<br>11.2 ລັກສະນະເຮືອນ: ເຮືອນຊັ້ນດຽວ, ເຮືອນຫຼາຍຊັ້ນ.<br>11.3 ສີ: ສີເຂັ້ມຫຼືແກ່, ສີຈາງຫຼືອ່ອນ (ຂາວ, ຂຽວ, ເຫຼືອງ.......)<br>**12. ລັກສະນະ, ສ່ວນປະກອບ ແລະ ວັດສະດຸທີ່ນຳໃຊ້ຂອງເຮືອນໄມ້**<br>12.1 ລັກສະນະເຮືອນໄມ້: ຕ່ຳຊັ້ນດຽວ, ຫ້ອງນອນນ້ອຍ,ລະບຽງໃຫຍ່, ຂັ້ນໄດຢູ່ນອກເຮືອນ, ເສົາໄມ້ນ້ອຍໃຫຍ່, ກອງຕະລາງບໍ່ມີຝາ. ຊື່ເອີ້ນເຮືອນຊົງລາວ ຫຼື ເຮືອນລາວເດີມ.<br><br>12.2ສ່ວນປະກອບ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ. |

| | | |
|---|---|---|
| | 13. ເຮືອນກໍ່ປະສົມໄມ້.<br><br><br><br><br>14. ເຮືອນກໍ່.<br><br><br><br>15. ການຮັກສາຄວາມສະອາດເຮືອນ. | 12.3 ວັດສະດຸທີ່ນໍາໃຊ້: ໄມ້, ເຫຼັກຕາປູ, ສັງກະສີ, ກະເບື້ອງ, ຫຍ້າຄາ.<br>**13. ລັກສະນະ, ສ່ວນປະກອບ ແລະ ວັດສະດຸທີ່ນໍາໃຊ້ຂອງເຮືອນກໍ່ປະສົມໄມ້**<br>13.1 ລັກສະນະເຮືອນກໍ່ປະສົມໄມ້: ສູງສອງຊັ້ນ, ຊັ້ນເທິງເຮັດດ້ວຍໄມ້, ຊັ້ນລຸ່ມກໍ່ດ້ວຍດິນຈີ່, ຊີມັງ, ຈໍານວນຫ້ອງມີຫຼາຍ, ໃຊ້ໄມ້ໃນການຕົບແຕ່ງ, ຊື່ເອີ້ນເຮືອນລາວສະໄໝໃໝ່ ຫຼື ກໍ່ປະສົມໄມ້.<br>13.2ສ່ວນປະກອບ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ.<br>13.3ວັດສະດຸທີ່ນໍາໃຊ້: ສັງກະສີ, ກະເບື້ອງ, ໄມ້. ເຫຼັກ, ດິນຈີ່, ຊີມັງ, ຫີນ, ຊາຍ.<br>**14. ລັກສະນະ, ສ່ວນປະກອບ ແລະ ວັດສະດຸທີ່ນໍາໃຊ້ຂອງເຮືອນກໍ່**<br>14.1 ລັກສະນະເຮືອນກໍ່: ສູງຫຼາຍຊັ້ນໂຄງສ້າງເຮັດດ້ວຍເຫຼັກກໍ່ດ້ວຍດິນຈີ່ຊີມັງ, ຈໍານວນຫ້ອງມີຫຼາຍ, ຊື່ເອີ້ນເຮືອນກໍ່, ຕຶກ, ອາຄານ.<br>14.2 ສ່ວນປະກອບ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ.<br>14.3 ວັດສະດຸທີ່ນໍາໃຊ້: ໄມ້, ແກ້ວ, ເຫຼັກ, ສັງກະສີ, ກະເບື້ອງ, ດິນຈີ່, ຊີມັງ, ຫີນ ແລະ ຊາຍ.<br>**15. ການຮັກສາຄວາມສະອາດເຮືອນ:**<br>15.1 ຊື່ເຄື່ອງໃຊ້: ຟອຍກວາດພື້ນ, ຟອຍປັດໃຍແມງມຸມ, ຊວ້ານຂີ້ເຫຍື້ອ, ກະຕ່າຂີ້ເຫຍື້ອ; ຄຸນໍ້າ, ຜ້າຖູພື້ນ, ຜ້າເຊັດ, ໄມ້ຖູພື້ນ, ນໍ້າຢາຖູພື້ນ,<br>15.2 ການຮັກສາຄວາມສະອາດ: ປັດກວາດ ແລະ ຖູພື້ນເຮືອນ; ເຊັດປະຕູ ແລະ ປ່ອງຢ້ຽມ; ປັດໃຍແມງມຸມຕາມເພດານ, ຝາເຮືອນ ແລະ ເກັບມ້ຽນເຄື່ອງເປັນລະບຽບ. |
| 4. ຫ້ອງໃນເຮືອນ ແລະ ເຄື່ອງໃຊ້. | 16. ຫ້ອງໃນເຮືອນ.<br><br><br><br>17. ຫ້ອງນອນ. | **16. ຫ້ອງໃນເຮືອນ:** ປະເພດ, ຂະໜາດ, ສີຫ້ອງ<br>16.1 ປະເພດຫ້ອງໃນເຮືອນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ ,ຫ້ອງອາບນໍ້າ, ວິດຖ່າຍ.<br>16.2 ຂະໜາດຫ້ອງ: ນ້ອຍ, ໃຫຍ່, ກ້ວາງ, ແຄບ.<br>16.3 ສີ: ສີຂາວ, ຂຽວ, ຟ້າ,<br>**17. ຫ້ອງນອນ: ຄຸນປະໂຫຍດ, ເຄື່ອງໃຊ້.**<br>17.1ເຄື່ອງໃຊ້: ຕຽງ, ຕູ້, ສາດ, ເສື່ອ, ຜ້າກັ້ງ, ຜ້າປູບ່ອນ, ຜ້າຫົ່ມ, ໝອນ ແລະ ມຸ້ງ.<br>17.2 ຄຸນປະໂຫຍດຫ້ອງນອນ: ໃຊ້ໄວ້ເປັນບ່ອນນອນພັກຜ່ອນ. |

| | | |
|---|---|---|
| | | 17.3 ການຮັກສາຄວາມສະອາດ: ປັດກວາດ, ເຊັດຖູ, ຊັກເຄື່ອງນອນໃຫ້ສະອາດ, ຕາກໃຫ້ແຫ້ງດີ ແລະ ເກັບມ້ຽນໃຫ້ເປັນລະບຽບ. |
| | 18. ຫ້ອງຮັບແຂກ. | **18. ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງຮັບແຂກ.**<br>18.1 ເຄື່ອງໃຊ້: ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າຕອກໄມ້, ໂທລະພາບ, ຕັ່ງນວມ ຫຼື ໂຊຟາ.<br>18.2 ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນນັ່ງຮັບແຂກໃນເວລາແຂກມາເຮືອນ ຫຼື ຄົນໃນຄອບຄົວນັ່ງລົມກັນ ແລະ ນັ່ງເບິ່ງໂທລະພາບ.<br>18.3 ການຮັກສາຄວາມສະອາດ: ປັດກວາດ, ເຊັດຖູ ແລະ ຈັດວາງເຄື່ອງໃຊ້ໃຫ້ເປັນລະບຽບ. |
| | 19. ຫ້ອງແຕ່ງກິນ. | **19. ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງແຕ່ງກິນ**<br>19.1ເຄື່ອງໃຊ້: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ, ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ແລະ ຜ້າ.<br>19.2ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນຄົວກິນ, ບາງຄັ້ງຄາວກໍນັ່ງກິນເຂົ້າ.<br>19.3ການຮັກສາຄວາມສະອາດ: ປັດກວາດ, ເຊັດຖູ, ລ້າງ ແລະ ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ. |
| | 20. ຫ້ອງອາບນ້ຳ ແລະ ຫ້ອງວິດຖ່າຍ. | **20. ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງນ້ຳ ແລະ ຫ້ອງວິດຖ່າຍ**<br>20.1ເຄື່ອງໃຊ້: ໄຫນ້ຳ ຫຼື ອ່າງນ້ຳ, ຄຸ, ໂອ, ສະບູ, ຢາສະຜົມ, ຟອຍຖູແຂ້ວ ແລະ ຢາຖູແຂ້ວ.<br>20.2 ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນອາບນ້ຳ, ຖ່າຍໜັກ, ຖ່າຍເບົາ.<br>20.3 ການຮັກສາຄວາມສະອາດ: ເຊັດຖູ, ລ້າງໃຫ້ສະອາດ, ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ. |

**ໜ່ວຍທີ 3: ໂຮງຮຽນຂອງຂ້ອຍ**

| ຫົວຂໍ້ / ອາທິດ | ຫົວຂໍ້ /ວັນ | ເນື້ອໃນ |
|---|---|---|
| 1. ໂຮງຮຽນຂອງ ແລະ ການປະຕິບັດຕົນ. | 1. ໂຮງຮຽນ ແລະ ຫ້ອງຮຽນ. | **1. ຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ ໝູ່ເພື່ອນໃນຫ້ອງທີ່ຕົນເອງຮຽນ**<br>1.1 ຊື່ໂຮງຮຽນ, ຊື່ຂັ້ນຮຽນ, ຊື່ຫ້ອງຮຽນຂອງຕົນເອງ<br>1.2 ຊື່ໝູ່ເພື່ອນໃນຫ້ອງຮຽນຕົນເອງ (ທ້າວ, ນາງ) |
| | 2. ຄູປະຈຳຫ້ອງ. | **2. ຊື່ຄູປະຈຳຫ້ອງ, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ**<br>2.1 ຊື່ຄູປະຈຳຫ້ອງຕົນເອງ.<br>2.2 ໜ້າທີ່ຮັບຜິດຊອບ: ເບິ່ງແຍງລ້ຽງດູ ແລະ ນຳພາເດັກເຄື່ອນໄຫວກິດຈະກຳ (ຫຼິ້ນ, ກິນ, ນອນ, ຮຽນໜັງສື, ປະດັບປະດາ ແລະ ອະນາໄມຫ້ອງຮຽນ).<br>2.3 ການປະຕິບັດຕົນ: ໄປມາລາຄອບ (ຂໍອະນຸຍາດ), ເວົ້າຈາສຸພາບຂານຕອບ (ໂດຍ, ເຈົ້າ), ໃຊ້ຄຳແທນຊື່(ຂ້ານ້ອຍ, ລູກ, ຫຼານ)ຖາມສະບາຍດີ(ຍໍມືນົບ), ໄດ້ຮັບສິ່ງຂອງ(ຂອບໃຈ); ຊ່ວຍເຫຼືອຄູອະນາໄມ, ເກັບມ້ຽນເຄື່ອງຕ່າງໆ. |
| | 3. ຄູຫ້ອງຂ້າງຄຽງ. | **3. ຄູຫ້ອງຂ້າງຄຽງ, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ**<br>3.1 ຊື່ຄູຫ້ອງຂ້າງຄຽງ.<br>3.2 ເບິ່ງແຍງລ້ຽງດູ ແລະ ນຳພາເດັກເຄື່ອນໄຫວກິດຈະກຳ (ຫຼິ້ນ, ກິນ, ນອນ, ຮຽນໜັງສື, ປະດັບປະດາ ແລະ ອະນາໄມຫ້ອງຮຽນ).<br>3.3 ການປະຕິບັດຕົນ: ເວົ້າຈາສຸພາບຂານຕອບ (ໂດຍ, ເຈົ້າ), ໃຊ້ຄຳແທນຊື່ (ຂ້ານ້ອຍ, ລູກ, ຫຼານ), ຖາມສະບາຍດີ(ຍໍມືນົບ), ໄດ້ຮັບສິ່ງຂອງ(ຂອບໃຈ), ຊ່ວຍເຫຼືອເມື່ອເພິ່ນຮ້ອງຂໍ. |
| | 4. ຜູ້ອຳນວຍການ. | **4. ຜູ້ອຳນວຍການ, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ.**<br>4.1 ຊື່ຜູ້ອຳນວຍການ.<br>4.2 ໜ້າທີ່ຮັບຜິດຊອບ: ເຮັດວຽກຫ້ອງການ; ນຳພາ ແລະ ຊ່ວຍເຫຼືອນາຍຄູທຸກຄົນໃນໂຮງຮຽນ |

| | | |
|---|---|---|
| | 5. ແມ່ລ້ຽງ ແລະ ພະນັກງານອະນາໄມ. | 4.3 ການປະຕິບັດຕົນ: ເວົ້າຈາສຸພາບຂານຕອບ(ໂດຍ, ເຈົ້າ), ໃຊ້ຄຳແທນຊື່(ຂ້ານ້ອຍ, ລູກ, ຫຼານ), ຖາມສະບາຍດີ(ຍໍມືນົບ), ໄດ້ຮັບສິ່ງຂອງ(ຂອບໃຈ), ຊ່ວຍເຫຼືອເມື່ອເພິ່ນຮ້ອງຂໍ.<br>**5. ຊື່ແມ່ລ້ຽງ, ພະນັກງານອະນາໄມ, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ**<br>5.1 ຊື່ແມ່ລ້ຽງ ແລະ ພະນັກງານອະນາໄມ<br>5.2 ໜ້າທີ່ຮັບຜິດຊອບ: ແມ່ລ້ຽງ (ແຕ່ງອາຫານ, ຈັດມ້ຽນເຄື່ອງໃຊ້ໃນເຮືອນຄົວໃຫ້ເປັນລະບຽບ) ພະນັກງານອະນາໄມ (ປັດກວາດເຊັດຖູຫ້ອງ, ເດີ່ນ, ຫົດນ້ຳຕົ້ນດອກໄມ້).<br>5.3 ການປະຕິບັດຕົນ: ເວົ້າຈາສຸພາບຂານຕອບ (ໂດຍ, ເຈົ້າ), ໃຊ້ຄຳແທນຊື່ (ຂ້ານ້ອຍ, ລູກ, ຫຼານ), ຖາມສະບາຍດີ(ຍໍມືນົບ), ໄດ້ຮັບສິ່ງຂອງ(ຂອບໃຈ), ຊ່ວຍເຫຼືອເມື່ອເພິ່ນຮ້ອງຂໍ. |
| 2. ລະບຽບວິໄນ ແລະ ການປະຕິບັດຕົນໃນໂຮງຮຽນ. | 6. ການປະຕິບັດລະບຽບຂອງໂຮງຮຽນ.<br><br><br><br>7. ການເຄົາລົບທຸງຊາດ.<br><br><br><br><br><br><br>8. ການເຄື່ອນໄຫວກິດຈະກຳສຳຄັນໃນໂຮງຮຽນ. | **6. ການປະຕິບັດລະບຽບຂອງໂຮງຮຽນ:** ການນຸ່ງເຄື່ອງ, ການປະຕິບັດໂມງເວລາ<br>6.1 ການປະຕິບັດລະບຽບໃນການນຸ່ງເຄື່ອງ: ນຸ່ງເຄື່ອງເປັນລະບຽບຕາມມື້ທີ່ໂຮງຮຽນກຳນົດ.<br>6.2 ການປະຕິບັດໂມງເວລາ: ມາໂຮງຮຽນ ແລະ ກັບບ້ານໃຫ້ຖືກຕ້ອງຕາມເວລາທີ່ທາງໂຮງຮຽນກຳນົດໄວ້.<br>**7. ລັກສະນະ ແລະ ລະບຽບການເຄົາລົບທຸງຊາດ** (ເຝິກປະຕິບັດ)<br>7.1 ລັກສະນະທຸງຊາດ:<br>- ຮູບຮ່າງ: ສີ່ຫຼ່ຽມ (ສີ່ຫຼ່ຽມຜືນຜ້າ), ວົງມົນ(ວົງເດືອນ).<br>- ສີ: ສີຂາວ, ສີຟ້າ, ສີແດງ.<br>- ຂະໜາດ: ນ້ອຍ, ໃຫຍ່.<br>7.2 ລະບຽບການເຄົາລົບທຸງຊາດ: ຢືນລຽນແຖວຕາມລຳດັບບໍ່ຢອກ ແລະ ບໍ່ລົມກັນ, ປົດໝວກຫຼືຜ້າປົກຫົວ, ຢືນກົງຢູ່ກັບທີ່ຮ້ອງເພງຊາດ, ຈົບສຽງເພງກົ້ມຫົວຄຳນັບ,<br>**8. ການປະຕິບັດກິດຈະກຳໃນ ແລະ ນອກໂຮງຮຽນ**<br>8.1 ການປະຕິບັດກິດຈະກຳໃນໂຮງຮຽນ: ການອອກແຮງງານ (ປູກ, ຫົດນ້ຳຕົ້ນດອກໄມ້, ເກັບຂີ້ເຫຍື້ອ, ...) ທັດສະນະສຶກສາສະຖານທີ່ສຳຄັນ, ແຂ່ງຂັນຮ້ອງເພງ, ຟ້ອນ, ຫຼິ້ນກິລາ. |

| | | |
|---|---|---|
| | 9. ການປະຕິບັດຕົນໃນໂຮງຮຽນ.<br><br><br><br><br>10. ການປະຕິບັດຕົນໃນໂຮງຮຽນ (ຕໍ່). | 8.2 ການປະຕິບັດກິດຈະກຳນອກໂຮງຮຽນ: ການສ້າງນຳຊື່ສຽງມາສູ່ຕົນເອງ ແລະ ໂຮງຮຽນໃນແຂ່ງຂັນ ຖາມ-ຕອບ, ແຕ້ມຮູບ, ຮ້ອງເພງ, ຟ້ອນ, ຫຼິ້ນກິລາ.<br>**9. ການປະຕິບັດຕົນໃນໂຮງຮຽນ** (ການຮຽນ)<br>9.1 ການປະຕິບັດຕົນໃນໂຮງຮຽນປະກອບມີ: ການຮຽນ, ການຫຼິ້ນ, ການພັກຜ່ອນ. (ລະບຽບການໄປມາ, ໂມງຮຽນ, ໂມງພັກຜ່ອນ, ໂມງເລີກຮຽນ).<br>9.2 ການປະຕິບັດຕົນໃນການຮຽນ: ບໍ່ບົ່ນແຊວ, ຕັ້ງໃຈຟັງຄູເວົ້າ, ບໍ່ຢອກໝູ່ໃນເວລາຮຽນ, ແບ່ງປັນເຄື່ອງໃຊ້ ແລະ ຊ່ວຍເຫຼືອໝູ່ໃນເວລາເຮັດກິດຈະກຳຕ່າງໆ ແລະ ຍອມຮັບຟັງຄຳຄິດຄຳເຫັນຂອງໝູ່ເພື່ອນ.<br>**10. ການປະຕິບັດຕົນໃນການຫຼິ້ນ ແລະ ພັກຜ່ອນ** (ເຝິກປະຕິບັດ)<br>10.1 ການປະຕິບັດຕົນໃນການຫຼິ້ນ: ແບ່ງປັນເຄື່ອງຫຼິ້ນ, ຫຼິ້ນຢ່າງລະມັດລະວັງ, ຫຼິ້ນດ້ວຍຄວາມມ່ວນຊື່ນ, ປອດໄພ; ຊ່ວຍກັນເກັບມ້ຽນເຄື່ອງຫຼິ້ນ; ອະນາໄມຕົນ ແລະ ມືໃຫ້ສະອາດ.<br>10.2 ການປະຕິບັດຕົນໃນການພັກຜ່ອນ: ໃນເວລາພັກຜ່ອນບໍ່ລົມ, ບໍ່ຢອກກັນ; ນອນພັກຜ່ອນ, ຕື່ນຖືກເວລາ. |
| 3. ຫ້ອງ ແລະ ການຮັກສາຄວາມສະອາດ. | 11. ຫ້ອງ.<br><br><br><br><br>12. ຫ້ອງຮຽນ. | **11. ຫ້ອງໃນໂຮງຮຽນ:** ປະເພດ, ລັກສະນະຫ້ອງ<br>11.1 ປະເພດຫ້ອງ:ຫ້ອງຮຍນ,ຫ້ອງອ່ານ,ຫ້ອງອາຫານ,ຫ້ອງນ້ຳ-ວິດຖ່າຍ.<br>11.2 ລັກສະນະຫ້ອງ:<br>- ຂະໜາດຫ້ອງ: ນ້ອຍ, ໃຫຍ່, ກ້ວາງ, ຍາວ<br>- ສີ: ສີ(ຂາວ, ຂຽວ, ເຫຼືອງ)<br>**12. ຫ້ອງຮຽນ:** ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດ<br>12.1 ຊື່ເຄື່ອງໃຊ້: ໂຕະ, ຕັ່ງ, ຕູ້, ກະດານ, ສໍຂາວ, ປຶ້ມຂຽນ, ປຶ້ມບົດເຝິກຫັດ, ປຶ້ມນິທານ, ສໍດຳ, ສໍສີ,ບູ້ອກ, ມຸມ ແລະ ອຸປະກອນໃນມຸມຮຽນຮູ້ຕ່າງໆ.<br>12.2 ຄຸນປະໂຫຍດ: ບ່ອນທີ່ເດັກ, ຄູຮ່ວມກັນປະຕິບັດກິດຈະກຳການຫຼິ້ນ, ຮຽນຮູ້ຕ່າງໆໃນແຕ່ລະວັນ ແລະ ບ່ອນເດັກນອນພັກຜ່ອນຕອນທ່ຽງ.<br>12.3 ການຮັກສາຄວາມສະອາດ: ຖິ້ມຂີ້ເຫຍື້ອໃສ່ກະຕ້ງ, ເຊັດ, ຖູ, ກວາດ, ເກັບມ້ຽນເປັນລະບຽບ. |

| | | |
|---|---|---|
| | 13. ຫ້ອງອ່ານ ຫຼື ມຸມອ່ານ. | **13. ຫ້ອງອ່ານ:** ເຄື່ອງໃຊ້, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ<br>13.1 ຊື່ເຄື່ອງໃຊ້: ໂຕະ, ຕັ່ງ, ປື້ມນິທານ, ປື້ມຮູບພາບຕ່າງໆ.<br>13.2 ຄຸນປະໂຫຍດ: ບ່ອນຮຽນຮູ້ຈາກການອ່ານປື້ມນິທານ ແລະ ປື້ມຮູບພາບຕ່າງໆ.<br>13.3 ລະບຽບຂອງຫ້ອງອ່ານ: ຕັ້ງໃຈອ່ານບໍ່ລົມກັນ, ເບິ່ງປື້ມຂອງຕົນເອງ ແລະ ບໍ່ຍາດໝູ່.<br>13.4 ການຮັກສາຄວາມສະອາດ: ຄ່ອຍເປີດປື້ມບໍ່ໃຫ້ຂາດ, ຫຼັງຈາກອ່ານແລ້ວເກັບມ້ຽນໃຫ້ຖືກບ່ອນ. |
| | 14. ຫ້ອງອາຫານ ຫຼື ຫ້ອງແຕ່ງກິນ. | **14. ເຄື່ອງໃຊ້, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງອາຫານ**<br>14.1 ຊື່ເຄື່ອງໃຊ້: ໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈອກ, ຕຸກນ້ຳດື່ມ, ໝໍ້, ຊາມ ແລະ ເຄື່ອງຄົວກິນ.<br>14.2 ຄຸນປະໂຫຍດ: ບ່ອນສຳລັບເດັກກິນເຂົ້າຮ່ວມກັນ. ບ່ອນທີ່ແມ່ລ້ຽງແຕ່ງກິນ.<br>14.3 ລະບຽບຫ້ອງອາຫານ: ກິນອາຫານທ່ຽງຕາມເວລາ, ນັ່ງໃຫ້ຖືກບ່ອນ, ກິນອາຫານຕາມຖ້ວຍຕົນເອງ ບໍ່ໃຫ້ມີສຽງດັງ, ເວົ້າສຽງຄ່ອຍ, ຊ່ວຍເກັບມ້ຽນຖ້ວຍຕົນເອງ.<br>14.4 ການບົວລະບັດຮັກສາ: ລ້າງຖ້ວຍ, ບ່ວງ, ຈອກໃຫ້ສະອາດ, ເກັບມ້ຽນໃຫ້ຖືກບ່ອນ, ເຊັດຖູໂຕະ, ຕັ່ງ ໃຫ້ສະອາດ ແລະ ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ. |
| | 15. ຫ້ອງນ້ຳ-ວິດຖ່າຍ. | **15. ເຄື່ອງໃຊ້, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງນ້ຳ-ວິດຖ່າຍ**<br>15.1 ຊື່ເຄື່ອງໃຊ້: ຄຸ; ໂອ; ສະບູ; ຢາຖູແຂ້ວ; ຟອຍຖູແຂ້ວ; ນ້ຳຢາ ແລະ ຟອຍຖູພື້ນ.<br>15.2 ຄຸນປະໂຫຍດ: ບ່ອນອາບນ້ຳ, ລ້າງໜ້າ, ຖູແຂ້ວ, ຖ່າຍໜັກ ແລະ ຖ່າຍເບົາ.<br>15.3 ລະບຽບໃນການເຂົ້າຫ້ອງນ້ຳ: ເຂົ້າເທື່ອລະຄົນ, ກ່ອນ ແລະ ຫຼັງຖ່າຍໜັກຖອກນ້ຳໃສ່ຫົວວິດກ່ອນ, ຖ່າຍແລ້ວເຊັດຫຼືລ້າງກົ້ນໃຫ້ສະອາດ, ລ້າງມື, ປິດກັອກນ້ຳ.<br>15.4 ການບົວລະບັດຮັກສາ: ລ້າງຫົວວິດ, ຖູພື້ນ, ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ, ເກັບມ້ຽນເຄື່ອງໃຊ້. |
| 4. ເດີ່ນ, ເຄື່ອງຕ່າງໆ ແລະ ການບົວລະບັດຮັກສາ. | 16. ເດີ່ນໂຮງຮຽນ. | **16. ປະເພດ, ຈຳນວນ ແລະ ລັກສະນະເດີ່ນໂຮງຮຽນ**<br>16.1 ປະເພດເຄື່ອງຕ່າງໆ: ຫຼັກທຸງຊາດ, ເດີ່ນຫຼິ້ນ, ເຄື່ອງຫຼິ້ນ, ຮົ້ວ, ສວນດອກໄມ້, ຕົ້ນໄມ້.<br>16.2 ຈຳນວນເຄື່ອງຕ່າງໃນເດີ່ນໂຮງຮຽນຕົນເອງ.<br>16.3 ລັກສະນະເດີ່ນໂຮງຮຽນ: ເດີ່ນນ້ອຍ, ເດີ່ນໃຫຍ່, ເດີ່ນຍາວ, ເດີ່ນສັ້ນ. |

| | | |
|---|---|---|
| | 17. ເດີ່ນໂຮງຮຽນ (ຕໍ່). | **17. ຄຸນປະໂຫຍດ ແລະ ການບົວລະບັດຮັກສາ**<br>17.1 ຄຸນປະໂຫຍດ: ເປັນບ່ອນໃຫ້ເດັກຫຼິ້ນ ແລະ ເຄື່ອນໄຫວກິດຈະກຳນອກຫ້ອງຮຽນ.<br>17.2 ການບົວລະບັດຮັກສາ: ຖິ້ມຂີ້ເຫຍື້ອໃສ່ກະຖັງ, ຫົດນ້ຳຕົ້ນດອກໄມ້, ປັດກວາດເດີ່ນ. |
| | 18. ເຄື່ອງຫຼິ້ນໃນເດີ່ນ. | **18. ຄຸນປະໂຫຍດ ແລະ ການບົວລະບັດຮັກສາເຄື່ອງຫຼິ້ນໃນເດີ່ນ**<br>18.1 ຊື່ເຄື່ອງຫຼິ້ນ: ມ້າໝູນ, ຣາວໂຫນ, ຕໍ່ຕ່າງລະດັບ... (ໃນເດີ່ນໂຮງຮຽນຕົນເອງ)<br>18.2 ຄຸນປະໂຫຍດ: ມ້າໝູນ(ປີ່ນໄປມາຊ່ວຍໃຫ້ຮ່າງກາຍຊິງຕົວ); ຣາວໂຫນ(ແຂນໂຫນຊ່ວຍກ້າມຊີ້ນແຂນແຂງແຮງ); ຕໍ່ຕ່າງລະດັບ(ໄຕ່ໄປມາຊ່ວຍໃຫ້ກ້າມຊີ້ນຂາແຂງແຮງ). ເຄື່ອງຫຼິ້ນໃນເດີ່ນຊ່ວຍພັດທະນາຄວາມຄິດສ້າງ ສັນ ແລະ ອາລົມມ່ວນຊື່ນ.<br>18.3 ການບົວລະບັດຮັກສາ: ປະຕິບັດຄຳແນະນຳໃນການຫຼິ້ນເຄື່ອງຫຼິ້ນ, ຄ່ອຍຫຼິ້ນ, ຫຼັງຈາກຫຼິ້ນແລ້ວອະນາໄມສະຖານທີ່ໃຫ້ສະອາດ. |
| | 19. ອຸປະກອນສຳລັບຫຼິ້ນນ້ຳ ແລະ ຫຼິ້ນດິນຊາຍ. | **19. ຄຸນປະໂຫຍດ ແລະ ການບົວລະບັດຮັກສາອຸປະກອນສຳລັບຫຼິ້ນນ້ຳ ແລະ ຫຼິ້ນດິນຊາຍ**<br>19.1 ຊື່ອຸປະກອນ: ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ, ເຂີງ, ນ້ຳ ແລະ ຊາຍ.<br>19.2 ຄຸນປະໂຫຍດ: ເຄື່ອງຫຼິ້ນນ້ຳ, ຊາຍຊ່ວຍໃຫ້ກ້າມຊີ້ນມືແຂງແຮງ, ພັດທະນາຄວາມຄິດສ້າງສັນ, ອາລົມມ່ວນຊື່ນ<br>19.3 ການບົວລະບັດຮັກສາ: ລ້າງອຸປະກອນໃຫ້ສະອາດ, ຕາກໃຫ້ແຫ້ງ, ເກັບມ້ຽນໃຫ້ຖືກບ່ອນ, ປົກປັກຮັກສາບໍ່ໃຫ້ເສຍຫາຍ. |
| | 20. ເວທີການສະແດງ. | **20. ຄຸນປະໂຫຍດ ແລະ ການປົກປັກຮັກສາເວທີການສະແດງ**<br>20.1 ຄຸນປະໂຫຍດ: ເປັນບ່ອນສະແດງສິລະປະວັນນະຄະດີ, ຈັດກິດຈະກຳຕ່າງໆພາຍໃນໂຮງຮຽນ.<br>20.2 ການບົວລະບັດຮັກສາ: ຊ່ວຍຄູປັດກວາດເຊັດຖູ; ບໍ່ຂີດຂຽນ ຫຼື ແຕ້ມທົ່ວທີບໃສ່ເວທີສະແດງ; ຖິ້ມຂີ້ເຫຍື້ອໃສ່ກະຖັງ ຫຼື ກະຕ່າ ແລະ ບໍ່ໄປຫຼິ້ນ ຫຼື ໂຕນເວທີສະແດງຕາມລຳພັງ. |

**ໜ່ວຍທີ 4: ບ້ານຂອງຂ້ອຍ**

| ຫົວຂໍ້ / ອາທິດ | ຫົວຂໍ້ /ວັນ | ເນື້ອໃນ |
|---|---|---|
| 1. ບ້ານ. | 1. ບ້ານ ແລະ ສະຖານທີ່ສໍາຄັນພາຍໃນບ້ານ. | **1. ບ້ານ, ທີ່ຢູ່ ແລະ ສະຖານທີ່ສໍາຄັນພາຍໃນບ້ານຕົນເອງ**<br>1.1 ຊື່ບ້ານ...... ໜ່ວຍ..... ເຮືອນເລກທີ, ຊື່ຖະໜົນ ແລະ ເລກທີຮ່ອມບ້ານຂອງຕົນເອງ.<br>1.2 ສະຖານທີ່ສໍາຄັນພາຍໃນບ້ານ: ຫ້ອງການປົກຄອງບ້ານ, ວັດ, ສະຖານທີ່ທ່ອງທ່ຽວ, ໂຮງຮຽນ, ສຸກສາລາ, ຕະຫຼາດຫຼືຮ້ານຂາຍເຄື່ອງ ແລະ ເດີ່ນກິລາ. |
| | 2. ຫ້ອງການປົກຄອງບ້ານ. | **2. ຫ້ອງການປົກຄອງບ້ານ:** ບຸກຄົນ, ໜ້າທີ່, ຄວາມສໍາຄັນ ແລະ ການປະຕິບັດຕົນ<br>2.1 ບຸກຄົນ: ນາຍບ້ານ, ອົງການຈັດຕັ້ງແນວໂຮມ, ສະຫະພັນແມ່ຍິງ, ຊາວໜຸ່ມ, ກອງຫຼອນ.<br>2.2 ໜ້າທີ່ຂອງນາຍບ້ານ: ເບິ່ງແຍງປະຊາຊົນພາຍໃນບ້ານ.<br>2.3 ຄວາມສໍາຄັນ: ເປັນບ່ອນເຕົ້າໂຮມ, ປຶກສາຫາລືວຽກງານຂອງປະຊາຊົນພາຍໃນບ້ານ.<br>2.4 ການປະຕິບັດຕົນ: ເຄົາລົບນັບຖື, ປະຕິບັດຕາມຄໍາແນະນໍາທີ່ດີຂອງຜູ້ໃຫຍ່. |
| | 3. ວັດ ແລະ ສະຖານທີ່ທ່ອງທ່ຽວ. | **3. ວັດ ແລະ ສະຖານທີ່ທ່ອງທ່ຽວ:** ບຸກຄົນ, ຄວາມສໍາຄັນ ແລະ ການປະຕິບັດຕົນ<br>3.1 ວັດ:<br>- ບຸກຄົນທີ່ອາໄສຢູ່ໃນວັດ: ຄູບາ, ຈົວ, ແມ່ຂາວ, ສັງຄະລີ.<br>- ຄວາມສໍາຄັນ: ບ່ອນເຄົາລົບນັບຖືທາງສາສະໜາ.<br>- ການປະຕິບັດຕົນ: ນົບໄຫວສະຖານທີ່ ແລະ ບຸກຄົນໃນວັດ, ການແຕ່ງຕົວ (ນຸ່ງເສື້ອສີຂາວ ຫຼື ສີບໍ່ເຂັ້ມ, ຜູ້ຍິງນຸ່ງສິ້ນ ແລະ ບ່ຽງແພ), ບໍ່ເວົ້າສຽງດັງເກີນໄປ.<br>3.2 ສະຖານທີ່ທ່ອງທ່ຽວ:<br>- ບຸກຄົນ: ຜູ້ນໍາພາທ່ຽວ, ນັກທ່ອງທ່ຽວ, ພະນັກງານທ່ອງທ່ຽວ.<br>- ຄວາມສໍາຄັນ: ບ່ອນພັກຜ່ອນ ແລະ ຊົມທໍາມະຊາດ.<br>- ການປະຕິບັດຕົນ: ລຽນແຖວຊື້ບັດ ແລະ ເຂົ້າເບິ່ງ, ບໍ່ຈັບບາຍສິ່ງຕ່າງໆ, ບໍ່ເວົ້າສຽງດັງເກີນໄປ, ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ ແລະ ຖ່າຍໜັກ-ເບົາໃສ່ວິດຖ່າຍ. |

| | | |
|---|---|---|
| 23 | 4. ໂຮງຮຽນ ແລະ ສຸກສາລາ. | **4. ໂຮງຮຽນ ແລະ ສຸກສາລາ:** ບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນ<br>4.1 ໂຮງຮຽນ:<br>- ບຸກຄົນ: ຜູ້ອຳນວຍການ, ຄູສອນ, ແມ່ລ້ຽງ, ພະນັກງານອະນາໄມ...<br>- ຄວາມສຳຄັນ: ບ່ອນຮຽນຮູ້, ຫຼິ້ນ ແລະ ປະຕິບັດກິດຈະກຳຕ່າງໆຂອງນັກຮຽນ,<br>- ການປະຕິບັດຕົນ: ເຄົາລົບນັບຖືຜູ້ໃຫຍ່, ຮັກແພງຊ່ວຍເຫຼືອໝູ່ເພື່ອນ, ຮັກສາຄວາມສະອາດ.<br>4.2 ສຸກສາລາ:<br>- ບຸກຄົນ: ທ່ານໝໍ, ແພດ, ພະຍາບານ ແລະ ພະນັກງານອະນາໄມ.<br>- ຄວາມສຳຄັນ: ບ່ອນປິ່ນປົວຜູ້ເຈັບປ່ວຍປະຈຳບ້ານ ແລະ ເມືອງ.<br>- ການປະຕິບັດຕົນ: ລຽນແຖວເອົາບັດຄິວ, ນັ່ງລໍຖ້າເຂົ້າກວດຕາມລຳດັບ, ບໍ່ເວົ້າສຽງດັງເກີນໄປ, ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ ແລະ ຖ່າຍໜັກ-ເບົາໃສ່ວິດຖ່າຍ. |
| | 5. ຕະຫຼາດ ແລະ ເດີ່ນກິລາ. | **5. ຕະຫຼາດ, ເດີ່ນກິລາ, ບຸກຄົນ, ຄວາມສຳຄັນ ແລະ ການປະຕິບັດຕົນ**<br>5.1 ຕະຫຼາດ.<br>- ບຸກຄົນ: ພໍ່ຄ້າ, ແມ່ຄ້າ(ຜູ້ຂາຍ) ແລະ ລູກຄ້າ (ຜູ້ຊື້).<br>- ຄວາມສຳຄັນ: ບ່ອນຊື້,ຂາຍ ຫຼື ແລກປ່ຽນສິນຄ້າດ້ວຍເງິນ.<br>- ການປະຕິບັດຕົນ: ເລືອກສິ່ງຂອງດ້ວຍຕົນເອງຫຼືຖາມຜູ້ຂາຍ, ຄ່ອຍຈັບບາຍສິ່ງຂອງ, ຈ່າຍເງິນກ່ອນນຳໃຊ້, ຈ່າຍແລະ ເອົາເງິນທອນໃຫ້ຖືກຕ້ອງ ແລະ ຖິ້ມຂີ່ເຫຍື່ອໃຫ້ຖືກບ່ອນ.<br>5.2 ເດີ່ນກິລາ.<br>- ບຸກຄົນ: ກຳມະການຈັດການແຂ່ງຂັນ, ກຳມະການຕັດສິນ, ນັກກິລາ, ຜູ້ຊົມ<br>- ຄວາມສຳຄັນ: ບ່ອນຫຼິ້ນ, ແຂ່ງຂັນ ແລະ ຊົມກິລາປະເພດຕ່າງໆ.<br>- ການປະຕິບັດຕົນ: ລຽນແຖວຊື້ບັດເຂົ້າຊົມ, ນັ່ງຖືກບ່ອນ, ຖິ້ມຂີ່ເຫຍື່ອໃຫ້ຖືກບ່ອນ, ຖ່າຍໜັກ-ເບົາໃສ່ວິດຖ່າຍ. |

| | | |
|---|---|---|
| 2. ອາຊີບ. | 6. ອາຊີບຄູ ແລະ ແພດ. | **6. ອາຊີບ ຄູ ແລະ ແພດ:** ໜ້າທີ່, ຄວາມສຳຄັນ<br>6.1 ອາຊີບຄູ<br>- ເຄື່ອງນຸ່ງ: ຊຸດສີກາກີ ແລະ ມີກາທຳມະຈັກຕິດໃສ່ຄໍເສື້ອ.<br>- ໜ້າທີ່: ຄູອະນຸບານນຳພາເດັກຫຼິ້ນ, ຮຽນ, ພັກຜ່ອນ, ນອນ, ກິນ, ອະນາໄມ, ແຕ່ງຕົວ.<br>- ຄວາມສຳຄັນູ: ເຝິກແອບສິດສອນຄວາມຮູ້ໃຫ້ເດັກເປັນຄົນດີ, ເກັ່ງ, ສະຫຼາດ.<br>6.2 ອາຊີບແພດ<br>- ເຄື່ອງນຸ່ງ: ຊຸດສີຂາວ, ໝວກສີຂາວ ແລະ ມີກາໂຮງໝໍສີແດງຕິດໃສ່ໝວກ.<br>- ໜ້າທີ່: ກວດສຸຂະພາບ ແລະ ປິ່ນປົວຄົນເຈັບ.<br>- ຄວາມສຳຄັນ: ແນະນຳການຮັກສາສຸຂະພາບ, ປິ່ນປົວ ແລະ ເບິ່ງແຍງຄົນເຈັບ. |
| | 7. ອາຊີບຊາວນາ, ຊາວສວນ. | **7. ອາຊີບຊາວນາ, ຊາວສວນ:** ໜ້າທີ່, ຄວາມສຳຄັນ<br>7.1 ອາຊີບຂອງຊາວນາ:<br>- ເຄື່ອງນຸ່ງ: ໂສ້ງຂາຍາວ, ເສື້ອແຂນຍາວ, ໃສ່ກຸບ ຫຼື ໝວກ.<br>- ໜ້າທີ່: ປູກເຂົ້າ (ໄຖນາ, ຫວານກ້າ, ລົກກ້າ, ດຳນາ)ໃສ່ຝຸ່ນ, ກ່ຽວເຂົ້າ, ຕາກເຂົ້າ, ຕີຫຼືປັ່ນເຂົ້າ, ເກັບໃສ່ເປົ່າ, ສີເປັນເຂົ້າສານ.<br>- ຄວາມສຳຄັນຂອງຊາວນາ: ປູກເຂົ້າໃຫ້ຄົນ ແລະ ສັດກິນໃຫ້ເຕີບໃຫຍ່.<br>7.2 ອາຊີບຂອງຊາວສວນ:<br>- ເຄື່ອງນຸ່ງ: ໂສ້ງຂາຍາວ, ເສື້ອແຂນຍາວ, ໃສ່ກຸບ ຫຼື ໝວກ.<br>- ໜ້າທີ່ຂອງຊາວສວນ: ປູກຜັກ ແລະ ໝາກໄມ້ (ຂຸດດິນ, ຖາງຫຍ້າ, ຫົດນ້ຳ, ໃສ່ຝຸ່ນ)<br>- ຄວາມສຳຄັນຂອງຊາວສວນ: ປູກຜັກ, ໝາກໄມ້ໃຫ້ຄົນ ແລະ ສັດກິນໃຫ້ແຂງແຮງ. |
| | 8. ອາຊີບພໍ່ຄ້າ, ແມ່ຄ້າ. | **8. ອາຊີບພໍ່ຄ້າ, ແມ່ຄ້າ:** ໜ້າທີ່, ຄວາມສຳຄັນ<br>- ເຄື່ອງນຸ່ງ: ເຄື່ອງນຸ່ງທຳມະດາ ຫຼື ຮ້ານຄ້າກຳນົດ, ມັດຜ້າກັນເປື້ອນ ແລະ ໝວກຂາວ.<br>- ໜ້າທີ່ຂອງພໍ່ຄ້າ ແລະ ແມ່ຄ້າ: ຂາຍເຄື່ອງກິນ, ເຄື່ອງໃຊ້, ເຄື່ອງນຸ່ງ, ເຄື່ອງຮຽນ.<br>- ຄວາມສຳຄັນຂອງພໍ່ຄ້າ ແລະ ແມ່ຄ້າ: ນຳເອົາສິ່ງຂອງຕ່າງໆມາແລກປ່ຽນກັບເງິນ. |

| | | |
|---|---|---|
| 25 | 9. ອາຊີບຕຳຫຼວດ ແລະ ທະຫານ.<br><br><br><br><br><br><br><br><br><br><br><br><br>10. ອາຊີບກຳມະກອນ ແລະ ນາຍຊ່າງ. | **9. ອາຊີບຕຳຫຼວດ ແລະ ທະຫານ:** ໜ້າທີ່, ຄວາມສຳຄັນ<br>9.1 ອາຊີບຕຳຫຼວດ: ຕຳຫຼວດຈະລາຈອນ<br>- ເຄື່ອງນຸ່ງ: ຕຳຫຼວດຈະລາຈອນໃສ່ຊຸດສີກາກີ, ມີສາຍອຳນາດຢູ່ແຂນເສື້ອ, ມີໝາກຫວີດ, ບາແລດບ່າ (ທະນູບ່າ).- ໜ້າທີ່: ຕຳຫຼວດຈະລາຈອນ(ຍາມໄຟອຳນາດ, ເປົ່າໝາກຫວີດໃຫ້ຄົນ, ລົດອ້າມທາງ), ສຶກສາອົບຮົມຜູ້ເຮັດຜິດລະບຽບບ້ານເມືອງ.<br>- ຄວາມສຳຄັນ: ປ້ອງກັນຄວາມສະຫງົບຂອງບ້ານເມືອງ ແລະ ອຳນວຍຄວາມສະດວກໃນການຈະລາຈອນ.<br>9.2 ອາຊີບທະຫານ: ທະຫານບົກ, ທະຫານອາກາດ, ທະຫານເຮືອ<br>- ເຄື່ອງນຸ່ງ: ສີຂຽວ ຫຼື ລາຍມີບາແລດບ່າ (ທະນູບ່າ).<br>- ໜ້າທີ່: ປ້ອງກັນ ແລະ ປົກປັກຮັກສາປະເທດຊາດ, ທະຫານບົກ(ຊາຍແດນ, ພູຜາປ່າໄມ້), ທະຫານອາກາດ(ນ່ານຟ້າ). ທະຫານເຮືອ(ນ່ານນໍ້າ).<br>- ຄວາມສຳຄັນ: ປ້ອງກັນ ແລະ ປົກປັກຮັກສາຊາຍແດນ, ພູຜາປ່າໄມ້, ນ່ານຟ້າ, ນ່ານນໍ້າບໍ່ໃຫ້ສັດຕູເຂົ້າມາທຳລາຍ ແລະ ອຳນວຍຄວາມສະດວກໃຫ້ປະຊາຊົນທຳມາຫາກິນ.<br>**10. ອາຊີບກຳມະກອນ ແລະ ນາຍຊ່າງ:** ໜ້າທີ່, ຄວາມສຳຄັນ<br>10.1 ອາຊີບກຳມະກອນ:ກຳມະກອນໃນໂຮງງານ, ກຳມະກອນກໍ່ສ້າງ<br>- ເຄື່ອງນຸ່ງ: ສີຟ້າ, ໂສ້ງຂາຍາວ, ເສື້ອແຂນຍາວ.<br>- ໜ້າທີ່: ກຳມະກອນໃນໂຮງງານຜະລິດເຄື່ອງໃຊ້, ກຳມະກອນກໍ່ສ້າງ(ປຸກສ້າງ ແລະ ສ້ອມແປງບ້ານເຮືອນ).<br>- ຄວາມສຳຄັນ: ອອກແຮງງານຜະລິດເຄື່ອງໃຊ້ ແລະ ປຸກສ້າງ ແລະ ສ້ອມແປງບ້ານເຮືອນ.<br>10.2 ອາຊີບນາຍຊ່າງ: ຊ່າງເສີມສວຍ, ຊ່າງຕັດເຄື່ອງ, ຊ່າງແປງລົດ<br>• ຊ່າງເສີມສວຍ: ຜູ້ຍິງ ແລະ ຊາຍ<br>- ໜ້າທີ່: ຕັດຜົມ, ສອຍຜົມ, ສະຜົມ, ແຕ່ງໜ້າ, ຕັດເລັບຕີນ, ເລັບມື. |

| | | |
|---|---|---|
| | | - ຄວາມສຳຄັນ: ເປັນຜູ້ອອກແບບ, ແຕ່ງຕົວໃຫ້ຄົນມີຜົມ, ໃບໜ້າ, ເລັບຕີນ, ເລັບມືງາມຕາມຍຸກສະໄໝ.<br>● ຊ່າງຕັດເຄື່ອງ: ຜູ້ຍິງ ແລະ ຊາຍ<br>- ໜ້າທີ່: ອອກແບບ, ຕັດ, ຫຍິບເຄື່ອງນຸ່ງຜູ້ຍິງ-ຜູ້ຊາຍ, ສິ້ນ, ໂສ້ງ, ເສື້ອ, ກະໂປ່ງ.<br>- ຄວາມສຳຄັນ: ເປັນຜູ້ອອກແບບ, ຕັດຫຍິບເຄື່ອງນຸ່ງຫົ່ມໃຫ້ຄົນໄດ້ນຸ່ງສິ້ນ, ເສື້ອ, ໂສ້ງປະຈຳຊາດ ແລະ ສາກົນໃຫ້ຈົບງາມຕາມຍຸກສະໄໝ.<br>● ຊ່າງແປງລົດ:<br>- ໜ້າທີ່: ລົດຖີບ (ສູບລົມ, ຈອດຢາງລົດ, ສ້ອມແປງສິ່ງທີ່ເປ່ເພ), ລົດຈັກ ແລະ ລົດໃຫຍ່ (ກວດກາເຄື່ອງຈັກ, ຕີນລົດ, ຕົກແຕ່ງສີ ແລະ ສ້ອມແປງສິ່ງທີ່ເປ່ເພ)<br>- ຄວາມສຳຄັນ: ກວດກາໃຫ້ຄຳແນະນຳຜູ້ຂັບລົດ, ຕົກແຕ່ງລົດໃຫ້ຈົບງາມ, ສ້ອມແປງສິ່ງທີ່ເປ່ເພໃຫ້ສາມາດໃຊ້ໄດ້. |
| 3. ສິລະປະວັດທະນະທຳ ແລະ ວັນບຸນປະເພນີ. | 11. ສິລະປະວັນນະຄະດີພື້ນເມືອງ.<br><br><br><br><br><br><br><br>12. ເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ. | **11. ສິລະປະວັນນະຄະນະດີພື້ນເມືອງປະກອບມີ:** ຂັບລຳ, ເພງ ແລະ ຟ້ອນ<br>11.1 ຂັບລຳພື້ນເມືອງຂອງແຕ່ລະພາກ.<br>- ພາກເໜືອ: ຂັບຊຳເໜືອ, ຂັບທຸ້ມຫຼວງພະບາງ, ຂັບຊຽງຂວາງ.<br>- ພາກກາງ: ຂັບງື່ມ, ລຳຜູ້ໄທ, ລຳບ້ານຊອກ, ລຳຄອນສະຫວັນ, ລຳມະຫາໄຊ, ລຳຕັ່ງຫວາຍ.<br>- ພາກໃຕ້: ລຳສາລະວັນ, ລຳສີພັນດອນ, ລຳລ່ອງ.<br>11.2 ເພງ: ເພງຈຳປາເມືອງລາວ; ເພງດອກບົວທອງ; ເພງອື່ນໆຂອງແຕ່ລະທ້ອງຖິ່ນ.<br>11.3 ຟ້ອນ: ຟ້ອນອວຍພອນ, ຟ້ອນລາວແພນ, ຟ້ອນຈຳປາເມືອງລາວ ແລະ ຟ້ອນອື່ນໆຂອງແຕ່ລະທ້ອງຖິ່ນ.<br>**12. ເຄື່ອງດົນຕີ ແລະ ແບບຫຼິ້ນພື້ນເມືອງ**<br>12.1 ເຄື່ອງດົນຕີພື້ນເມືອງ: ແຄນ, ກອງ, ລະນາດ, ຊໍ, ສິ່ງ, ແຊ່ງ, ຂຸ່ຍ, ຄ້ອງ ແລະ ອື່ນໆ.<br>12.2 ແບບຫຼິ້ນພື້ນເມືອງ: ຫຼິ້ນເຕັ້ນເສືອຂ້າມຫ້ວຍ, ຫຼິ້ນຊ້ອນຫຼັງ, ງູກິນຂຽດ, ໝາກຄອນ, ແບບຫຼິ້ນອື່ນໆໃນທ້ອງຖິ່ນ. |

| | | |
|---|---|---|
| | 13. ຫັດຖະກຳພື້ນເມືອງ. | **13. ຫັດຖະກຳພື້ນເມືອງ:** ຫັດຖະກຳຕ່ຳແຜ່ນ, ຫັດຖະກຳຖັກແສ່ວ, ຫັດຖະກຳຈັກສານ ແລະ ຫັດຖະກຳປັ້ນ<br>13.1 ຫັດຖະກຳຕ່ຳແຜ່ນ: ຜ້າສະໂຫຼ້ງ, ຜ້າປູໂຕະ, ຜ້າບ່ຽງ, ຜ້າຂາວມ້າ ແລະ ສິ້ນ.<br>13.2 ຫັດຖະກຳຖັກແສ່ວ: ແສ່ວຕີນສິ້ນ, ຜ້າປູໂຕະ ແລະ ຖັກເສືອກັນໜາວ.<br>13.3 ຫັດຖະກຳປັ້ນ: ໝໍ້, ໄຫ, ຄົກ, ໂຖດອກໄມ້, ເຕົ້າດອກໄມ້.<br>13.4 ຫັດຖະກຳຈັກສານ: ກະຕິ້ງ, ອ້ອງ, ໄຊ, ຕິບເຂົ້າ, ພາເຂົ້າ, ຫວດ, ເຂິງ ແລະ ອື່ນໆ. |
| | 14.ບຸນເຂົ້າພັນສາ ແລະ ອອກພັນສາ. | **14. ການສະເຫຼີມສະຫຼອງບຸນເຂົ້າພັນສາ ແລະ ອອກພັນສາ**<br>14.1 ການສະເຫຼີມສະຫຼອງບຸນເຂົ້າພັນສາ:<br>- ບຸນເຂົ້າພັນສາກົງກັບເດືອນກໍລະກົດ ຫຼື ເດືອນ 8 ເພັງ (ຂຶ້ນ 15 ຄ່ຳເດືອນ 8 ລາວ) ວັນທາງພຸດທະສາສະໜາ.<br>- ການສະເຫຼີມສະຫຼອງ: ຕອນເຊົ້າເພິ່ນໃສ່ບາດ, ຕອນກາງຄືນມີການຄົບງັນ ແລະ ວຽນທຽນ (ແຫ່ດອກໄມ້).<br>14.2 ການສະເຫຼີມສະຫຼອງບຸນອອກພັນສາ:<br>- ບຸນອອກພັນສາກົງກັບເດືອນຕຸລາ ຫຼື ເດືອນ 11 ເພັງ (ຂຶ້ນ 15 ຄ່ຳເດືອນ 11 ລາວ) ວັນທາງພຸດທະສາສະໜາ.<br>- ການສະເຫຼີມສະຫຼອງ: ຕອນເຊົ້າໃສ່ບາດ, ຕອນກາງຄືນມີການຄົບງັນ ແລະ ໄຫຼເຮືອໄຟ ຫຼື ລອຍກະທົງ. |
| | 15. ບຸນພະເຫວດ ແລະ ປີໃໝ່ລາວ. | **15. ການສະເຫຼີມສະຫຼອງບຸນພະເຫວດ ແລະ ປີໃໝ່ລາວ**<br>15.1 ການສະເຫຼີມສະຫຼອງບຸນພະເຫວດ:<br>- ບຸນພະເຫວດກົງກັບເດືອນ 4 ຂອງລາວ (ເດືອນມີນາ)<br>- ການສະເຫຼີມສະຫຼອງ: ຕອນເຊົ້າຕັກບາດ, ຟັງເທດເລື່ອງພະເຫວດສັນດອນ; ຕອນບ່າຍເພິ່ນແຫ່ກັນຫຼອນ ແລະ ບາງທ້ອງຖິ່ນເພິ່ນໄດ້ເຮັດພິທີແຫ່ພະເຫວດເຂົ້າເມືອງ.<br>15.2 ການສະເຫຼີມສະຫຼອງບຸນປີໃໝ່ລາວ:<br>- ບຸນປີໃໝ່ລາວກົງກັບເດືອນ5 ລາວ (ວັນທີ 14-16 ເດືອນເມສາ). |

| | | |
|---|---|---|
| | | - ການສະເຫຼີມສະຫຼອງ: ທົດສົງພະພຸດທະຮູບ, ບາສີສູ່ຂວັນ, ທົດນໍ້າ ອວຍພອນເຊິ່ງກັນ ແລະ ກັນ; ບາງທ້ອງຖິ່ນເພີ່ນໄດ້ແຫ່ນາງສັງຂານ. |
| 4. ປະເທດລາວ ແລະ ວັນສໍາຄັນຂອງຊາດ. | 16. ປະເທດລາວ.<br><br><br><br><br><br><br><br><br><br>17. ວັນຊາດລາວ. | **16. ບ້ານ. ເມືອງ, ແຂວງແລະ ປະເທດ**<br>16.1 ຊື່ບ້ານ, ເມືອງ ແລະ ແຂວງທີ່ຕົນອາໄສຢູ່.<br>16.2 ຊື່ເຕັມ ແລະ ຊື່ຫຍໍ້ຂອງປະເທດ.<br>- ຊື່ເຕັມ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.<br>- ຊື່ຫຍໍ້: ສ. ປ. ປ. ລາວ.<br>16.3 ຊື່ ແລະ ຈໍານວນແຂວງໃນປະເທດລາວ: 1. ນະຄອນຫຼວງ; 2. ແຂວງຜົ້ງສາລີ; 3. ແຂວງຫຼວງນໍ້າທາ; 4. ແຂວງອຸດົມໄຊ; 5. ແຂວງບໍ່ແກ້ວ; 6. ແຂວງຫຼວງພະບາງ; 7. ແຂວງຫົວພັນ; 8. ແຂວງໄຊຍະບູລີ; 9. ແຂວງຊຽງຂວາງ; 10. ແຂວງວຽງຈັນ; 11. ແຂວງບໍລິຄໍາໄຊ; 12. ແຂວງຄໍາມ່ວນ; 13. ແຂວງສະຫວັນນະເຂດ; 14. ແຂວງສາລະວັນ; 15. ແຂວງຈໍາປາສັກ; 16. ແຂວງເຊກອງ; 17. ແຂວງອັດຕະປື. 18. ແຂວງໄຊສົມບູນ.<br>**17. ການສະເຫຼີມສະຫຼອງວັນຊາດ**<br>17.1 ການປະດັບປະດາອາຄານສະຖານທີ່: ທຸງຊາດ, ທຸງທິວ ແລະ ຄໍາຂວັນ.<br>- ທຸງຊາດລາວ: ສີ(ຟ້າ, ແດງ, ຂາວ). ເອກະລັກ(ສີ່ຫຼ່ຽມຜືນຜ້າ. ວົງເດືອນສີຂາວ)<br>- ທຸງທິວ: ສີ: ສີແດງ, ສີຟ້າ, ສີເຫຼືອງ ແລະ ສີຂາວ.<br>- ຄໍາຂວັນ: ນໍ້າໃຈວັນຊາດທີ 2 ທັນວາໝັ້ນຍືນ.<br>17.2 ບັນດາທຸງຊາດປະເທດໃນກຸ່ມອາຊຽນ: ທຸງປະເທດລາວ, ຫວຽດນາມ, ກໍາປູເຈຍ, ໄທ, ມຽນມ້າ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ບຣູໄນ, ແລະ ສິງກະໂປ (ສີ, ເອກະລັກ)<br>17.3 ການສະເຫຼີມສະຫຼອງວັນຊາດ:<br>- ວັນຊາດກົງກັບວັນທີ 2 ເດືອນທັນວາ (ເດືອນ 12).<br>- ການສະເຫຼີມສະຫຼອງ: ໂຮມຊຸມນຸມ ຟັງປາຖະກະຖາ, ຊົມການວາງສະແດງຜົນງານການເຄື່ອນໄຫວຕ່າງໆ, ສະແດງສິລະປະວັນນະຄະດີ ແລະ ກິລາ. |

| | | |
|---|---|---|
| | 18. ວັນແມ່ຍິງ ແລະ ວັນຄູ. | **18. ການສະເຫຼີມສະຫຼອງວັນແມ່ຍິງ ແລະ ວັນຄູ**<br>18.1 ການສະເຫຼີມສະຫຼອງວັນແມ່ຍິງສາກົນ:<br>- ວັນແມ່ຍິງສາກົນກົງກັບວັນທີ 8 ເດືອນມີນາ (ເດືອນ 3).<br>- ການສະເຫຼີມສະຫຼອງ: ຟັງປາທະກະຖາ; ມອບຊໍ່ດອກໄມ້, ອວຍພອນແມ່ຍິງ; ສະແດງສິລະປະ, ແຂ່ງຂັນກິລາ.<br>18.2 ການສະເຫຼີມສະຫຼອງວັນຄູ:<br>- ວັນຄູກົງກັບວັນທີ 7 ເດືອນຕຸລາ (ເດືອນ 10).<br>- ການສະເຫຼີມສະຫຼອງ: ຟັງປາທະກະຖາ, ມອບຊໍ່ດອກໄມ້, ອວຍພອນຄູ, ສະແດງສິລະປະ ແລະ ກິລາ. |
| | 19. ວັນກຳມະກອນ ແລະ ວັນສ້າງຕັ້ງກອງທັບ. | **19. ການສະເຫຼີມສະຫຼອງວັນກຳມະກອນ ແລະ ວັນສ້າງຕັ້ງກອງທັບ**<br>19.1 ການສະເຫຼີມສະຫຼອງວັນກຳມະກອນສາກົນ:<br>- ວັນກຳມະກອນສາກົນກົງກັບວັນທີ1 ເດືອນພຶດສະພາ (ເດືອນ 5)<br>- ການສະເຫຼີມສະຫຼອງ: ມອບຊໍ່ດອກໄມ້, ອວຍພອນໃຫ້ກຳມະກອນ(ເຝິກປະຕິບັດ).<br>19.2 ການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ:<br>- ວັນກອງທັບກົງກັບວັນທີ 20 ເດືອນມັງກອນ (ເດືອນ1).<br>- ການສະເຫຼີມສະຫຼອງ: ຟັງການເລົ່າມູນເຊື້ອ; ອວຍພອນ, ລົງຢ້ຽມຢາມທະຫານ, ມອບຂອງຂວັນ, ສະແດງສິລະປະ ແລະ ແຂ່ງຂັນກິລາ. |
| | 20. ວັນເດັກນ້ອຍສາກົນ. | **20. ການສະເຫຼີມສະຫຼອງວັນເດັກນ້ອຍສາກົນ**<br>- ວັນເດັກນ້ອຍສາກົນກົງກັບວັນທີ 1 ເດືອນມິຖຸນາ (ເດືອນ 6).<br>- ການສະເຫຼີມສະຫຼອງ: ແຂ່ງຂັນກິລາ, ສິລະປະວັນນະຄະດີ, ແຕ້ມຮູບ, ໃຫ້ຂອງຂວັນເດັກ, ກວດສຸຂະພາບ ແລະ ພາເດັກໄປທັດສະນະສຶກສາສະຖານທີ່ຕ່າງໆ (ເຝິກປະຕິບັດ). |

**ໜ່ວຍທີ 5: ທຳມະຊາດອ້ອມຕົວເຮົາ**

| ຫົວຂໍ້ / ອາທິດ | ຫົວຂໍ້/ວັນ | ເນື້ອໃນ |
|---|---|---|
| 1. ສິ່ງທີ່ມີຊີວິດ. | 1. ສິ່ງທີ່ມີຊີວິດ. | **1. ສິ່ງທີ່ມີຊີວິດປະກອບມີ ຄົນ, ສັດ ແລະ ພືດ**<br>1.1 ຄົນ: ເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ເຖົ້າ (ແມ່ຍິງ, ຜູ້ຊາຍ).<br>1.2 ສັດ: ສັດປີກ, ສັດນ້ຳ ແລະ ສັດບົກ.<br>1.3 ພືດ: ຫຍ້າ, ຕົ້ນດອກໄມ້, ຕົ້ນໄມ້. |
| | 2. ສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ. | **2. ສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ ຄົນ, ສັດ ແລະ ພືດ**<br>2.1 ສິ່ງທີ່ຈຳເປັນຕໍ່ຄົນ:ອາຫານ, ນ້ຳ, ອາກາດ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ແລະ ທີ່ຢູ່ອາໄສ.<br>2.2 ສິ່ງທີ່ຈຳເປັນຕໍ່ສັດ: ອາຫານ, ນ້ຳ, ອາກາດ.<br>2.3 ສິ່ງທີ່ຈຳເປັນຕໍ່ພືດ: ດິນ, ອາຫານ, ນ້ຳ, ອາກາດ. |
| | 3. ການເຕີບໃຫຍ່ຂອງຄົນ ແລະ ສັດ. | **3. ການເຕີບໃຫຍ່ຂອງຄົນ ແລະ ສັດ**<br>3.1 ການເຕີບໃຫຍ່ຂອງຄົນ: ນອນ, ຂວ້ຳ, ຄານ, ນັ່ງ, ຢືນ, ຍ່າງ ແລະ ແລ່ນ.<br>3.2 ການເຕີບໃຫຍ່ຂອງສັດ:<br>- ໄກ່: ໄຂ່, ໄກ່ນ້ອຍ, ໄກ່ໃຫຍ່.<br>- ກົບ: ໄຂ່, ຮວກ, ກົບນ້ອຍ, ກົບໃຫຍ່. |
| | 4. ການເຕີບໃຫຍ່ຂອງພືດ. | **4. ການເຕີບໃຫຍ່ຂອງພືດ**<br>- ຕົ້ນຖົ່ວ: ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່, ດອກ ແລະ ໝາກ.<br>- ຜັກບົ້ງ: ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່. |
| | 5. ການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ. | **5. ການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ** (ຄົນ, ສັດ ແລະ ພືດ)<br>5.1 ຄົນ, ສັດ ແລະ ພືດຕ້ອງການນ້ຳ, ອາຫານ ແລະ ອາກາດ<br>- ຄົນ: ຕ້ອງການອາກາດ, ນ້ຳ ແລະ ອາຫານຈາກພືດ(ຜັກ, ເຂົ້າ, ຖົ່ວ, ງາ) ແລະ ສັດ(ຊີ້ນ, ກະດູກ, ໜັງ, ເລືອດ, ໄຂ່). |

| | | |
|---|---|---|
| | | - ສັດ: ຕ້ອງການອາກາດ, ນໍ້າ ແລະ ອາຫານຈາກພືດ(ຜັກ, ເຂົ້າ, ຖົ່ວ, ງາ)ແລະ ສັດ(ຊີ້ນ, ກະດູກ, ໜັງ, ເລືອດ, ໄຂ່)<br>- ພືດ: ຕ້ອງການອາກາດ, ນໍ້າ, ຊາກພືດ, ຜັກ, ໃບໄມ້, ຂີ້ສັດ, ຊາກສັດທີ່ເນົ່າເປື່ອຍ.<br>5.2 ສິ່ງມີຊີວິດຄົນ, ສັດ, ພືດເພິ່ງພາອາໄສເຊິ່ງກັນ ແລະ ກັນ:<br>- ງົວ, ຄວາຍ, ແບ້ກິນຫຍ້າ ແລະ ໃບໄມ້<br>- ໄກ່, ເປັດກິນເຂົ້າເປືອກ ແລະ ຮໍາ<br>- ນົກກິນໝາກໄມ້ ແລະ ແມງໄມ້. |
| 2. ສິ່ງທີ່ບໍ່ມີຊີວິດ. | 6. ສິ່ງທີ່ບໍ່ມີຊີວິດ.<br><br><br><br>7. ດິນ.<br><br><br><br><br><br>8. ດິນ (ຕໍ່). | **6. ສິ່ງທີ່ບໍ່ມີຊີວິດ:** ປະເພດຂອງດິນ, ຫີນ ແລະ ນໍ້າ<br>6.1 ດິນ: ດິນຮ່ວນ, ດິນໜຽວ ແລະ ດິນຊາຍ.<br>6.2 ຫີນ: ຫີນຢູ່ໃນແມ່ນໍ້າ, ຫີນແຮ່ໃນບໍ່ແຮ່(ບໍ່ຄໍາ. ທອງແດງ, ເຫຼັກ, ກົ່ວ, ແກ້ວ)<br>6.3 ນໍ້າ: ນໍ້າປະປາ, ນໍ້າສ້າງ ແລະ ແມ່ນໍ້າ.<br>**7. ປະເພດ ແລະ ລັກສະນະຂອງດິນ**<br>7.1 ປະເພດຂອງດິນປະກອບມີດິນຮ່ວນ, ດິນໜຽວ ແລະ ດິນຊາຍ<br>7.2 ລັກສະນະຂອງດິນ:<br>- ດິນຮ່ວນ(ດິນປູກຝັງຫຼື ດິນຜຸ່ຍ)ເປັນດິນທີ່ມີເສດໃບໄມ້, ເສດສັດ, ຫີນ ແລະ ຊາຍ.<br>- ດິນໜຽວ (ດິນດາກ), ເປັນດິນລະອຽດ, ໜຽວ ແລະ ອົມນໍ້າໄດ້ດີ.<br>- ດິນຊາຍ: ເປັນເມັດນ້ອຍ, ເຫຼື້ອມ ແລະ ນໍ້າຜ່ານໄດ້ດີ.<br>**8. ຄຸນປະໂຫຍດ ແລະ ການປົກປັກຮັກສາດິນ**<br>8.1 ຄຸນປະໂຫຍດຂອງດິນ:<br>- ດິນຮ່ວນ: ປູກພືດ (ເຮັດໄຮ່, ເຮັດນາ, ເຮັດສວນ).<br>- ດິນໜຽວ: ປັ້ນເຮັດເຄື່ອງໃຊ້ (ໝໍ້, ຄົກ, ຖ້ວຍ, ບ່ວງ, ເຕົ້າດອກໄມ້) ແລະ ເຄື່ອງຫຼິ້ນ (ລົດ, ສັດ, ໝາກໄມ້, ດອກໄມ້).<br>- ດິນຊາຍ: ດິນຊາຍໃຊ້ໄວ້ປະສົມກັບນໍ້າ, ຊີມັງ ແລະ ຫີນ ເພື່ອກໍ່ສ້າງເຮືອນ. |

31

| | | |
|---|---|---|
| | 9. ຫີນ.<br><br><br><br><br>10. ນ້ຳ. | 8.2 ການປົກປັກຮັກສາດິນ: ປູກຫຍ້າ ແລະ ຕົ້ນໄມ້ໃສ່ໜ້າດິນ.<br>**9. ລັກສະນະ, ຮູບຮ່າງ,ຂະໜາດ ແລະ ຄຸນປະໂຫຍດຂອງຫີນ**<br>9.1 ລັກສະນະແຂງ, ຂະໜາດ(ນ້ອຍ,ໃຫຍ່) ແລະ ຮູບຮ່າງ(ລ່ຽມ, ມົນ).<br>9.2 ຄຸນປະໂຫຍດຂອງຫີນ: ກໍ່ສ້າງ (ເຮືອນ, ຂົວ, ຫົນທາງ), ເຮັດເຄື່ອງໃຊ້ (ຖ້ວຍ, ຈອກ, ກາໂລປູເຮືອນ) ແລະ ເຮັດເຄື່ອງປະດັບ (ສາຍຄໍ, ສາຍແຂນ, ແຫວນ).<br>**10. ການປ່ຽນແປງສະພາບ ແລະ ປະໂຫຍດຂອງນ້ຳ**<br>10.1 ການປ່ຽນແປງສະພາບຂອງນ້ຳ: ນ້ຳຮ້ອນ, ນ້ຳເຢັນ.<br>10.2 ຄຸນປະໂຫຍດຂອງນ້ຳ: ດື່ມ, ລ້າງ, ອາບ, ຊັກເຄື່ອງນຸ່ງ ແລະ ຫົດຕົ້ນໄມ້. |
| 3. ເວລາ. | 11. ກາງເວັນ.<br><br><br><br><br><br><br><br><br><br>12 ກາງເວັນ (ຕໍ່). | **11. ກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນ**<br>11.1 ກາງເວັນ: ເປັນຊ່ວງເວລາທີ່ດວງອາທິດ ຫຼື ຕາເວັນຂຶ້ນຈົນຮອດດວງອາທິດຕົກເຊິ່ງມີ 3 ຕອນ ຄື: ຕອນເຊົ້າ, ຕອນສວາຍ ແລະ ຕອນແລງ.<br>11.2 ຊ່ວງໄລຍະເວລາຂອງກາງເວັນ: ຕອນເຊົ້າ, ຕອນສວາຍ ແລະ ຕອນແລງ<br>- ຕອນເຊົ້າ: ເຮົາເຫັນດວງອາທິດຂຶ້ນເພິ່ນເອີ້ນວ່າຕອນເຊົ້າເລີ່ມເວລາປະມານ 6:00 ໂມງ ຫາ 10:00 ໂມງ.<br>- ຕອນສວາຍ: ເຮົາເຫັນດວງອາທິດຢູ່ຊື່ຫົວເຮົາເພິ່ນເອີ້ນວ່າຕອນທ່ຽງ ຫຼື ຕອນສວາຍ ເຊິ່ງເລີ່ມແຕ່ເວລາ12:00 ໂມງ ຫາ 13:00 ໂມງ.<br>- ຕອນແລງ: ເຮົາເຫັນດວງອາທິດລົງເພິ່ນເອີ້ນວ່າຕອນແລງ ເຊິ່ງເລີ່ມແຕ່1 4:00 ໂມງ ຫາ 18:00 ໂມງ (4:00 ໂມງແລງ-6:00 ໂມງແລງ).<br>**12. ການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງ**<br>12.1 ຕອນເຊົ້າ: ມາໂຮງຮຽນໃຫ້ທັນເວລາ, ລຽນແຖວ, ເຄົາລົບທຸງ, ຫັດກາຍ ແລະ ຮຽນໜັງສື.<br>12.2 ຕອນສວາຍ: ລ້າງມືກ່ອນກິນເຂົ້າ, ກິນເຂົ້າທ່ຽງ, ນອນພັກຜ່ອນ, ມ້ຽນບ່ອນນອນ.<br>12.3 ຕອນແລງ: ຮຽນໜັງສື, ຫຼິ້ນ ແລະ ກັບເມືອເຮືອນ. |

| | | |
|---|---|---|
| | 13. ກາງຄືນ.<br><br><br><br>14. ວັນໃນ 1 ອາທິດ.<br><br><br><br><br><br>15. ເດືອນໃນ 1 ປີ. | **13. ກາງຄືນ ແລະ ການປະຕິບັດຕົນ**<br>13.1 ກາງຄືນ: ເປັນຊ່ວງເວລາທີ່ດວງອາທິດຕົກຈົນຮອດດວງອາທິດຂຶ້ນເລີ້ມແຕ່ເວລາ 18:00ໂມງ ຫາ 6:00ໂມງເຊົ້າ (6:00ໂມງແລງ-6:00ໂມງເຊົ້າ).<br>13.2 ການປະຕິບັດຕົນໃນຕອນກາງຄືນ: ຫຼິ້ນຢູ່ໃນເຮືອນ, ກິນເຂົ້າແລງ, ຮຽນໜັງສື ແລະ ນອນ.<br>**14. ຊື່ວັນໃນ 1 ອາທິດ ແລະ ກິດຈະກຳໃນມື້ວານ, ມື້ນີ້, ມື້ອື່ນ**<br>14.1 ຊື່ວັນໃນ1ອາທິດ: ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ, ວັນສຸກ, ວັນເສົາ, ວັນອາທິດ<br>14.2 ກິດຈະກຳໃນ ມື້ນີ້, ມື້ວານ, ມື້ອື່ນ:<br>- ມື້ນີ້: ສົນທະນາກິດຈະກຳທີ່ປະຕິບັດໃນມື້ນີ້ (ມື້ນີ້ເຮັດຫຍັງ?)<br>- ມື້ວານ:ສົນທະນາກິດຈະກຳທີ່ປະຕິບັດໃນມື້ວານ (ມື້ວານນີ້ເຮັດຫຍັງ?)<br>- ມື້ອື່ນ: ສົນທະນາກິດຈະກຳທີ່ປະຕິບັດໃນມື້ອື່ນ (ມື້ອື່ນຈະເຮັດຫຍັງ?)<br>**15. ເດືອນໃນ 1 ປີ, ເດືອນທີ່ເຂົ້າຮຽນ, ພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນ**<br>15.1 ຊື່ ແລະຈຳນວນເດືອນໃນ 1 ປີ: 1.ມັງກອນ, 2.ກຸມພາ, 3.ມີນາ, 4.ເມສາ, 5.ພຶດສະພາ, 6.ມິຖຸນາ, 7.ກໍລະກົດ, 8.ສິງຫາ, 9.ກັນຍາ, 10.ຕຸລາ, 11. ພະຈິກ, 12. ທັນວາ.<br>15.2 ເດືອນທີ່ເຂົ້າຮຽນ ແລະ ພັກຮຽນ:<br>- ເດືອນທີ່ເຂົ້າຮຽນ: ເດືອນກັນຍາຫາເດືອນມິຖຸນາ.<br>- ເດືອນທີ່ພັກຮຽນ: ເດືອນກໍລະກົດ ຫາ ເດືອນສິງຫາ.<br>15.3 ກິດຈະກຳໃນເວລາພັກພາກຮຽນ: ພັກຜ່ອນຢູ່ເຮືອນ, ໄປທ່ຽວຫຼິ້ນກັບພໍ່ແມ່, ອ້າຍ, ເອື້ອຍ, ນ້ອງຕາມສະຖານທີ່ຕ່າງໆ. |
| 4. ລະດູການ. | 16. ລະດູການໃນປະເທດລາວ.<br><br><br>17. ລັກສະນະຂອງອາກາດ. | **16. ລະດູການໃນປະເທດລາວມີ 2 ລະດູ: ລະດູແລ້ງ ແລະ ລະດູຝົນ.**<br>16.1 ລະດູແລ້ງ: ເລີ່ມແຕ່ເດືອນພະຈິກ ຫາ ເດືອນເມສາ.<br>16.2 ລະດູຝົນ: ເລີ່ມແຕ່ເດືອນພຶດສະພາ ຫາ ເດືອນຕຸລາ.<br>**17. ລັກສະນະຂອງອາກາດ**<br>17.1 ລັກສະນະຂອງອາກາດໃນລະດູແລ້ງ: |

| | | |
|---|---|---|
| | | - ໃນລະຫວ່າງເດືອນພະຈິກ ຫາ ເດືອນກຸມພາອາກາດໜາວເຢັນ, ບາງຄັ້ງມີນ້ຳໝອກ, ມີລົມພັດ.<br>- ໃນລະຫວ່າງເດືອນມີນາ ຫາ ເດືອນເມສາອາກາດຮ້ອນອົບເອົ້າ, ແດດກ້າແລະມີລົມພາຍຸ.<br>17.2 ລັກສະນະຂອງອາກາດໃນລະດູຝົນ: ອາກາດຊຸ່ມຊື່ນດີ; ກ່ອນຝົນຈະຕົກທ້ອງຟ້າມືດມີ ກ້ອນຂີ້ເຝື້ອ, ມີລົມພັດແຮງ, ມີຟ້າຮ້ອງ, ຟ້າແມບເຫຼື້ອມ ແລະມີຝົນຕົກລົງມາ. |
| | 18. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ. | **18. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ**<br>18.1 ຄຸນປະໂຫຍດຂອງລະດູຝົນ: ຝົນຕົກລົງມາເຮັດໃຫ້ດິນຊຸ່ມ, ຕົ້ນໄມ້ຂຽວງາມ, ຊາວນາ, ຊາວສວນມີນ້ຳປູກເຂົ້າ, ປູກຜັກ; ຄົນ, ສັດມີນ້ຳກິນ ແລະ ນ້ຳໃຊ້.<br>18.2 ຜົນສະທ້ອນຂອງລະດູຝົນ: ໄປມາບໍ່ສະດວກ, ເປິເປື້ອນ, ມີນ້ຳຂັງ, ມີຍຸງຫຼາຍ, ພະຍາດໄຂ້ຍຸງລະບາດ, ຝົນຕົກຫຼາຍນ້ຳຖ້ວມ. |
| | 19. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ. | **19. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ**<br>19.1 ຄຸນປະໂຫຍດຂອງລະດູແລ້ງ: ຕົ້ນໄມ້ປົ່ງໃບອ່ອນ, ຜັກ ແລະ ດອກໄມ້ງາມ; ມີແສງແດດໃຫ້ແສງສະຫວ່າງ ການໄປ-ມາສະດວກ, ຕາກເຄື່ອງແຫ້ງໄວ, ຕົ້ນໄມ້ອອກດອກ ແລະ ໝາກ.<br>19.2 ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ:<br>- ອາກາດໜາວ: ຜິວໜັງແຕກແຫ້ງ; ຄົນເຈັບຄໍ ແລະ  ເປັນໄຂ້ຫວັດ.<br>- ອາກາດຮ້ອນ: ດິນແຫ້ງແລ້ງ; ອາກາດອົບເອົ້າ; ອາຫານບູດໄວ;  ແມງວັນຫຼາຍ; ພະຍາດຖອກທ້ອງລະບາດ. |
| | 20. ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ. | **20. ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ**<br>20.1 ການປະຕິບັດຕົນໃນລະດູແລ້ງ:<br>- ຍາມໜາວ: ນຸ່ງເຄື່ອງກັນໜາວ, ໃສ່ເກີບສຸບ, ໃສ່ໝວກ, ດື່ມ ແລະ ອາບນ້ຳອຸ່ນ.<br>- ຍາມຮ້ອນ: ນຸ່ງເຄື່ອງທີ່ບາງ, ອາບນ້ຳ, ຫຼີ້ນຢູ່ບ່ອນຮົ່ມ, ເດີນທາງໃຫ້ໃສ່ໝວກ ຫຼື ກັ້ງຄັນຮົ່ມ.<br>20.2 ການປະຕິບັດຕົນໃນລະດູຝົນ: ການເດີນທາງໄປມາໃນເວລາຝົນຕົກຄວນກັ້ງຄັນຮົ່ມ ຫຼື ນຸ່ງເສື້ອກັນຝົນ, ບໍ່ນຸ່ງເຄື່ອງປຽກຝົນ ແລະ ເວລາຝົນຕົກຄວນຢູ່ເຮືອນ. |

**ໜ່ວຍທີ 6 : ສິ່ງແວດລ້ອມອ້ອມຕົວເຮົາ**

| ຫົວຂໍ້ ⁄ ອາທິດ | ຫົວຂໍ້ ⁄ວັນ | ເນື້ອໃນ |
|---|---|---|
| 1. ສິ່ງແວດລ້ອມ ທາງທຳມະ ຊາດກ່ຽວກັບ ສັດ. | 1. ສັດປົກ. | **1. ສັດປົກປະເພດສັດໃຫຍ່:** ຊ້າງ ແລະ ມ້າ<br>1.1 ຊ້າງ:<br>- ລັກສະນະ: ຊ້າງເປັນສັດທີ່ມີລຳຕົວໃຫຍ່, ສີດຳ, ມີ 4 ຂາ, ຫາງຍາວ, ມີງວງ, ມີງາ, ຫູໃຫຍ່, ຕານ້ອຍ ແລະ ເຄື່ອນທີ່ດ້ວຍການຍ່າງ.<br>- ທີ່ຢູ່ອາໄສ: ຊ້າງເປັນສັດທີ່ອາໄສຢູ່ປ່າ.<br>- ອາຫານ: ຊ້າງເປັນສັດທີ່ກິນພືດ ແລະ ນ້ຳເປັນອາຫານ (ກ້ວຍ, ອ້ອຍ, ຜັກ).<br>- ຄຸນປະໂຫຍດ: ຊ້າງໃຊ້ແຮງງານລາກແກ່.<br>- ການດູແລຮັກສາ: ໃຫ້ນ້ຳ, ອາຫານ, ທີ່ຢູ່ອາໄສ, ປິ່ນປົວເວລາເຈັບເປັນ, ອະນຸລັກຮັກສາຊ້າງ.<br>1.2 ມ້າ:<br>- ລັກສະນະ: ມ້າເປັນສັດທີ່ມີສີດຳ,  ສີນ້ຳຕານ, ສີຂາວ, ບໍ່ມີເຂົາ, ມີ 4 ຂາ, ມີຫາງເປັນພົ້ວ, ເຄື່ອນທີ່ດ້ວຍການຍ່າງ ແລະ ແລ່ນ.<br>- ທີ່ຢູ່ອາໄສ: ມ້າອາໄສຢູ່ໃນຄອກ, ທົ່ງນາ, ເດີ່ນຫຍ້າ ຫຼື ຟາມ.<br>- ອາຫານ: ມ້າເປັນສັດທີ່ກິນພືດ ແລະ ນ້ຳເປັນອາຫານ.<br>- ຄຸນປະໂຫຍດ: ມ້າໃຫ້ແຮງງານລາກແກ່.<br>- ການດູແລຮັກສາ: ໃຫ້ນ້ຳ,ອາຫານ, ທີ່ຢູ່ອາໄສ, ປິ່ນປົວເວລາເຈັບເປັນ. |
| | 2. ສັດປົກ (ຕໍ່). | **2. ສັດປົກປະເພດສັດນ້ອຍ: ແບ້, ກະຕ່າຍ.**<br>2.1 ແບ້:<br>- ລັກສະນະ: ແບ້ເປັນສັດທີ່ມີສີດຳ,  ສີນ້ຳຕານ, ສີຂາວ, ມີເຂົາ, ມີ 4 ຂາ, ມີຫາງສັ້ນ; ເຄື່ອນທີ່ດ້ວຍການຍ່າງ ແລະ ແລ່ນ.<br>- ທີ່ຢູ່ອາໄສ: ແບ້ອາໄສຢູ່ໃນຄອກ, ທົ່ງນາ, ເດີ່ນຫຍ້າ ຫຼື ຟາມ.<br>- ອາຫານ: ແບ້ ເປັນສັດທີ່ກິນພືດ ແລະ ນ້ຳເປັນອາຫານ. |

| | | |
|---|---|---|
| | | - ຄຸນປະໂຫຍດ: ແບ້ໃຫ້ຊີ້ນ ແລະ ນົມ.<br>- ການດູແລຮັກສາ: ໃຫ້ນ້ຳ, ອາຫານ, ທີ່ຢູ່ອາໄສ, ປິ່ນປົວເວລາເຈັບເປັນ.<br>2.2 ກະຕ່າຍ.<br>- ລັກສະນະ: ໜ້າແຫຼມ, ຫູຍາວ, ຂາຍາວມີ 4 ຂາ, ຫາງສັ້ນ, ຂົນມີສີນ້ຳຕານ, ສີແດງ, ສີຂາວເຄື່ອນທີ່ດ້ວຍການແລ່ນ ແລະ ເຕັ້ນໄປມາ.<br>- ທີ່ຢູ່ອາໄສ: ກະຕ່າຍລ້ຽງອາໄສຢູ່ໃນຄອກ ແລະ ກະຕ່າຍປ່າຢູ່ຕາມປ່າໄມ້.<br>- ອາຫານ: ຫຍ້າ ແລະ ຜັກ.<br>- ຄຸນປະໂຫຍດ: ໃຫ້ຊີ້ນເປັນອາຫານ, ຂົນໃຊ້ເຮັດເຄື່ອງໃຊ້ຕ່າງໆ.<br>- ການດູແລຮັກສາ: ໃຫ້ນ້ຳອາຫານ, ທີ່ຢູ່ອາໄສ, ປິ່ນປົວເວລາເຈັບເປັນ. |
| | 3. ສັດນ້ຳ. | **3. ສັດນ້ຳ:** ປາ, ກຸ້ງ.<br>3.1 ປາ: ປາມີເກັດ ແລະ ບໍ່ມີເກັດ (ປາໜັງ)<br>- ລັກສະນະ: ປາບາງຊະນິດມີເກັດຫຸ້ມຫໍ່ໂຕ, ບາງຊະນິດບໍ່ມີເກັດຫຸ້ມຫໍ່ໂຕ, ມີຫາງ, ມີຄີຢູ່ຫຼັງ ແລະ ຢູ່ທ້ອງ; ເຄື່ອນທີ່ດ້ວຍການລອຍ.<br>- ທີ່ຢູ່ອາໄສ: ປາອາໄສຢູ່ໃນນ້ຳ.<br>- ອາຫານ: ປາກິນພືດ, ໜອນນ້ຳ ແລະ ນ້ຳເປັນອາຫານ.<br>- ຄຸນປະໂຫຍດ: ປາໃຫ້ຊີ້ນເປັນອາຫານ, ປາບາງຊະນິດໃຫ້ຄວາມສວຍງາມ.<br>- ການດູແລຮັກສາ: ໃຫ້ອາຫານ, ທີ່ຢູ່ອາໄສ, ຖ້າລ້ຽງໃນອ່າງຕ້ອງພັ່ນປ່ຽນນ້ຳ.<br>3.2 ກຸ້ງ:<br>- ລັກສະນະ:ມີເປືອກແຂງຫຸ້ມຫໍ່ໂຕ, ມີໜວດ; ຫຼັງກົງ ເຄື່ອນທີ່ດ້ວຍການລອຍ.<br>- ທີ່ຢູ່ອາໄສ: ກຸ້ງອາໄສຢູ່ໃນນ້ຳ.<br>- ອາຫານ: ພືດໃນນ້ຳ, ສັດນ້ອຍທີ່ຢູ່ໃນນ້ຳ.<br>- ຄຸນປະໂຫຍດ: ໃຫ້ຊີ້ນເປັນອາຫານຂອງຄົນ ແລະ ສັດ.<br>- ການດູແລຮັກສາ: ໃຫ້ອາຫານ, ທີ່ຢູ່ອາໄສ (ໜອງ ຫຼື ອ່າງ), |

| | | |
|---|---|---|
| | 4. ສັດປີກ. | **4. ສັດປີກ:** ຫ່ານ, ນົກແກ້ວ<br>4.1 ຫ່ານ:<br>- ລັກສະນະ: ສົບໃຫຍ່ເປ, ຂາຍາວມີ 2 ຂາ, ປີກແລະຂົນສີຂາວແລະດຳໜິ່ນ, ຫາງສັ້ນ; ເຄື່ອນທີ່ດ້ວຍການຍ່າງ.<br>- ທີ່ຢູ່ອາໄສ: ໃນລົກ ຫຼື ຄອກ. ໃນເດີ່ນຫຍ້າ<br>- ອາຫານ: ຣຳ, ເຂົ້າເປືອກ, ຫົວອາຫານ ແລະ ນ້ຳ.<br>- ຄຸນປະໂຫຍດ: ໃຫ້ຊີ້ນ, ໄຂ່ເປັນອາຫານ ແລະ ຮ້ອງເຕືອນເວລາຄົນມາເຮືອນ.<br>- ການດູແລຮັກສາ: ໃຫ້ອາຫານ, ທີ່ຢູ່ອາໄສ, ບໍ່ທຳລາຍ ແລະ ປິ່ນປົວສັດເວລາເຈັບເປັນ.<br>4.2 ນົກແກ້ວ:<br>- ລັກສະນະ: ສົບສີແດງ, ຂາສັ້ນມີ 2 ຂາ, ຂົນສີຂຽວ, ມີຫາງ; ເຄື່ອນທີ່ດ້ວຍການບິນ.<br>- ທີ່ຢູ່ອາໄສ: ຢູ່ຕາມງ່າໄມ້, ໂກນໄມ້ ແລະ ຄອກ ຫຼື ກົງ.<br>- ອາຫານ: ໝາກໄມ້, ແມງໄມ້ ແລະ ນ້ຳ.<br>- ຄຸນປະໂຫຍດ: ໃຫ້ຄວາມສວຍງາມ, ຊ່ວຍກິນແມງໄມ້<br>- ການດູແລຮັກສາ: ໃຫ້ອາຫານ, ທີ່ຢູ່ອາໄສ, ບໍ່ທຳລາຍ ແລະ ປິ່ນປົວສັດເວລາເຈັບເປັນ. |
| | 5. ສັດເລືອຄານ. | **5. ສັດເລືອຄານ: ງູ, ແຂ້** (ເບິ່ງຄືນ)<br>5.1 ງູ:<br>- ລັກສະນະ:ຕົນຕົວກົມຍາວ, ໜັງໜາ, ເກັດແລບ, ສີດຳ, ນ້ຳຕານ, ລີນຍາວ.<br>- ທີ່ຢູ່ອາໄສ: ຢູ່ໃນປ່າ ແລະ ໃນຮູ ຫຼື ໂກນໄມ້.<br>- ອາຫານ: ຊີ້ນສັດ.<br>- ຄຸນປະໂຫຍດ: ໜັງເຮັດເຄື່ອງໃຊ້ ແລະ ເຄື່ອງປະດັບ.<br>5.2 ແຂ້:<br>- ລັກສະນະ: ໜັງໜາ ແລະ ເກັດໜາ,  ປາກຍາວ, ມີແຂ້ວ, ມີ 4 ຂາ, ຫາງຍາວ.<br>- ທີ່ຢູ່ອາໄສ: ແຂ້ອາໄສຢູ່ໃນນ້ຳ. |

| | | |
|---|---|---|
| | | - ອາຫານ: ແຂ້ກິນຊີ້ນ.<br>- ຄຸນປະໂຫຍດ: ໜັງແຂ້ເຮັດເຄື່ອງໃຊ້ ແລະ ເຄື່ອງປະດັບ. |
| 2. ສິ່ງແວດລ້ອມທາງທຳມະຊາດກ່ຽວກັບພືດ ແລະ ອາກາດ. | 6. ພືດໃຫ້ໃບ. | **6. ພືດໃຫ້ໃບ:** ຜັກຫົມ, ຜັກກາດ<br>6.1 ຜັກຫົມ: ມີຮາກແກ້ວ, ຮາກຝອຍ, ລຳຕົ້ນ, ໃບສ້ວຍ, ດອກ ແລະ ໝາກ.<br>6.2 ຜັກກາດ: ມີຮາກແກ້ວ, ຮາກຝອຍ, ລຳຕົ້ນ, ໃບຍາວ, ດອກ ແລະ ໝາກ.<br>6.3 ຄຸນປະໂຫຍດຂອງຜັກຫົມ ແລະ ຜັກກາດ: ໃຊ້ເປັນອາຫານທີ່ມີວິຕາມິນຕໍ່ຮ່າງກາຍ.<br>6.4 ການບົວລະບັດ: ປູກ, ຫົດນໍ້າ, ໃສ່ຝຸ່ນພວນດິນ, ບໍ່ເດັດໃບ ແລະ ບໍ່ທຳລາຍ. |
| | 7. ພືດໃຫ້ດອກ. | **7. ພືດໃຫ້ດອກ:** ດອກຈຳປາ, ດອກດາວເຮືອງ, ດອກຄູນ<br>7.1 ດອກຈຳປາ: ເປັນດອກທີ່ມີສີຂາວ, ສີແດງ, ສີເຫຼືອງ ແລະ ດອກມີລັກສະນະເປັນພົ້ວ.<br>7.2 ດອກດາວເຮືອງ: ເປັນດອກທີ່ມີສີເຫຼືອງ ແລະ ເປັນດອກດ່ຽວ.<br>7.3 ດອກຄູນ: ເປັນດອກທີ່ມີສີເຫຼືອງ ແລະ ດອກມີລັກສະນະເປັນພົ້ວ.<br>7.4 ຄຸນປະໂຫຍດ: ເອົາໄວ້ບູຊາ, ປະດັບປະດາ ແລະ ໃຫ້ຄວາມສວຍງາມ, ດອກຈຳປາຍັງເປັນດອກໄມ້ປະຈຳຊາດລາວເຮົາ.<br>7.5 ການບົວລະບັດຮັກສາ: ປູກ, ຫົດນໍ້າ, ພວນດິນ, ບໍ່ເດັດ ແລະ ບໍ່ທຳລາຍ. |
| | 8. ພືດໃຫ້ໝາກ. | **8. ພືດໃຫ້ໝາກສາລີ, ໝາກຖົ່ວ**<br>8.1 ສາລີ: ມີຮາກຝອຍ, ລຳຕົ້ນເປັນປ້ອງ, ໃບຍາວ, ດອກເປັນພົ້ວ ແລະ ໝາກເປັນຮວງ.<br>8.2 ໝາກຖົ່ວ: ມີຮາກແກ້ວ, ຮາກຝອຍ, ລຳຕົ້ນເປັນເຄືອ, ໃບສ້ວຍ, ດອກເປັນພົ້ວ ແລະ ໝາກຍາວ (ຝັກ).<br>8.3 ຄຸນປະໂຫຍດ: ເປັນອາຫານ.<br>8.4 ການບົວລະບັດ: ປູກ, ຫົດນໍ້າ, ພວນດິນ, ບໍ່ເດັດ ແລະ ບໍ່ທຳລາຍ. |
| | 9. ຄວາມແຕກຕ່າງຂອງພືດ | **9. ຄວາມແຕກຕ່າງຂອງລຳຕົ້ນ, ດອກ ແລະ ໝາກຂອງພືດ.**<br>9.1 ຄວາມແຕກຕ່າງຂອງລຳຕົ້ນພືດ: ລຳຕົ້ນເປັນປ້ອງ, ເປັນເຄືອ ແລະ ເປັນພຸ່ມ (ລຳຕົ້ນເປັນປ້ອງ: ສາລີ, ອ້ອຍ; ລຳຕົ້ນເປັນເຄືອ: ໝາກຖົ່ວ, ໝາກອຶ, ໝາກແຕງ; ລຳຕົ້ນເປັນພຸ່ມ: ໝາກເຜັດ, ໝາກເຂືອ).<br>9.2 ຄວາມແຕກຕ່າງຂອງດອກພືດ: ດອກໃຫຍ່-ນ້ອຍ; ດອກດ່ຽວ, ດອກເປັນພົ້ວ (ດອກດ່ຽວ: ດອກດາວ |

| | | |
|---|---|---|
| | | ເຮືອງ, ດອກພາກອື, ດອກຕາເວັນ, ດອກກຸຫຼາບ; ດອກເປັນພົ້ວ: ດອກສາລີ, ດອກຄູນ, ດອກຈຳປາ, ດອກພາກມ່ວງ).<br>9.2 ຄວາມແຕກຕ່າງຂອງພາກພືດ: ພາກດ່ຽວ, ພາກເປັນພົ້ວ (ພາກດ່ຽວ: ພາກອື, ພາກແຕງ, ພາກມອນໄຂ່; ພາກເປັນພົ້ວ: ພາກລຳໄຍ, ພາກແຄ້ງ). |
| | 10. ອາກາດ. | **10. ອາກາດ ແລະ ຄຸນປະໂຫຍດຂອງອາກາດ:**<br>10.1 ອາກາດ: ມີຢູ່ທົ່ວໄປອ້ອມຕົວເຮົາແຕ່ເຮົາເບິ່ງບໍ່ເຫັນ.<br>10.2 ຄຸນປະໂຫຍດຂອງອາກາດ: ຄົນ, ສັດ, ພືດຕ້ອງການອາກາດເພື່ອຫາຍໃຈ, ໃສ່ລົມຕີນລົດ, ໃສ່ລົມພາກບານ, ຖ້າບໍ່ມີອາກາດຫາຍໃຈຄົນ, ສັດ, ພືດກໍຈະຕາຍ. |
| 3. ສິ່ງແວດລ້ອມທີ່ເກີດຂຶ້ນຕາມທຳມະຊາດ | 11. ຖ້ຳ. | **11. ຄວາມໝາຍ ແລະ ຊື່ຂອງຖ້ຳ**<br>- ຄວາມໝາຍຂອງຖ້ຳ: ຖ້ຳໝາຍເຖິງຮູທີ່ເປັນໂພ້ງກວ້າງຢູ່ໃນພູຫີນ ຫຼື ຜາ.<br>- ຊື່ຖ້ຳທີ່ເກີດຕາມທຳມະຊາດ: ຖ້ຳທ່ານໄກສອນ, ຖ້ຳຕິ່ງ, ຖ້ຳປາຝາ ແລະ ຖ້ຳທີ່ມີໃນທ້ອງຖິ່ນ. |
| | 12. ຖ້ຳທ່ານໄກສອນ, ຖ້ຳຕິ່ງ ແລະ ຖ້ຳປາຝາ. | **12. ຖ້ຳທ່ານໄກສອນ, ຖ້ຳຕິ່ງ ແລະ ຖ້ຳປາຝາ**<br>12.1 ຖ້ຳທ່ານໄກສອນ:<br>- ທີ່ຕັ້ງ: ຖ້ຳທ່ານໄກສອນຕັ້ງຢູ່ບ້ານນາໄກ່ ເມືອງວຽງໄຊ ແຂວງຫົວພັນ.<br>- ຄວາມສຳຄັນ: ເປັນບ່ອນເຮັດວຽກໃນສະໄໝຕໍ່ສູ້ກູ້ຊາດຂອງທ່ານຜູ້ນຳ ແລະ ເປັນສະຖານທີ່ທາງປະຫວັດສາດ.<br>12. 2 ຖ້ຳຕິ່ງ:<br>- ທີ່ຕັ້ງ: ຖ້ຳຕິ່ງຕັ້ງຢູ່ບ້ານປາກອູ ເມືອງປາກອູ ແຂວງຫຼວງພະບາງ.<br>- ຄວາມສຳຄັນ: ໃນຖ້ຳມີພະຫຼາຍຮູບທຳມະຊາດສວຍງາມເປັນສະຖານທີ່ທ່ອງທ່ຽວ ແລະ ເປັນແຫຼ່ງສຶກສາຫາຂໍ້ມູນຄວາມຮູ້ທາງດ້ານປະຫວັດສາດ.<br>12.3 ຖ້ຳປາຝາ:<br>- ທີ່ຕັ້ງ: ຖ້ຳປາຝາຕັ້ງຢູ່ບ້ານນາຄັນຊ້າງ ເມືອງທ່າແຂກ ແຂວງຄຳມ່ວນ.<br>- ຄວາມສຳຄັນ: ເປັນສະຖານທີ່ທ່ອງທ່ຽວ ແລະ ເປັນບ່ອນສຶກສາຫາຂໍ້ມູນຄວາມຮູ້ທາງປະຫວັດສາດ. |

| | | |
|---|---|---|
| | 13. ນ້ຳຕົກຕາດ | **13. ຄວາມໝາຍ ແລະ ຊື່ຂອງນ້ຳຕົກຕາດ**<br>- ຄວາມໝາຍຂອງນ້ຳຕົກຕາດ: ນ້ຳຕົກຕາດໝາຍເຖິງນ້ຳທີ່ໄຫຼລົງຈາກພູ ຫຼື ຫີນຜາທີ່ສູງຊັນ.<br>- ຊື່ນ້ຳຕົກຕາດທີ່ເກີດຈາກທຳມະຊາດ: ນ້ຳຕົກຕາດກວາງຊີ, ນ້ຳຕົກຕາດຄອນພະເພັງ ແລະ ນ້ຳຕົກຕາດທີ່ມີໃນທ້ອງຖິ່ນ. |
| | 14. ນ້ຳຕົກຕາດກວາງຊີ ແລະ ຄອນພະເພງ. | **14. ນ້ຳຕົກຕາດກວາງຊີ ແລະ ຄອນພະເພັງ**<br>14.1 ນ້ຳຕົກຕາດກວາງຊີ.<br>- ທີ່ຕັ້ງ: ນ້ຳຕົກຕາດກວາງຊີຕັ້ງຢູ່ບ້ານເມືອງຂາຍ,ເມືອງ ແລະ ແຂວງຫຼວງພະບາງມີພະພຸດທະຮູບ.<br>- ຄວາມສຳຄັນ: ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ.<br>14.2 ນ້ຳຕົກຕາດຄອນພະເພັງ:<br>- ທີ່ຕັ້ງ: ນ້ຳຕົກຕາດຄອນພະເພັງຕັ້ງຢູ່ບ້ານທ່າຄໍ້, ເມືອງໂຂງ ແຂວງຈຳປາສັກ.<br>- ຄວາມສຳຄັນ: ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ. |
| | 15. ການປົກປັກຮັກສາ ແລະ ການປະຕິບັດຕົນ. | **15. ການປົກປັກຮັກສາ ແລະ ການປະຕິບັດຕົນ**<br>15.1 ການປົກປັກຮັກສາ: ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ ແລະ ຖ່າຍໜັກ-ເບົາໃສ່ວິດຖ່າຍ.<br>15.2 ການປະຕິບັດຕົນ:<br>- ການເຂົ້າຊົມສະຖານທີ່ສຳຄັນຕ້ອງລຽນແຖວຊື້ບັດ ແລະ ເຂົ້າເບິ່ງ, ບໍ່ຈັບບາຍສິ່ງຕ່າງໆ, ບໍ່ເວົ້າສຽງດັງເກີນໄປ,<br>- ປະຕິບັດຕາມຄຳຂວັນທີ່ວ່າ: ສະອາດ, ສີຂຽວ, ສະຫງົບ, ສີວິໄລ, ສະຫວ່າງສະໄຫວ, ມີສະເໜ່. |
| 4. ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ. | 16. ສະຖານທີ່ສຳຄັນຕ່າງໆ. | **16. ສະຖານທີ່ສຳຄັນຕ່າງໆທີ່ຄົນສ້າງຂຶ້ນ**<br>16.1 ຊື່ສະຖານທີ່ສຳຄັນໃນປະເທດລາວ: ທາດຫຼວງວຽງຈັນ, ວັດພູສີ, ທາດອີງຮັງ ແລະ ວັດພູຈຳປາສັກ.<br>16.2 ການປົກປັກຮັກສາ: ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ, ປູກຕົ້ນໄມ້ ຫຼື ຫຍ້າໃສ່ບໍລິເວນເດີ່ນໃຫ້ຂຽວງາມ, ບໍ່ເດັດດອກໄມ້ ແລະ ຖ່າຍໜັກ-ເບົາໃສ່ວິດຖ່າຍ.<br>16.3 ການປະຕິບັດຕົນ:<br>- ການເຂົ້າຊົມສະຖານທີ່ສຳຄັນຕ້ອງລຽນແຖວຊື້ບັດ ແລະ ເຂົ້າເບິ່ງ, ບໍ່ຈັບບາຍສິ່ງຕ່າງໆ, ບໍ່ເວົ້າ |

| | | |
|---|---|---|
| | | ສຽງດັງເກີນໄປ.<br>- ປະຕິບັດຕາມຄຳຂວັນທີ່ວ່າ: ສະອາດ, ສີຂຽວ, ສະຫງົບ, ສີວິໄລ, ສະຫວ່າງສະໄຫວ, ມີສະເໜ່. |
| | 17. ທາດຫຼວງວຽງຈັນ. | **17. ທາດຫຼວງວຽງຈັນ.**<br>17.1 ທີ່ຕັ້ງ: ທາດຫຼວງຕັ້ງຢູ່ບ້ານທາດຫຼວງເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.<br>17.2 ລັກສະນະຂອງທາດຫຼວງ: ທາດໃຫຍ່, ທາດນ້ອຍອ້ອມຮອບ ...<br>17.3 ຄວາມສຳຄັນ: ບ່ອນສັກກາລະບູຊາຂອງຊາວລາວ(ເດືອນ 12 ເພັງຂຶ້ນ 15 ຄ່ຳຈະມີບຸນ ຫຼື ພິທີສະເຫຼີມສະຫຼອງ), ບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາງວັດທະນາທຳ (ຄົນລາວ ແລະ ແຂກຕ່າງປະເທດ). |
| | 18. ວັດພູສີ. | **18. ວັດພູສີ**<br>18.1 ທີ່ຕັ້ງ: ວັດພູສີຕັ້ງຢູ່ບ້ານປ່າຂາມ, ເມືອງຫຼວງພະບາງ ແລະ ແຂວງຫຼວງພະບາງ.<br>18.2 ລັກສະນະວັດພູສີ: ຜາສາດເຮັດດ້ວຍກ້ອນຫີນເປັນເອກະລັກ, ພະພຸດທະຮູບໃຫຍ່.<br>18.3 ຄວາມສຳຄັນ: ບ່ອນສັກກາລະບູຊາຂອງຊາວລາວ, ບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາງວັດທະນາທຳ (ຄົນລາວ ແລະ ແຂກຕ່າງປະເທດ). ເປັນເມືອງມໍລະດົກໂລກ. |
| | 19. ທາດອິງຮັງ. | **19. ທາດອິງຮັງ**<br>19.1 ທີ່ຕັ້ງ: ທາດອິງຮັງຕັ້ງຢູ່ບ້ານທາດອິງຮັງ, ເມືອງໄກສອນ ແຂວງສະຫວັນນະເຂດ.<br>19.2 ລັກສະນະທາດ: ທາດໃຫຍ່ສູງ,<br>19.3 ຄວາມສຳຄັນ: ບ່ອນສັກກາລະບູຊາຂອງຊາວລາວ, ບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາງວັດທະນາທຳ (ຄົນລາວ ແລະ ແຂກຕ່າງປະເທດ). |
| | 20. ວັດພູຈຳປາສັກ. | **20. ວັດພູຈຳປາສັກ**<br>20.1 ທີ່ຕັ້ງ: ວັດພູຈຳປາສັກຕັ້ງຢູ່ບ້ານໜອງສະ, ເມືອງຈຳປາສັກ ແລະ ແຂວງຈຳປາສັກ.<br>20.2 ລັກສະນະວັດພູຈຳປາສັກ: ຜາສາດເຮັດດ້ວຍກ້ອນຫີນເປັນເອກະລັກ, ພະພຸດທະຮູບໃຫຍ່.<br>20.3 ຄວາມສຳຄັນ ແລະ ການສະເຫຼີມສະຫຼອງ: ບ່ອນສັກກາລະບູຊາ(ເດືອນ 3 ເພັງຂຶ້ນ 15 ຄ່ຳມີບຸນ ຫຼື ພິທີສະເຫຼີມສະຫຼອງ) ບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາງວັດທະນາທຳ (ຄົນລາວ ແລະ ແຂກຕ່າງປະເທດ) ເປັນມໍລະດົກໂລກແຫ່ງທີ 2 |

**ໜ່ວຍທີ 7 : ການຄົມມະນາຄົມ ແລະ ການສື່ສານ**

| ຫົວຂໍ້ / ອາທິດ | ຫົວຂໍ້ /ວັນ | ເນື້ອໃນ |
|---|---|---|
| 1. ການເດີນທາງ. | 1. ການເດີນທາງ. | **1. ປະເພດການເດີນທາງ:** ທາງບົກ, ທາງນ້ຳ, ທາງອາກາດ<br>1.1 ທາງບົກປະກອບມີ: ການຍ່າງ ແລະ ການຂີ່ລົດຖີບ, ລົດຈັກ, ລົດເກງ, ລົດກະບະ, ລົດຕູ້.<br>1.2 ທາງນ້ຳ: ເຮືອພາຍ, ເຮືອຈັກ, ເຮືອຂົນສົ່ງ.<br>1.3 ທາງອາກາດ: ເຮືອບິນອາເຕແອ, ໂບອິງ, ເຮລິຄອບແຕ ແລະ ອື່ນໆ. |
| | 2. ການເດີນທາງບົກ. | **2. ການຍ່າງ ແລະ ປະເພດລົດ**<br>2.1 ການຍ່າງ:<br>- ເບື້ອງຂວາມືຂອງຄົນ.<br>- ຍ່າງຂ້າມທາງ: ຍ່າງຂ້າມທາງມ້າລາຍ ຫຼື ບ່ອນທີ່ມີໄຟອຳນາດ, ບໍ່ຍ່າງກາງທາງ ແລະ ໄລ່ຢອກກັນ (ເຝິກປະຕິບັດຂ້າມທາງ).<br>2.2 ປະເພດລົດ: ລົດຖີບລົດສາມລໍ້, ລົດຈັກ ແລະ ລົດໃຫຍ່. |
| | 3. ລົດຖີບ. | **3. ລົດຖີບ:** ຊື່, ສ່ວນຕ່າງໆ<br>3.1 ຊື່ລົດຖີບ: ລົດຖີບຟາມິງໂກ້, ລົດຖີບສະແຕນດາດ, ລົດຖີບ ບີເອັມເອັກ, ລົດຖີບມີເກຍ.<br>3.2 ສ່ວນຕ່າງໆຂອງລົດຖີບມີເຂົາ, ມີອານ, ມີຄໍ້ວ, ມີຕີນລົດຖີບ ແລະ ມີແຢ່ງ.<br>3.3 ການເຄື່ອນທີ່ຂອງລົດຖີບ: ລົດຖີບ ແລະ ສາມລໍ້ເຄື່ອນທີ່ດ້ວຍການໃຊ້ແຮງຄົນຖີບ.<br>3.4 ຄຸນປະໂຫຍດຂອງລົດຖີບ: ໃຊ້ເດີນທາງໄປມາຫາສູ່ໃນໄລຍະທາງບໍ່ໄກປານໃດ.<br>3.5 ການປະຕິບັດຕົນ: ຂຶ້ນ ແລະ ລົງລົດຖີບໃນເວລາລົດຈອດກ່ອນ, ນັ່ງ ແລະ ຈັບໃຫ້ແໜ້ນໃນເວລາຂີ່ລົດຖີບ, ລະວັງບໍ່ໃຫ້ຕີນເຂົ້າຄໍ້ວລົດເວລາຊ້ອນ. |
| | 4. ລົດຈັກ. | **4. ລົດຈັກ**<br>4.1 ຊື່ລົດຈັກ: ລົດຈັກຮອນດ້າເວບ100, ລົດຈັກຊູຊູກິເລີບ, ລົດຈັກດອນດ້າດຼີມ ແລະ ລົດຈັກເວບ.<br>4.2 ສ່ວນປະກອບຂອງລົດຈັກມີ: ເຂົາ, ມີອານ, ຕີນລົດຈັກ, ແຫວ່ນ, ແກ. |

| | | |
|---|---|---|
| | | 4.3 ການເຄື່ອນທີ່ຂອງລົດຈັກ: ລົດຈັກ ເຄື່ອນທີ່ດ້ວຍເຄື່ອງຈັກ.<br>4.4 ຄຸນປະໂຫຍດຂອງລົດຈັກໃຊ້ເດີນທາງໄປມາຫາສູ່ກັນສະດວກວ່ອງໄວໃນໄລຍະທາງໃກ້ ແລະ ໄກ.<br>4.5 ການປະຕິບັດຕົນ: ຂຶ້ນ ແລະ ລົງລົດຈັກໃນເວລາລົດຈອດກ່ອນ, ນັ່ງ ແລະ ຈັບໃຫ້ແໜ້ນບໍ່ເດ່ແຂນອອກນອກ; ຂີ່ລົດຈັກໃສ່ໝວກກັນກະທົບທັງຄົນຂັບ ແລະ ຜູ້ຊ້ອນທ້າຍ. |
| | 5. ລົດໃຫຍ່. | **5. ລົດໃຫຍ່**<br>5.1 ຊື່ລົດໃຫຍ່: ລົດເມ, ລົດສອງແຖວ, ລົດເກັງ, ລົດກະບະ ແລະ ລົດຕູ້.<br>5.2 ສ່ວນປະກອບຂອງລົດໃຫຍ່ມີ: ພວງມະໄລ, ເບກ, ຄາດ, ຄັນເລັ່ງ, ເບາະນັ່ງ, ຕີນລົດ, ແຫວ່ນ, ແກ.<br>5.3 ການເຄື່ອນທີ່ຂອງລົດໃຫ່ຍ : ລົດເມ, ລົດສອງແຖວ, ລົດເກັງ, ລົດກະບະ ແລະ ລົດຕູ້ເຄື່ອນທີ່ດ້ວຍເຄື່ອງຈັກ.<br>5.4 ຄຸນປະໂຫຍດຂອງລົດໃຫຍ່: ໃຊ້ເດີນທາງໄປມາຫາສູ່ກັນຂີ່ໄດ້ຫຼາຍຄົນ, ສະດວກ, ວ່ອງໄວໃນໄລຍະທາງໃກ້ ແລະ ໄກ.<br>5.5 ການປະຕິບັດຕົນ: ຂຶ້ນ ແລະ ລົງລົດໃຫຍ່ໃນເວລາລົດຈອດກ່ອນ, ນັ່ງ ແລະ ຈັບໃຫ້ແໜ້ນບໍ່ເດ່ແຂນອອກນອກ; ຂີ່ລົດໃຫຍ່ຄວນໃສ່ສາຍຮັດນິລະໄພ. |
| 2. ການເດີນທາງອາກາດ ແລະ ທາງນ້ຳ. | 6. ການເດີນທາງອາກາດ.<br><br><br><br><br><br>7. ເຮືອບິນໃຫຍ່. | **6. ເຮືອບິນນ້ອຍ**<br>6.1 ຊື່ເຮືອບິນນ້ອຍ: ເຮລິຄອບແຕ.<br>6.2 ສ່ວນປະກອບຂອງເຮືອບິນນ້ອຍມີໃບພັດ, ເບກ, ຄັນເລັ່ງ, ເບາະນັ່ງ, ຕີນເຮືອບິນ.<br>6.3 ການເຄື່ອນທີ່ຂອງເຮືອບິນນ້ອຍ: ເຮືອບິນນ້ອຍ ເຄື່ອນທີ່ດ້ວຍເຄື່ອງຈັກ.<br>6.4 ຄຸນປະໂຫຍດຂອງເຮືອບິນໃຊ້ເດີນທາງໄປມາຫາສູ່ກັນທາງອາກາດ, ສະດວກວ່ອງໄວໃນໄລຍະທາງໄກ, ບໍ່ເສຍເວລາຫຼາຍ.<br>**7. ເຮືອບິນໃຫຍ່**<br>7.1 ຊື່ເຮືອບິນໃຫຍ່: ໂບອິງ, ອາເຕແອ, ແອບັສ<br>7.2 ສ່ວນປະກອບຂອງເຮືອບິນໃຫຍ່ມີໃບພັດ, ເບກ, ຄັນເລັ່ງ, ເບາະນັ່ງ, ຕີນເຮືອບິນ.<br>7.3 ການເຄື່ອນທີ່ຂອງເຮືອບິນໃຫຍ່: ເຮືອບິນໃຫຍ່ເຄື່ອນທີ່ດ້ວຍເຄື່ອງຈັກ. |

| | | |
|---|---|---|
| | | 7.4 ຄຸນປະໂຫຍດຂອງເຮືອບິນໃຊ້ເດີນທາງໄປມາ, ສະດວກ, ວ່ອງໄວໃນໄລຍະທາງໄກ, ປະຢັດເວລາ. |
| | 8. ການປະຕິບັດຕົນໃນການເດີນທາງອາກາດ. | **8. ການປະຕິບັດຕົນໃນການເດີນທາງອາກາດ**<br>8.1 ໄປໃຫ້ທັນເວລາ, ບໍ່ລົມກັນສຽງດັງ, ຂຶ້ນ ແລະ ລົງຍົນຕາມລຳດັບ; ບໍ່ຖິ້ມຂີ້ເຫຍື້ອຊະຊາຍ; ປະຕິບັດຕາມກົດລະບຽບຂອງການເດີນທາງ.<br>8.2 ນັ່ງຖືກບ່ອນ ແລະ ໃສ່ສາຍຮັດນິລະໄພ. |
| | 9. ການເດີນທາງນໍ້າ. | **9. ເຮືອ**<br>9.1 ປະເພດເຮືອ: ເຮືອພາຍ, ເຮືອຈັກ.<br>9.2 ສ່ວນປະກອບຂອງເຮືອພາຍມີ ໄມ້ພາຍ, ຂັ້ນນັ່ງ.<br>- ການເຄື່ອນທີ່ຂອງເຮືອພາຍ: ເຮືອພາຍເຄື່ອນທີ່ດ້ວຍການໃຊ້ດ້ວຍໄມ້ພາຍ<br>9.3 ສ່ວນປະກອບຂອງເຮືອຈັກມີ ຈັກເຮືອ, ຂັ້ນນັ່ງ, ມີເຄື່ອງຈັກໃບພັດຫາງຍາວ, ມີຫຼັງຄາ.<br>- ການເຄື່ອນທີ່ຂອງເຮືອຈັກ: ເຮືອຈັກເຄື່ອນທີ່ດ້ວຍເຄື່ອງຈັກ.<br>9.4 ຄຸນປະໂຫຍດ: ໃຊ້ເດີນທາງໄປມາຫາສູ່ກັນທາງນໍ້າໃນໄລຍະໃກ້ ແລະ ໄກ. |
| | 10. ການປະຕິບັດຕົນໃນການເດີນທາງນໍ້າ. | **10. ການປະຕິບັດຕົນໃນການເດີນທາງນໍ້າ**<br>10.1 ໄປໃຫ້ທັນເວລາ; ບໍ່ລົມກັນສຽງດັງ; ຂຶ້ນ ແລະ ລົງລົດຕາມລຳດັບ; ບໍ່ຖິ້ມຂີ້ເຫຍື້ອຊະຊາຍ; ປະຕິບັດຕາມກົດລະບຽບຂອງການເດີນທາງນໍ້າ.<br>10.2 ໃສ່ເສື້ອຊູຊີບ, ນັ່ງ, ຈັບໃຫ້ແໜ້ນ ແລະ ບໍ່ເອົາມືຈຸ່ມນໍ້າ. |
| 3. ການສື່ສານ. | 11. ປະເພດຂອງການສື່ສານ. | **11. ການສື່ສານມີ 2 ປະເພດຄື:** ການສື່ສານທາງດຽວ ແລະ ການສື່ສານ 2 ທາງ<br>11.1 ການສື່ສານທາງດຽວ: ການຟັງວິທະຍຸ, ການເບິ່ງໂທລະພາບ, ການຟັງໂທລະໂຄ່ງ, ຈົດໝາຍ, ໜັງສືພິມ ແລະ ອິນເຕີເນດ. (ເຝິກປະຕິບັດ).<br>11.2 ການສື່ສານ 2 ທາງ: ການລົມໂທລະສັບ, ການໂອ້ລົມສົນທະນາ, ການສົ່ງຂໍ້ຄວາມຫາກັນ (ເຝິກປະຕິບັດ). |
| | 12. ໂທລະສັບຕັ້ງໂຕະ. | **12. ໂທລະສັບຕັ້ງໂຕະ**<br>12.1 ສ່ວນປະກອບຂອງໂທລະສັບຕັ້ງໂຕະມີ: ປຸ່ມກົດຕົວເລກ, ຫູຟັງໂທລະສັບ, ສາຍປັກສຽບໄຟ. |

| | | |
|---|---|---|
| | | 12.2 ປະໂຫຍດຂອງໂທລະສັບ ສາມາດສື່ສານກັນໄດ້ໄວໃນໄລຍະທາງໃກ້ ແລະ ໄກ.<br>12.3 ການປະຕິບັດຕົນໃນເວລາລົມໂທລະສັບ: ໃຊ້ຄຳເວົ້າສຸພາບ, ບໍ່ເວົ້າຫຍາບຄາຍ. |
| | 13. ໂທລະພາບ. | **13. ໂທລະພາບ**<br>13.1 ສ່ວນປະກອບຂອງໂທລະພາບມີ: ຈໍພາບ, ລຳໂພງ, ສາຍປັກສຽບໄຟ, ປຸ່ມສະວິດປິດເປີດ ແລະ ລີໂໝດ.<br>13.2 ປະໂຫຍດຂອງໂທລະພາບ ໃຊ້ເບິ່ງລາຍການ ສາລະຄະດີ, ລະຄອນ, ເພັງ, ຂ່າວພາຍໃນ, ຂ່າວຕ່າງປະເທດ.<br>13.3 ການປະຕິບັດຕົນໃນເວລາເບິ່ງໂທລະພາບ ບໍ່ໃຫ້ເປີດສຽງດັງເກີນໄປ, ຄວນເບິ່ງໃນບ່ອນທີ່ມີແສງສະຫວ່າງພຽງພໍ, ບໍ່ນັ່ງໃກ້ໜ້າຈໍດົນເກີນໄປ. |
| | 14. ຄອມພິວເຕີ. | **14. ຄອມພິວເຕີ**<br>14.1 ສ່ວນປະກອບຂອງຄອມພິວເຕີມີ ຈໍ, ລຳໂພງ, ຄີບອດ, ເມົ້າ, ຮາດດິດ.<br>14.2 ປະໂຫຍດຂອງຄອມພິວເຕີ ໃຊ້ໄວ້ພິມເອກະສານຕ່າງໆ, ບັນທຶກຂໍ້ມູນຕ່າງໆໄດ້ຫຼາຍ ແລະ ວ່ອງໄວ.<br>14.3 ການປະຕິບັດຕົນໃນການໃຊ້ຄອມພິວເຕີ ບໍ່ຄວນນັ່ງຢູ່ໜ້າຄອມພິວເຕີດົນເກີນໄປ, ໃຊ້ແລ້ວໃຫ້ປິດໄວ້. |
| | 15. ຈົດໝາຍ. | **15 ລັກສະນະຂອງຊອງຈົດໝາຍ:** ເປັນຮູບສີ່ແຈ, ຊອງສັ້ນ, ຊອງຍາວ (ເຝິກປະຕິບັດພັບຊ່ອງຈົດໝາຍ ແລະ ຂຽນໃສ່ຊອງ)<br>15.1 ຄຸນປະໂຫຍດຂອງຈົດໝາຍ: ສາມາດຮູ້ຂ່າວຄາວເຊິ່ງກັນ ແລະ ກັນ.<br>15.2 ການປະຕິບັດຕົນ: ບໍ່ຈີກຊອງຈົດໝາຍຂອງຜູ້ອື່ນ, ຕ້ອງສົ່ງຈົດໝາຍໃຫ້ເຖິງມືເຈົ້າຂອງ. |
| 4. ການປະຕິບັດຕົນໃນເວລາສື່ສານ. | 16. ການເວົ້າ. | **16. ບຸກຄະລິກ ແລະ ມາລະຍາດ**<br>16.1 ບຸກຄະລິກ: ທ່າທາງ, ນ້ຳສຽງ (ເຝິກປະຕິບັດ).<br>- ທ່າທາງ: ການເປັນໂຄສົກ, ການເປັນພິທີກອນ...<br>- ນ້ຳສຽງ: ສຽງແຮງ, ສຽງຄ່ອຍ.<br>16.2 ມາລະຍາດໃນການເວົ້າ: ເວົ້າສຽງອ່ອນຫວານ, ເວົ້າຈາສຸພາບ, ບໍ່ເວົ້າໄວເກີນໄປເວົ້າຈະແຈ້ງຊັດເຈນ, ບໍ່ຍາດກັນເວົ້າ ແລະ ບໍ່ເວົ້າຕັດຄວາມຜູ້ອື່ນ. |

| | | |
|---|---|---|
| | 17. ການຟັງ. | **17. ຟັງນິທານ, ເພງ ແລະ ຄຳຄ່ອງ**<br>17.1 ຟັງນິທານ: ສົນທະນາຖາມ-ຕອບກ່ຽວກັບເນື້ອໃນຂອງຕົວລະຄອນໃນນິທານ.<br>17.2 ຟັງເພງ: ເຕັ້ນ ແລະ ຟ້ອນ; ສະແດງທ່າທາງຕາມຈັງຫວະຂອງເນື້ອເພງ.<br>17.3 ຟັງຄຳຄ່ອງ: ສະແດງທ່າທາງປະກອບບົດຄຳຄ່ອງ. |
| | 18. ການອ່ານ. | **18. ການອ່ານ:** ອ່ານຕາມຮູບພາບ ແລະ ບັດຄຳໃຫ້ຈະແຈ້ງ, ຕັ້ງໃຈອ່ານ, ບໍ່ລົບກວນໝູ່ໃນເວລາອ່ານ, ເປີດປຶ້ມຄ່ອຍໆ, ອ່ານແລ້ວເກັບມ້ຽນເປັນລະບຽບ (ເຝິກປະຕິບັດ). |
| | 19. ການຂຽນ. | **19. ການຂຽນ:** ຂຽນຕາມແບບ, ຂຽນເອງ (ເຝິກປະຕິບັດ). |
| | 20. ການແຕ້ມ. | **20. ການເຝິກແຕ້ມ:** ຕາມແບບ, ການໃສ່ສີຕາມໃຈ, ແຕ້ມຕາມຈິນຕະນາການໂດຍບໍ່ໃຫ້ເຈ້ຍເປື້ອນ ແລະ ຂາດ. |

**ໜ່ວຍທີ 8: ສິ່ງຕ່າງໆອ້ອມຕົວເຮົາ**



| ຫົວຂໍ້ ⁄ ອາທິດ | ຫົວຂໍ້ ⁄ວັນ | ເນື້ອໃນ |
|---|---|---|
| 1. ເຄື່ອງທີ່ເຮັດດ້ວຍວັດຖຸແຂງ. | 1. ເຄື່ອງຫຼິ້ນໃນຫ້ອງຮຽນ. | **1. ເຄື່ອງຫຼິ້ນໃນຫ້ອງຮຽນ**<br>1.1 ຊື່ເຄື່ອງຫຼິ້ນ: ຕຸກກະຕາ, ຊຸດແຕ່ງກິນ, ຊຸດພະຍາບານ, ຊຸດຕໍ່ຮູບ, ຊຸດໄມ້ບ້ອກ, ...<br>1.2 ປະເພດວັດຖຸ: ໄມ້, ປລາສະຕິກ, ໜັງ, ຝ້າຍ, ຂົນສັດ.<br>1.3 ຮູບຮ່າງ: ໜ່ວຍມົນ, ທໍ່, ສີ່ແຈ, ສາມແຈ.<br>1.4 ສີ: ແດງ, ເຫຼືອງ, ຟ້າ, ຂຽວ, ບົວ.<br>1.5 ຄຸນປະໂຫຍດ: ເຝິກການຄິດ, ຮຽນຮູ້ຮູບຊົງ, ສີ, ເຝິກການສຳຜັດ. |
| | 2. ເຄື່ອງຫຼິ້ນໃນເດີ່ນ. | **2. ເຄື່ອງຫຼິ້ນໃນເດີ່ນ**<br>2.1 ຊື່ເຄື່ອງຫຼິ້ນ: ຊຸດໄມ້ບ້ອກກວ້າງ, ໂອນຊາ, ມ້າໝູນ, ເຄື່ອງຄ່າງ<br>2.2 ປະເພດວັດຖຸ: ໄມ້, ປລາສະຕິກ. ເຫຼັກ.<br>2.3 ຮູບຮ່າງ: ໜ່ວຍມົນ, ທໍ່, ສີ່ແຈ, ສາມແຈ.<br>2.4 ສີ: ແດງ, ເຫຼືອງ, ຟ້າ, ຂຽວ, ບົວ. |

| | | |
|---|---|---|
| | | 2.5 ຄຸນປະໂຫຍດ: ໃຊ້ໄວ້ຫຼິ້ນ, ເຝິກແອບຮ່າງກາຍ. ເຝິກການສຳຜັດ ແລະ ເຝິກການຄິດ. |
| | 3. ເຄື່ອງຂຽນ. | **3. ເຄື່ອງຂຽນ**<br>3.1 ຊື່ເຄື່ອງໃຊ້: ປື້ມ, ບິກ, ສໍດຳ, ສໍສີ, ຢາງລຶບ, ໄມ້ບັນທັດ.<br>3.2 ປະເພດ: ໄມ້, ປຼາສະຕິກ.<br>3.3 ຮູບຮ່າງ:ສາມແຈ, ສີ່ແຈ, ຈະຕຸລັດ, ສັ້ນ-ຍາວ.<br>3.4 ຄຸນປະໂຫຍດ: ໃຊ້ໄວ້ຂຽນໜັງສື, ແຕ້ມຮູບ, ທາສີຮູບ, ວັດແທກ. |
| | 4. ເຄື່ອງໃຊ້ໃນຫ້ອງຮຽນ. | **4. ເຄື່ອງໃຊ້ໃນຫ້ອງຮຽນ**<br>4.1 ຊື່ເຄື່ອງໃຊ້: ກະດານ, ໂຕະ, ຕັ່ງ, ຄຸນ້ຳ, ຈອກ, ຜ້າເຊັດມື.<br>4.2 ປະເພດ: ໄມ້, ປຼາສະຕິກ, ຝ້າຍ.<br>4.3 ຮູບຮ່າງ: ສີ່ລ່ຽມ, ສາມລ່ຽມ, ທໍ່ກົມ.<br>4.4 ຄຸນປະໂຫຍດ: ກະດານຂຽນ; ໂຕະຮອງຂຽນ, ຕັ່ງນັ່ງ, ຄຸໃສ່ນ້ຳ; ຜ້າເຊັດມື. |
| | 5. ເຄື່ອງນຸ່ງຫົ່ມ. | **5. ເຄື່ອງນຸ່ງຫົ່ມ**<br>5.1 ຊື່ເຄື່ອງນຸ່ງຫົ່ມ: ໂສ້ງ, ເສື້ອ, ສິ້ນ, ກະໂປ່ງ.<br>5.2 ປະເພດ: ຝ້າຍ, ໄໝ, ນິລົງ, ແລນ.<br>5.3 ລັກສະນະ: ໜາ-ບາງ; ແຂງ-ອ່ອນ.<br>5.4 ຄຸນປະໂຫຍດ: ໃຊ້ໄວ້ນຸ່ງຫົ່ມ. |
| 6. ເຄື່ອງທີ່ເຮັດດ້ວຍວັດຖຸແຂງ (ຕໍ່). | 6. ເຄື່ອງມືຊາວນາ. | **6. ເຄື່ອງມືຊາວນາ, ຊາວສວນ**<br>6.1 ຊື່ເຄື່ອງມືຊາວນາ, ຊາວສວນ: ໄຖ, ຄາດ, ກ່ຽວ, ຈົກ, ສຽມ, ບົວຫົດຜັກ, ພ້າ, ຊວ້ານ.<br>6.2 ປະເພດ: ໄມ້, ປຼາສະຕິກ, ເຫຼັກ.<br>6.3 ຮູບຮ່າງ: ສາມແຈ, ສີ່ແຈ, ທໍ່ກົມ.<br>6.4 ຄຸນປະໂຫຍດ: ໄຖໃຊ້ໄວ້ໄຖນາ; ຄາດໃຊ້ໄວ້ຄາດນາ; ກ່ຽວໃຊ້ໄວ້ກ່ຽວເຂົ້າ; ຈົກ, ສຽມໃຊ້ໄວ້ຂຸດດິນ; ຊວ້ານໃຊ້ໄວ້ຊວ້ານດິນ; ບົວໃຊ້ໄວ້ຫົດຜັກ; ພ້າໃຊ້ໄວ້ຖາງຫຍ້າ ແລະ ຟັນໄມ້. |

| | | |
|---|---|---|
| | 7. ເຄື່ອງມືສ້ອມແປງລົດ. | **7. ເຄື່ອງມືສ້ອມແປງລົດ.**<br>7.1 ຊື່ເຄື່ອງມື: ຄີມ, ເຫຼັກໄຂຄວງ (ໂຕລະບິດ), ກະແຈປາກ, ກະແຈບ້ອງ, ກະແຈເລື່ອນ.<br>7.2 ປະເພດ: ເຫຼັກ.<br>7.3 ຮູບຮ່າງ: ສາມແຈ, ສີ່ແຈ, ທໍ່ກົມ.<br>7.4 ຄຸນປະໂຫຍດ: ໃຊ້ໄວ້ສ້ອມແປງລົດ. |
| | 8. ເຄື່ອງມືກໍ່ສ້າງ | **8. ເຄື່ອງມືກໍ່ສ້າງ**<br>8.1 ຊື່ເຄື່ອງມືກໍ່ສ້າງ: ຄ້ອນຕີ, ເລື່ອຍ, ຊວ້ານ, ເຊືອກວັດ, ໄມ້ບັນທັດ, ໄມ້ສາມຫຼ່ຽມ, ມີປະທາຍ, ຄຸ.<br>8.2 ປະເພດ: ໄມ້, ເຫຼັກ ແລະ ປຼາສຕິກ.<br>8.3 ຮູບຮ່າງ: ສາມແຈ, ສີ່ແຈ, ທໍ່ກົມ.<br>8.4 ຄຸນປະໂຫຍດ: ຄ້ອນຕີໃຊ້ໄວ້ຕອກເຫຼັກຕາປູ; ເລື່ອຍໃຊ້ໄວ້ເລື່ອຍໄມ້; ຊວ້ານໃຊ້ໄວ້ຊວ້ານຊີມັງ; ໄມ້ບັນທັດໃຊ້ໄວ້ແທກລວງຍາວ, ໄມ້ສາມຫຼ່ຽມໃຊ້ໄວ້ປັດໜ້າພຽງ; ມີປະທາຍໃຊ້ໄວ້ຕັກຊີມັງເພື່ອກໍ່, |
| | 9. ເຄື່ອງມືແຕ່ງກິນ. | **9. ເຄື່ອງມືແຕ່ງກິນ**<br>9.1 ຊື່ເຄື່ອງມືແຕ່ງກິນ:ເຕົາໄຟ, ໝໍ້, ບ່ວງ, ຈອງ, ມີດ, ຂຽງ.<br>9.2 ປະເພດ: ເຫຼັກ, ໄມ້.<br>9.3 ຮູບຮ່າງ: ມົນ, ທໍ່ກົມ, ສີ່ແຈ.<br>9.4 ຄຸນປະໂຫຍດ: ໃຊ້ໄວ້ສໍາລັບແຕ່ງກິນ. |
| | 10. ເຄື່ອງມືເສີມສວຍ. | **10. ເຄື່ອງມືເສີມສວຍ**<br>10.1 ຊື່ເຄື່ອງມືເສີມສວຍ: ຫວີ, ແວ່ນ, ໄດເປົ່າຜົມ, ໄດລີດຜົມ, ມີດຕັດ, ມີດຕັດເລັບ, ຕຽງນອນສະຜົມ.<br>10.2 ປະເພດ: ເຫຼັກ, ແກ້ວ, ປຼາສຕິກ.<br>10.3 ຮູບຮ່າງ: ກົມ, ສີ່ແຈ.<br>10.4 ຄຸນປະໂຫຍດ: ໃຊ້ໄວ້ສໍາລັບເສີມສວຍ. |

| | | |
|---|---|---|
| 3 . ນໍ້າ | 11. ນໍ້າ ແລະ ນໍ້າມັນ. | **11. ນໍ້າ ແລະ ນໍ້າມັນ**<br>11.1 ນໍ້າ ແລະ ນໍ້າມັນ:<br>- ຊື່ນໍ້າ: ນໍ້ານົມ, ນໍ້າຝົນ, ນໍ້າດື່ມ, ນໍ້າໃຊ້,<br>- ຊື່ນໍ້າມັນ: ນໍ້າມັນພືດ, ນໍ້າມັນລົດ.<br>11.2 ລັກສະນະຂອງນໍ້າ ແລະ ນໍ້າມັນ:<br>- ລັກສະນະຂອງນໍ້າ: ບໍ່ມີສີ, ບໍ່ມີກິ່ນ ແລະ ບໍ່ມີລົດຊາດ.<br>- ລັກສະນະຂອງນໍ້າມັນ: ມີສີແດງ, ສີບົວ, ສີເຫຼືອງ, ມີກິ່ນຂີວ.<br>11.3 ຄຸນປະໂຫຍດຂອງນໍ້າ ແລະ ນໍ້າມັນ:<br>- ຄຸນປະໂຫຍດຂອງນໍ້າ: ເປັນບ່ອນອາໄສຂອງສັດນໍ້າ, ຄົນ, ສັດໃຊ້ໄວ້ດື່ມ, ອາບ, ລ້າງສິ່ງຂອງຕ່າງໆ, ໃຊ້ປຸງແຕ່ງອາຫານ, ພືດດູດນໍ້າລຽ້ງລໍາຕົ້ນ ແລະ ໃບ.<br>- ຄຸນປະໂຫຍດຂອງນໍ້າມັນ: ໃຊ້ໄວ້ໃສ່ລົດ ຫຼື ເຄື່ອງຈັກອື່ນໆ; ນໍ້າມັນພືດໃຊ້ໄວ້ປຸງແຕ່ງອາຫານ. |
| | 12. ການປ່ຽນແປງຂອງນໍ້າ. | **12. ການປ່ຽນແປງຂອງນໍ້າ**<br>12.1 ຮູບຮ່າງ: ພາຊະນະທີ່ບັນຈຸທີ່ມີຮູບ: ໝ່ວຍມົນ, ກ້ອນສີ່ແຈ, ກ້ອນສາມ ແຈ, ທໍ່ກົມ.<br>12.2 ສີ: ສີປ່ຽນແປງນໍ້າ ສີແດງ, ເຫຼືອງ, ຟ້າ, ຂຽວ, ບົວ, ດໍາ, ຂາວ.<br>12.2 ປະລິມານ: ໜ້ອຍ, ຫຼາຍ, ເທົ່າກັນ.<br>12.3 ພາວະຂອງນໍ້າ: ນໍ້າຮ້ອນ, ນໍ້າເຢັນ, ນໍ້າກ້ອນ. |
| | 13. ສິ່ງທີ່ລະລາຍຕົວ ແລະ ບໍ່ລະລາຍຕົວໃນນໍ້າ. | **13. ສິ່ງທີ່ລະລາຍຕົວ ແລະ ບໍ່ລະລາຍຕົວໃນນໍ້າ**<br>13.1 ສິ່ງທີ່ລະລາຍຕົວໃນນໍ້າ: ນໍ້າຕານ ແລະ ເກືອ (ເຝິກປະຕິບັດ).<br>13.2 ສິ່ງທີ່ບໍ່ລະລາຍຕົວໃນນໍ້າ: ແປ້ງ, ດິນຊາຍ, ນໍ້າມັນ (ເຝິກປະຕິບັດ).<br>13.3 ການປົກປັກຮັກສາ: ຮັກສານໍ້າບໍ່ໃຫ້ເນົ່າເໝັ່ນ, ບໍ່ຖິ້ມສິ່ງເປິເປື້ອນສິ່ງທີ່ບໍ່ລະລາຍຕົວລົງໃນແມ່ນໍ້າ. |
| | 14. ແສງ. | **14. ສິ່ງທີ່ມີແສງຢູ່ໃນຕົວ ແລະ ບໍ່ມີແສງຢູ່ໃນຕົວ**<br>14.1 ສິ່ງຕ່າງໆທີ່ມີແສງຢູ່ໃນຕົວ: ດວງອາທິດ; ດອກໄຟ, ໄຟສາຍ, ທຽນໄຂ ແລະ ຕະກຽງທີ່ໄດ້ໄຕ້ (ເຝິກປະຕິບັດ). |

| | | |
|---|---|---|
| | | 14.2 ສິ່ງຕ່າງໆທີ່ບໍ່ມີແສງໃນຕົວ: ເຄື່ອງນຸ່ງ, ໂຕະ, ຕັ່ງ, ພັດລົມ (ເຝິກປະຕິບັດ).<br>14.3 ຄຸນປະໂຫຍດຂອງແສງ: ໃຫ້ເຮົາເບິ່ງເຫັນສິ່ງຕ່າງໆ ແລະ ຫຼຸງຕົ້ມອາຫານ, ໃຫ້ແສງສະຫວ່າງ. |
| | 15. ສຽງ. | **15. ສຽງທຳມະຊາດ ແລະ ສຽງທີ່ຄົນສ້າງຂຶ້ນ**<br>15.1 ສຽງທຳມະຊາດ: ສຽງສັດຮ້ອງ, ຟ້າຮ້ອງ, ລົມພັດ ແລະ ສຽງນ້ຳຕົກຕາດ.<br>15.2 ສຽງທີ່ຄົນສ້າງຂຶ້ນ: ສຽງດົນຕີ, ສຽງຄົນຮ້ອງ ແລະ ສຽງລົດແລ່ນ.<br>15.3 ຄຸນປະໂຫຍດ: ໃຫ້ເຮົາໄດ້ຍິນສຽງ ດັງແຮງ, ຄ່ອຍ; ມ່ວນ ແລະ ບໍ່ມ່ວນ. |
| 4. ສີ. | 16. ສິ່ງທີ່ມີສີ ແລະ ບໍ່ມີສີ. | **16. ສິ່ງທີ່ມີສີ ແລະ ບໍ່ມີສີ**<br>16.1 ຊື່ສິ່ງທີ່ມີສີ: ຕົ້ນໄມ້, ດອກໄມ້, ເຄື່ອງນຸ່ງ. ອາຫານ, ລົດ, ກ້ອນຫີນ. ສັດ, ເຮືອນ, ຜົມ,<br>16.2 ຊື່ສິ່ງທີ່ບໍ່ມີສີ: ແກ້ວໃສ, ປລາສຕິກໃສ, ນ້ຳ, ອາກາດບໍລິສຸດ. |
| | 17. ສີທີ່ເຮົາເຫັນ. | **17. ສີທີ່ເຮົາເຫັນ**<br>17.1 ສີທຳມະຊາດ: ສີທີ່ໄດ້ຈາກດອກໄມ້, ໝາກໄມ້, ໃບໄມ້, ກ້ອນຫີນ, ຂົນສັດ, ຜົມ<br>17.2 ສີປຸງແຕ່ງ: ສີທຳມະຊາດປະສົມເຄມີສີທີ່ໃຊ້ (ຍອມສີເຄື່ອງນຸ່ງ, ພົ່ນສີລົດ, ທາສີເຮືອນ), |
| | 18. ການປ່ຽນແປງຂອງສີ. | **18. ການປ່ຽນແປງຂອງສີ**<br>18.1 ສີພື້ນຖານ: ແດງ, ເຫຼືອງ, ຟ້າ, ດຳ, ຂາວ.<br>18.2 ສີປະສົມ: ແດງກັບເຫຼືອງ (ນ້ຳໝາກກ້ຽງ), ຟ້າກັບເຫຼືອງ(ຂຽວ), ແດງກັບຟ້າ(ບົວ), ສີຈາງ(ສີຂາວ), ສີເຂັ້ມ(ດຳ). |
| | 19. ສີອາຫານ. | **19. ສີອາຫານ**<br>19.1 ໃບໄມ້: ສີໃບເຕີຍ(ສີຂຽວ), ໃບຕອງ(ສີຂຽວ), ໃບຜັກ(ສີຂຽວ).<br>19.2 ໝາກໄມ້: ໝາກເລັ່ນ(ສີແດງ), ກ້ຽງ(ເຫຼືອງ), ສີຂີ້ໝີ້ນ(ສີເຫຼືອງ), ສີໝາກຕູມ(ສີແດງ)<br>19.3 ດອກໄມ້: ດອກອັນຊັນ(ມ່ວງ), ດອກກະຈຽບ ຫຼື ໝາກສົມພໍດີ(ສີແດງ) |
| | 20. ສີເຄື່ອງດື່ມ. | **20. ສີເຄື່ອງດື່ມ**<br>20.1 ນົມ: ນົມງົວ, ແບ້(ສີຂາວ)<br>20.2 ນ້ຳ: ນ້ຳບໍລິສຸດ (ບໍ່ມີສີ), ນ້ຳຫວານ (ມີສີແດງ, ຂຽວ, ມ່ວງ, ບົວ, ນ້ຳໝາກກ້ຽງ). |

## ຕາຕະລາງທີ 2. ວິເຄາະເນື້ອໃນຄວາມຮູ້ທາງດ້ານພາສາລາວ

1. **ທັກສະການຟັງ**

| ໜ່ວຍການສອນ | ທັກສະ | ຫົວຂໍ້ |
|---|---|---|
| 1. ຕົວຂອງຂ້ອຍ | 1. ຟັງ ແລະ ຮ້ອງເພງ | ຫູຂອງຫຼານ, ຮ່າງກາຍຂອງຂ້ອຍ, ຂາຂອງຂ້ອຍ, ອາຫານດີມີປະໂຫຍດ |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ໃບໜ້າສະອາດ, ຮັກສາຕາ, ດັງສະອາດ, ປາກສະອາດ |
| | 3. ຟັງນິທານ ແລະ ຕອບຄຳຖາມ | ມືວິເສດ, ເກີບຄູ່ໃໝ່, ທ້າວພີນ້ອຍແຂງແຮງ |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ ×ະ ×າ |
| 2. ຄອບຄົວຂອງຂ້ອຍ | 1. ຟັງ ແລະ ຮ້ອງເພງ | ຄອບຄົວຂອງຂ້ອຍ, ປະຢັດ, ເຮືອນສະອາດ, |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ຊ່ວຍເຫຼືອກັນ, ເດັກດີ, ເຮືອນນ້ອຍຫຼັງງາມ, ຫ້ອງຮັບແຂກ |
| | 3. ຟັງນິທານ ແລະ ຕອບຄຳຖາມ | ຄອບຄົວອົບອຸ່ນ, ນາງພອຍໄປວັດ, ຄອບຄົວກະຕ່າຍ, ຖ່າຍຖືກບ່ອນ. |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ ×ິ ×ີ |
| 3. ໂຮງຮຽນຂອງຂ້ອຍ | 1. ຟັງ ແລະ ຮ້ອງເພງ | ໄປໂຮງຮຽນໃຫ້ທັນເວລາ, ຫ້ອງອ່ານ, ຫຼິ້ນນ້ຳຫຼິ້ນຊາຍ |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ມາລະຍາດດີ, ສວນດອກໄມ້, ຫຼິ້ນ ແລະ ນອນຖືກເວລາ, ຫ້ອງພາຍໃນເຮືອນ ຫ້ອງອາຫານສະອາດ, ເດີ່ນໂຮງຮຽນ. |
| | 3. ຟັງນິທານ ແລະ ຕອບຄຳຖາມ | ແມ່ລ້ຽງໃຈດີ, ສອງສ່ຽວ, ໝີດຳ ແລະ ກະຕ່າຍດຸໝັ່ນ, ເປັດຂີ້ດື້ |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ ×ຶ ×ື |
| 4. ບ້ານຂອງຂ້ອຍ | 1. ຟັງ ແລະ ຮ້ອງເພງ | ບ້ານຂອງຂ້ອຍ, ຈຳປາເມືອງລາວ, ສຽງດົນຕີ. ອັບຫຸ້ມ(ຮ້ານຄ້າບ້ານ) |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ໂຮງຮຽນ ແລະ ສຸກສາລາ, ຫັດຖະກຳ, ບຸນເຂົ້າພັນສາ ແລະ ອອກພັນສາ, |
| | 3. ຟັງນິທານ ແລະ ຕອບຄຳຖາມ | ໜ້າທີ່ຂອງໃຜ, ສອງສ່ຽວເວນຍາມ, ບຸນປີໃໝ່ |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ ×ະ ×າ ×ິ ×ີ |

| | | |
|---|---|---|
| 5. ທຳມະຊາດອ້ອມຕົວເຮົາ | 1. ຟັງ ແລະ ຮ້ອງເພງ | ສິ່ງທີ່ມີຊີວິດ, ວັນໃນໜຶ່ງອາທິດ, ລຳເດີນ(ດິນດີ), ລຳສີພັນດອນ(ນໍ້າ) |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ຕົ້ນຖົ່ວ ແລະ ຜັກບົ້ງ, ອາຫານຂອງໃຜ, ດິນຫີນນໍ້າ, ກາງຄືນ. ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ, ລັກສະນະອາກາດ, ລະດູແລ້ງ. |
| | 3. ຟັງນິທານ ແລະ ຕອບຄຳຖາມ | ສິ່ງທີ່ຂ້ອຍຕ້ອງການ, ຂ້ອຍແມ່ນໃຜ, ຂ້ອຍຈະເຮັດຫຍັງບໍ, ຂ້ອຍເກີດຈາກໃສ. |
| | 5. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ  xຸ xູ |
| 6. ສິ່ງແວດລ້ອມອ້ອມຕົວເຮົາ | 1. ຟັງ ແລະ ຮ້ອງເພງ | ຜັກກາດຜັກຫົ່ມ, ຮັກສາສິ່ງແວດລ້ອມ, ທາດຫຼວງວຽງຈັນ, ທາດອີຮັງ |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ນົກແກ້ວ, ອາກາດດີ, ຖໍ້າ, ນໍ້າຕົກຕາດ, ບຸນວັດພູຈຳປາສັກ. |
| | 3. ຟັງນິທານ ແລະ ຕອບຄຳຖາມ | ສອງສ່ຽວ, ປານ້ອຍຂີ້ດື້, ແມງກະເບື້ອຊົມດອກໄມ້ |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ ເx ແx |
| 7. ການຄົມມະນາຄົມ ແລະ ການສື່ສານ | 1. ຟັງ ແລະ ຮ້ອງເພງ | ຂ້ອຍຂີ່ເຮືອ, ລຳຕັ່ງຫວາຍ(ການຄົມມະນາຄົມ), |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ລົດຖີບ, ເຮືອບິນໃຫຍ່, ເຮືອ, ເວົ້າດີ. |
| | 3. ຟັງນິທານ ແລະ ຕອບຄຳຖາມ | ນາງມາລີໄປທ່ຽວ, ນົກເຫຼັກ, ຫູທິບຕາທິບ, ຈົດໝາຍນ້ອຍເຖິງແມ່, ນົກນ້ອຍຮ້ອງເພງ. |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ  xຸ xູ ເx ແx |
| 8. ສິ່ງຕ່າງໆອ້ອມຕົວເຮົາ | 1. ຟັງ ແລະ ຮ້ອງເພງ | ເຄື່ອງນຸ່ງຫົ່ມ, ອາກາດ, ລຳເຕີ້ຍ(ເຄື່ອງຮຽນ) |
| | 2. ຟັງ ແລະ ເລົ່າຄຳຄ່ອງ | ວັດຖຸແຂງ, ປະໂຫຍດຂອງນໍ້າ, ສຽງຫຍັງນໍ. |
| | 3. ຟັງນິທານ ແລະ ຕອບຄຳຖາມ | ເຄື່ອງມືເອື້ອຍລ້ຽງ, ຕະກຽງນ້ອຍກັບດວງອາທິດ, ປ່າໄມ້ແສນງາມ. |
| | 4. ຟັງສຽງສະຫຼະທີ່ຄືກັນ ແລະ ຕ່າງກັນ | ສະຫຼະ xະ xາ xິ xີ xຶ xື xຸ xູ ເx ແx |

## 2. ທັກສະການການເວົ້າ

| ໜ່ວຍການສອນ | ທັກສະ | ຫົວຂໍ້ |
|---|---|---|
| 1. ຕົວຂອງຂ້ອຍ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຊື່ ແລະ ນາມສະກຸນ, ຄຳແທນນາມ (ຂ້ອຍ, ເຈົ້າ, ລາວ), ຄຳບອກເພດ (ທ້າວ,ນາງ), ຄຳບອກຮູບຮ່າງ (ຕ່ຳ-ສູງ,ຕຸ້ຍ-ຈ່ອຍ)<br>2. ຄຳສັບກ່ຽວກັບສ່ວນປະກອບຂອງຫົວ: ໃບໜ້າ ແລະ ຜົມ<br>- ໃບໜ້າ: ຕາ(ໜ່ວຍຕາ, ຂົນຕາ), ຫູ(ໃບຫູ, ຮູຫູ); ປາກ(ຮີມປາກ, ແຂ້ວ, ລີ້ນ); ດັງ(ໂລງດັງ, ຮູດັງ), ໜ້າຜາກ, ຄີ້ວ, ແກ້ມ, ຄາງ, ຄໍ.<br>- ຜົມ: ຜົມກູດ, ຊື່. ສັ້ນ, ຍາວ, ດຳ, ຂາວ.<br>3. ຄຳສັບກ່ຽວກັບສ່ວນປະກອບຂອງເລົ່າຄີງ: ບ່າໄຫຼ່, ໜ້າເອິກ,ນົມ, ທ້ອງ, ແອວ, ກະໂພກ<br>4. ຄຳສັບກ່ຽວກັບສ່ວນປະກອບຂອງແຂນ ແລະ ຂາ:<br>- ແຂນ: ກົກແຂນ, ແຂນສອກ, ຄໍ່ມື, ມື(ຝ່າມື, ຫຼັງມື, ນິ້ວມື, ຂໍ້ມື, ເລັບມື), ນິ້ວມື (ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ)<br>- ຂາ: ກົກຂາ, ຫົວເຂົ່າ, ແຄ່ງ, ຄໍ່ຕີນ, ຕີນ( ຝ່າຕີນ, ຫຼັງຕີນ, ນິ້ວຕີນ, ຂໍ້ຕີນ, ເລັບຕີນ ), ນິ້ວຕີນ(ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ) |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່, ນາມສະກຸນ, ເພດ, ຮູບຮ່າງຂອງຕົນເອງ ແລະ ໝູ່ເພື່ອນ.<br>- ຊື່, ຄຸນປະໂຫຍດ ແລະ ການບົວລະບັດຮັກສາອະໄວຍະວະໃນຮ່າງກາຍ.<br>- ຊື່ ແລະ ຄຸນປະໂຫຍດຂອງອາຫານສາມໝວດ: ພະລັງງານໃນການເຄື່ອນໄຫວ, ຮ່າງກາຍເຕີບໃຫຍ່, ຮ່າງກາຍແຂງແຮງ.<br>2. ນຳໃຊ້ຄຳສັບທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ: |

| | | |
|---|---|---|
| | | - ການຮັກສາສຸກຂະພາບທີ່ດີ: ການຫັດກາຍບໍລິຫານ, ການພັກຜ່ອນ, ຄວາມປອດໄພໃນການຫຼິ້ນ.<br>- ການສຳຜັດໂດຍໃຊ້ສ່ວນຕ່າງໆຂອງຮ່າງກາຍ: ຫູ, ຕາ, ດັງ, ປາກ, ມື.<br>- ການສະແດງອາລົມທາງສີໜ້າ: ຍິ້ມ, ຫົວ, ຮ້າຍ |
| 2.ຄອບຄົວຂອງຂ້ອຍ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຄອບຄົວ ແລະ ຍາດພີ່ນ້ອງ:<br>- ສະມາຊິກໃນຄອບຄົວລວມເອົາອ້າຍເອື້ອຍນ້ອງທີ່ເກີດຈາກພໍ່ແມ່ດຽວກັນ: ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ.<br>- ຍາດພີ່ນ້ອງຂອງແມ່: ພໍ່ເຖົ້າ, ແມ່ເຖົ້າ, ປ້າ, ລຸງ, ນ້າບ່າວ, ນ້າສາວ.<br>- ຍາດພີ່ນ້ອງຂອງພໍ່: ພໍ່ປູ່, ແມ່ຍ່າ, ປ້າ, ລຸງ, ອາວ, ອາ.<br>2. ຄຳສັບກ່ຽວກັບການສະແດງຄວາມຮັກຄວາມອົບອຸ່ນທາງວາຈາ ແລະ ລະບຽບວິໄນ:<br>- ຄວາມຮັກຄວາມອົບອຸ່ນທາງວາຈາ: ດີຫຼາຍ, ຄຳຮູ້, ຊົມເຊີຍ, ເກັ່ງຫຼາຍ.<br>- ລະບຽບວິໄນ: ສະບາຍດີ, ຂອບໃຈ. ຂໍອະນຸຍາດ<br>3. ຄຳສັບກ່ຽວກັບຊື່ເຄື່ອງນຸ່ງ, ເຄື່ອງຮຽນ, ເຄື່ອງຫຼິ້ນ<br>- ເຄື່ອງນຸ່ງ: ໂສ້ງ, ເສື້ອ, ສິ້ນ, ກະໂປງ.<br>- ເຄື່ອງຮຽນ: ສໍດຳ, ສໍສີ, ໄມ້ບັນທັດ, ປຶ້ມບົດເຝິກຫັດ, ປຶ້ມນິທານ<br>- ເຄື່ອງຫຼິ້ນ: ຊຸດບລັອກ, ຊຸດຕໍ່ຮູບ, ຊຸດເຄື່ອງຄົວກິນ, ຊຸດເຄື່ອງດົນຕີ, ຊຸດເຄື່ອງແຕ່ງຕົວ, ຊຸດເຄື່ອງນຸ່ງ (ນາຍແພດ, ນາຍຄູ, ກຳມະກອນ).<br>4. ຄຳສັບກ່ຽວກັບປະເພດ, ສ່ວນປະກອບ, ວັດສະດຸທີ່ນຳໃຊ້ປຸກສ້າງເຮືອນ.<br>- ສ່ວນປະກອບຂອງເຮືອນ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ.<br>- ວັດສະດຸທີ່ໃຊ້ເຮັດເຮືອນ:ໄມ້,ເຫຼັກ,ແກ້ວ,ຫີນ,ຊາຍ,ດິນຈີ່, ຫຍ້າຄາ. ສັງກະສີ, ກະເບື້ອງ. |

| | | |
|---|---|---|
| | | 5. ຄຳສັບກ່ຽວກັບເຄື່ອງໃຊ້ພາຍໃນເຮືອນ.<br>- ເຄື່ອງໃຊ້ໃນຫ້ອງນອນ: ຕຽງ, ຕູ້, ສາດ, ເສື່ອ, ຜ້າກັ້ງ, ຜ້າປູບ່ອນ, ຜ້າຫົ່ມ, ໝອນ, ມຸ້ງ.<br>- ເຄື່ອງໃຊ້ໃນຫ້ອງຮັບແຂກ: ຕູ້ໂຊ, ໂຕະ, ຕັ່ງ( ຕັ່ງໄມ້, ຕັ່ງນວມ) ເຕົ້າດອກໄມ້, ໂທລະພາບ,<br>- ເຄື່ອງໃຊ້ໃນຫ້ອງແຕ່ງກິນ: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້(ໝໍ້ຕົ້ມ, ໝໍ້ຈືນ, ໝໍ້ໜຶ້ງ), ຫວດ, ພາ(ພາເຂົ້າ, ພາດຖາດ), ຊາມ, ອ່າງລ້າງຖ້ວຍ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ(ມີດຊອຍ, ມີດຕັດ, ມີດສັບ).<br>- ເຄື່ອງໃຊ້ໃນຫ້ອງອາບນ້ຳ ແລະ ວິດຖ່າຍ: ອ່າງ(ລ້າງໜ້າ, ອາບນ້ຳ), ໄຫ, ຄຸ, ໂອ, ຊາມ, ສະບູ, ຢາສະຜົມ, ຟອຍຖູແຂ້ວ, ຢາຖູແຂ້ວ<br>6. ຄຳສັບກ່ຽວກັບເຄື່ອງໃຊ້ທຳຄວາມສະອາດເຮືອນ: ຟອຍ(ກວາດພື້ນ, ປັດໃຍແມງມຸມ, ປັດເດີ່ນ), ຊວ້ານອີ່ເຫຍື່ອ, ກະຕ່າອີ້ເຫຍື່ອ, ຄຸນ້ຳ, ຜ້າຖູພື້ນ, ຜ້າເຊັດ, ໄມ້ຖູພື້ນ, ນ້ຳຢາ(ຖູພື້ນ, ເຊັດແກ້ວ). |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່ ແລະ ໜ້າທີ່ຂອງພໍ່, ແມ່, ເອື້ອຍ, ອ້າຍ, ນ້ອງ, ຕົນເອງ ແລະ ບຸກຄົນອື່ນໆ ໃນຄອບຄົວ.<br>- ການຊ່ວຍວຽກໃນຄອບຄົວຕົນເອງ: ແຕ່ງກິນ, ອານາໄມເຮືອນ, ເຄື່ອງນຸ່ງ, ບົວລະບັດ ຕົ້ນໄມ້, ສັດລ້ຽງ.<br>- ສາຍກ່ຽວພັນຍາດພີ່ນ້ອງຂອງແມ່ ແລະ ພໍ່.<br>- ຊື່, ຄຸນປະໂຫຍດ, ການຮັກສາຄວາມສະອາດເຄື່ອງໃຊ້ ແລະ ຫ້ອງຕ່າງໆ ພາຍໃນເຮືອນ.<br>2. ນຳໃຊ້ຄຳສັບທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ມາລະຍາດ: ການກິນ, ດື່ມ, ຍ່າງ, ນັ່ງ, ນອນ, ນົບ. |

| | | |
|---|---|---|
| | | - ການນຳໃຊ້ຄຳສັບຂໍອະນຸຍາດ ແລະ ການຕອບຮັບເວລາໄດ້ຮັບສິ່ງຂອງຕ່າງໆ.<br>- ການປະຢັດເຄື່ອງຮຽນ, ເຄື່ອງໃຊ້, ເຄື່ອງຫຼິ້ນ, ນ້ຳ ແລະ ໄຟ. |
| 3. ໂຮງຮຽນຂອງຂ້ອຍ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຊື່, ຊັ້ນຮຽນ, ຫ້ອງຕ່າງໆໃນໂຮງຮຽນ:<br>- ຊື່ໂຮງຮຽນຕົນເອງ, ຊັ້ນຮຽນ, ຫ້ອງຮຽນ, ຫ້ອງການ, ຫ້ອງອາຫານ, ຫ້ອງຄົວກິນ, ຫ້ອງນ້ຳ, ມູມຫຼິ້ນ, ເດີ່ນຫຼິ້ນ.<br>2. ຄຳສັບກ່ຽວກັບເຄື່ອງໃຊ້ພາຍໃນຫ້ອງຕ່າງໆ:<br>- ເຄື່ອງໃຊ້ໃນຫ້ອງຮຽນ (ໂຕະ, ຕັ່ງ, ຕູ້, ກະດານ, ສໍຂາວ, ປຶ້ມຂຽນ, ປຶ້ມບົດເຝິກຫັດ, ປຶ້ມ ນິທານ, ສໍດຳ, ສໍສີ, ໄມ້ບລັອກ, ມຸມຮຽນຮູ້),<br>- ເຄື່ອງໃຊ້ໃນຫ້ອງອາຫານ (ຖ້ວຍ, ຈານ, ບ່ວງ, ສ້ອມ, ຈອກ, ຕຸກນ້ຳດື່ມ),<br>- ເຄື່ອງໃນຫ້ອງນ້ຳ (ຄຸ, ໂອ, ສະບູ, ຢາຖູແຂ້ວ, ຟອຍຖູແຂ້ວ),<br>- ເຄື່ອງໃຊ້ໃນເດີ່ນໂຮງຮຽນ (ຫຼັກທຸງ, ທຸງຊາດລາວ, ເດີ່ນຫຼິ້ນ, ຮົ້ວ, ກະໂຖດອກໄມ້, ສວນດອກໄມ້, ຕົ້ນໄມ້, ເວທີການສະແດງ, ລະບຽງ).<br>- ເຄື່ອງຫຼິ້ນໃນເດີ່ນ (ມ້າໝູນ, ຮາວໂຫນ, ຕໍ່ຕ່າງລະດັບ, ຂອນໄມ້).<br>2. ຄຳສັບກ່ຽວກັບຊື່ໝູ່ເພື່ອນ, ຄູປະຈຳຫ້ອງ, ຜູ້ອຳນວຍການ ແລະ ພະນັກງານໃນໂຮງຮຽນຕົນເອງ. |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່ໂຮງຮຽນ, ຊັ້ນຮຽນ ແລະ ຫ້ອງຮຽນຂອງຕົນເອງ.<br>- ຊື່ໝູ່ເພື່ອນໃນຫ້ອງຮຽນຕົນເອງ.<br>- ຊື່ ແລະ ໜ້າທີ່ຄູປະຈຳຫ້ອງ, ຄູຫ້ອງຂ້າງຄຽງ, ຜູ້ອຳນວຍການ.<br>- ຊື່, ຄຸນປະໂຫຍດ ແລະ ການບົວລະບັດຮັກສາເຄື່ອງຮຽນ, ມູມຮຽນຮູ້, ເຄື່ອງຫຼິ້ນໃນເດີນ ແລະ ຫ້ອງຕ່າງໆພາຍໃນໂຮງຮຽນຕົນເອງ.<br>2. ນຳໃຊ້ຄຳສັບທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ການແຕ່ງຕົວ ແລະ ນຳໃຊ້ເຄື່ອງຮຽນປະຈຳວັນ. |

| | | |
|---|---|---|
| | | - ການປະຕິບັດລະບຽບ, ເວລາເຄື່ອນໄຫວກິດຈະກຳ, ການເອົ້າ ແລະ ເລີກຮຽນ.<br>- ເຄົາລົບທຸງຊາດ, ຮ້ອງເພງຊາດຕາມເນື້ອໃນບົດເພງ ແລະ ບອກສີທຸງຊາດລາວ.<br>- ການເຂົ້າຮ່ວມກິດຈະກຳຂອງໂຮງຮຽນ: ການແຂ່ງຂັນພາຍໃນ ແລະ ນອກໂຮງຮຽນ |
| 4.ບ້ານຂອງຂ້ອຍ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຊື່ສະຖານທີ່ ແລະ ບຸກຄົນພາຍໃນບ້ານ:<br>- ຫ້ອງການບ້ານ: ນາຍບ້ານ, ຮອງນາຍບ້ານ, ອົງການຈັດຕັ້ງສະຫະພັນແມ່ຍິງ, ຊາວໜຸ່ມປະຊາຊົນປະຕິວັດລາວ, ກອງຫຼອນ, ແນວໂຮມ.<br>- ວັດ: ຄູບາ, ຈົວ, ແມ່ຂາວ, ສັງກະລີ, ແມ່ອອກ, ພໍ່ອອກ<br>2. ຄຳສັບກ່ຽວກັບຊື່ສະຖານທີ່ທ່ອງທ່ຽວພາຍໃນເມືອງ, ແຂວງທີ່ຕົນອາໃສຢູ່.<br>3. ຄຳສັບກ່ຽວກັບຊື່ເຄື່ອງດົນຕີ, ແບບຫຼິ້ນ, ຂັບລຳ,ເພງ,ຟ້ອນ, ຫັດຖະກຳພື້ນເມືອງປະຈຳທ້ອງຖິ່ນ ແລະ ປະຈຳຊາດ.<br>4. ຄຳສັບກ່ຽວກັບຊື່ວັນບຸນສຳຄັນຂອງທ້ອງຖິ່ນ ແລະ ປະຈຳຊາດ. |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່ບ້ານ, ເມືອງ, ແຂວງ ແລະ ເລກທີເຮືອນທີ່ຕົນອາໄສຢູ່.<br>- ທີ່ຕັ້ງຂອງບ້ານຕົນເອງ ແລະ ບ້ານໃກ້ຄຽງ.<br>- ຊື່ ແລະ ໜ້າທີ່ຂອງບຸກຄົນໃນຫ້ອງການປົກຄອງບ້ານ.<br>- ຊື່ເຕັມ ແລະ ຫຍໍ້ຂອງປະເທດ. ຊື່ບັນດາແຂວງໃນປະເທດລາວ.<br>- ຊື່ປະເທດ, ສັນຍະລັກທຸງຊາດບັນດາປະເທດໃນອາຊຽນ.<br>- ຊື່, ສັນຍາລັກເຄື່ອງແບບ, ໜ້າທີ່ວຽກງານ ແລະ ຄວາມສຳຄັນຂອງອາຊີບຕ່າງໆ ທີ່ມີໃນບ້ານຕົນເອງ.<br>- ຊື່ ແລະ ການປະຕິບັດຕົນຕໍ່ສະຖານທີ່ສຳຄັນທີ່ມີໃນບ້ານຕົນເອງ. |

| | | |
|---|---|---|
| | | 2. ນຳໃຊ້ຄຳສັບທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ຮ້ອງເພງ, ອັບ, ລຳ ແລະ ຟ້ອນຕາມເນື້ອໃນທີ່ມີໃນທ້ອງຖິ່ນ ແລະ ປະຈຳຊາດ,<br>- ເລົ່າເລື່ອງພິທີສະເຫຼີມສະຫຼອງວັນບຸນສຳຄັນຂອງທ້ອງຖິ່ນຕົນເອງ.<br>- ເລົ່າເລື່ອງພິທີສະເຫຼີມສະຫຼອງວັນບຸນສຳຄັນປະຈຳຊາດ. |
| 5. ທຳມະຊາດອ້ອມຕົວເຮົາ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຊື່ ແລະ ສິ່ງທີ່ຈຳເປັນຕໍ່ສິ່ງທີ່ມີຊີວິດ: ຄົນ, ສັດ, ພືດ.<br>2. ຄຳສັບກ່ຽວກັບຊື່, ປະເພດ, ລັກສະນະ, ການປ່ຽນແປງ ແລະ ຄຸນປະໂຫຍດຂອງສິ່ງບໍ່ມີຊີວິດ: ດິນ, ຫີນ, ນ້ຳ.<br>3. ຄຳສັບກ່ຽວກັບ ຊື່ວັນໃນໜຶ່ງອາທິດ, ເດືອນໃນໜຶ່ງປີ.<br>4. ຄຳສັບກ່ຽວກັບຊື່ລະດູການໃນປະເທດລາວ |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ການເຕີບໃຫຍ່ຂອງຄົນ, ສັດ, ພືດໃນແຕ່ລະໄລຍະ.<br>- ການເພິ່ງພາອາໄສເຊິ່ງກັນ ແລະ ກັນລະຫວ່າງຄົນ, ສັດ, ພືດ.<br>- ລະດູການໃນປະເທດລາວ, ຄຸນປະໂຫຍດ, ຜົນສະທ້ອນຕໍ່ຄົນ, ສັດ, ພືດ.<br>2. ນຳໃຊ້ຄຳສັບທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ການປະຕິບັດຕົນໃນເວລາຊ່ວງເວລາເຊົ້າ, ສວຍ, ແລງ.<br>- ກິດຈະກຳທີ່ເຮັດໃນມື້ນີ້, ມື້ວານ, ມື້ອື່ນ.<br>- ການປະຕິບັດຕົນໃນແຕ່ລະດູການ. |
| 6. ສິ່ງແວດລ້ອມອ້ອມຕົວເຮົາ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຊື່ສັດບົກປະເພດສັດໃຫຍ່, ສັດນ້ອຍ, ສັດນ້ຳ. ສັດປີກ, ສັດເລືອຄານ.<br>2. ຄຳສັບກ່ຽວກັບຊື່ພືດທີ່ໃຫ້ດອກ, ໃບ, ໝາກ,<br>3. ຄຳສັບກ່ຽວກັບຊື່ສິ່ງແວດລ້ອມທີ່ເກີດຕາມທຳມະຊາດ: ພູຜາ, ປ່າໄມ້, ບໍ່ແຮ່, ແມ່ນ້ຳ, ຖ້ຳ. |

59

| | | |
|---|---|---|
| | | 4. ຄຳສັບກ່ຽວກັບຊື່ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ: ວັດ, ທາດ, ເຮືອນ, ໂຮງແຮມ, ຮ້ານຄ້າ, ໂຮງໝໍ. ໂຮງຮຽນ, ສ່ວນສັດ. ປະຕູໄຊ. |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່, ລັກສະນະ, ທີ່ຢູ່ອາໄສ, ອາຫານ, ຄຸນປະໂຫຍດ ແລະ ການລ້ຽງດູສັດ: ສັດໃຫຍ່, ສັດນ້ອຍ, ສັດນໍ້າ. ສັດປີກ, ສັດເລືອຄານ.<br>- ຊື່, ລັກສະນະ,ຄວາມແຕກຕ່າງ,ການບົວລະບັດຮັກສາພືດປະເພດກິນ: ໃບ, ດອກ, ໝາກ,<br>- ຊື່, ຄວາມສຳຄັນ, ສັນຍະລັກຂອງສະຖານທີ່ສຳຄັນທາງທຳມະຊາດ ແລະ ຄົນສ້າງຂຶ້ນ.<br>- ລັກສະນະ, ຄວາມສຳຄັນຂອງອາກາດຕໍ່ຄົນ, ສັດ ແລະ ພືດ.<br>2. ນຳໃຊ້ຄຳສັບທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ການປົກປັກຮັກສາ ແລະ ການປະຕິບັດຕົນເວລາໄປທ່ຽວຊົມເບິ່ງສະຖານທີ່ສຳຄັນທາງທຳມະຊາດ.<br>- ການປົກປັກຮັກສາ ແລະ ການປະຕິບັດຕົນເວລາເບິ່ງສະຖານທີ່ສຳຄັນທີ່ຄົນສ້າງຂຶ້ນ. |
| 7. ການຄົມມະນາຄົມ ແລະ ການສື່ສານ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບການຈາລະຈອນຍ່າງຖືກທາງ, ຍ່າງຂ້າມທາງ. ໄຟອຳນາດ.<br>2. ຄຳສັບກ່ຽວກັບຊື່ພາຫະນະທີ່ໃຊ້ເດີນທາງທາງບົກ: ລົດຖີບ, ສາມລໍ້, ລົດຈັກ, ລົດໃຫຍ່.<br>3. ຄຳສັບກ່ຽວກັບຊື່ພາຫະນະທີ່ໃຊ້ເດີນທາງນໍ້າ: ເຮືອ. ເຮືອພາຍ, ເຮືອຈັກ.<br>4. ຄຳສັບກ່ຽວກັບຊື່ພາຫະນະທີ່ໃຊ້ເດີນທາງອາກາດ: ເຮືອບິນ. ເຮລິຄອບແຕ, ໂບອິງ, ອາເຕແອ, ແອບັດ. |

| | | |
|---|---|---|
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່, ຮູບຮ່າງລັກສະນະ, ສຽງ, ສີຂອງລົດຊະນິດຕ່າງໆ.<br>- ຊື່, ຮູບຮ່າງລັກສະນະ, ສຽງ, ສີຂອງເຮືອຊະນິດຕ່າງໆ.<br>- ຊື່, ຮູບຮ່າງລັກສະນະ, ສຽງ, ສີຂອງເຮືອບິນຊະນິດຕ່າງໆ.<br>2. ນຳໃຊ້ປະໂຫຍກຄຳເວົ້າທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ການເດີນທາງລົດຖືກວິທີ ແລະ ມາລະຍາດໃນການນັ່ງລົດ.<br>- ການເດີນທາງເຮືອຖືກວິທີ ແລະ ມາລະຍາດໃນການນັ່ງເຮືອ.<br>- ການເດີນທາງເຮືອບິນຖືກວິທີ ແລະ ມາລະຍາດໃນການນັ່ງເຮືອບິນ. |
| | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບຊື່ເຄື່ອງມືທີ່ໃຊ້ໃນການສື່ສານທາງດຽວ: ວິທະຍຸ, ໂທລະພາບ, ໂທລະໂຄ່ງ, ຈົດໝາຍ, ໜັງສືພິມ,<br>2. ຄຳສັບກ່ຽວກັບຊື່ເຄື່ອງມືການສື່ສານສອງທາງ: ການເວົ້າລົມສົນທະນາ, ການລົມ ແລະ ສົ່ງຂໍ້ຄວາມທາງໂທລະສັບ, ທາງຄອມພິວເຕີ (ອິນເຕີເນດ) |
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່, ຮູບຮ່າງລັກສະນະ, ສີ, ປະໂຫຍດຂອງເຄື່ອງມືການສື່ສານທາງດຽວ: ວິທະຍຸ, ໂທລະພາບ, ໂທລະໂຄ່ງ, ໜັງສືພິມ,<br>- ຊື່, ຮູບຮ່າງລັກສະນະ, ສີ, ປະໂຫຍດຂອງເຄື່ອງມືການສື່ສານສອງທາງ: ໂທລະສັບ, ຄອມພິວເຕີ. ຈົດໝາຍ.<br>2. ນຳໃຊ້ປະໂຫຍກຄຳເວົ້າທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ເຄື່ອງມືການສື່ສານ ແລະ ມາລະຍາດໃນການສື່ສານທາງດຽວ: ຟັງວິທະຍຸ, ເບິ່ງໂທລະພາບ, ຟັງໂທລະໂຄ່ງ, ອ່ານໜັງສືພິມ.<br>- ເຄື່ອງມືການສື່ສານ ແລະ ມາລະຍາດໃນການສື່ສານສອງທາງ: ເວົ້າລົມສົນທະນາ, ຂຽນ ແລະ ອ່ານຈົດໝາຍ,ສົ່ງຂໍ້ຄວາມທາງໂທລະສັບ, ທາງຄອມພິວເຕີ (ອິນເຕີເນດ). |

| | | |
|---|---|---|
| 8. ສິ່ງຕ່າງໆອ້ອມຕົວເຮົາ. | ເວົ້າເປັນຄຳສັບ. | 1. ຄຳສັບກ່ຽວກັບສິ່ງທີ່ເຮັດດ້ວຍວັດຖຸແຂງ:<br>- ວັດຖຸແຂງທີ່ໃຊ້ເຮັດເຄື່ອງຕ່າງໆ: ເຫຼັກ, ໄມ້, ປຼາສະຕິກ, ແກ້ວ, ຫີນ, ໜັງ, ຝ້າຍ, ໄໝ, ຂົນສັດ.<br>- ເຄື່ອງຕ່າງໆທີ່ເຮັດດ້ວຍວັດຖຸແຂງ: ເຄື່ອງຫຼິ້ນໃນຫ້ອງຮຽນ, ເຄື່ອງຫຼິ້ນໃນເດີ່ນ, ເຄື່ອງໃຊ້ໃນການຮຽນ, ເຄື່ອງນຸ່ງຫົ່ມ, ເຄື່ອງມືຊ່າງ, ເຄື່ອງໃຊ້ໃນການຄົວກິນ.<br>2. ຄຳສັບກ່ຽວກັບນ້ຳຕາມທຳມະຊາດ ແລະ ນ້ຳທີ່ຄົນຜະລິດຂຶ້ນ:<br>- ນ້ຳຕາມທຳມະຊາດ: ແມ່ນ້ຳ, ຫ້ວຍ, ໜອງ, ຄອງ, ບຶງ, ນ້ຳໃຕ້ດິນ, ນ້ຳຝົນ, ນ້ຳມັນດິບ, ນ້ຳມັນພືດ, ນ້ຳນົມສັດ.<br>- ນ້ຳທີ່ຄົນຜະລິດຂຶ້ນ: ນ້ຳໃຊ້(ນ້ຳບາດານ ຫຼື ນ້ຳສ້າງ, ນ້ຳປະປາ), ນ້ຳດື່ມ (ນ້ຳບໍລິສຸດ, ນ້ຳອັດລົມ, ນ້ຳໝາກໄມ້), ນ້ຳນົມສັດ (ນ້ຳນົມສົດ, ນ້ຳນົມຂຸ້ນຫວານ, ນ້ຳນົມຜົງ) ນ້ຳມັນພືດ, ນ້ຳມັນສັດ, ນ້ຳມັນລົດ.<br>3. ຄຳສັບກ່ຽວກັບສິ່ງທີ່ມີແສງຕາມທຳມະຊາດ ແລະ ແສງທີ່ຄົນສ້າງຂຶ້ນ:<br>- ແສງຕາມທຳມະຊາດ: ດວງອາທິດ (ຕາເວັນ), ດວງຈັນ (ເດືອນ), ດາວ.<br>- ແສງທີ່ຄົນສ້າງຂຶ້ນ: ໄຟປຸງແຕ່ງອາຫານ (ເຕົາຖ່ານ, ເຕົາໄຟຟ້າ, ເຕົາແກັດ) ໄຟໃຕ້ (ດອກໄຟຟ້າ, ຕະກຽງ,ໂຄມໄຟສາຍ, ທຽນໄຂ). ໄຟໃນເຄື່ອງໃຊ້ (ພັດລົມ, ຈັກຊັກເຄື່ອງ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້, ເຄື່ອງຫຼິ້ນອື່ນໆ)<br>4. ຄຳສັບກ່ຽວກັບສິ່ງທີ່ມີສຽງຕາມທຳມະຊາດ ແລະ ສຽງທີ່ຄົນສ້າງຂຶ້ນ:<br>- ສຽງຕາມທຳມະຊາດ: ສຽງສັດຮ້ອງ, ສຽງຟ້າຮ້ອງ, ສຽງລົມພັດ, ສຽງນ້ຳໄຫຼ.<br>- ສຽງທີ່ຄົນສ້າງຂຶ້ນ: ສຽງດົນຕີ, ສຽງຄົນຮ້ອງ, ສຽງເຄື່ອງຈັກພູນ.<br>5. ຄຳສັບກ່ຽວກັບສີທຳມະຊາດ ແລະ ສີທີ່ຄົນສ້າງຂຶ້ນ:<br>- ສີທຳມະຊາດ: ສີຈາກຕົ້ນໄມ້, ດອກໄມ້, ໝາກໄມ້, ກ້ອນຫີນ.<br>- ສີທີ່ຄົນສ້າງຂຶ້ນ: ສີເຄມີໃຊ້ທາສີລົດ, ເຮືອນ, ຍ້ອມເຄື່ອງນຸ່ງ, ສີເຄື່ອງສຳອາງ,ຢາປົວພະຍາດ |

| | | |
|---|---|---|
| | ເວົ້າເປັນປະໂຫຍກ. | 1. ນຳໃຊ້ຫົວຂໍ້ທີ່ກຳນົດໄວ້ເວົ້າເປັນປະໂຫຍກສັ້ນ:<br>- ຊື່, ຮູບຮ່າງ, ວັດຖຸທີ່ນຳມາຜະລິດເຄື່ອງຕ່າງໆ.<br>- ຊື່, ປະເພດນ້ຳຕາມທຳມະຊາດ ແລະ ນ້ຳທີ່ຄົນຜະລິດຂຶ້ນ.<br>- ຊື່, ລັກສະນະແສງຕາມທຳມະຊາດ ແລະ ແສງທີ່ຄົນສ້າງຂຶ້ນ.<br>- ຊື່, ລັກສະນະສຽງຕາມທຳມະຊາດ ແລະ ສຽງທີ່ຄົນສ້າງຂຶ້ນ.<br>- ຊື່, ລັກສະນະສີຕາມທຳມະຊາດ ແລະ ສີທີ່ຄົນສ້າງຂຶ້ນ.<br>2. ນຳໃຊ້ປະໂຫຍກຄຳເວົ້າທີ່ສະແດງເຖິງພຶດຕິກຳທີ່ຄວນປະຕິບັດ:<br>- ການນຳໃຊ້, ການບົວລະບັດ, ການເກັບມ້ຽນ,<br>- ຄຸນປະໂຫຍດ ແລະ ການປະຢັດເຄື່ອງທີ່ເຮັດດ້ວຍວັດຖຸແຂງແຕ່ລະຊະນິດ.<br>- ການປ່ຽນແປງສະພາວະຂອງນ້ຳ(ສີ,ລົດຊາດ,ພາຊະນະ,ອຸນຫະພູມ),<br>- ການນຳໃຊ້, ຄຸນປະໂຫຍດ ແລະ ການປະຢັດນ້ຳ (ດື່ມ, ໃຊ້) ທີ່ຄົນຜະລິດຂຶ້ນ.<br>- ການນຳໃຊ້, ຄຸນປະໂຫຍດ ແລະ ການປະຢັດແສງ (ໄຟ) ທີ່ຄົນຜະລິດຂຶ້ນ.<br>- ການນຳໃຊ້, ຄຸນປະໂຫຍດສຽງທີ່ຄົນສ້າງຂຶ້ນ.<br>- ການນຳໃຊ້, ຄຸນປະໂຫຍດຂອງສີ. |

### 3. ທັກສະການອ່ານ

| ໜ່ວຍການສອນ | ທັກສະ | ຫົວຂໍ້ |
|---|---|---|
| 1. ຕົວຂອງຂ້ອຍ. | ອ່ານອອກສຽງ ×າ ຕາມຄຳສັບ. | - ປາ ຄາ ງາ ຈາ ຫາ ດາ ພາ<br>- ປາກ ຄາງ ງາມ ຈານ ຫາງ ດາວ ພາຍ<br>- ປາກນ້ອຍ, ຄາງສັ້ນ, ມືງາມ, ລ້າງຈານ, ຫາງປາ, ດາວແດງ, ພາຍຖົງ |
| | ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ. | - ຄຳສັບກ່ຽວກັບຊື່ພາກສ່ວນຕ່າງໆໃນຮ່າງກາຍຂອງຄົນເຮົາ<br>- ຄຳສັບກ່ຽວກັບການບົວລະບັດຮັກສາຮ່າງກາຍ<br>- ຄຳສັບກ່ຽວກັບອາຫານທີ່ຄວນກິນ<br>- ຄຳສັບກ່ຽວກັບການຮັກສາສຸຂະພາບ ແລະ ຄວາມປອດໄພ |
| | ອ່ານອອກສຽງຄຳທີ່ບໍ່ມີ ແລະ ມີວັນນະຍຸດ ×່ ×້. | ຕາ ຕ່າ ຕ້າ, ຊາງ ຊ່າງ ຊ້າງ, ອາ ອ່າ ອ້າ, ນາ ນ່າ ນ້າ, ມາ ມ່າ ມ້າ,ບາ ບ່າ ບ້າ, ປາ ປ່າ ປ້າ |
| 2. ຄອບຄົວຂອງຂ້ອຍ. | ອ່ານອອກສຽງ ×ິ ຕາມຄຳສັບ. | - ຈິ ອິ ຂິ ຕິ ປິ ດິ ມິ ລິ ຊິ<br>- ຈິກ ອິງ ຂິດ ຕີນ ປີກ ດິດ ມິດ ລີງ ຊິງ<br>- ຈິກເຈ້ຍ, ອິງຝາ, ຂີດເສັ້ນຊື່, ຕີນເປົ່າ, ດີດກີຕ່າ, ມີດຊ້ອຍຊີ້ນ, ໂຕລີງ, ຊິງຍາດ |
| | ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ. | - ຄຳສັບກ່ຽວກັບສະມາຊິກໃນຄອບຄົວ ແລະ ຍາດພີ່ນ້ອງ<br>- ຄຳສັບກ່ຽວກັບການປະຕິບັດຕົນໃນຄອບຄົວ ແລະ ປະຕິບັດຕົນຕໍ່ຍາດພີ່ນ້ອງ<br>- ຄຳສັບກ່ຽວກັບຊື່ຫ້ອງຕ່າງໆ ແລະ ເຄື່ອງໃຊ້ພາຍໃນເຮືອນ<br>- ຄຳສັບກ່ຽວກັບການຮັກສາຄວາມສະອາດຫ້ອງຕ່າງໆ ແລະ ເຄື່ອງໃຊ້ພາຍໃນເຮືອນ |

| | | |
|---|---|---|
| | ອ່ານອອກສຽງຄຳທີ່ມີ ແລະ ບໍ່ມີ ວັນນະຍຸດ x່ x້. | - ດິ ດິ່ ດິ້, ປິ ປິ່ ປິ້, ນິ ນິ່ ນິ້, ກິ ກິ່ ກິ້, ລິ ລິ່ ລິ້ |
| | ອ່ານອອກສຽງສະຫຼະ xາ xິ ຕາມປະໂຫຍກ. | - ນາງອາລິມີນາ<br>- ມ້າມີສີ່ຂາ<br>- ປ້າມີສາລີຂາວ<br>- ປາມີສອງຕາ |
| 3. ໂຮງຮຽນຂອງຂ້ອຍ. | ອ່ານອອກສຽງ xື ຕາມຄຳສັບ. | - ຊື ຜື ມື ອື ຄື ລື ຖື ດື ກື<br>- ຊື່ງ, ຜືນ, ມືດ, ອືດ, ຄືບ, ລືບ, ຖືກ, ດືງ, ກືກ<br>- ໝໍ້ຊື່ງ, ຜືນຜ້າ, ມືດຄືມ, ອືດຫົ້ວ, ຄືບມື, ລືບກະດານ, ຖືກຍືນຍາມ, ດືງເຊືອກ, ປາກກືກ |
| | ອ່ານອອກສຽງພະຍັນຊະນະຕົ້ນ ຕາມຄຳສັບ. | - ຄຳສັບກ່ຽວກັບຊື່ໂຮງຮຽນ, ຫ້ອງຮຽນ, ເຄື່ອງໃຊ້ໃນຫ້ອງຮຽນ,<br>- ຄຳສັບກ່ຽວກັບການປະຕິບັດຕົນຕໍ່ຜູ້ອຳນວຍການ, ຄູສອນ, ພະນັກງານອື່ນໆ, ໝູ່ເພື່ອນ<br>- ຄຳສັບກ່ຽວກັບການເຄົາລົບທຸງຊາດ ແລະ ກິດຈະກຳຂອງໂຮງຮຽນ<br>- ຄຳສັບກ່ຽວກັບຊື່ເຄື່ອງໃຊ້ໃນການບົວລະບັດຮັກສາໂຮງຮຽນ |
| | ອ່ານອອກສຽງຄຳທີ່ມີ ແລະ ບໍ່ມີ ວັນນະຍຸດ x່ x້. | - ຊື ຊື່ ຊື້, ຜື ຜື່ ຜື້, ມື ມື່ ມື້, ລື ລື່ ລື້ |
| | ອ່ານອອກສຽງສະຫຼະ xາ xິ xື ຕາມປະໂຫຍກ. | - ອາວຄຳມີຍືນຍາມ<br>- ອາດີຈືນປາ<br>- ຄູພານັກຮຽນລ້າງມື<br>- ຍ່າມີອາຍຸຍືນ<br>- ຄູມີຜ້າສີ່ຜືນ |

| | | |
|---|---|---|
| 4. ບ້ານຂອງຂ້ອຍ. | ອ່ານອອກສຽງສະຫຼະ ×ະ ຕາມຄຳສັບ. | - ກະ ສະ ທະ ປະ ຕະ<br>- ກະດານ, ສະບູ, ທະຫານ, ປະຕູ, ຕະປູ, |
| | ອ່ານອອກສຽງພະຍັນຊະນະຕົ້ນ ຕາມຄຳສັບ. | - ຄຳສັບກ່ຽວກັບຊື່ບ້ານ ແລະ ສະຖານທີ່ສຳຄັນພາຍໃນບ້ານ<br>- ຄຳສັບກ່ຽວກັບການປະຕິບັດຕົນຕໍ່ບຸກຄົນ ແລະ ສະຖານທີ່ສຳຄັນພາຍໃນບ້ານ<br>- ຄຳສັບກ່ຽວກັບຊື່ປະເທດ, ແຂວງ, ເມືອງ, ບ້ານທີ່ຕົນອາໄສຢູ່ ແລະ ວັນສຳຄັນຂອງຊາດ<br>- ຄຳສັບກ່ຽວກັບຊື່ສິລະປະວັດທະນາທຳ ແລະ ວັນບຸນປະເພນີ<br>- ຄຳສັບກ່ຽວກັບຊື່ປະເທດ, ສັນຍະລັກທຸງຊາດຂອງບັນດາປະເທດໃນອາຊຽນ. |
| | ອ່ານອອກສຽງ × ະ ×າ ×ິ ×ີ ຕາມປະໂຫຍກ. | - ອາດີຕີຕະປູ<br>- ທະຫານຢືນຍາມ<br>- ກະດານສີຂຽວ<br>- ນາງມາລີຖືສະບູ<br>- ຍ່າມີກະປູ |
| 5. ທຳມະຊາດອ້ອມຕົວເຮົາ. | ອ່ານອອກສຽງສະຫຼະ ×ູ ຕາມຄຳສັບ. | - ຍູ ຈູ ຝູ ພູ ອູ ດູ ຄູ ທູ<br>- ຍູງ ຈູງ ຝູງ ພູມ ຈູມ ອູ້ມ ດູມ ຄູນ ທູນ<br>- ຍູງລາຍ, ຈູງມື ຝູງງົວ, ພູມໄມ້, ດອກໄມ້ຈູມ, ອູ້ມນ້ອງ, ກະດູມ, ດອກຄູນ, ໃບທູນ. |
| | ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ. | - ຄຳສັບກ່ຽວກັບຊື່ສິ່ງທີ່ມີຊີວິດ ຄົນ ສັດ ພືດ<br>- ຄຳສັບກ່ຽວກັບຊື່ສິ່ງບໍ່ມີຊີວິດ ດິນ ຫີນ ນ້ຳ<br>- ຄຳສັບກ່ຽວກັບເວລາ ກາງເວັນ ກາງຄືນ ວັນເດືອນປີ<br>- ຄຳສັບກ່ຽວກັບຊື່ລະດູການ ແລະ ການປະຕິບັດຕົນໃນລະດູການ |

| | | |
|---|---|---|
| | ອ່ານອອກສຽງຄຳທີ່ມີ ແລະ ບໍ່ມີ ວັນນະຍຸດ x່ x້. | ດູ ດູ່ ດູ້, ປູ ປູ່ ປູ້, ບູ ບູ່ ບູ້, ກູ ກູ່ ກູ້ |
| | ອ່ານອອກສຽງສະຫຼະ xະ xາ xິ xີ xູ ຕາມປະໂຫຍກ. | - ນາງມາລີກິນລູກຊີ້ນປາ<br>- ທ້າວຄູນມີຂີ່ມ້າມູນກັບໝູ່<br>- ປູ່ຈູງມືຄູນມີຂ້າມທາງ<br>- ແມ່ຮູດຊິບກະເປົ໋າ<br>- ພໍ່ດູດນ້ຳຢູ່ສະປາ |
| | ອ່ານອອກສຽງສະຫຼະ xຸ ຕາມຄຳສັບ. | - ມຸ ລຸ ກຸ ນຸ ຂຸ ຈຸ ບຸ ອຸ<br>- ມຸ້ງ ລຸງ ກຸ້ງ ນຸ່ງ ຂຸດ ຈຸດ ບຸນ ອຸ່ນ<br>- ມຸ້ງສີຂາວ ລຸງບຸນມາ ກຸ້ງນາ ນຸ່ງສິ້ນ ຂຸດດິນ ບຸນປີໃໝ່ ອຸ່ນອາຫານ |
| | ອ່ານອອກສຽງສະຫຼະ xະ xາ xິ xີ xູ xຸ ຕາມປະໂຫຍກ. | - ຢູ່ນາມີກຸ້ງນາ<br>- ເສື້ອມີກະດູມສາມສີ<br>- ມາລີນຸ່ງສິ້ນສີຟ້າ<br>- ຄູນມີນຸ່ງເສື້ອສີຂາວ<br>- ຍຸງລາຍລະບາດ<br>- ລະວັງທາງມີຂຸມ<br>- ຝົນຕົກດິນຂຸມດີ |
| 6. ສິ່ງແວດລ້ອມອ້ອມຕົວເຮົາ. | ອ່ານອອກສຽງສະຫຼະ xິ ຕາມຄຳສັບ. | - ສິ ລິ ອິ ວິ ກິ ດິ ບິ<br>- ສິງ ລິນ ອິ່ ວ ວິດ ກິນ ດິນ ບິນ<br>- ສິ່ວໄມ້, ນ້ຳລິນ, ນ້ຳສະອິ່ວ, ວິດຖ່າຍ, ກິນນ້ຳ. ດິນຊາຍ ນົກບິນ |
| | ອ່ານອອກສຽງສະຫຼະ xະ xາ xິ xີ xູ xຸ xິ ຕາມປະໂຫຍກ. | - ນາງມາລີບີບກະດິງກິ່ງກິ່ງ<br>- ປ້າມີໂມງປຸກ |

66

| | | |
|---|---|---|
| | | - ປູ່ດິດພິມສາມສາຍ<br>- ຍ່າມີດອກມະລິບູຊາ<br>- ນົກສາລິກາກິນນ້ຳລິນ |
| | ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ. | - ຄຳສັບກ່ຽວກັບຊື່, ລັກສະນະ, ທີ່ຢູ່ອາໄສ, ຄຸນປະໂຫຍດ, ການປົກປັກຮັກສາຂອງສັດ.<br>- ຄຳສັບກ່ຽວກັບຊື່, ລັກສະນະ, ຄຸນປະໂຫຍດ, ການປົກປັກຮັກສາພືດ.<br>- ຄຳສັບກ່ຽວກັບຊື່,ຄວາມສຳຄັນ, ການປົກປັກຮັກສາສະຖານທີ່ສຳຄັນ.<br>- ຄຳສັບກ່ຽວກັບການປະຕິບັດຕົນຕໍ່ສະຖານທີ່ສຳຄັນຂອງຊາດ ແລະ ທ້ອງຖິ່ນ. |
| | ອ່ານອອກສຽງສະຫຼະ xຶ ຕາມຄຳສັບ. | - ຂຶ ອຶ ຕຶ ກຶ ຝຶ ປຶ<br>- ຂຶ້ນ ອຶ່ງ ຕຶກ ເຝິກ ປຶກ<br>- ລຸກຂຶ້ນ ໂຕອຶ່ງ ຕຶກປາ ເຝິກອ່ານ ປຶກສາ |
| | ອ່ານອອກສຽງສະຫຼະ xະ xາ xິ xີ xູ xຸ xຶ xື ຕາມປະໂຫຍກ. | - ໝາກອື ສີ່ ໜ່ວຍ<br>- ອຶ່ງອ່າງຢູ່ໃນກະໂປະ<br>- ປຶກສາຫາລືໝູ່ເພື່ອນ<br>- ທ້າວບຸນສີຕຶກໄດ້ປາດຸກ<br>- ເຝິກອ່ານສະຫຼະ xະ xາ xິ xີ xູ xຸ xຶ xື |
| 7. ການຄົມມະນາຄົມ ແລະ ການສື່ສານ. | ອ່ານອອກສຽງສະຫຼະ ເx ຕາມຄຳສັບ. | - ເພ ເລ ເກ ເຫ<br>- ເພງ ເລກ ເກມ ເຫດ<br>- ເພງລາວ ເລກສາມ ເກມຈັບຄູ່ ເຫດສະບາ |
| | ອ່ານອອກສຽງສະຫຼະ xະ xາ xິ xີ xື xູ xຸ xຶ xື ເx ຕາມປະໂຫຍກ. | - ປູ່ຟັງເຫດຢູ່ບຸນພະເວດ<br>- ໃນທ້ອງຟ້າມີເມກ<br>- ນາງມາລີຮ້ອງເພງ |

| | | |
|---|---|---|
| | | - ພໍ່ພາຍເປົ້າໄປນາ<br>- ອີ່ລົດເມຢ່າເຮຣາ |
| | ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ. | - ຄຳສັບກ່ຽວກັບຊື່, ສ່ວນປະກອບຂອງພາຫະນະທີ່ໃຊ້ເດີນທາງອາກາດ, ນໍ້າ, ບົກ<br>- ຄຳສັບກ່ຽວກັບການປະຕິບັດຕົນ ແລະ ການຮັກສາຄວາມປອດໄພໃນການນຳໃຊ້ພາຫະນະການເດີນທາງ.<br>- ຄຳສັບກ່ຽວກັບຊື່, ສ່ວນປະກອບຂອງເຄື່ອງມືການສື່ສານໂທລະສັບ, ໂທລະພາບ, ຄອມພິວເຕີ, ວິທະຍຸ, ຈົດໝາຍ.<br>- ຄຳສັບກ່ຽວກັບການປະຕິບັດຕົນ ແລະ ການຮັກສາຄວາມປອດໄພໃນການນຳໃຊ້ເຄື່ອງມືການສື່ສານ. |
| | ອ່ານອອກສຽງ ແ× ຕາມຄຳສັບ. | - ແອ ແວ ແມ ແຕ ແປ ແຫ ແລ ແຄ<br>- ແອນ ແວ່ນ ແມງ ແຕນ ແປກ ແຫງ ແລ່ນ ແຄນ<br>- ນົກແອນ ແວ່ນຕາ ແມງແຄງ ຕັກກະແຕນ ຕົ້ນແປກ ໝາກແຫງ ໂຕແລນ ແຄນເປົ່າ |
| | ອ່ານອອກສຽງສະຫຼະ ×ະ ×າ ×ິ ×ີ ×ຶ ×ຸ ×ູ ເ× ແ× ຕາມປະໂຫຍກ. | - ລະດູແລ້ງດິນແຕກແຫງ<br>- ລົດຕີນແວບໃຫ້ສູບລົມ<br>- ລຸງເປົ່າແຄນເພງລາວແພນນ້ອຍ<br>- ໄຟແດງຢ່າຍ່າງຂ້າມທາງ<br>- ຫູແຂ້ວທຸກມື້ແຂ້ວບໍ່ເປັນແມງ |
| 8. ສິ່ງຕ່າງໆອ້ອມຕົວເຮົາ. | ອ່ານອອກສຽງ ×ະ ×າ ×ິ ×ີ ×ຶ ×ື ×ຸ ×ູ ເ× ແ× ຕາມຄຳສັບ. | ສະຫຼະ ×ະ ×າ ×ິ ×ີ ×ຶ ×ື ×ຸ ×ູ ເ× ແ× |

68

| | | |
|---|---|---|
| | ອ່ານອອກສຽງພະຍັນຊະນະຕົ້ນຕາມ ຄຳສັບ. | - ຄຳສັບກ່ຽວກັບຊື່, ປະເພດ, ຮູບຮ່າງ, ຂະໜາດ, ລັກສະນະ, ຄຸນປະໂຫຍດຂອງເຄື່ອງທີ່ເຮັດດ້ວຍວັດຖຸແຂງ.<br>- ຄຳສັບກ່ຽວກັບຊື່, ປະເພດ, ຄຸນປະໂຫຍດຂອງນ້ຳ, ແສງ, ສຽງ ແລະ ສີຕາມທຳມະຊາດ ແລະ ຄົນສ້າງຂຶ້ນ. |
| | ອ່ານອອກສຽງຄຳທີ່ມີ ແລະ ບໍ່ມີ ວັນນະຍຸດ x່ x້. | ປາ ປ່າ ປ້າ, ຜາ ຜ່າ ຜ້າ, ຊາງ ຊ່າງ ຊ້າງ<br>ລີ ລີ່ ລີ້, ປີ ປີ່ ປີ້, ຂີ ຂີ່ ຂີ້,<br>ຊື ຊື່ ຊື້, ດື ດື່ ດື້, ມື ມື່ ມື້<br>ຊູ ຊູ່ ຊູ້, ກູ ກູ່ ກູ້, ຕູ ຕູ່ ຕູ້ |
| | ອ່ານອອກສຽງສະຫຼະ xະ xາ xິ xີ xຶ xື xຸ xູ ເx ແx ຕາມປະໂຫຍກ. | 1. ຜ້າສີ່ຜືນ (xາ xິ xື )<br>2. ສຽງສະຫຼະ (xະ xາ xີ xື)<br>3. ປາ ແລະ ກະປູໃນນ້ຳນາ (xະ xາ xີ xື xູ)<br>4. ສຽງຮ້ອງອຶ່ງ ແລະ ງົວ (xະ xາ xີ xຶ)<br>5. ແກງເຫັດ (xະ xາ xິ xີ xຶ xື xຸ xູ ເx ແx)<br>6. ຕຸກກະຕາໝີ (xະ xາ xິ xີ xຶ xື xຸ xູ ເx ແx) |

### 4. ທັກສະການຂຽນ

| ໜ່ວຍການສອນ | ທັກສະ | ທີ ວຂໍ້ |
|---|---|---|
| | | |
| 1. ຕົວຂອງຂ້ອຍ. | ຂຽນສະຫຼະ ×າ. | ×າ ×າ ×າ ×າ ×າ ×າ |
| | ຂີດເສັ້ນຈັບຄູ່ຄຳສັບ. | ລ້າງຈານ, ອາຫານ, ທາງປ່າ, ບ້ານນາ, ຫາງປາ, ທ່ານບ້ານ |
| | ຂຽນສະຫຼະ ×າ ຕາມຄຳສັບ. | - ປາ ຄາ ງາ ຈາ ຫາ ດາ ພາ<br>- ປາກ ຄາງ ງາມ ຈານ ຫາງ ດາວ ພາຍ<br>- ປາກນ້ອຍ, ຄາງສັ້ນ, ມືງາມ, ລ້າງຈານ, ຫາງປາ, ດາວແດງ, ພາຍຖົງ |
| | ຂຽນພະຍັນຊະນະຕົ້ນຕາມຄຳສັບ. | - ພະຍັນຊະນະ 27 ຕົວຕາມແຜນຕົວອັກສອນ.<br>- ພະຍັນຊະນະຕົ້ນຂອງຄຳສັບກ່ຽວກັບຊື່ພາກສ່ວນຕ່າງໆໃນຮ່າງກາຍຂອງຄົນເຮົາ. |
| 2. ຄອບຄົວຂອງຂ້ອຍ. | ຂຽນສະຫຼະ ×ິ. | ×ິ ×ິ ×ິ ×ິ ×ິ ×ິ |
| | ຂີດເສັ້ນຈັບຄູ່ຄຳສັບ. | ຢາດີ ສາລີ ມີນາ ສີດາ ສີກາກີ ລີລາດີ |
| | ຂຽນສະຫຼະ ×ິ ຕາມຄຳສັບ. | - ຈິ ອິ ຂິ ຕິ ປິ ດິ ມິ ລິ<br>- ຈິກ ອິງ ຂິດ ຕີນ ປີກ ດິດ ມິດ ລິງ<br>- ຈິກເຈ້ຍ, ອິງຝາ, ຂີດເສັ້ນຊື່, ຕີນເປົ່າ, ດິດກີຕ່າ, ມິດຊ້ອຍຊີ້ນ,ໂຕລິງ, |
| | ຂຽນພະຍັນຊະນະຕົ້ນຕາມຄຳສັບ. | ພະຍັນຊະນະຕົ້ນຂອງຄຳສັບກ່ຽວກັບຊື່ສະມາຊິກໃນຄອບຄົວ ແລະ ຍາດພີ່ນ້ອງ ຊື່ຫ້ອງຕ່າງໆ ແລະ ເຄື່ອງໃຊ້ພາຍໃນເຮືອນ |
| 3. ໂຮງຮຽນຂອງຂ້ອຍ. | ຂຽນສະຫຼະ ×ີ. | ×ີ ×ີ ×ີ ×ີ ×ີ ×ີ |
| | ຂຽນສະຫຼະ ×ີ ຕາມຄຳສັບ. | - ຊີ ຜີ ມີ ອີ ຕີ ລີ ດີ |

| | | |
|---|---|---|
| | | - ຊີ່ງ, ຜືນ, ມີດ, ອີດ, ຄີບ, ລີບ, ດີງ,<br>- ໝໍ້ຊີ່ງ, ຜືນຜ້າ, ມີດຄີມ, ອີດຫົ້ວຄີບມື, ລີບກະດານ, ດີງເຊືອກ, |
| | ຂີດອ້ອມຮອບສະຫຼະ xາ xິ xີ. | - ຢ່າຈຳປາມີຜ້າສີ່ຜືນ<br>- ຜ້າສີເຫຼືອງຢ່າໃຫ້ມາລີ<br>- ຜ້າສີຟ້າຢ່າໃຫ້ຄູນສີ<br>- ຜ້າສີແດງຢ່າແພງໄວ້ນຸ່ງ |
| | ຂຽນພະຍັນຊະນະຕົ້ນຕາມຄຳສັບ. | ພະຍັນຊະນະຕົ້ນຕາມຄຳສັບກ່ຽວກັບຊື່ໂຮງຮຽນ, ຫ້ອງຮຽນ, ເຄື່ອງໃຊ້ໃນຫ້ອງຮຽນ, ຊື່ເຄື່ອງໃຊ້ໃນການບົວລະບັດຮັກສາໂຮງຮຽນ |
| 4. ບ້ານຂອງຂ້ອຍ. | ຂຽນສະຫຼະ xະ. | xະ xະ xະ xະ xະ xະ |
| | ຂຽນສະຫຼະ xະ ຕາມຄຳສັບ. | - ກະ ສະ ທະ ປະ ຕະ<br>- ກະດານ, ສະບູ, ທະຫານ, ປະຕູ, ຕະປູ, |
| | ຂຽນສະຫຼະ xະ xາ xິ xີ xູ ຕາມປະໂຫຍກ. | - ອາດີຕີຕະປູ<br>- ທະຫານຢືນຍາມ<br>- ກະດານມີສີຂຽວ<br>- ນາງມາລີຖືສະບູ<br>- ຢ່າມີກະປູ |
| | ຂີດອ້ອມຮອບສະຫຼະ xະ xາ xິ xີ. | - ມາລີອ່ານສະຫຼະ xາ xິ xີ xະ ຢູ່ກະດານ<br>- ມາລີຊີ້ໃສ່ xາ xິ xີ xະ ໃຫ້ໝູ່ອ່ານແຕ່ລະຄຳ.<br>- ໝູ່ອ່ານ xາ ອອກສຽງເປັນ xະ<br>- ມາລີຈະຊີ້ໃສ່ xາ ອ່ານຄືນ xາ xາ xາ ໄປມາຈົນຈື່ |
| | ຂຽນພະຍັນຊະນະຕົ້ນຕາມຄຳສັບ. | ພະຍັນຊະນະຕົ້ນຕາມຄຳສັບກ່ຽວກັບຊື່ບ້ານ, ສະຖານທີ່ສຳຄັນພາຍໃນບ້ານ ແລະ ຊື່ |

| | | |
|---|---|---|
| | | ເຄື່ອງພື້ນເມືອງຕ່າງໆ. |
| 5. ທຳມະຊາດອ້ອມຕົວເຮົາ. | ຂຽນສະຫຼະ xຸ. | xຸ xຸ xຸ xຸ xຸ xຸ xຸ xຸ |
| | ຂຽນສະຫຼະ xຸ ຕາມຄຳສັບ. | - ມຸ ລຸ ກຸ ນຸ ຂຸ ຈຸ ບຸ ອຸ<br>- ມຸ້ງ ລຸງ ກຸ້ງ ນຸ່ງ ຂຸດ ຈຸດ ບຸນ ອຸ່ນ<br>- ມຸ້ງສີຂາວ ລຸງບຸນມາ ກຸ້ງນາ ນຸ່ງສິ້ນ ຂຸດດິນ ບຸນປີໃໝ່ ອຸ່ນອາຫານ |
| | ຂຽນສະຫຼະ xຸ ຕາມປະໂຫຍກ. | - ຢູ່ນາມີກຸ້ງນາ<br>- ເສື້ອມີກະດູມສາມສີ<br>- ມາລີນຸ່ງສິ້ນສີຟ້າ<br>- ຄູນມີນຸ່ງເສື້ອສີຂາວ<br>- ຍຸງລາຍລະບາດ<br>- ລະ ວັງທາງມີຂຸມ<br>- ຝົນຕົກດິນຊຸ່ມດີ |
| | ຂຽນສະຫຼະ xູ. | xູ xູ xູ xູ xູ xູ |
| | ຂຽນສະຫຼະ xູ ຕາມຄຳສັບ. | - ຍູ ຈູ ຝູ ພູ ອູ ດູ ຄູ ທູ<br>- ຍູງ ຈູງ ຝູງ ພູມ ຈູມ ອູ້ມ ດູມ ຄູນ ທູບ<br>- ຍູງລາຍ,ຈູງມື ຝູງງົວ, ພູມໄມ້, ດອກໄມ້ຈູມ, ອູ້ມນ້ອງ, ກະດູມ, ດອກຄູນ, ໃບທູບ. |
| | ຂຽນພະຍັນຊະນະຕົ້ນຕາມຄຳສັບ. | ພະຍັນຊະນະຕົ້ນຕາມຄຳສັບກ່ຽວກັບຊື່ສິ່ງທີ່ມີຊີວິດ ຄົນ ສັດ ພືດ, ຊື່ສິ່ງບໍ່ມີຊີວິດ ດິນ ຫີນ ນ້ຳ, ວັນ, ເດືອນ, ປີ |
| | ຂຽນສະຫຼະ xູ ຕາມປະໂຫຍກ. | - ນາງມາລີກິນລູກຊີ້ນປາ<br>- ທ້າວຄູນມີຂີ່ມ້າມູນກັບໝູ່<br>- ປູ່ຈູງມືຄູນມີຂ້າມທາງ |

| | | |
|---|---|---|
| | | - ແມ່ຮູດຊິບກະເປົ໋າ<br>- ພໍ່ດູດນໍ້າຢູ່ສະປາ |
| | ຂີດອ້ອມສະຫຼະ xະ xາ xິ xີ xູ ຕາມບົດອ່ານ. | - ນາງມາລີ ແລະ ທ້າວຄູນມີໄປຢາມປູ່ຍ່າຢູ່ບ້ານນາ.<br>- ປູ່ພານາງມາລີ ແລະ ທ້າວຄູນມີໄປໄຕ່ຄັນນາ<br>- ນາງມາລີດີໃຈເຫັນປູ່ຢູ່ຮູປູ.<br>- ທ້າວຄູນມີເດ່ມືໄປຈັບປາທີ່ລອຍໄປມາໃນນໍ້ານາ. |
| 6. ສິ່ງແວດລ້ອມອ້ອມຕົວເຮົາ. | ຂຽນສະຫຼະ xິ. | xິ, xິ xິ xິ xິ xິ xິ |
| | ຂຽນສະຫຼະ xິ ຕາມຄຳສັບ | - ສິ ລິ ອິ ວິ ກິ ດິ ບິ<br>- ສິງ ລິນ ອິ່ ວ ວິດ ກິນ  ດິນ  ບິນ<br>- ສິ່ວໄມ້, ນໍ້າລິນ, ນໍ້າສະອິ່ວ, ວິດຖ່າຍ, ກິນນໍ້າ.  ດິນຊາຍ ນົກບິນ |
| | ຂຽນສະຫຼະxິ ຕາມປະໂຫຍກ. | - ມາລີບິບກະດິງກິ່ງກິ່ງ<br>- ປ້າມີພິນສາມສາຍ<br>- ປູ່ພິມລາຍມືໃສ່ພິນ<br>- ຍ່າມີມະລິບູຊາ<br>- ສາລີກາກິນນໍ້າລິນ |
| | ຂຽນສະຫຼະ xຶ. | xຶ, xຶ, xຶ, xຶ, xຶ, xຶ |
| | ຂຽນສະຫຼະ xຶ ຕາມຄຳສັບ. | - ຂຶ ອຶ ຕຶ ກຶ ຝຶ ປຶ<br>- ຂຶ້ນ ອຶ່ງ ຕຶກ ເຝິກ ປຶກ<br>- ລຸກຂຶ້ນ ໂຕອຶ່ງ  ຕຶກປາ ເຝິກອ່ານ ປຶກສາ |

| | | |
|---|---|---|
| | ຂຽນພະຍັນຊະນະຕົ້ນຕາມຄຳສັບ. | ພະຍັນຊະນະຕົ້ນຕາມຄຳສັບກ່ຽວກັບຊື່ສັດ, ພືດ ແລະ ສະຖານທີ່ສຳຄັນ.<br>ຂອງຊາດ ແລະ ທ້ອງຖິ່ນ. |
| | ຂຽນສະຫຼະ x̊ ຕາມປະໂຫຍກ. | - ໝາກອຶ ສີ່ ໜ່ວຍ<br>- ອຶ່ງອ່າງຢູ່ກະໂປະ<br>- ປຶກສາຫາລື<br>- ເຝິກອ່ານພາສາລາວ<br>- ເຝິກອ່ານສະຫຼະ x̊ |
| | ຂີດອ້ອມສະຫຼະ xະ xາ xິ xີ xູ ຕາມບົດອ່ານ. | ສຽງອຶ່ງ ແລະ ງົວ |
| 7. ການຄົມມະນາຄົມ ແລະ ການສື່ສານ. | ຂຽນສະຫຼະ ເx. | ເx ເx ເx ເx ເx ເx ເx ເx ເx |
| | ຂຽນສະຫຼະ ເx ຕາມຄຳສັບ. | - ເພ ເລ ເກ ເຫ<br>- ເພງ ເລກ ເກມ ເຫດ<br>- ເພງລາວ ເລກສາມ ເກມຈັບຄູ່ ເຫດສະນາ |
| | ຂຽນສະຫຼະ ເx ຕາມປະໂຫຍກ. | - ປູ່ຟັງເທດຢູ່ບຸນພະເວດ<br>- ໃນທ້ອງຟ້າມີເມກດຶ່ມ<br>- ມາລີຮ້ອງເພງ<br>- ພໍ່ພາຍເປົ້າໄປນາ<br>- ຄູບມີມາຂີ່ລົດເມທັນເວລາ<br>- ຂີ່ລົດເມຢ່າເຮຣາ<br>- ຫຼິ້ນເກມຈັບຄູ່ຮູບພາບ |

75

| | | |
|---|---|---|
| | | - ຫຼິ້ນເກມຕໍ່ຮູບພາບ<br>- ຄິດຢູ່ໃນໃຈກ່ອນຕໍ່ເລກໜຶ່ງ |
| | ຂຽນສະຫຼະ ແ×. | - ແ× ແ× ແ× ແ× ແ× ແ× |
| | ຂຽນສະຫຼະ ແ× ຕາມຄໍາສັບ. | - ແອ ແວ ແມ ແຕ ແປ ແຕ ແລ ແຄ<br>- ແອບ ແອ່ບ ແມງ ແຕນ ແປກ ແຕງ ແລ່ນ ແຄນ<br>- ນົກແອນ ແວ່ນຕາ ແມງແຄງ ຕັກແຕນ ຕົ້ນແປກ ໝາກແຕງ ໂຕແລນ ແຄນເປົ່າ |
| | ຂຽນພະຍັນຊະນະຕົ້ນຕາມຄໍາສັບ. | - ພະຍັນຊະນະຕົ້ນຕາມຄໍາສັບກ່ຽວກັບຊື່ສ່ວນປະກອບຂອງພາຫະນະທີ່ໃຊ້ເດີນ ທາງອາກາດ ,ນໍ້າ,ບົກ<br>- ພະຍັນຊະນະຕົ້ນຕາມຄໍາສັບກ່ຽວກັບຊື່ ສ່ວນປະກອບຂອງເຄື່ອງມືການສື່ສານ ໂທລະສັບ, ໂທລະພາບ, ຄອມພິວເຕີ, ວິທະຍຸ, ຈົດໝາຍ. |
| | ຂຽນສະຫຼະ ແ× ຕາມປະໂຫຍກ. | - ລະດູແລ້ງດິນແຕກແຫງ<br>- ຢາງຕີນລົດແວບ<br>- ລຸງເປົ່າແຄນ<br>- ແອນ້ອຍດູດແວ<br>- ໝາກແຫ້ວ<br>- ແກ້ວແຕກບາດຂາແປ້ວ<br>- ແປວໄຟມີສີແດງ<br>- ໄຟແດງຢ່າຍ່າງຂ້າມທາງ<br>- ບໍ່ຖູແຂ້ວຈະເຈັບແຂ້ວແມງ<br>- ມືເປື້ອນຢ່າຖູຕາຈະແດງ |
| 8. ສິ່ງຕ່າງໆອ້ອມຕົວເຮົາ. | ຂຽນສະຫຼະ ×ະ ×າ ×ິ ×ີ ×ຶ ×ື ×ຸ ×ູ ເ× ແ× ຕາມຄໍາສັບ. | ຄໍາສັບທີ່ມີສະຫຼະ ×ະ ×າ ×ິ ×ີ ×ຶ ×ື ×ຸ ×ູ ເ× ແ× |

| | | |
|---|---|---|
| | ຂຽນພະຍັນຊະນະຕົ້ນຕາມຄໍາສັບ. | ພະຍັນຊະນະຕົ້ນຕາມຄໍາສັບກ່ຽວກັບຊື່ເຄື່ອງທີ່ເຮັດດ້ວຍວັດຖຸແຂງ, ນໍ້າ, ແສງ, ສຽງ, ສີ ຕາມທໍາມະຊາດ ແລະ ຄົນສ້າງຂຶ້ນ. |
| | ຂຽນວັນນະຍຸດ x່ x້. | ຄໍາສັບທີ່ມີວັນນະຍຸດ ແລະ ບໍ່ມີ ວັນນະຍຸດ x່ x້ |
| | ຂີດອ້ອມສະຫຼະ xະ xາ xິ xີ xຶ xື xຸ xູ ເx ແx. ຕາມບົດອ່ານ | 1. ຜ້າສີ່ຜືນ<br>2. ສຽງສະຫຼະ xະ xາ xິ xື<br>3. ປາ ແລະ ກະປູໃນນໍ້າບາ<br>4. ສຽງຮ້ອງອຶ່ງ ແລະ ງົວ<br>5. ແກງເຫັດ<br>6. ຕຸກກະຕາໝີ |

# ຕາຕະລາງທີ 3: ວິເລາະເນື້ອໃນຄວາມຮູ້ທາງດ້ານຄະນິດສາດ

## 1. ທັກສະທາງຈຳນວນ

| ໜ່ວຍການສອນ | ທັກສະທາງຈຳນວນ | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| | ການນັບປາກເປົ່າຈຳນວນແຕ່1-20 | | ສະແດງສິ່ງຕ່າງໆບໍ່ເກີນ 20 ຢ່າງໂດຍການນັບ | | ການຮ່ວມກຸ່ມ ແລະ ແຍກກຸ່ມ | | ການປຽບທຽບຈຳນວນວັດຖຸຕົວຈິງ ແລະ ຮູບພາບຂອງສອງກຸ່ມແຕ່ລະກຸ່ມຈຳນວນບໍ່ເກີນ 20 | | | ອ່ານຕົວເລກລາວ ແລະ ອາຣັບໂດຍເພີ່ມຂຶ້ນເທື່ອລະ 1 | | | | ຂຽນຕົວເລກລາວ ແລະ ອາຣັບ | |
| | ການນັບປາກເປົ່າແຕ່ 1-20 (ຕາມລຳດັບ) | ນັບປາກເປົ່າຖອຍຫຼັງແຕ່ 10-1 (ຕາມລຳດັບ) | ນັບ ແລະບອກຈຳນວນສິ່ງຕ່າງໆບໍ່ເກີນ 20 | ລະບຸລຳດັບທີທີ່ກຳນົດ | ບອກຈຳນວນທັງໝົດທີ່ເກີດຈາກການຮ່ວມກຸ່ມຂອງສອງກຸ່ມທີ່ມີຜົນລວມບໍ່ເກີນ 10 | ບອກຈຳນວນທີ່ຍັງເຫຼືອຈາກການແຍກກຸ່ມບໍ່ເກີນ 10 | ປຽບທຽບຈຳນວນທີ່ເທົ່າກັນ | ປຽບທຽບຈຳນວນທີ່ໜ້ອຍກວ່າ | ປຽບທຽບຈຳນວນທີ່ຫຼາຍກວ່າ | ອ່ານຕົວເລກຕາມລຳດັບແຕ່ 0-9 | ອ່ານຕົວເລກສັບປ່ຽນບ່ອນແຕ່ 0-9 | ອ່ານຕົວເລກລາວ ແລະ ອາຣັບຈາກເງິນໃບ 100 ແລະ 500 ກີບ | ອ່ານຕົວເລກຈາກເຄື່ອງໃຊ້ໃນຊີວິດປະຈຳວັນ | ຂຽນຈຳນວນເປັນຕົວເລກອາຣັບຈຳນວນບໍ່ເກີນ 20 | ຂຽນຕົວເລກລາວແຕ່ 0 ເຖິງ 9 |
| 1. ຕົວຂອງຂ້ອຍ | ນັບບາດຢ່າງ 1-5 **(ເຄື່ອນໄຫວ)** | | | ລຳດັບທີ່ລຽນແຖວ **(ເຄື່ອນໄຫວ)** | ກຳນົດສະຖານະການ(ໂຈດ)ຕາມຮູບພາບ 1-5**(ວົງມົນ)** | | | | | ອ່ານຕາມລຳດັບແຕ່ 0-5**(ວົງມົນ)** | | | | ຂຽນຕາມຮອຍຈ້ຳແຕ່ 0-5**(ສ້າງສັນ)** | |
| 2. ຄອບຄົວຂອງຂ້ອຍ | | ນັບບາດຢ່າງຖອຍຫຼັງ 5-1 **(ເຄື່ອນໄຫວ)** | ນັບໄມ້ຄີ້ວ 1-5**(ວົງມົນ)** | ລຳດັບທີຂອງອ້າຍເອື້ອຍນ້ອງ **(ວົງມົນ)** | | | ປຽບຈຳນວນທີ່ເທົ່າກັນບໍ່ເກີນ 5 ເຄື່ອງໃຊ້ໃນເຮືອນ **(ວົງມົນ)** | ປຽບຈຳນວນທີ່ໜ້ອຍກວ່າບໍ່ເກີນ 5 ເຄື່ອງໃຊ້ໃນເຮືອນ **(ວົງມົນ)** | | | ອ່ານສັບປ່ຽນບ່ອນແຕ່ 0-5 **(ວົງມົນ)** | | | | ຂຽນຕາມຮອຍຈ້ຳແຕ່ 0-3**(ສ້າງສັນ)** |
| 3. ໂຮງຮຽນຂອງຂ້ອຍ | ນັບບາດຢ່າງ 1-10 **(ເຄື່ອນໄຫວ)** | | ນັບຮູບພາບເຄື່ອງໃຊ້ໃນໂຮງຮຽນ 1-5**(ວົງມົນ)** | ຈັບກຸ່ມເພື່ອນຕາມລຳດັບທີ **(ເຄື່ອນໄຫວ)** | ຮ່ວມຜົນຈາກການຫຼິ້ນແບບຫຼິ້ນ 1-5**(ກາງແຈ້ງ)** | ແຍກຜົນທີ່ໄດ້ຮັບຈາກການຫຼິ້ນໂຍນບານ: ຕາມສີ ແລະ ເພດຍິງ-ຊາຍ **(ກາງແຈ້ງ)** | | | | ອ່ານຕາມລຳດັບແຕ່ 0-5**(ວົງມົນ)** | | | | ຂຽນຕາມຮອຍຈ້ຳແຕ່ 0-9 **(ສ້າງສັນ)** | |
| 4. ບ້ານຂອງ | | ນັບບາດຢ່າງຖອຍ | ນັບຊໍ່ 1-10 **(ວົງມົນ)** | ລຳດັບທີ່ຕັ້ງຂອງ | ຮ່ວມຈຳນວນສິ່ງຂອງຈາກການ | ແຍກຈຳນວນສິ່ງຂອງຕາມ | ປຽບທຽບຈຳນວນ | ປຽບທຽບຈຳນວນທີ່ | | | ອ່ານສັບປ່ຽນບ່ອນ | ອ່ານຕົວເລກອາຣັບຈາກ | | | ຂຽນຕາມ |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| ອ້ອຍ | | ຫຼັງ 10-1 **(ເຄື່ອນໄຫວ)** | | ເຮືອນຕາມຮູບພາບ **(ວົງມົນ)** | ຮ້ອຍ 1-10**(ສ້າງສັນ)** | ສີ, ຮູບຮ່າງ ແລະ ວັດຖຸສິ່ງຂອງ **(ເກມ)** | ຮູບພາບບຸກຄົນສຳຄັນພາຍໃນບ້ານທີ່ເທົ່າກັນບໍ່ເກີນ10 **(ເກມ)** | ໜ້ອຍກວ່າບໍ່ເກີນ 10 **(ວົງມົນ)** | | | ແຕ່ 0-5**(ວົງມົນ)** | ເງິນກີບໃບ 100 ແລະ 500 ກີບ **(ວົງມົນ)** | | | ຮອຍຈ້ຳ ແຕ່ 0-5 **(ສ້າງສັນ)** |
| 5. ທຳມະຊາດອ້ອມຕົວເຮົາ | ນັບບາດຍ່າງ 1-15 **(ເຄື່ອນໄຫວ)** | | ນັບຮູບພາບສັດ ແລະ ຕົ້ນໄມ້ 1-10 **(ວົງມົນ)** | | ຮ່ວມຈຳນວນສິ່ງຂອງຕ່າງໆຈາກການປັ້ນ 1-10**(ສ້າງສັນ)** | ແຍກຈຳນວນສິ່ງຂອງຕ່າງໆຈາກການປັ້ນ **(ສ້າງສັນ)** | | | | ອ່ານຕາມລຳດັບແຕ່ 0-9**(ວົງມົນ)** | | | ອ່ານຕົວເລກອາຣັບຈາກໂມງ **(ວົງມົນ)** | ຂຽນຕາມແບບແຕ່ 0-9**(ສ້າງສັນ)** | |
| 6. ສິ່ງແວດລ້ອມອ້ອມຕົວເຮົາ | | | ນັບໄມ້ດີ້ 1-15 **(ວົງມົນ)** | ຈັດລຳດັບທີສິ່ງຂອງ ເຊັ່ນ: ກ້ອນຫີນ, ໃບໄມ້ ແລະ ເຄື່ອງຫຼິ້ນ**(ເກມ)** | | | ປຽບທຽບຈຳນວນທີ່ເທົ່າກັນບໍ່ເກີນ 15: ໃບໄມ້ **(ເກມ)** | | ປຽບທຽບຈຳນວນທີ່ຫຼາຍກວ່າບໍ່ເກີນ 15: ໝາກສາລີ **(ວົງມົນ)** | | ອ່ານຕາມລຳດັບແຕ່ 0-9 **(ວົງມົນ)** | *ອ່ານຕົວເລກລາວ ແລະ ອາຣັບຈາກເງິນກີບ 100-500* ***(ວົງມົນ)*** | | | ຂຽນຕາມຮອຍຈ້ຳແຕ່ 0-7 **(ສ້າງສັນ)** |
| 7. ການຄົມມະນາຄົມ ແລະ ການສື່ສານ | ນັບບາດຍ່າງ 1-20 **(ເຄື່ອນໄຫວ)** | | ນັບຮູບພາບລົດ, ເຮືອບິນ ແລະ ໂທລະສັບ 1-15 **(ວົງມົນ)** | ຈັດລຳດັບທີຍານພາຫະນະຕາມຮູບພາບ **(ເກມ)** | ຮ່ວມຈຳນວນສິ່ງຂອງຈາກການຕໍ່ຕາມແບບບ໋ອກ 1-10 **(ຕາມມຸມ)** | ແຍກຈຳນວນສິ່ງຂອງຕາມສີ, ຮູບຮ່າງ, ຂະໜາດ ແລະ ຮູບພາບ **(ວົງມົນ)** | | | | ອ່ານຕາມລຳດັບແຕ່ 0-9**(ວົງມົນ)** | | | ອ່ານຕົວເລກອາຣັບຈາກປະຕິທິນ ແລະ ຮູບພາບປ້າຍລົດ**(ວົງມົນ)** | ຂຽນຕາມແບບແຕ່ 0-15**(ສ້າງສັນ)** | |
| 8. ສິ່ງຕ່າງໆອ້ອມຕົວເຮົາ | | | ນັບໄມ້ດີ້ 1-20 **(ວົງມົນ)** | | | | ປຽບຈຳນວນທີ່ເທົ່າກັນບໍ່ເກີນ 20 **(ວົງມົນ)** | | ປຽບຈຳນວນທີ່ຫຼາຍກວ່າບໍ່ເກີນ 20 **(ວົງມົນ)** | | ອ່ານຕາມລຳດັບແຕ່ 0-9**(ວົງມົນ)** | ອ່ານຕົວເລກລາວ ແລະ ອາຣັບຈາກເງິນກີບ 100 ແລະ 500 **(ວົງມົນ)** | ອ່ານຕົວເລກລາວ, ອາຣັບຕາຕະລາງສະແດງຈຳນວນ 1-20 ໑-໔໐ **(ວົງມົນ)** | ຂຽນຕາມແບບແຕ່ 0-20**(ສ້າງສັນ)** | ຂຽນຕາມຮອຍຈ້ຳແຕ່ 0-9 **(ສ້າງສັນ)** |

## 2. ທັກສະທາງດ້ານພຶດຊະຄະນິດ

| ໜ່ວຍການສອນ | ທັກສະທາງດ້ານພຶດຊະຄະນິດ | | | | | |
|---|---|---|---|---|---|---|
| | ບອກຄວາມສຳພັນທີ່ຄືກັນ, ແຕກຕ່າງກັນຂອງຮູບເລຂາຄະນິດ, ຮູບອື່ນໆທີ່ກຳນົດ ແລະ ສ້າງແບບຮູບຕາມຄວາມຄິດເດັກ (2ມິຕິ) | | | ບອກຄວາມສຳພັນທີ່ຄືກັນ, ແຕກຕ່າງກັນຂອງຮູບຊົງເລຂາຄະນິດ (ບູ້ອກ) ທີ່ກຳນົດໄວ້ ແລະ ສ້າງແບບຮູບຕາມຄວາມຄິດເດັກ (3 ມິຕິ) | | |
| | ວາງຮູບຕາມແບບໂດຍກຳນົດຕາມສີ, ຂະໜາດ ແລະ ຮູບເລຂາຄະນິດ | ວາງຮູບຕາມແບບ ແລະ ວາງຮູບຕາມຄວາມຄິດຂອງເດັກ | ວາງແບບຮູບໃຫ້ເຂົ້າຊຸດຕາມແບບ ແລະ ຕາມຄວາມຄິດເດັກ | ຕໍ່ແບບຮູບຕາມແບບໂດຍກຳນົດສີ, ຂະໜາດ ແລະ ຮູບຊົງ | ຕໍ່ແບບຮູບໂດຍການສ້າງແບບຮູບຊົງຕາມຄວາມຄິດເດັກ | ຕໍ່ແບບຮູບໃຫ້ເຂົ້າຊຸດຕາມແບບ ແລະ ຕາມຄວາມຄິດເດັກ |
| 1. ຕົວຂອງຂ້ອຍ | 1. ວາງຮູບມືສີແດງ, ເຫຼືອງ, ຟ້າສະຫຼັບກັນ **(ເກມ)**<br><br>2. ຮູບວົງມົນ, ສີ່ແຈ ແລະ ສາມແຈສະຫຼັບກັນ<br><br>3. ຮູບວົງມົນ, ສີ່ແຈ ແລະ ສາມແຈນ້ອຍໃຫຍ່ສະຫຼັບກັນ<br> | ຮູບຄົນ, ເຄື່ອງນຸ່ງ (ເສື້ອ, ສິ້ນ)<br><br>**(ເກມ)** | ຮູບເຄື່ອງນຸ່ງ (ເສື້ອ, ສິ້ນ)<br><br>**(ເກມ)** | 1. ຮູບວົງມົນ, ສີ່ແຈສີແດງ, ເຫຼືອງ **(ເກມ)**<br><br>2.ຮູບວົງມົນ, ສີ່ແຈນ້ອຍໃຫຍ່<br> | ຮູບຄົນ, ເຄື່ອງນຸ່ງ (ກະໂປງ, ເກີບ)<br><br><br>**(ຫຼິ້ນຕາມມຸມ)** | ຮູບເຄື່ອງນຸ່ງ (ເສື້ອ, ເກີບ ແລະ ຖົງຕີນ)<br>1. ເສື້ອ<br><br>2. ເກີບ<br>3. ຖົງຕີນ<br><br>**(ຫຼິ້ນຕາມມຸມ)** |
| 2. ຄອບຄົວຂອງຂ້ອຍ | | ຮູບເຮືອນ, ເຄື່ອງໃຊ້(ໂຕະ)<br> | ຮູບເຄື່ອງໃຊ້ໃນການຄົວກິນ (ໝໍ້, ຈ່ອງ)**(ເກມ)**<br> | | ຮູບເຮືອນ, ເຄື່ອງໃຊ້ (ຕູ້ເຢັນ)<br><br>**(ຫຼິ້ນຕາມມຸມ)** | ຮູບເຄື່ອງໃຊ້ໃນການຄົວກິນ (ຄົກ ແລະ ສາກ)<br>**(ຫຼິ້ນຕາມມຸມ)**<br> |
| 3. ໂຮງຮຽນຂອງຂ້ອຍ | | 1. ຮູບໂຮງຮຽນ **(ເກມ)**<br><br>2.ຮູບໂຕະ<br><br>3. ຮູບຕັ່ງ<br><br>4. ຮູບຮົ້ວ<br> | ເຄື່ອງຮຽນ (ຖົງ, ໄມ້ບັນທັດ, ສໍ)<br><br>**(ເກມ)** | | 1. ຮູບໂຮງຮຽນ<br><br>2. ຮູບໂຕະ<br><br>3. ຮູບຕັ່ງ<br><br>4. ຮູບຮົ້ວ<br><br>**(ຫຼິ້ນຕາມມຸມ)** | ຮູບເຄື່ອງຮຽນ<br><br>**(ຫຼິ້ນຕາມມຸມ)** |
| 4. ບ້ານຂອງຂ້ອຍ | | 1. ຮູບວັດ<br><br>2. ຮູບທາດ<br> | ຮູບອາຄານ **(ເກມ)**<br> | |  1.ຮູບວັດ<br>2. ຮູບພະທາດ<br> | ອາຄານ<br><br>**(ຫຼິ້ນຕາມມຸມ)** |

| | | | | | | |
|---|---|---|---|---|---|---|
| | | 4 5 6<br>7 8 9<br>2. ຮູບຕົວພັງສີ<br>ກ - ຮ<br>3. ເຄື່ອງຫຼິ້ນ<br>4. ເຄື່ອງໃຊ້<br>5. ອາຫານ | | | 4 5 6<br>7 8 9<br>2. ຕົວພັງສີ<br>ກ - ຮ<br>3. ເຄື່ອງຫຼິ້ນ<br>4. ເຄື່ອງໃຊ້<br>5.ອາຫານ<br>**(ຫຼິ້ນຕາມມຸມ)** | |

## 3. ທັກສະທາງດ້ານການວັດແທກ



| **ໜ່ວຍການສອນ** | **ທັກສະທາງດ້ານການວັດແທກ** | | | | | |
|---|---|---|---|---|---|---|
| | ວັດແທກ, ບອກຄວາມຍາວ ແລະ ຄວາມສູງໂດຍໃຊ້ຄຳວ່າສັ້ນກວ່າ, ຍາວກວ່າ, ຕໍ່າກວ່າ, ສູງກວ່າ, ຍາວເທົ່າກັນ ແລະ ສູງເທົ່າກັນ | ຜອງ ແລະ ບອກປະລິມານ ໂດຍນຳໃຊ້ຄຳວ່າປະລິມານ ຫຼາຍກວ່າ, ໜ້ອຍກວ່າ ແລະ ເທົ່າກັນ | ຊັ່ງ ແລະ ບອກນ້ຳໜັກ ສິ່ງຕ່າງໆໂດຍໃຊ້ຄຳວ່າ ໜັກກວ່າ, ເບົາກວ່າ, ໜັກເທົ່າກັນ | ເວລາບອກກິດຈະກຳ ຫຼື ເຫດການທີ່ເກີດຂຶ້ນໃນ ມື້ວານ, ມື້ນີ້ ແລະ ມື້ອື່ນ | ລຽນລຳດັບຊື່ວັນໃນໜຶ່ງ ອາທິດ ແລະ ຊື່ເດືອນໃນ 1 ປີ | ບອກລັກສະນະເງິນກີບ ໂດຍການ ສັງເກດສີ, ຮູບບຸກ ຄົນສຳຄັນ, ສະຖານທີ່ສຳຄັນ ຂອງຊາດ, ຕົວເລກລາວ, ອາຣັບ |
| 1. ຕົວຂອງຂ້ອຍ | ວັດແທກຮູບຮ່າງ, ຄວາມຍາວ ຂອງສ່ວນປະກອບ: ຜົມ, ແຂນ, ຂາ ເດັກນ້ອຍຍິງ ແລະ ເດັກນ້ອຍ ຊາຍ **(ວົງມົນ)** | | | ບອກເວລາກິນອາຫານ (ເຊົ້າ, ສວາຍ, ແລງ) **(ວົງມົນ)** | | |
| 2. ຄອບຄົວຂອງຂ້ອຍ | ວັດແທກຄວາມຍາວ ແລະ ຄວາມ ສູງຂອງເຄື່ອງໃຊ້ໃນຄອບຄົວ ຫຼື ມີພາຍໃນເຮືອນ: **(ວົງມົນ)** | | ຊັ່ງ ແລະ ປະມານນ້ຳ ໜັກຂອງເຄື່ອງໃຊ້ດ້ວຍມື. (ຫຼິ້ນຕາມມຸມ) | | | |
| 3. ໂຮງຮຽນຂອງຂ້ອຍ | | | | ບອກຊື່ວັນ ແລະ ກິດ ຈະກຳໃນມື້ນີ້, ມື້ວານ, ມື້ອື່ນ **(ວົງມົນ)** ແລະ ໃຫ້ໃຊ້ສົນທະນາທອບ ຄືນທຸກວັນໃນເວລາຮັບ | ລຽນລຳດັບຊື່ວັນໃນ ໜຶ່ງອາທິດ ແລະ ຊື່ວັນເຂົ້າຮຽນ, ວັນພັກຮຽນ:<br>- ອາທິດໜຶ່ງມີ 7 ວັນ:<br>ວັນຈັນ ເຖິງ ວັນອາທິດ<br>-ວັນເຂົ້າຮຽນມີ 5 ວັນ: | |

| | | | | | | |
|---|---|---|---|---|---|---|
| | | | | ຫຼື ກ່ອນສິ່ງເດັກ | ວັນຈັນ ເຖິງ ວັນສຸກ.<br>- ວັນພັກຮຽນມີ 2 ວັນ: ວັນເສົາ ແລະ ວັນອາທິດ | |
| 4. ບ້ານຂອງຂ້ອຍ | | ຜອງດ້ວຍຈອກແກ້ວ ຫຼື ຢາງຮູບຮ່າງຄືກັນມີ 2 ຂະໜາດ (ນ້ອຍ-ໃຫຍ່) (ຫຼິ້ນກາງແຈ້ງ) | | | | ບອກລັກສະນະເງິນກີບ: ໃບ 500 ແລະ 1000 ກີບ (ຫຼິ້ນຕາມມຸມ) |
| 5. ທຳມະຊາດອ້ອມຕົວເຮົາ | | ຜອງດ້ວຍຈອກແກ້ວ ຫຼື ຢາງຮູບຮ່າງຕ່າງກັນມີ ຂະໜາດເທົ່າກັນ (ຫຼິ້ນກາງແຈ້ງ) | | | ລຽນລຳດັບຊື່ເດືອນ,ກິດຈະ ກຳວັນບຸນ, ວັນສຳຄັນຂອງຊາດໃນໜຶ່ງປີ:<br>1. ມັງກອນ (ວັນກອງທັບ, ປີໃໝ່ສາກົນ).<br>2. ກຸມພາ<br>3. ມີນາ (ບຸນພະເວດ, ວັນແມ່ຍິງສາກົນ).<br>4. ເມສາ (ປີໃໝ່ລາວ).<br>5. ພຶດສະພາ (ວັນກຳມະກອນສາກົນ, ພັກປະຈຳປີຮຽນ).<br>6. ມິຖຸນາ (ເດັກນ້ອຍສາກົນ).<br>7. ກໍລະກົດ (ເຂົ້າພັນສາ).<br>8. ສິງຫາ<br>9. ກັນຍາ (ເລີ່ມຕົ້ນເຂົ້າຮຽນໃໝ່).<br>10. ຕຸລາ (ອອກພັນສາ, ບຸນຊ່ວງເຮືອ).<br>11. ພະຈິກ<br>12. ທັນວາ (ວັນຊາດລາວ) **(ວົງມົນ)** | |
| 6. ສິ່ງແວດລ້ອມອ້ອມຕົວ ເຮົາ | ວັດແທກຄວາມຍາວຂອງເຄື່ອງ ໃຊ້ດ້ວຍສ່ວນແຂນ: ນີ້ວມື, ຝາມື, ແຂນສອກ, ແຂນສອງເບື້ອງ (ວາ) (ຫຼິ້ນກາງແຈ້ງ) | | ຊັ່ງ ແລະ ປະມານນ້ຳ ໜັກຂອງດິນ, ຫີນ, ນ້ຳ ດ້ວຍມື (ຫຼິ້ນຕາມມຸມ) | | | |
| 7. ການຄົມມະນາຄົມ ແລະ ການສື່ສານ | ວັດແທກຄວາມສູງຂອງເຄື່ອງໃຊ້ ດ້ວຍສ່ວນຂາ (ຫົວເຂົ່າ, ກົກຂາ), ແອວ, ບ່າໄຫຼ່, ຫົວ (ຫຼິ້ນກາງແຈ້ງ) | ຜອງດ້ວຍຈອກແກ້ວ ຫຼື ຢາງຮູບຮ່າງຕ່າງກັນມີ 2 ຂະໜາດ (ນ້ອຍ-ໃຫຍ່) (ຫຼິ້ນກາງແຈ້ງ) | | | | |
| 8. ສິ່ງຕ່າງໆອ້ອມຕົວເຮົາ | | | ຊັ່ງ ແລະ ປະມານນ້ຳ ໜັກຂອງເຄື່ອງຫຼິ້ນ. (ຫຼິ້ນຕາມມຸມ) | | | ບອກລັກສະນະເງິນກີບ: ໃບ 2000 ແລະ 5000 ກີບ (ຫຼິ້ນຕາມມຸມ) |

# 4. ທັກສະທາງດ້ານເລຂາຄະນິດ

| ໜ່ວຍການສອນ | ທັກສະທາງດ້ານເລຂາຄະນິດ | | | | | | |
|---|---|---|---|---|---|---|---|
| | ສະແດງສິ່ງຕ່າງໆຕາມຕຳແໜ່ງ, ທິດທາງ ແລະ ໄລຍະທາງທີ່ກຳນົດ | | | ສ້າງສັນສິລະປະຈາກຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈທີ່ກຳນົດໃຫ້ (2 ມິຕິ) | ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັບຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈທີ່ກຳນົດໃຫ້ | ສ້າງສັນສິລະປະຈາກຮູບຊົງກັບສາກ, ໜ່ວຍມົນ, ກ້ອນສາມແຈ, ທໍ່ກົມ, ກ້ອນສາກ (3ມິຕິ) | ບອກການປ່ຽນແປງທີ່ເກີດຂຶ້ນຈາກການຕັດ, ຕໍ່ເຕີມ, ພັບ, ພີຫຼື ພີຕາມສີ, ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈທີ່ກຳນົດໃຫ້ |
| | ຕຳແໜ່ງເທິງ, ລຸ່ມ, ໃນ,ນອກ, ຂຶ້ນ, ລົງ | ທິດທາງເບື້ອງຊ້າຍ, ເບື້ອງຂວາ, ທາງໜ້າ, ທາງຫຼັງ, ລະຫວ່າງ | ໄລຍະທາງໃກ້, ໄກ | | | | |
| 1. ຕົວຂອງຂ້ອຍ | | ເບື້ອງຊ້າຍ, ເບື້ອງຂວາ **(ເຄື່ອນ ໄຫວ ແລະ ຈັງຫວະ)** | | ແຕ້ມ ແລະ ຕັດຕິດຮູບຄົນໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ (ເພີ່ມຮູບເພີ່ມຫົວຂໍ້)  **(ສິລະປະສ້າງສັນ)** | ບອກຊື່ພາກສ່ວນຕ່າງໆທີ່ເປັນຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ: ຮູບເດັກຍິງ, ເດັກຊາຍ ແລະ ເຄື່ອງນຸ່ງຫົ່ມ  **(ວົງມົນ)** | | ພັບຜ້າຮູບຈະຕຸລັດເປັນຮູບສາມແຈ  **(ສິລະປະສ້າງສັນ)** |
| 2. ຄອບຄົວຂອງຂ້ອຍ | ໃນ, ນອກ **(ວົງມົນ)** | | | | ບອກຊື່ສິ່ງຕ່າງໆທີ່ເປັນຮູບວົງມົນເຄື່ອງໃຊ້ໃນຄອບຄົວ: ຮູບໂອ, ຈານ, ຖ້ວຍ, ພາເຂົ້າ **(ວົງມົນ)**  | ປັ້ນດິນເປັນຮູບຊົງກັບສາກ, ໜ່ວຍມົນ, ທໍ່ລ່ຽມ, ທໍ່ກົມ, ກ້ອນສາກໃຫ້ເປັນເຄື່ອງໃຊ້ໃນເຮືອນ **(ສິລະປະສ້າງສັນ)**  | ພີຜ້າຮູບສາມແຈເປັນຮູບຈະຕຸລັດ **(ສິລະປະສ້າງສັນ)**  |
| 3. ໂຮງຮຽນຂອງຂ້ອຍ | | ທາງໜ້າ, ລະຫວ່າງ, ທາງຫຼັງ **(ເຄື່ອນໄຫວ ແລະ ຈັງຫວະ)** | | ແຕ້ມ ແລະ ຕັດຕິດຮູບເຄື່ອງໃຊ້ໃນໂຮງຮຽນໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ **(ສິລະປະສ້າງສັນ)** | ບອກຊື່ສິ່ງຕ່າງໆທີ່ເປັນຮູບສີ່ແຈ, ວົງມົນ: ທຸງຊາດ, ກະດານ, ປຶ້ມ **(ວົງມົນ)**  | | ພັບຜ້າຮູບວົງມົນເປັນຮູບສາມແຈ **(ສິລະປະສ້າງສັນ)**  |
| 4. ບ້ານຂອງຂ້ອຍ | | | ໃກ້, ໄກ **(ວົງມົນ)** | | ບອກຊື່ສິ່ງຕ່າງໆທີ່ເປັນຮູບສີ່ແຈ, ວົງມົນ: ກະດົ້ງ, ຕິບເຂົ້າ, ສາດ**(ວົງມົນ)**  | ຮ້ອຍຮູບເຄື່ອງປະດັບ ໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ  | ພີຜ້າຮູບສາມແຈເປັນຮູບວົງມົນ **(ສິລະປະສ້າງສັນ)**  |

| | | | | | | | |
|---|---|---|---|---|---|---|---|
| 5. ທຳມະຊາດອ້ອມຕົວເຮົາ | | ເບື້ອງຊ້າຍ, ເບື້ອງຂວາ | | ແຕ້ມ ແລະ ຕັດ-ຕິດຮູບຕົ້ນໄມ້ໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ (**ສິລະປະສ້າງສັນ**)  | ບອກຊື່ສິ່ງຕ່າງໆທີ່ເປັນຮູບສີ່ແຈ, ວົງມົນ: ຮູບສັດ, ຕົ້ນໄມ້ (**ວົງມົນ**)  | | ຕັດເຈ້ຍຮູບສີ່ແຈເປັນຮູບສີ່ແຈຄືກັນສອງອັນ (**ສິລະປະສ້າງສັນ**)  |
| 6. ສິ່ງແວດລ້ອມອ້ອມຕົວເຮົາ | ເທິງ, ລຸ່ມ (**ວົງມົນ**) | | | | ບອກຊື່ສິ່ງຕ່າງໆທີ່ເປັນຮູບສີ່ແຈ, ວົງມົນ: ຮູບຂົວ, ວັດ (ວົງມົນ   | ປັ້ນຮູບສັດ, ຕົ້ນໄມ້ໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ (**ສິລະປະສ້າງສັນ**)  | ຕໍ່ຮູບສີ່ແຈນ້ອຍສອງອັນເປັນຮູບສີ່ແຈໃຫຍ່  |
| 7. ການຄົມມະນາຄົມ ແລະ ການສື່ສານ | | | ໃກ້, ໄກ (**ວົງມົນ**) | ແຕ້ມ ແລະ ຕັດ-ຕິດຮູບລົດ, ເຮືອ, ເຮືອບິນໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ (**ສິລະປະສ້າງສັນ**) | ບອກຊື່ສິ່ງຕ່າງໆທີ່ເປັນຮູບສີ່ແຈ, ວົງມົນ, ສາມແຈ, ຈະຕຸລັດ: ຮູບລົດ, ເຮືອ, ເຮືອບິນ (**ວົງມົນ**)    | | ຕັດເຈ້ຍຮູບວົງມົນເປັນຮູບເຄິ່ງວົງມົນຄືກັນສອງອັນ (**ສິລະປະສ້າງສັນ**)  |
| 8. ສິ່ງຕ່າງໆອ້ອມຕົວເຮົາ | ຂຶ້ນ, ລົງ (**ເຄື່ອນໄຫວ ແລະ ຈັງຫວະ**) | | | | ບອກຊື່ສິ່ງຕ່າງໆທີ່ເປັນຮູບສີ່ແຈສາກ, ວົງມົນ, ສາມແຈ, ຈະຕຸລັດ: ຮູບເຄື່ອງຫຼິ້ນ, ເຄື່ອງໃຊ້ (**ວົງມົນ**)  | ຮ້ອຍຮູບເຄື່ອງປະດັບໂດຍນຳໃຊ້ຮູບວົງມົນ, ສາມແຈ, ຈະຕຸລັດ, ສີ່ແຈ (**ສິລະປະສ້າງສັນ**) | ຕໍ່ເຕີມຮູບເຄິ່ງວົງມົນສອງອັນເປັນຮູບວົງມົນ(**ຫຼິ້ນຕາມມຸມ**)  |

### 5.3 ການຈັດການຮຽນ-ການສອນ

ການຈັດການຮຽນ-ການສອນໃນຊັ້ນອະນຸບານສຶກສາປີທີ 3 ແມ່ນນຳໃຊ້ວິທີການຈັດການຮຽນ-ການສອນແບບບູລະນາການທາງດ້ານເນື້ອໃນຄວາມຮູ້ທາງພາສາລາວ, ຄະນິດສາດ, ວິທະຍາສາດມາປະສົມປະສານກັນ ແລະ ຈັດການຮຽນການສອນໃນ 6 ກິດຈະກຳເຊັ່ນ: ກິດຈະກຳວົງມົນ, ສິລະປະສ້າງສັນ, ເຄື່ອນໄຫວ ແລະ ຈັ່ງຫວະ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການສຶກສາ ເພື່ອໃຫ້ເກີດການຮຽນຮູ້ທີ່ມີຫຼາຍວິທີ ແລະ ມີຫຼາຍຄວາມໝາຍທີ່ຫຼາກຫຼາຍສາມາດນຳໄປໃຊ້ໃນຊີວິດປະຈຳວັນ.

# ພາກທີ II. ການຈັດການຮຽນ-ການສອນຊັ້ນອະນຸບານສຶກສາປີທີ 3

## 1. ຄວາມເຂົ້າໃຈກ່ຽວກັບພັດທະນາການຮຽນຮູ້ຂອງເດັກ

ເດັກໄວອາຍຸ 5-6 ປີ ຊີວິດສ່ວນຫຼາຍມີຄວາມຜູກພັນ, ສຳພັນຢ່າງໃກ້ຊິດກັບພໍ່ແມ່ ແລະ ບຸກຄົນທີ່ຢູ່ໃກ້ຊິດ ກິດຈະກຳການຮຽນຮູ້ຈຶ່ງເປັນເລື່ອງທີ່ຢູ່ໃກ້ຕົວ ແລະ ເປັນແບບແຜນດຳລົງຊີວິດໃນຄອບຄົວເດັກຈະຮຽນແບບການເຮັດວຽກ, ພຶດຕິກຳ ຫຼື ບຸກຄະລິກພາບຄົນທີ່ຕົນຮັກຈາກນັ້ນຈຶ່ງເກີດມີຄວາມປະທັບໃຈແລ້ວກາຍເປັນແຮງຈູງໃຈທີ່ນຳໄປສູ່ການຮຽນແບບຜ່ານການຫຼິ້ນ. ດັ່ງນັ້ນ ກິດຈະກຳການຮຽນ-ການສອນໃນຊັ້ນອະນຸບານສຶກສາປີທີ 3 ສ່ວນຫຼາຍຈຶ່ງເປັນການຫຼິ້ນ ແລະ ການປະຕິບັດຕົວຈິງລະຫວ່າງຄູກັບເດັກ.

ເນື່ອງຈາກວ່າເດັກໄວນີ້ມີຈຸດພິເສດດ້ານການຈະເລີນເຕີບໃຫຍ່ຂອງຮ່າງກາຍ ຈາກການເຮັດວຽກລະຫວ່າງສະໝອງ ແລະ ລະບົບເຜົາຜານຂອງຮ່າງກາຍຢ່າງເຂັ້ມແຂງ, ເພື່ອສ້າງຮ່າງກາຍ ແລະ ອະໄວຍະວະຕ່າງໆໃຫ້ມີການປ່ຽນແປງໂຄງສ້າງຮູບຊົງພາຍໃນທີ່ນຳໄປສູ່ການເປັນຜູ້ໃຫຍ່ ແລະ ຄວາມສຳນຶກທາງດ້ານຈິດໃຈບໍ່ທັນສະແດງອອກຢ່າງຊັດເຈນ. ເດັກໄວນີ້ອາລົມຄວາມຮູ້ສຶກຍັງບໍ່ລະອຽດອ່ອນ ຈຶ່ງບໍ່ທັນສາມາດແຍກຄວາມໃນໃຈ ແລະ ການກະທຳທີ່ສະແດງອອກພາຍນອກໄດ້ຢ່າງແທ້ຈິງ.

ການກະທຳທີ່ສະແດງເຖິງຄຸນລັກສະນະທີ່ດີງາມ ໃນຄວາມສຳນຶກຂອງເດັກ 5-6 ປີ ເກີດຈາກຄວາມຊິນເຄີຍໃນການປະຕິບັດກິດຈະກຳຊ້ຳຄືນເລື່ອງເກົ່າຫຼາຍກວ່າເກີດຈາກການຄົ້ນຄິດພິຈາລະນາ ຫຼື ວິເຄາະບັນຫາ.

ດັ່ງນັ້ນ, ການຈັດສະພາບແວດລ້ອມ ຫຼື ກິດຈະກຳຕ່າງໆຄວນເປັນກິດຈະກຳໃຫ້ເດັກໄດ້ປະຕິບັດຕົວຈິງດ້ວຍຕົນເອງຫຼາຍກວ່າໃຫ້ເດັກນັ່ງມິດງຽບຟັງຄູສອນ ເຊິ່ງຄວາມຮູ້ທີ່ໄດ້ຈາກການປະຕິບັດຕົວຈິງຈະນຳໄປສູ່ຄວາມເຂົ້າໃຈໃນພາຍຫຼັງ.



## 2. ການຈັດການຮຽນ-ການສອນ ຕາມມາດຖານສະມັດຖະພາບການກຽມຄວາມພ້ອມ

ການຈັດການຮຽນການສອນ ແມ່ນອີງໃສ່ມາດຖານສະມັດຖະພາບການກຽມຄວາມພ້ອມໃນພັດທະນາການ 5 ດ້ານສຳລັບເດັກອາຍຸ 5-6 ປີ ທີ່ເປັນຕົວຊີ້ບອກໃນການກຳນົດຈຸດປະສົງຂອງກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ, ກິດຈະກຳວົງມົນ, ກິດຈະກຳສິລະປະສ້າງສັນ, ກິດຈະກຳການຫຼິ້ນກາງແຈ້ງ, ກິດຈະກຳການຫຼິ້ນຕາມມຸມທີ່ມີໃນປຶ້ມແຜນການຈັດປະສົບການໜ່ວຍຕົວຂອງຂ້ອຍ, ໜ່ວຍຄອບຄົວຂອງຂ້ອຍ, ໜ່ວຍໂຮງຮຽນຂອງຂ້ອຍ, ໜ່ວຍບ້ານຂອງຂ້ອຍ, ໜ່ວຍທຳມະຊາດອ້ອມຕົວເຮົາ, ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ, ໜ່ວຍການຄົມມະນາຄົມ ແລະ ການສື່ສານ, ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ເຊິ່ງມີລາຍລະອຽດໃນມາດຖານສະມັດຖະພາບການກຽມຄວາມພ້ອມເດັກອາຍຸ 5-6 ປີ ແລະ ມີຄຸນລັກສະນະທີ່ຕ້ອງໄດ້ພັດທະນາຕາມຕົວຊີ້ບອກການກຽມຄວາມພ້ອມດັ່ງນີ້:

1). ພັດທະນາການທາງດ້ານຮ່າງກາຍ, ສຸຂະອະນາໄມ ແລະ ຄວາມປອດໄພ.

- ມີນ້ຳໜັກ ແລະ ລວງສູງຕາມເກນມາດຖານອາຍຸຂອງກະຊວງສາທາລະນະສຸກ.
- ກິນອາຫານທີ່ມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນ້ຳສະອາດ.
- ລ້າງມືກ່ອນ, ຫຼັງກິນເຂົ້າ, ຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນ້ຳ ຫຼື ວິດຖ່າຍ.
- ບອກຄວາມຕ້ອງການເມື່ອຈະຂັບຖ່າຍ, ຂັບຖ່າຍເປັນເວລາ.
- ພັກຜ່ອນ ແລະ ນອນເປັນເວລາ.
- ລະມັດລະວັງເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ.
- ຍ່າງຕໍ່ຕີນຖອຍຫຼັງຕາມແບບທີ່ກຳນົດ.
- ເຕັ້ນຂາດຽວໄປທາງໜ້າໄດ້ຢ່າງຕໍ່ເນື່ອງ.
- ຍ່າງຂຶ້ນ, ລົງຂັ້ນໄດສະຫຼັບຕີນຢ່າງຄ່ອງແຄ່ວ.
- ແລ່ນຢ່າງວ່ອງໄວ ແລະ ຢຸດໂດຍບໍ່ໃຫ້ເສຍການຊົງຕົວ.
- ຂີດ ຫຼື ແຕ້ມເປັນຮູບພາບ.
- ຂຽນເປັນຄຳ ແລະ ປະໂຫຍກສັ້ນຕາມຮອຍຈ້ຳ.
- ຕັດເຈ້ຍຕາມເສັ້ນທີ່ກຳນົດບໍ່ມີຮອຍບິດບຽວໃຫ້ຂາດຈາກກັນ.
- ປັ້ນຕາມແບບໂດຍມີຮູບຮ່າງລະອຽດ, ມີຄວາມຄິດສ້າງສັນ ແລະ ແປກໃໝ່.
- ຮ້ອຍວັດສະດຸທີ່ມີຮູຂະໜາດນ້ອຍ.
- ໂຍນໝາກບານໄປທາງໜ້າຢ່າງມີເປົ້າໝາຍໃນໄລຍະທາງຍາວ.
- ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນດ້ວຍສອງມືໂດຍບໍ່ໃຊ້ຕົນຕົວຊ່ວຍ.
- ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງໆຕາມແບບທີ່ກຳນົດ.
- ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວໄດ້ດ້ວຍຕົນເອງ.
- ກິນອາຫານ ແລະ ດື່ມນ້ຳໄດ້ດ້ວຍຕົນເອງ.
- ໃຊ້ຫ້ອງນ້ຳ, ຫ້ອງຖ່າຍໄດ້ດ້ວຍຕົນເອງ.

2). ພັດທະນາການທາງດ້ານອາລົມ-ຈິດໃຈ

- ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ.
- ໝັ້ນໃຈໃນຕົນເອງ, ກ້າສະແດງອອກໃນການຫຼິ້ນ ແລະ ຮຽນ.
- ພໍໃຈໃນສິ່ງທີ່ຕົນເອງເຮັດໄດ້, ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ.

- ມີມາລະຍາດໃນການຟັງ, ເວົ້າ, ນັ່ງ, ຍ່າງ ແລະ ກິນຕາມໄວອາຍຸ.
- ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນດ້ວຍຕົນເອງ.
- ອົດທົນປະຕິບັດກິດຈະກຳທີ່ໄດ້ຮັບມອບໝາຍໃຫ້ສຳເລັດດ້ວຍຕົນເອງ.
- ຮູ້ຈັກເຄື່ອງໃຊ້ຂອງຕົນເອງ ແລະ ເຄື່ອງຂອງຜູ້ອື່ນ.
- ຂໍໂທດເມື່ອຕົນເອງເຮັດບໍ່ຖືກຕ້ອງ ແລະ ໃຫ້ອະໄພຜູ້ອື່ນທີ່ເຮັດຜິດ.
- ສະແດງຄວາມຮັກແພງນັບຖືຕໍ່ຜູ້ອາວຸໂສ, ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ເພື່ອນ.
- ແບ່ງປັນສິ່ງຂອງ ແລະ ໃຫ້ຄວາມຊ່ວຍເຫຼືອຜູ້ອື່ນ.
- ສະແດງຄວາມຮັກແພງ ແລະ ຊ່ວຍລ້ຽງດູສັດລ້ຽງ.
- ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນກັບສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ.
- ສະແດງການເຄື່ອນໄຫວປະກອບເພງ, ຈັງຫວະດົນຕີຕາມຄຳສັ່ງ ແລະ ຈິນຕະນາການ.
- ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດຕາມແບບ ແລະ ຕາມຈິນຕະນາການ.

3). ພັດທະນາການທາງດ້ານສັງຄົມ

- ສະແດງຄວາມສົນໃຈໃນການບົວລະບັດຮັກສາທຳມະຊາດ ແລະ ສິ່ງແວດລ້ອມ.
- ຖິ້ມຂີ້ເຫຍື້ອຖືກບ່ອນ.
- ຊ່ວຍບົວລະບັດຮັກສາຕົ້ນໄມ້ ແລະ ສະຖານທີ່ສຳຄັນດ້ວຍຕົນເອງ.
- ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດໄດ້ດ້ວຍຕົນເອງ.
- ສະແດງຄວາມເຄົາລົບນັບຖືຜູ້ໃຫຍ່, ຜູ້ອາວຸໂສ ແລະ ພະສົງໄດ້ດ້ວຍຕົນເອງ.
- ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະໄດ້ດ້ວຍຕົນເອງ.
- ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ, ວັດທະນາທຳຂອງຊາດ ແລະ ທ້ອງຖິ່ນໄດ້ດ້ວຍຕົນເອງ.
- ລໍຄອຍຕາມລຳດັບກ່ອນ, ຫຼັງ ແລະ ຍອມຮັບຄຳຄິດເຫັນຂອງຜູ້ອື່ນ.
- ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ.
- ປະຕິບັດຕົນຕາມຂໍ້ຕົກລົງໃນການເຄື່ອນໄຫວກິດຈະກຳການຫຼິ້ນ ແລະ ຮຽນໄດ້ດ້ວຍຕົນເອງ.
- ປະຕິບັດຕົນເປັນຜູ້ນຳພາໝູ່ ແລະ ຜູ້ເຮັດຕາມໝູ່.

4). ພັດທະນາການທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ

- ນັບປາກເປົ່າຕາມລຳດັບຈາກ 1 ເຖິງ 20.
- ນັບປາກເປົ່າຖອຍຫຼັງຈາກ 10 ເຖິງ 1.
- ບອກຈຳນວນຂອງສິ່ງຕ່າງໆບໍ່ເກີນ 20 ຢ່າງໂດຍການນັບ.
- ສະແດງສິ່ງຕ່າງໆຕາມຈຳນວນທີ່ກຳນົດໃຫ້ແຕ່ 1 ເຖິງ 20.
- ອ່ານຕົວເລກອາຣັບແຕ່ 1 ເຖິງ 20.
- ອ່ານຕົວເລກລາວແຕ່ 1 ເຖິງ 9
- ລະບຸຕົວເລກອາຣັບສະແດງຈຳນວນຂອງສິ່ງຕ່າງໆແຕ່ 1 ເຖິງ 20.
- ຂຽນຕົວເລກອາຣັບ ແລະ ຕົວເລກລາວແຕ່ 0 ເຖິງ 9 .
- ປຽບທຽບຈຳນວນຂອງສິ່ງຕ່າງໆສອງກຸ່ມໂດຍແຕ່ລະກຸ່ມມີຈຳນວນບໍ່ເກີນ 20 ວ່າມີຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ, ກຸ່ມໃດຈຳນວນຫຼາຍກວ່າ ຫຼື ໜ້ອຍກວ່າ.

- ບອກອັນດັບທີຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ.
- ລະບຸສິ່ງທີ່ຢູ່ໃນອັນດັບທີ່ກຳນົດໃຫ້.
- ບອກຈຳນວນທັງໝົດຈາກການຮ່ວມສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ 10.
- ບອກຈຳນວນທີ່ເຫຼືອເມື່ອແຍກກຸ່ມຍ່ອຍອອກຈາກກຸ່ມໃຫຍ່ມີຈຳນວນບໍ່ເກີນ 10.
- ວັດແທກ, ບອກຄວາມຍາວ ແລະ ຄວາມສູງຂອງສິ່ງຕ່າງໆທີ່ກຳນົດໃຫ້ ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ ແລະ ນຳໃຊ້ຄຳສັບ: ສັ້ນກວ່າ, ຍາວກວ່າ, ສູງກວ່າ, ຕ່ຳກວ່າ, ຍາວເທົ່າກັນ ຫຼື ສູງເທົ່າກັນ.
- ຊັ່ງ ແລະ ບອກນ້ຳໜັກຂອງສິ່ງຕ່າງໆທີ່ກຳນົດໃຫ້ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ ແລະ ນຳໃຊ້ຄຳສັບ: ໜັກກວ່າ, ເບົາກວ່າ, ໜັກເທົ່າກັນ.
- ຜອງ ແລະ ບອກປະລິມານຂອງສິ່ງຕ່າງໆທີ່ກຳນົດໃຫ້ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ ແລະ ນຳໃຊ້ຄຳສັບ: ປະລິມານຫຼາຍກວ່າ, ປະລິມານໜ້ອຍກວ່າ, ປະລິມານເທົ່າກັນ.
- ບອກຊະນິດ ແລະ ຄ່າຂອງເງິນກີບໃບ 500 ກີບ, 1000 ກີບ, 2000 ກີບ ໃນການແລກປ່ຽນສິນຄ້າ.
- ລຽນລຳດັບຊື່ວັນໃນໜຶ່ງອາທິດ ແລະ ຊື່ເດືອນໃນໜຶ່ງປີ.
- ບອກກິດຈະກຳ ຫຼື ເຫດການທີ່ເກີດຂຶ້ນມື້ນີ້. ມື້ວານ, ມື້ອື່ນ.
- ບອກຕຳແໜ່ງຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ເທິງ, ລຸ່ມ, ໃນ, ນອກ,
- ບອກທິດທາງຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ໜ້າ, ຫຼັງ, ກາງ, ເບື້ອງຊ້າຍ, ເບື້ອງຂວາ.
- ບອກໄລຍະທາງຂອງສິ່ງຕ່າງໆທີ່ກຳນົດໂດຍໃຊ້ຄຳວ່າ: ໃກ້, ໄກ.
- ສະແດງສິ່ງຕ່າງໆຕາມຕຳແໜ່ງ, ທິດທາງ ແລະ ໄລຍະທາງທີ່ກຳນົດ.
- ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັນ ຫຼື ຄ້າຍຄືກັນ: ທໍ່ກົມ, ກ້ອນສາກ, ກັບສາກ, ໜ່ວຍມົນ, ທາດຫຼ່ຽມທີ່ກຳນົດໃຫ້.
- ຈຳແນກຮູບຊົງ: ທໍ່ກົມ, ກ້ອນສາກ, ກັບສາກ, ໜ່ວຍມົນ, ທາດຫຼ່ຽມ.
- ສະແດງສິ່ງຕ່າງໆໃນຊີວິດປະຈຳວັນທີ່ຄືກັນ ຫຼື ຄ້າຍຄືກັນ: ຮູບວົງມົນ, ຮູບສາມແຈ ແລະ ຮູບສີ່ແຈທີ່ກຳນົດໃຫ້.
- ຈຳແນກຮູບວົງມົນ, ຮູບສາມແຈ ແລະ ຮູບສີ່ແຈ.
- ບອກການປ່ຽນແປງທີ່ເກີດຂຶ້ນຈາກການຕັດ,ຕິດ, ຕໍ່ເຕີມ, ພັບຮູບສີ່ແຈ, ຮູບສາມແຈ.
- ສ້າງສັນສິລະປະຈາກຮູບທໍ່ກົມ, ກ້ອນສາກ, ໜ່ວຍມົນ ແລະ ທາດຫຼ່ຽມ.
- ສ້າງສັນສິລະປະຈາກຮູບວົງມົນ, ຮູບສາມແຈ ແລະ ຮູບສີ່ແຈ.
- ຕໍ່ຮູບໃຫ້ເຂົ້າຊຸດກັບແບບຮູບທີ່ກຳນົດ.
- ສ້າງແບບຮູບຕາມຄວາມຄິດຂອງຕົນເອງ.
- ບອກລັກສະນະຄວາມຄືກັນ ແລະ ແຕກຕ່າງກັນຂອງສິ່ງຕ່າງໆດ້ວຍການເບິ່ງເຫັນ, ຟັງສຽງ, ຊີມລົດ, ດົມກິ່ນ, ຈັບບາຍ.
- ບອກຊື່ ແລະ ຄວາມສຳຄັນຂອງທຳມະຊາດ ແລະ ສິ່ງແວດລ້ອມທີ່ຢູ່ອ້ອມຮອບຕົວ.
- ບອກຊື່ ແລະ ຄວາມໝາຍຂອງວັນບຸນປະເພນີຂອງທ້ອງຖິ່ນ ແລະ ວັນສຳຄັນທາງປະຫວັດສາດ.
- ບອກຊື່ ແລະ ຄວາມສຳຄັນຂອງອາຊີບບຸກຄົນພາຍໃນຄອບຄົວຕົນເອງໄດ້ຖືກຕ້ອງ.

- ສະແດງຄວາມເຄົາລົບນັບຖືຕໍ່ບຸກຄົນສຳຄັນໃນຄອບຄົວ ແລະ ຄົນໃກ້ຄຽງໃນທ້ອງຖິ່ນດ້ວຍຕົນເອງ.
- ບອກຊື່ສະຖານທີ່ສຳຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ດ້ວຍຕົນເອງ.
- ບອກວິທີການຮັກສາຄວາມປອດໄພໃນການເດີນທາງໄດ້ດ້ວຍຕົນເອງ.
- ບອກການສື່ສານທາງໂທລະສັບ, ຈົດໝາຍ, ວິທະຍຸ, ໂທລະພາບ.
- ເຂົ້າຮ່ວມກິດຈະກຳການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົ້ນຈົນຈົບ.
- ຖາມຄຳຖາມ, ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ.
- ຕອບຂໍ້ສົງໄສດ້ວຍວິທີການຕ່າງໆ.
- ເຊື່ອມໂຍງຄວາມຮູ້, ທັກສະຕ່າງໆທີ່ໄດ້ຮຽນຈາກຄູ ແລະ ໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ.

5). ພັດທະນາການທາງດ້ານພາສາ

- ຟັງ ແລະ ນຳເລື່ອງທີ່ຟັງມາເລົ່າຕໍ່ໄດ້.
- ເວົ້າເປັນວັກເປັນຕອນຈາກການຟັງຄຳຄ່ອງ, ນິທານ, ເພງ, ເບິ່ງການສະແດງ.
- ນຳໃຊ້ຄຳສັບໃໝ່ໃນຊີວິດປະຈຳວັນໄດ້ 300 ຄຳຂຶ້ນໄປ.
- ສົນທະນາ, ຕອບຄຳຖາມຈາກເລື່ອງທີ່ໄດ້ຟັງ, ເບິ່ງເປັນຄຳເວົ້າທີ່ເປັນປະໂຫຍກຖືກຕ້ອງ ແລະ ແຈ່ມແຈ້ງ.
- ສະແດງມາລະຍາດໃນການຟັງ, ເບິ່ງ, ເວົ້າໄດ້ເໝາະສົມກັບໄວອາຍຸ, ໂອກາດ ແລະ ສະຖານທີ່.
- ເບິ່ງຮູບພາບຕາມປຶ້ມພ້ອມທັງອ່ານ ຫຼື ເວົ້າເປັນເລື່ອງໄປພ້ອມ.
- ຈັດວາງຕຳແໜ່ງວັນນະຍຸດ ແລະ ຕົວສະກົດ.
- ບອກການວາງຕຳແໜ່ງວັນນະຍຸດ ແລະ ຕົວສະກົດທີ່ເອົາອອກ ແລະ ຕື່ມເຂົ້າ.
- ອ່ານອອກສຽງເປັນຄຳເວົ້າຕາມຮູບພາບ.
- ອ່ານອອກສຽງ (ຜັນສຽງ)ຄຳທີ່ມີວັນນະຍຸດ 2 ຕົວ ×່ ×້ ແລະ ຕົວສະກົດ (ກ, ນ, ງ, ດ, ຍ, ມ, ຍ, ວ).
- ສະແດງມາລະຍາດໃນການອ່ານໄດ້ເໝາະສົມກັບເວລາ ແລະ ໂອກາດ.
- ຂີດເສັ້ນ ຫຼື ແຕ້ມເປັນຮູບພາບ.
- ສັງເກດຮູບຮ່າງຕົວອັກສອນ ແລະ ຂຽນເປັນຄຳສັບງ່າຍຕາມຮອຍຈ້ຳ.
- ຂຽນໃຫ້ອ່ານງ່າຍ, ສະອາດຈົບງາມຖືກຕາມຫຼັກການຂຽນພາສາລາວ.

## 3. ການຈັດກິດຈະກຳການຫຼິ້ນ

### 3.1 ຄວາມເຂົ້າໃຈກ່ຽວກັບການຫຼິ້ນ

ເດັກກັບການຫຼິ້ນເປັນທຳມະຊາດທີ່ຄຽງຄູ່ກັນ ເດັກສາມາດຫຼິ້ນໂດຍບໍ່ມີຜູ້ສອນ ແລະ ຫຼິ້ນເຄື່ອງຫຼິ້ນທີ່ພົບເຫັນໂດຍບໍ່ຈຳເປັນຕ້ອງແນະນຳວິທີຫຼິ້ນ, ເດັກແຕ່ລະຄົນມີວິທີຫຼິ້ນເຄື່ອງຫຼິ້ນທີ່ແຕກຕ່າງກັນ, ມີຫຼັກຖານຢືນຢັນວ່າການຫຼິ້ນມີສ່ວນສຳຄັນຢ່າງຫຼວງຫຼາຍໃນການປ່ຽນແປງໂຄງສ້າງຂອງສະໝອງ ໂດຍການຫຼິ້ນກະຕຸ້ນໃຫ້ມີການຂະຫຍາຍຕົວເພີ່ມຂຶ້ນຂອງຈຸລັງສະໝອງ.

ນອກນັ້ນການຫຼິ້ນຍັງຊ່ວຍສົ່ງເສີມໃຫ້ເດັກຮູ້ຈັກກົດລະບຽບ ແລະ ກະຕິກາຂອງການຫຼິ້ນເຝິກໃຫ້ເປັນຄົນມີລະບຽບວິໄນ, ມີຄວາມຈື່ຈຳ, ມີທັກສະ ແລະ ມີໄຫວພິບ ໂດຍສະເພາະການຫຼິ້ນທີ່ສົ່ງເສີມການສຳຜັດໂດຍໃຊ້ປະສາດສຳຜັດທັງ 5 ເຊັ່ນ: ການຊີມລົດຊາດ, ການດົມກິ່ນ, ການຈັບບາຍ, ການເບິ່ງ, ການຟັງສຽງ. ການຫຼິ້ນບາງປະເພດຊ່ວຍກະຕຸ້ນພັດທະນາການທາງດ້ານຮ່າງກາຍ, ພາສາ ແລະ ສັງຄົມ.



### 3.2 ຄວາມສຳຄັນຂອງການຫຼິ້ນ

ເດັກນັບແຕ່ມື້ເກີດຫາອາຍຸ 6 ປີເປັນໄວທີ່ມີການຈະເລີນເຕີບໃຫຍ່ໄວ, ການຫຼິ້ນ ແລະ ເຄື່ອງຫຼິ້ນມີຄວາມສຳຄັນໃນການສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກອະນຸບານ ພໍ່, ແມ່ ຫຼື ຜູ້ປົກຄອງ, ຄູສອນຄວນມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງການຫຼິ້ນ ແລະ ເຄື່ອງຫຼິ້ນທີ່ເໝາະສົມເພື່ອສ້າງປະສົບການຮຽນຮູ້, ພັດທະນາການທີ່ສອດຄ່ອງກັບທຳມະຊາດ ແລະ ຄວາມຕ້ອງການຂອງເດັກໄວນີ້.

ເດັກອະນຸບານມີຄວາມມ່ວນຊື່ນກັບການຫຼິ້ນໃນຊີວິດປະຈຳວັນຕາມຄວາມເຂົ້າໃຈ ແລະ ຄວາມພໍໃຈຂອງຕົນເອງຂະນະທີ່ຫຼິ້ນເດັກໄດ້ໃຊ້ອະໄວຍະວະສ່ວນຕ່າງໆຂອງຮ່າງກາຍ ໃນການສຳຫຼວດຄຸນລັກສະນະຂອງສິ່ງຕ່າງໆທີ່ຕົນເອງຫຼິ້ນ, ບຸກຄົນທີ່ເຂົ້າຮ່ວມໃນການຫຼິ້ນ ຫຼື ວັດຖຸສິ່ງຂອງທີ່ນຳມາຫຼິ້ນ. ໃນການຫຼິ້ນເດັກໄດ້ຮັບຮູ້ສິ່ງທີ່ຫຼິ້ນຜ່ານອະໄວຍະວະສຳຜັດເຂົ້າສູ່ລະບົບການທຳງານຂອງສະໝອງມີການຈົດຈຳເປັນຂໍ້ມູນຄວາມຄິດ, ຄວາມເຂົ້າໃຈຕໍ່ສິ່ງຕ່າງໆຈາກນັ້ນເດັກຈະຄ່ອຍເຊື່ອມຊຶມ, ຮຽນຮູ້ສິ່ງຕ່າງໆຜ່ານການປະຕິສຳພັນກັບຄົນຫຼິ້ນ ຫຼື ເຄື່ອງຫຼິ້ນໂດຍສະເພາະເມື່ອເດັກໄດ້ຫຼິ້ນດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳໃຫ້ຂໍ້ມູນ ຫຼື ສອນໃຫ້ຮູ້ຈັກຄຳເວົ້າທີ່ບອກຊື່ສິ່ງຕ່າງໆອ້ອມຮອບຕົວ, ບອກຄວາມໝາຍຂອງສິ່ງຕ່າງໆເທື່ອລະໜ້ອຍຈາກເລື່ອງທີ່ງ່າຍໄປສູ່ເລື່ອງທີ່ສັບຊ້ອນຫຼາຍ ຂຶ້ນຕາມຄວາມສາມາດຂອງໄວອາຍຸ.

### 3.3 ການຈັດກິດຈະກຳການຫຼິ້ນ

ການຈັດກິດຈະກຳການຫຼິ້ນທີ່ພົວພັນເຖິງວັດທະນະທຳ, ສັງຄົມທີ່ເດັກອາໃສຢູ່ແຕ່ລະຄົນມີຄວາມແຕກຕ່າງກັນ, ການຈັດການຫຼິ້ນໃຫ້ກັບເດັກຈຶ່ງຕ້ອງຄຳນຶງເຖິງການນຳເອົາແບບແຜນດຳລົງຊີວິດ, ສັງຄົມ ແລະ ວັດທະນະທຳທີ່ເດັກອາໄສຢູ່ອ້ອມຮອບຕົວເດັກມາສູ່ການຈັດກິດຈະກຳທີ່ເສີມສ້າງປະສົບການຊີວິດຢ່າງເໝາະສົມກັບໄວອາຍຸຂອງເດັກ.

## 4. ການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ

### 4.1 ຄວາມໝາຍການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ

ການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ ໝາຍເຖິງການທີ່ເດັກໄດ້ຮຽນຮູ້ຈາກເລື່ອງທີ່ຕົນເອງຕ້ອງການ ໂດຍຄູເປັນຜູ້ອອກແບບສະຖານະການ ຫຼື ບັນຫາທີ່ຕັ້ງເອົາໄວ້ລ່ວງໜ້າ ແລະ ຄູຊ່ວຍແນະນຳການຮຽນຮູ້ ໃຫ້ເດັກຜ່ານກິດຈະກຳທາງກາຍເຊັ່ນ: ການສຳຫຼວດ, ການສັງເກດ, ການຈັບບາຍ, ການດົມກິ່ນ, ການຟັງສຽງ, ການຊີມລົດຊາດ, ການທົດລອງປະຕິບັດ, ການຄິດແກ້ໄຂບັນຫາ.



### 4.2 ຫຼັກການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ

- ໃຫ້ເດັກມີອິດສະຫຼະໃນການເລືອກຮຽນຮູ້ຕາມຄວາມສົນໃຈ ແລະ ຄວາມສາມາດຂອງຕົນເອງ.
- ໃຫ້ເດັກມີໂອກາດເຝິກການຄົ້ນຄິດ, ການວາງແຜນ, ການປະຕິບັດຕົວຈິງ, ການບັນທຶກ ແລະ ການສະຫຼຸບຂໍ້ມູນດ້ວຍຕົນເອງ.
- ໃຫ້ເດັກໄດ້ມີໂອກາດສ້າງການປະຕິສຳພັນ ແລະ ຮຽນຮູ້ຈາກບຸກຄົນອື່ນ.
- ໃຫ້ເດັກໄດ້ທຳກິດຈະກຳທີ່ມີຄວາມທ້າທາຍ ແລະ ມີຜົນສຳເລັດດ້ວຍຄວາມພໍໃຈ.
- ໃຫ້ເດັກໄດ້ມີໂອກາດສະຫຼຸບຜົນການຮຽນຮູ້ດ້ວຍຕົນເອງຈາກການທຳກິດຈະກຳຊ້ຳຄືນ ຫຼື ທວນຄືນຢ່າງຕໍ່ເນື່ອງ ແລະ ສະໝໍ່າສະເໝີ.
- ໃຫ້ເດັກໄດ້ຮຽນຮູ້ຮ່ວມກັນໃນບັນຍາກາດທີ່ເປັນອິດສະຫຼະ ຍອມຮັບຄວາມຄິດເຫັນເຊິ່ງກັນ ແລະ ກັນ.
- ໃຫ້ເດັກໄດ້ມີໂອກາດນຳເອົາຄວາມຮູ້, ທັກສະທີ່ເກີດຈາກການຮຽນຮູ້ ແລະ ການປະຕິບັດຕົວຈິງໄປໃຊ້ໃນຊີວິດປະຈຳວັນໄດ້.

### 4.3 ການຈັດກິດຈະກຳການຮຽນ-ການສອນ ທີ່ເນັ້ນເດັກເປັນໃຈກາງ

- ການຈັດສະພາບຫ້ອງຮຽນ

ການຈັດສະພາບຫ້ອງຮຽນທີ່ເອື້ອອຳນວຍຕໍ່ການຈັດກິດຈະກຳທີ່ເນັ້ນເດັກເປັນໃຈກາງ ແລະ ເນັ້ນຫ້ອງຮຽນເປັນເພື່ອນຂອງເດັກມີດັ່ງນີ້:

1). ຈັດມຸມຮຽນຮູ້ປະສົບການຊີວິດໄວ້ເປັນມຸມແຍກກັນຢ່າງນ້ອຍ 3 ມຸມ ເຊັ່ນ: ມຸມອ່ານ ຫຼື ນິທານ, ມຸມວິທະຍາສາດ ແລະ ທຳມະຊາດ, ມຸມບົດບາດສົມມຸດ ຫຼື ເຮືອນນ້ອຍ.

2). ຈັດອຸປະກອນການຮຽນ-ການສອນໃຫ້ພຽງພໍ ແລະ ມີຫຼາຍແບບໄວ້ໃນມຸມຕ່າງໆ.

3). ຈັດບ່ອນວາງອຸປະກອນ ແລະ ຜົນງານເດັກຢ່າງເປັນລະບົບ, ມີລະບຽບສະອາດ ແລະ ຈົບງາມ.

- ການສະແດງປະຕິສຳພັນລະຫວ່າງຄູ ກັບ ເດັກ.

ພຶດຕິກຳສະແດງເຖິງປະຕິສຳພັນລະຫວ່າງຄູກັບເດັກມີຄວາມສຳຄັນ ແລະ ມີອິດທິພົນຕໍ່ການຮຽນຮູ້ຂອງເດັກ, ເຊິ່ງພຶດຕິກຳທີ່ສະແດງເຖິງການມີປະຕິສຳພັນລະຫວ່າງຄູກັບເດັກ ມີ 2 ປະເພດຄື:

1). ພຶດຕິກຳທາງວາຈາທີ່ສະແດງອອກໃນການເວົ້າສື່ສານ, ການສື່ຄວາມໝາຍ ແລະ ໃຫ້ກຳລັງໃຈ.

2). ພຶດຕິກຳທາງກາຍທີ່ສະແດງອອກໃນການໂອບກອດ ແລະ ການແຕະຕ້ອງຮ່າງກາຍເດັກເປັນຕົ້ນ.

- ພຶດຕິກຳທີ່ຄວນປະຕິບັດຕໍ່ເດັກ

1). ພຶດຕິກຳທາງວາຈາທີ່ສະແດງອອກໃນການສື່ສານ

- ການໃຊ້ຄຳຖາມປາຍເປີດ ຫຼື ຄຳຖາມຫຼາຍແບບເພື່ອກະຕຸ້ນໃຫ້ເດັກຄົ້ນຄິດຫຼາຍຂຶ້ນ.
- ການສະໜັບສະໜູນ, ສົ່ງເສີມໃຫ້ເດັກມີກຳລັງໃຈໃນການຮ່ວມກິດຈະກຳ ແລະ ຖາມຕອບກັບຄູຫຼາຍຂຶ້ນ.

2). ພຶດຕິກຳທາງກາຍທີ່ສະແດງອອກໃນທ່າທາງຕ່າງໆເຊັ່ນ: ຕົບມືຊົມເຊີຍ, ໂອບກອດ, ລູບຫຼັງ, ລູບຫົວ.

## 5. ການຈັດກິດຈະກຳສົ່ງເສີມການຄົ້ນຄິດ

ການຈັດກິດຈະກຳສົ່ງເສີມທັກສະການຄົ້ນຄິດ, ນຳໃຊ້ຄຳຖາມຫຼາຍແບບ ເພື່ອຊ່ວຍໃຫ້ເດັກມີຂະບວນການຮຽນຮູ້ທີ່ມີເຫດຜົນ, ມີນິດໄສຮັກການຄົ້ນຄິດຮູ້ສັງເກດ ແລະ ສິ່ງດັ່ງກ່າວເປັນພື້ນຖານທີ່ຊ່ວຍສ້າງຂະບວນການຮຽນຮູ້ທີ່ມີປະສິດທິພາບໃນຂັ້ນຕໍ່ໄປ.

ໃນເວລາແຕ່ງບົດສອນຕົວຈິງຄວນໃຊ້ຄຳຖາມຕ່າງໆ ເພື່ອໃຫ້ສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນຂອງບົດກຳນົດໄວ້ຕາມແຜນການສອນທີ່ວາງໄວ້ກ່ຽວກັບຄວາມຮູ້ທົ່ວໄປ, ຄະນິດສາດ, ນິທານ, ຄຳຄ່ອງ ແລະ ເພງ, ຄູຕ້ອງໃຫ້ເດັກໄດ້ຄົ້ນຄິດມີດັ່ງນີ້:

- ຄຳຖາມລະດັບຕໍ່າປະກອບມີ: ຄຳຖາມໃຫ້ເດັກສັງເກດ, ທົບທວນຄວາມຈື່ຈຳ, ຄຳຖາມບົ່ງບອກ, ຄຳຖາມຖາມນຳ, ຄຳຖາມກະຕຸ້ນຄວາມສົນໃຈ.
- ຄຳຖາມລະດັບສູງປະກອບມີ: ຄຳຖາມທີ່ມີລັກສະນະເປີດໂອກາດໃຫ້ອະທິບາຍ, ປຽບທຽບ, ຈຳແນກປະເພດ, ຍົກຕົວຢ່າງ, ວິເຄາະ, ສັງເຄາະ ແລະ ປະເມີນຄ່າ.



## 5.1 ຄຳຖາມລະດັບຕ່ຳ

ຄຳຖາມລະດັບຕ່ຳ ເປັນຄຳຖາມທີ່ກ່ຽວຂ້ອງກັບຄວາມເປັນຈິງ ເຊິ່ງໄດ້ຈາກການຈື່ຈຳ ແລະ ສັງເກດ ຄຳຖາມປະເພດນີ້ມັກມີຄຳຕອບດຽວດັ່ງນີ້:

1). ຄຳຖາມໃຫ້ສັງເກດເປັນຄຳຖາມທີ່ໃຫ້ເດັກພົບຄຳຕອບຜ່ານການສັງເກດ ໂດຍໃຊ້ປະສາດສຳຜັດຄື ຫູ, ຕາ, ດັງ, ລີ້ນ ແລະ ຜິວໜັງມີດັ່ງນີ້:

(1) ການສັງເກດໂດຍໃຊ້ສາຍຕາໃນການເບິ່ງ

ຕົວຢ່າງ: - ຮູບພາບນີ້ມີເດັກຈັກຄົນ?
- ເດັກໃນຮູບພາບກຳລັງເຮັດຫຍັງ?

(2) ການສັງເກດໂດຍໃຊ້ຫູໃນການຟັງ

ຕົວຢ່າງ: - ສຽງທີ່ໄດ້ຍິນແມ່ນສຽງຂອງຫຍັງ?
- ສຽງທີ່ໄດ້ຍິນເປັນແນວໃດ?

(3) ການສັງເກດໂດຍໃຊ້ດັງໃນການດົມກິ່ນ ແລະ ລີ້ນຊີມລົດຊາດ

ຕົວຢ່າງ: - ດອກໄມ້ມີກິ່ນແນວໃດ?
- ນ້ຳໃນຈອກນີ້ມີລົດຊາດແນວໃດ?

(4) ການສັງເກດໂດຍໃຊ້ການສຳຜັດດ້ວຍຜິວໜັງ

ຕົວຢ່າງ: - ນ້ຳຈອກໃດຮ້ອນ?
- ນ້ຳຈອກໃດເຢັນ?

2). ຄຳຖາມໃຫ້ທົບທວນຄວາມຈຳເປັນຄຳຖາມທີ່ມີຄຳຕອບພຽງຄຳຕອບດຽວ

ຕົວຢ່າງ: - ດອກໄມ້ທີ່ເຫັນມີຊື່ວ່າດອກຫຍັງ?
- ສຽງທີ່ໄດ້ຍິນຄ້າຍກັບສຽງຫຍັງ?

3). ຄຳຖາມບົ່ງບອກ ຫຼື ຄວາມຈື່ຈຳ ເປັນຄຳຖາມທີ່ເດັກສາມາດນຳຄວາມຮູ້ ແລະ ປະສົບການເດີມ ມາພິຈາລະນາເລືອກຫາຄຳຕອບ

ຕົວຢ່າງ: - ໝາ ແລະ ມ້າ ສັດຊະນິດໃດລ້ຽງໄວ້ໃຊ້ວຽກງານ?

- ນ້ຳອ້ອຍ ແລະ ນ້ຳໝາກນາວນ້ຳຊະນິດໃດມີລົດຊາດສົ້ມ?

4). ຄຳຖາມ-ຖາມນຳເປັນຄຳຖາມທີ່ໃຊ້ກະຕຸ້ນຄວາມສົນໃຈເດັກ

ຕົວຢ່າງ: - ກ່ອນກິນອາຫານເຮົາຄວນລ້າງມືແມ່ນບໍ່?

- ເດັກຄວນຫຼິ້ນສຽງດັງໃນຫ້ອງ ຫຼື ບໍ່?

5). ຄຳຖາມກະຕຸ້ນຄວາມສົນໃຈເປັນຄຳຖາມທີ່ໃຊ້ ເພື່ອຄວບຄຸມກິດຈະກຳໃນຊັ້ນຮຽນໃຫ້ດຳເນີນ ໄປດ້ວຍຄວາມຮຽບຮ້ອຍມ່ວນຊື່ນ

ຕົວຢ່າງ: - ມື້ນີ້ ອາກາດເປັນແນວໃດແດ່?

- ໃຜຢາກຟັງນິທານແດ່?

## 5.2 ຄຳຖາມລະດັບສູງ

ຄຳຖາມລະດັບສູງ ຕ້ອງໃຊ້ຄວາມຮູ້ ຄວາມສາມາດຈາກປະສົບການເດີມມາເປັນພື້ນຖານການຫາ ຄຳຕອບມີດັ່ງນີ້:

1). ຄຳຖາມອະທິບາຍຈະໃຊ້ຄຳວ່າເປັນຫຍັງ, ແນວໃດ, ເພາະເຫດໃດ?

ຕົວຢ່າງ: - ເປັນຫຍັງເຮົາຈຶ່ງບໍ່ຄວນກິນເຂົ້າໜົມອົມ?

- ເພາະເຫດໃດເຮົາຈຶ່ງຕ້ອງລ້າງໝາກໄມ້ກ່ອນກິນ?

2). ຄຳຖາມປຽບທຽບສິ່ງຂອງສອງຊະນິດທີ່ມີຄຸນລັກສະນະທີ່ຄ້າຍຄືກັນ ຫຼື ຕ່າງກັນແນວໃດ?

ຕົວຢ່າງ: - ໝາກໂມ ກັບ ໝາກກ້ຽງໃຫຍ່ມີລັກສະນະຄ້າຍຄືກັນແນວໃດ?

- ແມວ ກັບ ເສືອ ມີຫຍັງຄືກັນ?

3). ຄຳຖາມຈຳແນກປະເພດ ຫຼື ຄຳຖາມໃຫ້ຍົກຕົວຢ່າງ: ເປັນຄຳຖາມທີ່ເດັກສາມາດໃຊ້ຄວາມຮູ້, ປະສົບ ການເດີມຄິດຫາຄຳຕອບ ແລະ ມີຄຳຕອບຫຼາຍຢ່າງ.

ຕົວຢ່າງ: - ໝາກໄມ້ທີ່ມີສີເຫຼືອງມີໝາກຫຍັງແດ່?

- ໝາກໄມ້ຊະນິດໃດທີ່ມີລົດຫວານ?

4). ຄຳຖາມວິເຄາະ ເປັນຄຳຖາມທີ່ໃຫ້ເດັກໄດ້ຄົ້ນຄິດຫາຄວາມຈິງທີ່ປະກອບຂຶ້ນເປັນເລື່ອງ ຫຼື ເຫດການໃຫ້ແຍກເລື່ອງດັ່ງ ກ່າວອອກເປັນສ່ວນຍ່ອຍເພື່ອຫາສາເຫດ ແລະ ຜົນຂອງບັນຫາທີ່ເກີດຂຶ້ນ.

ຕົວຢ່າງ: - ສ່ວນປະກອບຂອງໝາກກ້ວຍມີຫຍັງແດ່?

- ຄົນທີ່ເປັນຫວັດເກີດຈາກສາເຫດໃດ?

5). ຄຳຖາມສັງເຄາະ ເປັນຄຳຖາມທີ່ໃຫ້ເດັກໄດ້ຄົ້ນຄິດ ເພື່ອສະຫຼຸບຄວາມສຳພັນລະຫວ່າງສ່ວນຍ່ອຍກາຍ ເປັນຄວາມຄິດໃໝ່ ແລະ ພັດທະນາສິ່ງທີ່ມີຢູ່ແລ້ວໃຫ້ດີຂຶ້ນ.

ຕົວຢ່າງ: - ເປັນຫຍັງຈຶ່ງຕ້ອງລ້າງມືກ່ອນກິນອາຫານທຸກຄັ້ງ?

- ຖ້າເດັກກິນໝາກໄມ້ໂດຍບໍ່ລ້າງໝາກໄມ້ກ່ອນຈະເປັນແນວໃດ?

6). ຄຳຖາມປະເມີນຄ່າ ເປັນຄຳຖາມທີ່ໃຫ້ເດັກພິຈາລະນາຄຸນຄ່າຂອງສິ່ງຕ່າງໆ ແລະ ຕັດສິນໃຈຢ່າງມີເຫດຜົນຮູ້ຈັກປະເມີນ ຜົນໂດຍໃຊ້ເນື້ອໃນບົດເລື່ອງລວມທັງກົດເກນທີ່ເປັນຈິງ ແລະ ນຳມາສະໜັບ, ສະໜູນຄວາມຄິດເຫັນຂອງຕົນ.

ຕົວຢ່າງ: - ເດັກມັກໝາກໄມ້ຊະນິດໃດຫຼາຍທີ່ສຸດເພາະເຫດໃດ?

- ຖ້າເຮົາບໍ່ຊ່ວຍກັນເກັບຂີ້ເຫຍື້ອຈະເກີດຫຍັງຂຶ້ນ?

## 5.3 ການນຳໃຊ້ຄຳຖາມ

1). ວິທີການນຳໃຊ້ຄຳຖາມໃຫ້ເດັກຮູ້ຄົ້ນຄິດ

- ເວົ້າສຽງຊັດເຈນຈະຊ່ວຍໃຫ້ເດັກເຂົ້າໃຈຄຳຖາມ.
- ໃຊ້ພາສາໃຫ້ເໝາະສົມກັບອາຍຸເດັກ ແລະ ເວົ້າໃຫ້ເຂົ້າໃຈງ່າຍ.
- ໃຊ້ຄຳຖາມທີ່ມີປະເດັນດຽວຊ່ວຍໃຫ້ເບິ່ງເຫັນຂອບເຂດ ແລະ ແນວທາງໃນການຕອບຄຳຖາມ.
- ເວັ້ນໄລຍະເວລາໃຫ້ເດັກຕາມເວລາສົມຄວນ ເພື່ອໃຫ້ຄົ້ນຄິດຫາຄຳຕອບ.
- ໃຫ້ເດັກຕອບຕາມຄວາມສະໝັກໃຈ.
- ໃຫ້ໂອກາດເດັກຕອບບັນຫາເທື່ອລະຄົນ ເພື່ອເຝິກການຄິດຫາຄຳຕອບ ແລະ ປະເມີນຜົນເດັກເປັນລາຍບຸກຄົນໄດ້ຢ່າງທົ່ວເຖິງ, ແຕ່ຖ້າເດັກຍັງບໍ່ກ້າຕອບໃຫ້ຕອບພ້ອມກັນໝົດຫ້ອງ.
- ບໍ່ຄວນທວນຄືນຄຳຖາມຂອງຄູ ແລະ ບໍ່ທົບທວນຄຳຕອບເດັກເພື່ອເຝິກໃຫ້ເດັກຟັງຄຳຖາມ, ຮູ້ຈັກຕິດຕາມບົດຮຽນດ້ວຍຄວາມຕັ້ງໃຈ, ຟັງຄຳຕອບ ແລະ ຊ່ວຍກັນເສີມຄຳຕອບຂອງໝູ່ເພື່ອນ ເພື່ອໃຫ້ມີຄຳຖາມ ແລະ ຄຳຕອບສົມບູນຫຼາຍຂຶ້ນ.
- ໃຫ້ໂອກາດເດັກຄົນອື່ນໄດ້ຕອບຄຳຖາມໃນຂໍ້ດຽວກັນ ເພື່ອໃຫ້ເກີດຄວາມຄິດທີ່ແຕກຕ່າງກັນ.

2). ເຕັກນິກບາງປະການໃນການໃຊ້ຄຳຖາມ

- ກຽມຕັ້ງຄຳຖາມຕາມເນື້ອໃນທີ່ຄູນຳມາຈັດກິດຈະກຳການຮຽນຮູ້ໃຫ້ເດັກໂດຍລຽນລຳດັບຈາກງ່າຍໄປຫາຍາກເຊັ່ນ: ໃຜເຮັດຫຍັງ, ຢູ່ໃສ, ເວລາໃດ, ແບບໃດ, ແມ່ນໃຜ.
- ເຝິກໃຫ້ເດັກຖາມ-ຕອບກັນເອງ ເພື່ອສ້າງບັນຍາກາດຮຽນຮູ້ໃຫ້ທຸກຄົນມີສ່ວນຮ່ວມ ແລະ ເຝິກໃຫ້ເດັກຮູ້ຈັກຄິດໃຫ້ສອດຄ່ອງຕາມຄວາມສົນໃຈ.
- ຖ້າເດັກບໍ່ຍອມຕອບຄຳຖາມ ຄູຄວນເລີ່ມຕົ້ນຖາມເດັກດ້ວຍຄຳຖາມງ່າຍກ່ອນ ແລ້ວຄ່ອຍເພີ່ມຄຳຖາມທີ່ຍາກຕໍ່ໄປ.
- ຄູບໍ່ຄວນຮ້າຍ ຫຼື ຕຳນິຄຳຕອບທີ່ເດັກຕອບບໍ່ຖືກຕ້ອງ ແລະ ຄູຕ້ອງຄວບຄຸມເດັກບໍ່ໃຫ້ເຢາະເຢີ້ຍໝູ່ເມື່ອຜູ້ໃດຜູ້ໜຶ່ງຕອບຜິດຈະເຮັດໃຫ້ເດັກເກີດຄວາມເກີ້ເຂີນບໍ່ກ້າຕອບໃນໂອກາດຕໍ່ໄປ.

# 6. ການຈັດກິດຈະກຳສົ່ງເສີມປະສົບການຊີວິດ

## 6.1 ກິດຈະກຳກ່ຽວກັບວັນບຸນຕ່າງໆ

ກິດຈະກຳກ່ຽວກັບວັນບຸນປະເພນີ ແລະ ວັນສຳຄັນຂອງຊາດທີ່ຕ້ອງສະເຫຼີມສະຫຼອງໃນບາງເດືອນເຊັ່ນ: ວັນທີ 2 ທັນວາ (ວັນຊາດ), ວັນທີ 1 ມັງກອນ (ວັນປີໃໝ່ສາກົນ), ວັນທີ 8 ເດືອນ 3 (ວັນແມ່ຍິງ), ວັນປີໃໝ່ລາວ, ວັນທີ 7 ຕຸລາ (ວັນຄູ), ວັນທີ 1 ມິຖຸນາ 6 (ວັນເດັກ), ວັນບຸນເຂົ້າ ແລະ ອອກພັນສາ, ວັນບຸນປະເພນີຂອງທ້ອງຖິ່ນ.



### 6.2 ກິດຈະກຳທີ່ນຳມາຈັດສະແດງ

ກິດຈະກຳທີ່ນຳມາຈັດສະແດງຜົນງານແຕ່ລະຢ່າງຂອງເດັກຕ້ອງເປັນຜົນງານລາຍບຸກຄົນ ຫຼື ກຸ່ມເດັກຊ່ວຍກັນຄິດ, ປະດິດສ້າງຂຶ້ນໂດຍຄູເປັນຜູ້ໃຫ້ຄຳແນະນຳ ແລະ ຊ່ວຍເຫຼືອບາງຢ່າງ, ກິດຈະກຳທີ່ນຳມາສະແດງມີດັ່ງນີ້:

- ການສະແດງຜົນງານ: ສິລະປະສ້າງສັນ, ການແຕ້ມ, ການປັ້ນ, ການພັບ, ການຕັດ ແລະ ຕິດ,
- ການສະແດງສິລະປະດົນຕີ: ຮ້ອງເພງ, ຟ້ອນ, ເຕັ້ນ, ຂັບລຳ ແລະ ສະແດງດົນຕີ.
- ການແຂ່ງຂັນກິລາ: ແລ່ນແຂ່ງກັນ, ຮ່າຍນ້ຳ, ໂຍນບານ ແລະ ເຕະບານ.
- ການຟັງນິທານ, ການເບິ່ງການສະແດງ ຫຼື ເລົ່າເລື່ອງຈາກບຸກຄົນສຳຄັນ.

## 7. ການຈັດກະດານຂ່າວ ແລະ ການຈັດສະແດງຜົນງານເດັກ

### 7.1 ການຈັດກະດານຂ່າວ

ກະດານຂ່າວ: ສິ່ງທີ່ນຳມາສະແດງໃນກະດານຂ່າວຂອງໂຮງຮຽນ ຫຼື ຫ້ອງຮຽນຄວນມີແຜນການສອນໃນເດືອນ, ຮູບກ່ຽວກັບໜ່ວຍການສອນ ແລະ ກິດຈະກຳເຝິກທັກສະໃຫ້ເດັກໃນແຕ່ລະກິດຈະກຳ. ກິດຈະກຳເສີມທີ່ຕ້ອງເຮັດໃນແຕ່ລະກິດຈະກຳ, ຄວາມຄິດເຫັນຜູ້ປົກຄອງ, ການຕິດຕາມພັດທະນາການເດັກພາຍໃນເດືອນ ແລະ ຂໍ້ມູນຂ່າວສານກ່ຽວກັບອາຫານ, ການອະນາໄມ, ເຄື່ອງດື່ມ ແລະ ການຮັກສາສຸຂະພາບ.

### 7.2 ການຈັດສະແດງຜົນງານ

ຜົນງານກິດຈະກຳສິລະປະສ້າງສັນ ຫຼື ກິດຈະກຳສິ່ງເສີມປະສົບການປະຈຳເດືອນ, ປະຈຳອາທິດທີ່ເດັກເຮັດຮ່ວມກັນໃຫ້ນຳມາຈັດສະແດງ.1. ຮູບແຕ້ມ, 2. ການປັ້ນ, 3. ການຕັດ-ຕິດ.

## 8. ການຈັດສະພາບແວດລ້ອມສຳລັບເດັກ

ການຈັດສະພາບແວດລ້ອມພາຍໃນ ຫຼື ພາຍນອກຫ້ອງຮຽນສຳລັບເດັກອະນຸບານມີຄວາມສຳຄັນຕໍ່ພຶດຕິກຳ ແລະ ມີຜົນຕໍ່ພັດທະນາການຂອງເດັກ.

### 8.1 ການຈັດສະພາບແວດລ້ອມພາຍໃນຫ້ອງຮຽນ, ມຸມຫຼິ້ນ ຫຼື ຫ້ອງຫຼິ້ນຄວນຈັດດັ່ງນີ້:

- ຫ້ອງຮຽນຕ້ອງສະອາດທາສີອ່ອນໆເຢັນຕາ, ມີແສງສະຫວ່າງພຽງພໍ, ອາກາດຖ່າຍເທສະດວກປອດໄພກວ້າງຂວາງໄດ້ອັດສ່ວນກັບຈຳນວນເດັກ (1 ຕາແມັດຕໍ່ເດັກ 1 ຄົນ).
- ໂຕະ, ຕັ່ງ, ຕູ້, ຊັ້ນວາງສຳລັບເກັບເຄື່ອງໃຊ້ສ່ວນຕົວຄວນທາສີທຳມະຊາດ ຫຼື ສີອ່ອນໆມີຂະໜາດເໝາະສົມພຽງພໍກັບຈຳນວນເດັກ.
- ຕິດປ້າຍນິເທດ, ຄຳຂວັນຄວນຄຳນຶງເຖິງຄວາມເໝາະສົມກັບກິດຈະກຳໃນຫ້ອງຮຽນ, ຄວາມສູງ ແລະ ຂະໜາດຂອງປ້າຍຢູ່ໃນລະດັບສາຍຕາເດັກ ບໍ່ຄວນໃຊ້ສີສະທ້ອນແສງ.
- ຈັດແບ່ງພື້ນທີ່ໃນຫ້ອງຮຽນໃຫ້ສົມສ່ວນທຸກຈຸດຄູສາມາດເບິ່ງເຫັນເດັກໄດ້ຢ່າງທົ່ວເຖິງ.
- ຈັດມຸມຫຼິ້ນໄວ້ຢ່າງນ້ອຍ 2-3 ມຸມ ເຊັ່ນ: ມຸມບົດບາດສົມມຸດ ຫຼື ເຮືອນນ້ອຍ, ມຸມອ່ານ ຫຼື ນິທານ, ມຸມວິທະຍາສາດ ແລະ ທຳມະຊາດ, ມຸມເຄື່ອງຫຼິ້ນສຳຜັດໂດຍໃຫ້ສອດຄ່ອງກັບໜ່ວຍການສອນ, ມຸມຮຽນຮູ້ສາມາດສັບປ່ຽນໄດ້ຕາມຄວາມສົນໃຈ ຫຼື ສະຖານະການທີ່ເກີດຂຶ້ນໃນປະຈຸບັນ ແລະ ຖ້າຫ້ອງຮຽນແຄບໃຫ້ຄູຈັດມຸມຫຼິ້ນໄວ້ນອກຫ້ອງກໍໄດ້.
- ຈັດອຸປະກອນ ແລະ ເຄື່ອງຫຼິ້ນໃນມຸມໃຫ້ມີຈຳນວນພຽງພໍກັບເດັກປະມານ 1 ກຸ່ມ ແລະ ມີຄວາມປອດໄພເຄື່ອງຫຼິ້ນຢູ່ໃນສະພາບໃຊ້ການໄດ້ດີສອດຄ່ອງກັບຫຼັກການຈັດການຮຽນການສອນ, ມີສີສັນສວຍງາມ, ແຕ່ຫຼີກລ່ຽງສີສະທ້ອນ ເພາະຈະເປັນອັນຕະລາຍຕໍ່ການເບິ່ງເຫັນຂອງເດັກ.
- ຈັດເກັບມ້ຽນອຸປະກອນ ແລະ ເຄື່ອງຫຼິ້ນໃຫ້ເປັນລະບົບໃນພາຊະນະ ເພື່ອໃຫ້ເດັກສາມາດເອົາມານຳໃຊ້ພ້ອມທັງເກັບມ້ຽນເຂົ້າບ່ອນໄດ້ງ່າຍ.
- ກຳນົດສະຖານທີ່ໃຫ້ເໝາະສົມກັບການຈັດກິດຈະກຳເປັນລາຍບຸກຄົນ ແລະ ກິດຈະກຳກຸ່ມທີ່ມີການສົ່ງເສີມພັດທະນາການເດັກເພື່ອໃຫ້ເກີດມີພຶດຕິກຳທີ່ຕ້ອງການ.
- ຈັດສະພາບແວດລ້ອມທົ່ວໄປໃນຫ້ອງຮຽນຄວນຈັດໃຫ້ມີສະພາບ ແລະ ບັນຍາກາດທີ່ອົບອຸ່ນຄືຢູ່ ເຮືອນ.
- ເດັກອາຍຸ 5-6 ປີ ຍັງອ່ານໜັງສືບໍ່ໄດ້, ຖ້າຈຳເປັນຕິດຕົວອັກສອນ ຫຼື ຕົວເລກໃຫ້ຕິດຕົວອັກສອນມົນ ຫຼື ຫົວມົນຂະໜາດສົມສ່ວນ ແລະ ເປັນຄຳສັບສັ້ນໆ ປະກອບຮູບພາບທີ່ກ່ຽວຂ້ອງກັບຊີວິດ ປະຈຳວັນບໍ່ຄວນຕິດຕົວໜັງສືທີ່ເດັກບໍ່ຮູ້ຄວາມໝາຍ, ຄຳຂວັນ ແລະ ກົດລະບຽບຂອງໂຮງຮຽນ ໄວ້ໃນຫ້ອງຮຽນ.
- ຫ້ອງຮຽນຂອງເດັກອະນຸບານສຶກສາ ປີທີ 3 ຄວນຢູ່ຊັ້ນລຸ່ມມີຫ້ອງນ້ຳຕິດແປະ ຫຼື ຢູ່ໃກ້ຫ້ອງຮຽນ.

### 8.2 ການຈັດສະພາບແວດລ້ອມນອກຫ້ອງຮຽນ

ສະພາບແວດລ້ອມນອກຫ້ອງຮຽນ ແລະ ເດີ່ນຫຼິ້ນຄວນຈັດດັ່ງນີ້:

- ຈັດສະຖານທີ່ຫຼິ້ນນອກຫ້ອງຮຽນໃຫ້ມີຮົ່ມ (ຮົ່ມຕົ້ນໄມ້ ຫຼື ຮົ່ມກັ້ງບັງ.....) ແລະ ເປັນສະຖານທີ່ໂລ່ງແຈ້ງ.
- ເດີ່ນຫຼິ້ນສຳລັບເດັກຄວນມີເຄື່ອງຫຼິ້ນໃນເດີ່ນ ທີ່ມີຂະໜາດເໝາະສົມຖືກຕ້ອງຕາມມາດຕະຖານການຈະເລີນເຕີບໃຫຍ່ຂອງເດັກອາຍຸ 5-6 ປີ, ມີຄວາມແຂງແຮງ, ທົນທານ, ມີການບູລະນະຮັກສາ ແລະ ສ້ອມແປງໃຫ້ຢູ່ໃນສະພາບດີ ແລະ ປອດໄພ.
- ຈັດເດີ່ນຫຼິ້ນໃຫ້ມີດິນ, ຊາຍ, ຫຍ້າ ແລະ ຈັດໃນບ່ອນທີ່ເປັນດິນໂນນ ແລະ ພື້ນທີ່ຮາບພຽງ.
- ຫ້ອງນ້ຳ ຫຼື ວິດຖ່າຍມີຂະໜາດເໝາະສົມເດັກອະນຸບານ, ແຍກຍິງ ແລະ ຊາຍ, ມີອ່າງລ້າງມື, ມີຄວາມສະອາດຖືກສຸຂະອະນາໄມ ແລະ ຢູ່ໃກ້ຫ້ອງຮຽນ.

- ຈັດບ່ອນຫຼິ້ນນ້ຳ, ຫຼິ້ນຊາຍທີ່ປະກອບມີເຄື່ອງມື, ເຄື່ອງໃຊ້ທີ່ເໝາະສົມກັບການຫຼິ້ນ.

## 9. ການຈັດການສຶກສາຮຽນຮ່ວມ

### 9.1 ສົນທິສັນຍາ, ນະໂຍບາຍ ແລະ ຍຸດທະສາດ:

- ສົນທິສັນຍາ

ສົນທິສັນຍາວ່າດ້ວຍສິດທິເດັກ (CRC) ແລະ ສົນທິສັນຍາວ່າດ້ວຍສິດທິຄົນພິການ (CRPD) ໄດ້ຮັບການສົ່ງເສີມໂດຍລັດຖະບານຂອງປະເທດຕ່າງໆໃນໂລກໄດ້ສ້າງເປັນນະໂຍບາຍ, ຍຸດທະສາດ, ແຜນງານຂອງຕົນເອງ ແລະ ຖືເອົາຄວາມຮັບຜິດຊອບເພື່ອຮັບປະກັນວ່າເດັກນ້ອຍ ທຸກຄົນບໍ່ວ່າຈະພິການ ຫຼື ບໍ່ພິການກໍຕາມສາມາດມີສິດທິໂດຍບໍ່ມີການຈຳແນກ.

- ນະໂຍບາຍ

ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ເລກທີ 509/ນຍ, ນະຄອນຫຼວງວຽງຈັນ, ວັນທີ 07/12/2010 ຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ ໂດຍທ່ານ ບົວສອນ ບຸບຜາວັນ ນາຍົກລັດຖະມົນຕີແຫ່ງ ສປປ ລາວ.

- ຍຸດທະສາດ

ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ 2011-2015 ເລກທີ 4477/ສສກ.ສຮ.11, ນະຄອນຫຼວງວຽງຈັນ, ວັນທີ 22 /11/2011 ໄດ້ຖືກຮັບຮອງ ແລະ ປະກາດນຳໃຊ້ຢ່າງເປັນທາງການໂດຍທ່ານ ພັນຄຳ ວິພາວັນ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ.

### 9.2 ຈຸດປະສົງ ແລະ ເປົ້າໝາຍຂອງນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ

- ຈຸດປະສົງ
  - ເພື່ອຮັບປະກັນສິດທິໃນການເຂົ້າເຖິງການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບເທົ່າທຽມກັນຂອງທຸກກຸ່ມຄົນໃນສັງຄົມ, ຫຼຸດຜ່ອນ ແລະ ລຶບລ້າງຄວາມຫຼຸດໂຕນໃນການເຂົ້າເຖິງ ແລະ ການສຳເລັດການສຶກສາ ຂອງກຸ່ມດ້ອຍໂອກາດ, ໂດຍສະເພາະເດັກຍິງ, ແມ່ຍິງ, ຊົນເຜົ່າ, ຄົນພິການ ແລະ ຜູ້ທີ່ມີຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ສັງຄົມ.
  - ເພື່ອແກ້ໄຂບັນດາອຸປະສັກທັງພາຍໃນ ແລະ ພາຍນອກລະບົບການສຶກສາໂດຍເອົາໃຈໃສ່ເຖິງຈຸດພິເສດ ແລະ ຄວາມຕ້ອງການທີ່ແຕກຕ່າງຫຼາກຫຼາຍຂອງຜູ້ຮຽນທຸກຄົນ.
  - ເພື່ອປັບປຸງຄຸນນະພາບ ແລະ ຄວາມແທດເໝາະຂອງລະບົບການສຶກສາໃນທຸກລະດັບ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຮຽນທີ່ມີປະສິດທິພາບສຳລັບຜູ້ຮຽນທຸກຄົນ, ສົ່ງເສີມການມີສ່ວນຮ່ວມຂອງຜູ້ຮຽນ, ຄອບຄົວ, ໂຮງຮຽນ, ຊຸມຊົນ ແລະ ທົ່ວສັງຄົມ.
- ເປົ້າໝາຍ

ພົນລະເມືອງລາວທຸກຄົນໂດຍບໍ່ຈຳແນກຊົນເຜົ່າ, ເຊື້ອຊາດ, ພາສາ, ສາດສະໜາ, ເພດ, ໄວ, ຄວາມສາມາດ ແລະ ຖານະທາງດ້ານເສດຖະກິດ-ສັງຄົມລ້ວນແຕ່ໄດ້ຮັບການສຶກສາທີ່ມີຄຸນະພາບຢ່າງທົ່ວເຖິງ,ເທົ່າທຽມກັນ ແລະ ແທດເໝາະກັບຄວາມສາມາດຂອງແຕ່ລະຄົນຕາມຫ້າ ຫຼັກມູນຂອງການສຶກສາ; ມີຄວາມຮູ້, ຄວາມສາມາດ ແລະ ທັກສະທີ່ຈຳເປັນເພື່ອປະກອບອາຊີບລ້ຽງກຸ້ມຕົນເອງ ແລະ ຄອບຄົວ, ສາມາດເຂົ້າຮ່ວມໃນທຸກຂົງເຂດຂອງການພັດທະນາປະເທດຊາດເຊັ່ນ: ວຽກງານດ້ານການເມືອງ, ເສດຖະກິດ, ວັດທະນາທຳ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພົວພັນຮ່ວມມືກັບຕ່າງປະເທດຢ່າງມີປະສິດທິພາບ.

### 9.3 ຄວາມໝາຍ

ການສຶກສາຮຽນຮ່ວມ ໝາຍເຖິງຂະບວນການສະໜອງການສຶກສາທີ່ມີຄຸນນະພາບ ແລະ ມີການປັບປ່ຽນ ຢ່າງຕໍ່ເນື່ອງໃຫ້ແທດເໝາະກັບຈຸດພິເສດ, ຄວາມສາມາດ ແລະ ຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ຮຽນທຸກຄົນ, ແນໃສ່ແກ້ໄຂບັນດາອຸປະສັກທີ່ກີດກັ້ນການເຂົ້າເຖິງການສຶກສາໂດຍສ້າງສະພາບແວດລ້ອມການຮຽນຮູ້ທີ່ເປັນມິດ, ມີຄວາມປອດໄພ, ປາສະຈາກການຈຳແນກ ແລະ ປົກປ້ອງຜູ້ຮຽນພ້ອມທັງຊຸກຍູ້ໃຫ້ຜູ້ຮຽນ, ຄອບຄົວ ແລະ ຊຸມຊົນໃຫ້ມີສ່ວນຮ່ວມໃນການຮຽນຮູ້ຢ່າງມີປະສິດທິຜົນ.

### 9.4 ກຸ່ມເປົ້າໝາຍການຮຽນຮ່ວມ

ເດັກທີ່ສາມາດຮຽນຮ່ວມກັນໄດ້ຕ້ອງແມ່ນເດັກທີ່ມີຄວາມບົກພ່ອງດ້ານຕ່າງໆຂັ້ນເບົາ, ເຊິ່ງມີຄຳນິຍາມແຕ່ລະກຸ່ມເປົ້າໝາຍດັ່ງນີ້:

ເດັກຍິງ: ເດັກຍິງທີ່ຖືກກີດກັນ ແລະ ຈຳແນກຈາກຜູ້ປົກຄອງບໍ່ໃຫ້ຮຽນໜັງສື, ແຕ່ໃຫ້ຊ່ວຍຮັບຜິດຊອບຊ່ວຍວຽກໃນຄອບຄົວ.

ເດັກຍາກຈົນ: ເດັກທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດແລະສັງຄົມ (ເດັກກຳພ້າ-ກຳພອຍ, ເດັກຖືກຜູ້ປົກຄອງປະຖິ້ມ).

ເດັກຊົນເຜົ່າ: ເດັກທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ ແລະ ບໍ່ເວົ້າພາສາລາວຢູ່ເຮືອນ.

ເດັກພິການ: ເດັກທີ່ມີຄວາມຮັບຮູ້ຊ້າຊ່ວຍເຫຼືອຕົນເອງໃນການຫຼິ້ນ ແລະ ຮຽນບໍ່ໄດ້ທັນເວລາກຳນົດ, ເດັກທີ່ມີຄວາມບົກພ່ອງທາງການເຫັນ (ຕາບອດ), ເດັກທີ່ມີຄວາມບົກພ່ອງທາງການໄດ້ຍິນ ແລະ ປາກເວົ້າ (ຫູໜວກ, ປາກກືກ).
ເດັກທີ່ມີຄວາມບົກພ່ອງໃນການເຄື່ອນໄຫວທາງດ້ານຮ່າງກາຍ (ຂາດແຂນ, ຂາ....).

### 9.5 ການຈັດການສຶກສາຮຽນຮ່ວມ

ການຮັບເອົາເດັກທີ່ມີຄວາມບົກພ່ອງແຕ່ລະດ້ານເຂົ້າຮຽນຮ່ວມກັບເດັກປົກກະຕິກ່ອນອື່ນທາງໂຮງຮຽນຕ້ອງມີທັດສະນະຄະຕິທີ່ດີ ແລະ ຍອມຮັບຕໍ່ຄວາມຫຍຸ້ງຍາກໃນການຊ່ວຍເຫຼືອເດັກໃນການຮຽນ, ຫຼິ້ນ, ເຄື່ອນໄຫວໄປມາ, ດັ່ງນັ້ນຄະນະພັດທະນາການສຶກສາຂັ້ນບ້ານໃນແຕ່ລະບ້ານທີ່ມີການຈັດການສຶກສາຮຽນຮ່ວມຈຳເປັນຕ້ອງໄດ້ຊ່ວຍເຫຼືອໂຮງຮຽນເຊັ່ນ: ການຈັດສະຖານທີ່ຮຽນ ແລະ ດັດແປງອຸປະກອນການຮຽນບາງຢ່າງໃຫ້ມີຄວາມເໝາະສົມສາມາດນຳໃຊ້ກັບເດັກທີ່ມີຄວາມບົກພ່ອງແຕ່ລະດ້ານ ໂດຍນຳໃຊ້ວັດສະດຸທີ່ມີໃນທ້ອງຖິ່ນ.

- ການກະກຽມ

1). ຊອກຮູ້ຈຸດພິເສດ, ຄວາມພິການຂອງເດັກໂດຍນຳໃຊ້ວິທີການສັງເກດ, ທົດສອບ ແລະ ມີຂໍ້ມູນຈະແຈ້ງກ່ຽວກັບລະດັບຄວາມພິການຂອງເດັກແຕ່ລະຄົນ.

2). ຈັດປະເພດເດັກສາມາດຮຽນຮ່ວມກັນໄດ້ໂດຍຄຳນຶງເຖິງຈຳນວນຄູສອນ, ສະຖານທີ່ຮຽນ ແລະ ອຸປະກອນການຮຽນ.

3). ປັບຫຼັກສູດການຮຽນ, ແຜນການສອນ, ບົດສອນສະເພາະເດັກທີ່ຮຽນຮ່ວມກັນ ໂດຍຄຳນຶງເຖິງຕົວເດັກ, ເວລາຮຽນ, ເນື້ອໃນທີ່ນຳມາສອນ, ກິດຈະກຳທີ່ຕ້ອງປະຕິບັດ.

4). ຈັດບ່ອນຫຼິ້ນ ຫຼື ບ່ອນຮຽນພາຍໃນຫ້ອງ ແລະ ນອກຫ້ອງທີ່ມີອຸປະກອນການຮຽນທີ່ເໝາະສົມກັບເດັກ. ໃຫ້ເດັກສາມາດເຄື່ອນໄຫວໄປມາໄດ້ສະດວກ ແລະ ມີຄວາມປອດໄພ.

- ການຈັດການສຶກສາສະເພາະເດັກທີ່ມີຄວາມບົກພ່ອງແຕ່ລະດ້ານ:

1). ເດັກບົກພ່ອງທາງດ້ານຮ່າງກາຍ

ເດັກບົກພ່ອງທາງດ້ານຮ່າງກາຍຂັ້ນເບົາສາມາດຮຽນຕາມຫຼັກສູດປົກກະຕິໄດ້, ແຕ່ຄູຕ້ອງໄດ້ຄັດເລືອກບາງກິດຈະກໍາໃນການເຄື່ອນໄຫວ ແລະ ແບບຫຼິ້ນຕ່າງໆແລ້ວສ້າງເປັນກິດຈະກໍາສະເພາະເດັກທີ່ພິການຂາ, ແຂນ, ເປ້ຍລອຍຂັ້ນເບົາ. ສະຖານທີ່ຮຽນ ຫຼື ຫ້ອງຮຽນຄວນເປັນຫ້ອງຈັດສະເພາະບາງກິດຈະກໍາ. ຫ້ອງນໍ້າ ຫຼື ຫ້ອງຖ່າຍຄວນຕິດກັບຫ້ອງຮຽນ ແລະ ອອກແບບສະເພາະເດັກພິການ. ໂຮງຮຽນທີ່ມີເດັກພິການ ຂາໄດ້ນັ່ງລໍ້, ຂັ້ນໄດຕ້ອງອອກແບບສະເພາະໃຫ້ເຄື່ອນໄຫວໄປມາສະດວກ.ເຄື່ອງໃຊ້ໂຕະ, ຕັ່ງ, ອຸປະກອນບາງຢ່າງຕ້ອງໃຫ້ເໝາະສົມກັບຄວາມພິການທາງດ້ານຮ່າງກາຍແຕ່ລະປະເພດ.

2). ເດັກບົກພ່ອງທາງດ້ານການໄດ້ຍິນ

ເດັກສູນເສຍການໄດ້ຍິນຂັ້ນເບົາສາມາດຮຽນຕາມຫຼັກສູດປົກກະຕິໄດ້ ແຕ່ຄູຕ້ອງໄດ້ປັບເນື້ອໃນການສອນ ແລະ ນໍາໃຊ້ອຸປະກອນການຮຽນ-ການສອນບາງຢ່າງເຂົ້າຊ່ວຍ.

- ການສັງເກດ
  - ເດັກມັກຫງ່ຽງຫູຟັງເພື່ອໃຫ້ໄດ້ຫຍິນສຽງ.
  - ເດັກເວົ້າຄໍາສັບ, ປະໂຫຍກສັ້ນບໍ່ໄດ້ຕາມໄວອາຍຸ.
  - ດັກມັກຈະເວົ້າແຮງ ແລະ ເວົ້າບໍ່ແຈ້ງ.
  - ເດັກມັກຈະຢູ່ຜູ້ດຽວ ແລະ ມິດຫງຽບບໍ່ປາກ.
  - ເດັກປະຕິບັດຕາມຄໍາບອກ ຫຼື ຄໍາສັ່ງບໍ່ຖືກຕ້ອງ.
  - ເດັກມັກເບິ່ງປາກເວລາຟັງຜູ້ອື່ນເວົ້າ.
  - ເດັກຕອບຄໍາຖາມຫຼາຍຄັ້ງບໍ່ຖືກຕ້ອງ.
- ການຈັດກິດຈະກໍາການຮຽນ-ການສອນ
  - ກິດຈະກໍາການຫຼິ້ນ, ຮຽນຄວນນໍາໃຊ້ອຸປະກອນ ແລະ ປະຕິບັດຕົວຈິງເປັນສ່ວນຫຼາຍ.
  - ນໍາໃຊ້ຮູບພາບ, ສັນຍາລັກ, ບັດຄໍາສໍາລັບສອນພາສາເວົ້າ ແລະ ຂຽນ.
  - ເຝິກອອກສຽງຕົວອັກສອນ ແລະ ຄໍາສັບໃຫ້ຖືກຕ້ອງຊັດເຈນ
  - ເຝິກເວົ້າເປັນໂຫຍກສັ້ນ.
  - ນໍາໃຊ້ພາສາທ່າທາງໃນການສອນ.
  - ເດັກທີ່ບໍ່ໄດ້ຫຍິນດີຄວນນັ່ງຢູ່ໃກ້ຄູ.
  - ເພີ່ມເວລາປະຕິບັດກິດຈະກໍາໃຫ້ຫຼາຍກວ່າເວລາປົກກະຕິ.
  - ກິດຈະກໍາທີ່ເດັກເຂົ້າໃຈຍາກໃຫ້ປະຕິບັດຊໍ້າຄືນຫຼາຍຄັ້ງ.
  - ກິດຈະກໍາທີ່ນໍາມາປະຕິບັດຕ້ອງໃຫ້ເດັກອົດທົນເຮັດໃຫ້ສໍາເລັດ.

3). ເດັກບົກພ່ອງທາງການຮັບຮູ້ຊ້າ

ເດັກບົກພ່ອງທາງການຮັບຮູ້ຊ້າສາມາດຮຽນຕາມຫຼັກສູດປົກກະຕິໄດ້, ແຕ່ຄູຕ້ອງໄດ້ປັບປຸງວິທີສິດສອນ, ກໍານົດເນື້ອໃນສະເພາະທີ່ຕອບສະໜອງການຮຽນ-ການສອນ ແລະ ນໍາໃຊ້ອຸປະກອນຊ່ວຍໃນການຮຽນ-ການສອນຫຼາຍຂຶ້ນ.

- ການສັງເກດ
  - ການສື່ສານ: ເວົ້າ ແລະ ເຂົ້າໃຈຄວາມໝາຍຄໍາສັບໃໝ່ຍາກຖ້າບໍ່ມີຮູບພາບຊ່ວຍ.
  - ການຊ່ວຍເຫຼືອຕົນເອງ: ການກິນ, ນຸ່ງຖື, ຂັບຖ່າຍ ແລະ ປະຕິບັດລະບຽບບໍ່ໄດ້ດີ.
  - ການເຄື່ອນໄຫວໃນສັງຄົມ: ຫຼິ້ນຜູ້ດຽວ, ຄວາມອົດທົນເຂົ້າຮ່ວມກິດຈະກໍາມີໜ້ອຍ, ມັກລົບກວນໝູ່.
  - ການຮຽນຮູ້: ຮຽນຮູ້ບາງວິຊາມີຂີດຈໍາກັດ, ໃຊ້ເວລາຫຼາຍສາມາດຮຽນໄດ້ສະເພາະເລື່ອງໃດໜຶ່ງ,
- ການຈັດກິດຈະກໍາການຮຽນ-ການສອນ
  - ກິດຈະກໍາການຫຼິ້ນ, ຮຽນຄວນນໍາໃຊ້ອຸປະກອນ ແລະ ປະຕິບັດຕົວຈິງເປັນສ່ວນຫຼາຍ.
  - ນໍາໃຊ້ຮູບພາບ, ສັນຍາລັກ, ບັດຄໍາສໍາລັບສອນພາສາເວົ້າ ແລະ ຂຽນ.
  - ເຝິກອອກສຽງຕົວອັກສອນ ແລະ ຄໍາສັບໃຫ້ຖືກຕ້ອງຊັດເຈນ.
  - ເຝິກເວົ້າເປັນໂຫຍກສັ້ນ.
  - ນໍາໃຊ້ພາສາທ່າທາງໃນການສອນ.
  - ເພີ່ມເວລາປະຕິບັດກິດຈະກໍາໃຫ້ຫຼາຍກວ່າເວລາປົກກະຕິ.
  - ກິດຈະກໍາທີ່ເດັກເຂົ້າໃຈຍາກໃຫ້ປະຕິບັດຊໍ້າຄືນຫຼາຍຄັ້ງ.
  - ກິດຈະກໍາທີ່ນໍາມາປະຕິບັດຕ້ອງໃຫ້ເດັກອົດທົນເຮັດໃຫ້ສໍາເລັດ.
  - ຈັບຄູ່ເດັກທີ່ຮຽນດີໃຫ້ຊ່ວຍແນະນໍາປະຕິບັດກິດຈະກໍາ.
  - ໃຫ້ເດັກເລືອກກິດຈະກໍາທີ່ຕົນເອງມັກປະຕິບັດກ່ອນແລ້ວຈຶ່ງເພີ່ມກິດຈະກໍາໃໝ່ເທື່ອລະກິດຈະກໍາ.

4). ເດັກທີ່ມີຄວາມບົກຜ່ອງທາງດ້ານການເບິ່ງເຫັນ

- ການສັງເກດ.
  - ເດັກມັກເຈັບຕາ ແລະ ສີຕາເລື້ອຍໆ.
  - ເດັກຈະປິດຕາ, ຫງ່ຽງຫົວ, ກົ້ມຫົວໄປທາງໜ້າເວລາເບິ່ງ.
  - ເດັກເບິ່ງບໍ່ເຫັນໃນບ່ອນທີ່ບໍ່ມີແສງສະຫວ່າງພຽງພໍ ຫຼື ກາງຄືນເບິ່ງບໍ່ເຫັນດີ.
  - ເດັກເບິ່ງບໍ່ເຫັນວັດຖຸຂະໜາດນ້ອຍ ຫຼື ຕົວອັກສອນ.
- ການຈັດກິດຈະກໍາການຮຽນ-ການສອນ
  - ນໍາໃຊ້ເຄື່ອງຫຼິ້ນ: ເຄື່ອງທີ່ມີສຽງ ແລະ ຈັບບາຍໄດ້.
  - ນໍາໃຊ້ອຸປະກອນການຮຽນ: ຮູບພາບ, ຕົວອັກສອນທີ່ມີເສັ້ນສີເຂັ້ມແຈ້ງດີ, ຈັບບາຍໄດ້.
  - ນໍາໃຊ້ທັກສະການຟັງ ແລະ ຈັບບາຍເຄື່ອງຕົວຈິງ.
  - ເພີ່ມເວລາປະຕິບັດກິດຈະກໍາໃຫ້ຫຼາຍກວ່າເວລາປົກກະຕິ.
  - ກິດຈະກໍາທີ່ເດັກເຂົ້າໃຈຍາກໃຫ້ປະຕິບັດຊໍ້າຄືນຫຼາຍຄັ້ງ.
  - ກິດຈະກໍາທີ່ນໍາມາປະຕິບັດຕ້ອງໃຫ້ເດັກອົດທົນເຮັດໃຫ້ສໍາເລັດ.
  - ຈັບຄູ່ເດັກໃຫ້ຊ່ວຍແນະນໍາປະຕິບັດກິດຈະກໍາການເຄື່ອນໄຫວຊີວິດປະຈໍາວັນ,
  - ໃຫ້ເດັກເລືອກສິ່ງທີ່ຕົນເອງມັກກ່ອນແລ້ວຈຶ່ງເພີ່ມກິດຈະກໍາທີ່ຕ້ອງການໃຫ້ຄວາມຮູ້ໃໝ່.

## ພາກທີ III. ການຕິດຕາມພັດທະນາການເດັກຊັ້ນອະນຸບານສຶກສາ ປີທີ 3

### 1. ຄວາມໝາຍການຕິດຕາມພັດທະນາການເດັກ

ການຕິດຕາມພັດທະນາການເດັກອະນຸບານ ໝາຍເຖິງການຕິດຕາມຄວາມສາມາດຂອງເດັກໃນການສະແດງພຶດຕິກຳທີ່ຄາດວ່າຈະປາກົດໃນແຕ່ລະໄລຍະຂອງອາຍຸເດັກ ເພື່ອນຳຜົນທີ່ໄດ້ຈາກການຕິດຕາມມາເປັນຂໍ້ມູນໃນການພິຈາລະນາ ເພື່ອສົ່ງເສີມປະສົບການໃຫ້ເດັກໄດ້ພັດທະນາທາງດ້ານຮ່າງກາຍອະນາໄມ, ຄວາມປອດໄພ, ອາລົມ-ຈິດໃຈ, ສັງຄົມ, ພາສາ, ສະຕິປັນຍາ ແລະ ຄວາມຮູ້ທົ່ວໄປຕາມຄວາມສາມາດຂອງເດັກແຕ່ລະບຸກຄົນ.

### 2. ຫຼັກການຕິດຕາມພັດທະນາການເດັກ

2.1 ຕິດຕາມພຶດຕິກຳເດັກເປັນລາຍບຸກຄົນ ໂດຍໃຫ້ຄອບຄຸມທຸກພັດທະນາການ.

2.2 ຕິດຕາມການປະຕິບັດກິດຈະກຳຂອງເດັກໃຫ້ເປັນປົກກະຕິ, ເປັນຂະບວນການຕໍ່ເນື່ອງຕາມຕາຕະລາງກິດຈະກຳປະຈຳວັນ.

3.3 ຕິດຕາມພັດທະນາການໂດຍໃຊ້ວິທີການສັງເກດ, ບັນທຶກພຶດຕິກຳຄວາມສາມາດຂອງເດັກຢ່າງສະໝ່ຳສະເໝີເພື່ອສະຫຼຸບພັດທະນາການ ແລະ ນຳຂໍ້ມູນມາຈັດປະສົບການໃຫ້ເໝາະສົມສອດຄ່ອງກັບຄວາມສາມາດຂອງເດັກແຕ່ລະຄົນ.

3.4 ຕິດຕາມພັດທະນາການເດັກໃຫ້ພັດທະນາໄປຕາມຈຸດປະສົງ.

3.5 ສົ່ງເສີມພັດທະນາການຂອງເດັກໃນທຸກໆວັນໃຫ້ເກີດຜົນໃນທາງທີ່ດີ.

3.6 ນຳເອົາຜົນການຕິດຕາມພັດທະນາການມາພິຈາລະນາສະຫຼຸບໃນທ້າຍພາກຮຽນຂອງທຸກປີ ເພື່ອເປັນຂໍ້ມູນໃຫ້ແກ່ຄູໃຊ້ສຶກສາອົບຮົມເດັກໃນຊັ້ນຮຽນຕໍ່ໄປ.

### 3. ການບັນທຶກຂໍ້ມູນການຕິດຕາມພັດທະນາການເດັກ

3.1 ການບັນທຶກຂໍ້ມູນການຕິດຕາມພັດທະນາການເດັກ ຊັ້ນອະນຸບານສຶກສາປີທີ 3 ປະກອບມີປຶ້ມຕິດຕາມຜົນງານສິລະປະສ້າງສັນປະຈຳເດືອນ, ປຶ້ມຕິດຕາມພັດທະນາການປະຈຳພາກຮຽນ. ປຶ້ມຮຽກຊື່ ແລະ ບັນທຶກພັດທະນາການ.

3.2 ການຈັດລະດັບຜົນງານ ຫຼື ພັດທະນາການແມ່ນປະຕິບັດຕາມເກນທີ່ວາງໄວ້ດັ່ງນີ້:

ດີ 1 ໝາຍເຖິງຄວາມສາມາດສະແດງພຶດຕິກຳໄດ້ຄ່ອງແຄ້ວວ່ອງໄວ ຫຼື ພັດທະນາໄດ້ເກນມາດຖານ.

ພໍໃຊ້ 2 ໝາຍເຖິງຄວາມສາມາດສະແດງພຶດຕິກຳໄດ້ເປັນບາງຄັ້ງບາງຄາວບໍ່ຄ່ອງແຄ້ວ ແລະ ປະຕິບັດໄດ້ບໍ່ສະໝ່ຳສະເໝີ ຫຼື ພັດທະນາໄດ້ໃກ້ຄຽງເກນມາດຕະຖານ.

ຄວນປັບປຸງ 3 ໝາຍເຖິງຄວາມສາມາດສະແດງພຶດຕິກຳຍັງບໍ່ທັນຈະແຈ້ງ, ຊັດເຈນ ຕ້ອງໃຫ້ການຊ່ວຍເຫຼືອ ຫຼື ພັດທະນາບໍ່ໄດ້ຕາມເກນມາດຕະຖານ.

3.3 ການບັນທຶກກ່ຽວກັບຊົນເຜົ່າໃຫ້ເອົາຕາມຊື່ເອີ້ນລວມມີດັ່ງນີ້:
ຂໍ້ມູນຈາກກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ VI ວັນທີ 24 ພະຈິກ 2008

| ລ/ດ | ຊື່ເອີ້ນລວມ | ຊື່ແຊງ ຫຼື ຂະແໜງ | ຊື່ເອີ້ນຕາມທ້ອງຖິ່ນ |
|---|---|---|---|
| I | **ໝວດພາສາລາວໄຕ (ມີ 8 ຊົນເຜົ່າ)** | | |
| 1 | ຊົນເຜົ່າລາວ | ພວນ, ກະເລີງ, ບໍ, ໂຢຍ, ຍໍ | ລາວ, ພວນ, ກະເລີງ, ໂຢຍ, ຍໍ, ໄທເຜີ້ງ, ໄທຊາມ, ໄທເຍືອງ, ໄທລານ, ໄທຈາ, ໄທມັດ, ໄທໂອ, ໄທລັງ, ອີສານ |
| 2 | ຊົນເຜົ່າໄຕ | ໄຕດຳ, ໄຕແດງ, ໄຕຂາວ, ໄຕເມີ້ຍ | ໄຕດຳ, ໄຕແດງ, ໄຕຂາວ, ໄຕເມີ້ຍ, ໄຕແມນ, ໄຕແຖງ, ໄຕແອດ, ໄຕໂສມ |
| 3 | ຊົນເຜົ່າຜູ້ໄທ | | ຜູ້ໄທ, ໄທອາງຄຳ, ໄທກະຕະ, ໄທກະປອງ, ໄທສາມເກົ້າ |
| 4 | ຊົນເຜົ່າລື້ | ຂຶນ (ເຂີນ) | ຂຶນ (ເຂີນ) |
| 5 | ຊົນເຜົ່າຍວນ | ກະລອມ, ງ້ຽວ | ຍວນ, ກະລອມ, ງ້ຽວ |
| 6 | ຊົນເຜົ່າຍັ້ງ | | ຍັ້ງ |
| 7 | ຊົນເຜົ່າແຊກ | | ແຊກ, ກ້ອຍ |
| 8 | ຊົນເຜົ່າໄທເໜືອ | | ໄທເໜືອ |
| II | **ໝວດພາສາມອນ-ຂະແມ (ມີ 32 ຊົນເຜົ່າ)** | | |
| 9 | ຊົນເຜົ່າກຶມມຸ | ກະສັກ, ກຶມມຸອູ, ກຶມມຸຍວນ, ກຶມມຸ ລື້, ກຶມມຸ ຄຣອງ, ກຶມມຸຣອກ, ກຶມ ມຸແຄວນ, ກຶມມຸແມ, ກຶມມຸເຈືອງ, ກຶມມຸອຳ, ກຣີ, ຍຸມບຣີ, ລາບຣີ, ມົກ ໄປຣ, ມົກປຣາງ, ມົກຕາງ, ມົກກົກ, ມົກຕູ້,ຈາກ. | ກະສັກ, ກຶມມຸອູ, ກຶມມຸຍວນ, ກຶມມຸລື້, ກຶມມຸຄຣອງ, ກຶມມຸຣອກ, ກຶມມຸແຄວນ, ກຶມມຸແມ, ກຶມມຸເຈືອງ, ກຶມມຸອຳ, ກຣີ, ຍຸມບຣີ, ລາບຣີ, ມົກໄປຣ, ມົກປຣາງ, ມົກຕາງ, ມົກກົກ, ມົກຕູ້, ຈາກ, ຕອງເຫຼືອງ |
| 10 | ຊົນເຜົ່າໄປຣ | ຖິ່ນ | ລົວະ, ລາວ, ໃໝ່, ໄຟ, ຖິ່ນ |
| 11 | ຊົນເຜົ່າຊິງມູນ | | ພວກ, ປວກ, ລາວໃໝ່ |
| 12 | ຊົນເຜົ່າຜ້ອງ | ຜ້ອງປຽດ, ຜ້ອງລານ, ຜ້ອງແຟນ, ຜ້ອງຈະປວງ | ຜ້ອງ, ຄະນຽງ, ຜ້ອງປຽດ, ຜ້ອງລານ, ຜ້ອງ ແຟນ, ຜ້ອງຈະປວງ |
| 13 | ຊົນເຜົ່າແທ່ນ | | ແທ່ນ, ໄທແທ່ນ |
| 14 | ຊົນເຜົ່າເອີດູ | | ເອີດູ, ໄທຮາດ |
| 15 | ຊົນເຜົ່າບິດ | | ບິດ |
| 16 | ຊົນເຜົ່າລະເມດ | | ລະເມດ |
| 17 | ຊົນເຜົ່າສາມຕ່າວ | ດອຍ | ສາມຕ່າວ, ດອຍ |
| 18 | ຊົນເຜົ່າກະຕາງ | ພະແກ້ວ | ບຣູກະຕາງ, ພະແກ້ວ |
| 19 | ຊົນເຜົ່າມະກອງ | ຕຣູຍ, ພົ້ວ, ມະຣ້ອຍ, ຕຣອງ | ບຣູມະກອງ, ຕຣູຍ, ພົ້ວ, ມະຣ້ອຍ, ຕຣອງ |
| 20 | ຊົນເຜົ່າຕຣີ | | ບຣູຕຣີ |
| 21 | ຊົນເຜົ່າຢຣຸ | ຢຣຸກອງ, ຢຣຸດາກ | ຢຣຸ, ສຸ, ລະເວນ, ຢຣຸກອງ, ຢຣຸດາກ |
| 22 | ຊົນເຜົ່າຕຣຽງ | | ຕຣຽງ |

| | | | |
|---|---|---|---|
| 23 | ຊົນເຜົ່າຕະໂອ້ຍ | ຕົງ, ຢຶບຣ | ບຣູຕະໂອ້ຍ, ຣາດົງ, ອິນ |
| 24 | ຊົນເຜົ່າແຢະ | | ແຢະ |
| 25 | ຊົນເຜົ່າເບຣາ | | ລະແວ, ລຸຍເວ, ກະແວດ, ຣາລາງ |
| 26 | ຊົນເຜົ່າກະຕູ | ຕຣີວ, ດາກກັງ | ກະຕູ, ຕຣີວ, ດາກກັງ, ປັນແດງ |
| 27 | ຊົນເຜົ່າຮາຮັກ | | ອາລັກ |
| 28 | ຊົນເຜົ່າໂອຍ | ສະປວນ, ສອກ, ອິນທີ | ໂອຍ, ສະປວນ, ສອກ, ອິນທີ, ແມກລອງ, ແມຣີຢາວ |
| 29 | ຊົນເຜົ່າກຣຽງ | ຈະຕ້ອງ, ເກາະ | ແງະ,ຈະຕ້ອງ, ເກາະ |
| 30 | ຊົນເຜົ່າເຈັງ | | ເຈັງ |
| 31 | ຊົນເຜົ່າສະດາງ | ກະຢ້ອງ, ສະດາງດວນ | ເຊີດາງ, ກະຢ້ອງ, ສະດາງດວນ |
| 32 | ຊົນເຜົ່າຊ່ວຍ | | ຊ່ວຍ |
| 33 | ຊົນເຜົ່າຍະ ເຫີນ | | ຕັງແກະ, ເຮີນ |
| 34 | ຊົນເຜົ່າລະວີ | | ລະວີ |
| 35 | ຊົນເຜົ່າປະໂກະ | ກະໂດ, ກະໄນ | ປະໂກະ, ກະໂດ, ກະໄນ |
| 36 | ຊົນເຜົ່າຂະແມ | | ຂະແມ, ຂອມ, ແຄະ |
| 37 | ຊົນເຜົ່າຕຸ້ມ | ລີຮາ, ໄທຈຳ, ໄທປອງ | ຕຸ້ມ, ລີຮາ, ໄທຈຳ, ໄທປອງ, ໄທປຸນ, ມ້ອຍ |
| 38 | ຊົນເຜົ່າງວນ | | ງວນ |
| 39 | ຊົນເຜົ່າມ້ອຍ | | ມ້ອຍ, ເມືອງ |
| 40 | ຊົນເຜົ່າກຣີ | | ສະລາງ, ອາເລມ, ມະເລງ, ຕອງເຫຼືອງ |
| **III** | **ພວດພາສາມົ້ງ-ອີວມຽນ (ມີ 2 ຊົນເຜົ່າ)** | | |
| 41 | ຊົນເຜົ່າມົ້ງ | ມົ້ງຂາວ, ມົ້ງລາຍ (ມົ້ງຂຽວ) ມົ້ງດຳ | ມົ້ງເດີ້, ມົ້ງເລັ່ງ, ມົ້ງດູ້, ມົ້ງຊື້, ມົ້ງຢົ້ວ |
| 42 | ຊົນເຜົ່າອີວມຽນ | ລານແຕນ, ຢ້າວຂາວ, ຢ້າວຜົມໄມແດງ | ຢ້າວ, ລາວຫ້ວຍ, ລານແຕນ, ຢ້າວຂາວ, ຢ້າວຜົມໄມແດງ |
| **IV** | **ພວດພາສາຈີນ-ຕີເບດ (ມີ 7 ຊົນເຜົ່າ)** | | |
| 43 | ຊົນເຜົ່າອາຄາ | ໂອມາ, ເຄີ, ມູເຕີບ, ຈີຈໍ, ປູລີ, ປານາ, ກໍເຟ, ນູກູຍ, ລູມາ, ເອີປາ, ຈີເປຍ, ມູຈີ, ຢາເອີ, ກົງສາດ, ພູຊາງ | ກໍ, ໂອມາ, ເຄີ, ມູເຕີບ, ຈີຈໍ, ປູລີ, ປານາ, ກໍເຟ, ນູກູຍ, ລູມາ, ເອີປາ,ຈີເປຍ,ມູຈີ, ຢາເອີ, ກົງສາດ, ພູຊາງ |
| 44 | ຊົນເຜົ່າຜູ້ນ້ອຍ | ພູຍອດ, ຕາປາດ, ບ້ານຕັ້ງ,ຈາຫໍ, ລາວແຊງ, ໄຜ (ຜົ້ງສາລີ), ລາວປານ, ຜົ້ງກູ້, ຜົ້ງເສດ | ແສນສີຣິ, ປີຊູ, ພູຍອດ, ຕາປາດ, ບ້ານຕັ້ງ, ຈາຫໍ, ລາວແຊງ, ໄຜ (ຜົ້ງສາລີ), ລາວປານ, ຜົ້ງກູ້, ຜົ້ງເສດ |
| 45 | ຊົນເຜົ່າລາຫູ | ລາຫູນະ, ລາຫູຊີ, ລາຫູເຊເລະ | ມູເຊີ, ມູເຊີດຳ, ມູເຊີຂາວ, ກຸຍສູງ, ກຸຍຫຼວງ |
| 46 | ຊົນເຜົ່າສີລາ | | ສີດາ |
| 47 | ຊົນເຜົ່າຮາຢີ | | ຮາຢີ |
| 48 | ຊົນເຜົ່າໂລໂລ | | ອາລູ |
| 49 | ຊົນເຜົ່າຫໍ້ | | ຫໍ້ |

3.4 ການບັນທຶກກ່ຽວກັບການຈະເລີນເຕີບໃຫຍ່ຂອງຮ່າງກາຍ (ໂພຊະນາການ) ມີດັ່ງນີ້:

ຂໍ້ມູນກ່ຽວກັບມາດຖານລວງສູງ ແລະ ນ້ຳໜັກໃຊ້ພາຍກ່ຽວກັບການຕິດຕາມການຈະເລີນເຕີບໃຫຍ່ທາງດ້ານຮ່າງກາຍເດັກ ຫຼື ໂພຊະນາການທີ່ເດັກຄວນໄດ້ຮັບຕາມໄວອາຍຸ.

1) ມາດຖານລວງສູງ

- ມາດຖານລວງສູງເດັກຍິງ ແລະ ຊາຍຕາມເກນອາຍຸຄິດໄລ່ເປັນຊັງຕີແມັດ (cm)
- ເດັກເກີດໃໝ່ຈະມີລວງຍາວປະມານ 50 ຊັງຕີແມດ.
- ອາຍຸ 01 ປີ ຈະມີຄວາມຍາວເພີ່ມຂຶ້ນເປັນ 75 ຊັງຕີແມດ.
- ອາຍຸ 04 ປີ ຈະມີຄວາມຍາວປະມານ 100 ຊັງຕີແມດ.
- ແຜນທຽບສີ ແລະ ແທກຮອບແຂນ (ໃຊ້ໃນກໍລະນີເດັກບໍ່ຮູ້ວັນເດືອນປີເກີດ)

(ຂໍ້ມູນຈາກປຶ້ມຕິດຕາມສຸຂະພາບແມ່ ແລະ ເດັກ, ກະຊວງສາທາລະນະສຸກໂຮງໝໍແມ່ ແລະ ເດັກປີ 2012 ).

**ໝາຍເຫດ:**

- ໃນເວລາຄົ້ນຄວ້າປຶ້ມຫົວນີ້ອອກນຳໃຊ້ບໍ່ທັນມີຂໍ້ມູນມາດຖານລວງສູງເດັກຕາມເກນອາຍຸຂອງເດັກ ນ້ອຍໃນ ສ.ປ.ປ ລາວ. ສະນັ້ນຖ້າມີຂໍ້ມູນໃໝ່ໃຫ້ຄູນຳໃຊ້ຕາມຄວາມເໝາະສົມ.
- ການແທກລວງສູງ ແລະ ນ້ຳໜັກເດັກໃຫ້ປະຕິບັດພ້ອມກັບໃນວັນເດືອນປີທີ່ທາງໂຮງຮຽນກວດກາ ສຸຂະພາບເດັກໃນແຕ່ລະຄັ້ງ.
- ກໍລະນີເດັກໄດ້ຕິດຕາມການຊັ່ງນ້ຳໜັກ ແລະ ລວງສູງຢູ່ໂຮງໝໍ, ໃຫ້ນຳໃຊ້ຂໍ້ມູນການຕິດຕາມສະພາບໂພ ຊະນາການຂອງເດັກ 0-60 ເດືອນຈາກປຶ້ມຕິດຕາມສຸຂະພາບແມ່ ແລະ ເດັກທີ່ທາງໂຮງໝໍນຳໃຊ້ (ວັນ, ເດືອນ, ປີກວດກາສຸຂະພາບຕ້ອງຢູ່ໃນເດືອນທີ່ທາງໂຮງຮຽນກວດສຸຂະພາບເດັກ).

2) ມາດຖານນ້ຳໜັກ

- ມາດຖານນ້ຳໜັກເດັກຍິງ ແລະ ຊາຍຕາມເກນອາຍຸຄິດໄລ່ເປັນກິໂລກຼາມ (kg).
- ມາດຖານນ້ຳໜັກເດັກຍິງ ແລະ ຊາຍຕາມເກນອາຍຸ (ແຫຼ່ງຂໍ້ມູນ WHO 2007).

## ຕາຕະລາງນ້ຳໜັກເດັກຊາຍອາຍຸ 3-6 ປີ ເປັນ ກິໂລກຼາມ (kg)

| ອາຍຸ/ປີ | ນ້ຳໜັກຫຼຸດເກນ | | | ເກນມາດຖານ | ນ້ຳໜັກລື່ນເກນ | | |
|---|---|---|---|---|---|---|---|
| | -3SD | -2SD | -1SD | SD | -3SD | -2SD | -1SD |
| 2.09 | 9.7 | 10.9 | 12.3 | 13.8 | 15.6 | 17.6 | 19.9 |
| 2.10 | 9.8 | 11.0 | 12.4 | 14.0 | 15.8 | 17.8 | 20.2 |
| 2.11 | 9.9 | 11.2 | 12.6 | 14.2 | 16.0 | 18.1 | 20.4 |
| 3.00 | 10.0 | 11.3 | 12.7 | 14.3 | 16.2 | 18.3 | 20.7 |
| 3.01 | 10.1 | 11.4 | 12.9 | 14.5 | 16.4 | 18.6 | 21.0 |
| 3.02 | 10.2 | 11.5 | 13.0 | 14.7 | 16.6 | 18.8 | 21.3 |
| 3.03 | 10.3 | 11.6 | 13.1 | 14.8 | 16.8 | 19.0 | 21.6 |
| 3.04 | 10.4 | 11.8 | 13.3 | 15.0 | 17.0 | 19.3 | 21.9 |
| 3.05 | 10.5 | 11.9 | 13.4 | 15.2 | 17.2 | 19.5 | 22.1 |
| 3.06 | 10.6 | 12.0 | 13.6 | 15.3 | 17.4 | 19.7 | 22.4 |
| 3.07 | 10.7 | 12.1 | 13.7 | 15.5 | 17.6 | 20.0 | 22.7 |
| 3.08 | 10.8 | 12.2 | 13.8 | 15.7 | 17.8 | 20.2 | 23.0 |
| 3.09 | 10.9 | 12.4 | 14.0 | 15.8 | 18.0 | 20.5 | 23.3 |
| 3.10 | 11.0 | 12.5 | 14.1 | 16.0 | 18.2 | 20.7 | 23.6 |
| 3.11 | 11.1 | 12.6 | 14.3 | 16.2 | 18.4 | 20.9 | 23.9 |
| 4.00 | 11.2 | 12.7 | 14.4 | 16.3 | 18.6 | 21.2 | 24.2 |
| 4.01 | 11.3 | 12.8 | 14.5 | 16.5 | 18.8 | 21.4 | 24.5 |
| 4.02 | 11.4 | 12.9 | 14.7 | 16.7 | 19.0 | 21.7 | 24.8 |
| 4.03 | 11.5 | 13.1 | 14.8 | 16.8 | 19.2 | 21.9 | 25.1 |
| 4.04 | 11.6 | 13.2 | 15.0 | 17.0 | 19.4 | 22.2 | 25.4 |
| 4.05 | 11.7 | 13.3 | 15.1 | 17.2 | 19.6 | 22.4 | 25.7 |
| 4.06 | 11.8 | 13.4 | 15.2 | 17.3 | 19.8 | 22.7 | 26.0 |
| 4.07 | 11.9 | 13.5 | 15.4 | 17.5 | 20.0 | 22.9 | 26.3 |
| 4.08 | 12.0 | 13.6 | 15.5 | 17.7 | 20.2 | 23.2 | 26.6 |
| 4.09 | 12.1 | 13.7 | 15.6 | 17.8 | 20.4 | 23.4 | 26.9 |
| 4.10 | 12.2 | 13.8 | 15.8 | 18.0 | 20.6 | 23.7 | 27.2 |
| 4.11 | 12.3 | 14.0 | 15.9 | 18.2 | 20.8 | 23.9 | 27.6 |
| 5.00 | 12.4 | 14.1 | 16.0 | 18.3 | 21.0 | 24.2 | 27.9 |
| 5.01 | 12.7 | 14.4 | 16.3 | 18.5 | 21.1 | 24.2 | 27.8 |
| 5.02 | 12.8 | 14.5 | 16.4 | 18.7 | 21.3 | 24.2 | 28.1 |
| 5.03 | 13.0 | 14.6 | 16.6 | 18.9 | 21.5 | 24.2 | 28.4 |
| 5.04 | 13.1 | 14.8 | 16.7 | 19.0 | 21.7 | 24.2 | 28.8 |
| 5.05 | 13.2 | 14.9 | 16.9 | 19.2 | 22.0 | 25.2 | 29.1 |
| 5.06 | 13.3 | 15.0 | 17.0 | 19.4 | 22.2 | 25.5 | 29.4 |
| 5.07 | 13.4 | 15.2 | 17.2 | 19.6 | 22.4 | 25.7 | 29.8 |
| 5.08 | 13.6 | 15.3 | 17.4 | 19.8 | 22.6 | 26.0 | 30.1 |
| 5.09 | 13.7 | 15.4 | 17.5 | 19.9 | 22.8 | 26.3 | 30.4 |
| 5.10 | 13.8 | 15.6 | 17.7 | 20.1 | 23.1 | 26.6 | 30.8 |
| 5.11 | 13.9 | 15.7 | 17.8 | 20.3 | 23.3 | 26.8 | 31.2 |
| 6.00 | 14.1 | 15.9 | 18.0 | 20.5 | 23.5 | 27.1 | 31.5 |

## ຕາຕະລາງນ້ຳໜັກເດັກຍິງອາຍຸ 3-6 ປີເປັນກິໂລກຼາມ (kg)

| ອາຍຸ/ປີ | ນ້ຳໜັກຫຼຸດເກນ | | | ເກນມາດຖານ | ນ້ຳໜັກລື່ນເກນ | | |
|---|---|---|---|---|---|---|---|
| | -3SD | -2SD | -1SD | SD | -3SD | -2SD | -1SD |
| 2.09 | 9.3 | 10.9 | 11.7 | 13.3 | 15.1 | 17.3 | 20.0 |
| 2.10 | 9.4 | 10.5 | 11.9 | 13.5 | 15.4 | 17.6 | 20.3 |
| 2.11 | 9.5 | 10.7 | 12.0 | 13.7 | 15.6 | 17.9 | 20.6 |
| 3.00 | 9.6 | 10.8 | 12.2 | 13.9 | 15.8 | 18.1 | 20.9 |
| 3.01 | 9.7 | 10.9 | 12.4 | 14.0 | 16.0 | 18.4 | 21.3 |
| 3.02 | 9.8 | 11.1 | 12.5 | 14.2 | 16.3 | 18.7 | 21.6 |
| 3.03 | 9.9 | 11.2 | 12.7 | 14.4 | 16.5 | 19.0 | 22.0 |
| 3.04 | 10.1 | 11.3 | 12.8 | 14.6 | 16.7 | 19.2 | 22.3 |
| 3.05 | 10.2 | 11.5 | 13.0 | 14.8 | 16.9 | 19.5 | 22.7 |
| 3.06 | 10.3 | 11.6 | 13.1 | 15.0 | 17.2 | 19.8 | 23.0 |
| 3.07 | 10.4 | 11.7 | 13.3 | 15.2 | 17.4 | 20.1 | 23.4 |
| 3.08 | 10.5 | 11.8 | 13.4 | 15.3 | 17.6 | 20.4 | 23.7 |
| 3.09 | 10.6 | 12.0 | 13.6 | 15.5 | 17.8 | 20.7 | 24.1 |
| 3.10 | 10.7 | 12.1 | 13.7 | 15.7 | 18.1 | 20.9 | 24.5 |
| 3.11 | 10.8 | 12.2 | 13.9 | 15.9 | 18.3 | 21.2 | 24.8 |
| 4.00 | 10.9 | 12.3 | 14.0 | 16.1 | 18.5 | 21.5 | 25.2 |
| 4.01 | 11.0 | 12.4 | 14.2 | 16.3 | 18.8 | 21.8 | 25.5 |
| 4.02 | 11.1 | 12.6 | 14.3 | 16.4 | 19.0 | 22.1 | 25.9 |
| 4.03 | 11.2 | 12.7 | 14.5 | 16.6 | 19.2 | 22.4 | 26.3 |
| 4.04 | 11.3 | 12.8 | 14.6 | 16.8 | 19.4 | 22.6 | 26.6 |
| 4.05 | 11.4 | 12.9 | 14.8 | 17.0 | 19.7 | 22.9 | 27.0 |
| 4.06 | 11.5 | 13.0 | 14.9 | 17.2 | 19.9 | 23.2 | 27.4 |
| 4.07 | 11.6 | 13.2 | 15.1 | 17.3 | 20.1 | 23.5 | 27.7 |
| 4.08 | 11.7 | 13.3 | 15.2 | 17.5 | 20.3 | 23.8 | 28.1 |
| 4.09 | 11.8 | 13.4 | 15.3 | 17.7 | 20.6 | 24.1 | 28.5 |
| 4.10 | 11.9 | 13.5 | 15.5 | 17.9 | 20.8 | 24.4 | 28.8 |
| 4.11 | 12.0 | 13.6 | 15.6 | 18.0 | 21.0 | 24.6 | 29.2 |
| 5.00 | 12.1 | 13.7 | 15.8 | 18.2 | 21.2 | 24.9 | 29.5 |
| 5.01 | 12.4 | 14.0 | 15.9 | 18.3 | 21.2 | 24.8 | 29.5 |
| 5.02 | 12.5 | 14.1 | 16.0 | 18.4 | 21.4 | 25.1 | 29.8 |
| 5.03 | 12.6 | 14.2 | 16.2 | 18.6 | 21.6 | 25.4 | 30.2 |
| 5.04 | 12.7 | 14.3 | 16.3 | 18.8 | 21.8 | 25.6 | 30.5 |
| 5.05 | 12.8 | 14.4 | 16.5 | 19.0 | 22.0 | 25.9 | 30.9 |
| 5.06 | 12.9 | 14.6 | 16.6 | 19.1 | 22.2 | 26.2 | 31.3 |
| 5.07 | 13.0 | 14.7 | 16.8 | 19.3 | 22.5 | 26.5 | 31.6 |
| 5.08 | 13.1 | 14.8 | 16.9 | 19.5 | 22.7 | 26.7 | 32.0 |
| 5.09 | 13.2 | 14.9 | 17.0 | 19.6 | 22.9 | 27.0 | 32.3 |
| 5.10 | 13.3 | 15.0 | 17.2 | 19.8 | 23.1 | 27.3 | 32.7 |
| 5.11 | 13.4 | 15.2 | 17.3 | 20.0 | 23.3 | 27.6 | 33.1 |
| 6.00 | 13.5 | 15.3 | 17.5 | 20.2 | 23.5 | 27.8 | 33.4 |

## 4. ການບັນທຶກຂໍ້ມູນປຶ້ມຕິດຕາມຜົນງານສິລະປະສ້າງສັນປະຈຳເດືອນ

ປຶ້ມຕິດຕາມຜົນງານສິລະປະສ້າງສັນປະຈຳເດືອນໃຊ້ສຳລັບຄູ ແລະ ຜູ້ປົກຄອງໃນການລາຍງານຂໍ້ມູນເຊິ່ງກັນ ແລະ ກັນມີດັ່ງນີ້:

4.1 ປຶ້ມລາຍງານຜົນການຕິດຕາມການເຝິກທັກສະດ້ານສິລະປະສ້າງສັນ, ການເຝິກແອບຂຽນຕົວອັກສອນ, ຕົວເລກສຳລັບເດັກອາຍຸ 5-6 ປີ ໃຊ້ສຳລັບສື່ສານຂໍ້ມູນລະຫວ່າງຄູ ແລະ ຜູ້ປົກຄອງກ່ຽວກັບເດັກ.

4.2 ຄູຈະເປັນຜູ້ປະເມີນເດັກໂດຍການສັງເກດບັນທຶກພັດທະນາການທາງດ້ານສິລະປະສ້າງສັນປະຈຳອາທິດ ແລະ ສົ່ງຂໍ້ມູນໃຫ້ຜູ້ປົກຄອງຮັບຊາບໃນແຕ່ລະອາທິດ ຫຼື ໜຶ່ງເດືອນ.

4.3 ຜູ້ປົກຄອງຊ່ວຍປະກອບຄວາມເຫັນໃຫ້ລູກຕົນເອງຕໍ່ການເຝິກທັກສະການແຕ້ມຮູບ, ຕັດຕິດ ແລະ ຂຽນ.

ຕົວຢ່າງ: ຜົນງານປະຈຳອາທິດທີ 1

ກ. ຜົນງານມື້ທີ 1

ຫົວຂໍ້ກິດຈະກຳ: ຂຽນສະຫຼະ ×າ

ວັນເດືອນປີ: *10/9/2014* *ລະດັບຄຸນນະພາບ:* ..........................................

ບ່ອນຕິດຜົນງານ

| |
|---|
| ປາ ຕາ ດາ |

**ຂ. ສະຫຼຸບຜົນງານປະຈຳອາທິດທີ 1**

ຕົວຢ່າງ: ການຂຽນບັນທຶກໃຫ້ຂຽນຕົວເລກລະດັບຄຸນນະພາບລົງໃນຫ້ອງຫວ່າງ

| ວັນເດືອນປີ | ລາຍການ | ລະດັບຄຸນນະພາບ | | | ຄວາມຄິດເຫັນຄູ ປະຈຳຫ້ອງ |
|---|---|---|---|---|---|
| | | ດີ | ພໍໃຊ້ | ຄວນປັບປຸງ | |
| 10/9/2014 | ຂຽນສະຫຼະ ×າ | | | 3 | ບໍ່ຂຽນຫົວສະຫຼະ×າ |
| 14/9/2014 | ຂຽນພະຍັນຊະນະ ແລະ ສະຫຼະ ×າ | | 2 | | ຂຽນພະຍັນຊະນະຖືກທິດທາງ, ແຕ່ບໍ່ຂຽນຫົວສະຫຼະ |
| 17/9/2014 | ຂຽນຄຳສັບ ບາ, ປາ, ດາ, ຕາ | | 2 | | ຂຽນບາງຕົວ: ບາ, ດາ, |

ຄວາມຄິດເຫັນຜູ້ປົກຄອງຕໍ່ກິດຈະກຳ, ສິ່ງທີ່ຄວນປັບປຸງ: *ໄດ້ຊ່ວຍແນະນຳໃຫ້ເດັກສັງເກດທິດທາງຂອງການຂຽນສະຫຼະ, ພະຍັນຊະນະ.*

ລາຍເຊັນຜູ້ປົກຄອງ ລາຍເຊັນຄູປະຈຳຫ້ອງ

## 5. ການບັນທຶກຂໍ້ມູນປຶ້ມຕິດຕາມພັດທະນາການເດັກປະຈໍາພາກຮຽນ

ປຶ້ມຕິດຕາມພັດທະນາການເດັກປະຈໍາພາກຮຽນໃຊ້ບັນທຶກຂໍ້ມູນກ່ຽວກັບເດັກອາຍຸ 5-6 ປີເປັນລາຍບຸກຄົນ ຫຼື ເປັນແຕ່ລະຄົນດັ່ງນີ້:

5.1 ເດັກແຕ່ລະຄົນຕ້ອງໄດ້ຕິດຕາມພັດທະນາການດ້ານຮ່າງກາຍອະນາໄມຄວາມປອດໄພ, ອາລົມ-ຈິດໃຈ, ສັງຄົມ, ພາສາ, ສະຕິປັນຍາ ແລະ ຄວາມຮູ້ທົ່ວໄປຕາມມາດຖານສະມັດຖະພາບກໍານົດໄວ້.

5.2 ຄູຈະເປັນຜູ້ຕິດຕາມພັດທະນາການເດັກ ໂດຍການສັງເກດບັນທຶກພັດທະນາການແຕ່ລະດ້ານໃນແຕ່ລະໄລຍະຢ່າງຕໍ່ເນື່ອງ.

5.3 ຂໍ້ມູນການຕິດຕາມສາມາດນໍາໃຊ້ເປັນການສື່ສານລະຫວ່າງຄູ ແລະ ຜູ້ປົກຄອງກ່ຽວກັບພັດທະນາການເດັກໃນແຕ່ລະໄລຍະຜູ້ປົກຄອງ ແລະ ຄູຈະນໍາໃຊ້ຂໍ້ມູນດັ່ງກ່າວ ເພື່ອຊ່ວຍເຫຼືອເດັກໃນບາງບັນຫາທີ່ເດັກປະຕິບັດບໍ່ທັນໄດ້ດີ.

ປຶ້ມຕິດຕາມພັດທະນາການເດັກມີປະໂຫຍດຕໍ່ຄູ, ຜູ້ປົກຄອງໃນການສະໜອງຂໍ້ມູນທາງດ້ານພັດທະນາການເດັກ ແລະ ຜົນງານການເຝິກທັກສະທາງດ້ານສິລະປະສ້າງສັນເຊັ່ນ: ການແຕ້ມຮູບ, ການຂຽນຕົວອັກສອນລາວ ແລະ ຕົວເລກອາຣັບ ແລະ ເລກລາວ. ປຶ້ມຫົວນີ້ໃຊ້ບັນທຶກຂໍ້ມູນປະຫວັດນັກຮຽນ, ຂໍ້ມູນກ່ຽວກັບພໍ່ແມ່, ຂໍ້ມູນກ່ຽວກັບອ້າຍ, ເອື້ອຍ, ນ້ອງຄີງ, ຂໍ້ມູນກ່ຽວກັບເພື່ອນທີ່ເດັກຮັກແພງ, ຂໍ້ມູນການຍ້າຍໂຮງຮຽນ, ແຜນຜັງການເດີນທາງຈາກໂຮງຮຽນໄປຫາເຮືອນຂອງເດັກ, ປະຫວັດດ້ານສຸຂະພາບ, ການຈະເລີນເຕີບໃຫຍ່ທາງດ້ານຮ່າງກາຍ (ໂພຊະນາການ), ບັນທຶກເວລາມາໂຮງຮຽນ. ນອກນັ້ນຍັງໃຫ້ຄວາມສະດວກໃນການຕິດຕາມ ແລະ ວິໄຈພັດທະນາການເດັກເບື້ອງຕົ້ນໂດຍອີງໃສ່ຂໍ້ມູນທີ່ບັນທຶກໄວ້ໃນປຶ້ມຫົວນີ້, ຂໍ້ມູນຈາກຜົນການຕິດຕາມຈະຊ່ວຍໃຫ້ຜູ້ປົກຄອງ ແລະ ຄູ ໄດ້ຊ່ວຍເຫຼືອເດັກໃນການສຶກສາລັກສະນະນິດໄສ, ການເຝິກທັກສະໃນການຮຽນຮູ້ສິ່ງຕ່າງໆອ້ອມຕົວເດັກຈາກການຫຼິ້ນ, ຮຽນໃນໂຮງຮຽນອະນຸບານ ແລະ ໃນຄອບຄົວໄດ້ຖືກຕ້ອງເໝາະສົມກັບໄວອາຍຸ.

- ເກນລະດັບຄຸນນະພາບ: ໃຫ້ຂຽນເຄື່ອງໝາຍ ✓ລົງໃນຫ້ອງຫວ່າງ

| | |
|---|---|
| ດີ 1 | ໝາຍເຖິງຄວາມສາມາດສະແດງພຶດຕິກໍາໄດ້ຄ່ອງແຄ້ວວ່ອງໄວ ຫຼື ພັດທະນາໄດ້ຕາມເກນມາດຖານ. |
| ພໍໃຊ້ 2 | ໝາຍເຖິງຄວາມສາມາດສະແດງພຶດຕິກໍາໄດ້ເປັນບາງຄັ້ງບາງຄາວບໍ່ຄ່ອງແຄ້ວ ແລະ ປະຕິບັດໄດ້ບໍ່ສະໝໍ່າສະເໝີ ຫຼື ພັດທະນາໄດ້ໃກ້ຄຽງເກນມາດຕະຖານ. |
| ຄວນປັບປຸງ 3 | ໝາຍເຖິງຄວາມສາມາດສະແດງພຶດຕິກໍາຍັງບໍ່ທັນຈະແຈ້ງ, ຊັດເຈນຕ້ອງໃຫ້ການຊ່ວຍເຫຼືອ ຫຼື ພັດທະນາບໍ່ໄດ້ຕາມເກນມາດຕະຖານ. |

- ເກນອາຍຸເດັກ
  1. ອາຍຸເດັກໃນວັນທີ 1 ເດືອນກັນຍາຕ້ອງໄດ້ຢ່າງໜ້ອຍ 4 ປີ 09 ເດືອນຂຶ້ນໄປ.
  2. ວິທີຄິດໄລ່: ເອົາວັນເຂົ້າຮຽນ (ວັນທີ 1 ເດືອນ ກັນຍາ) ລົບ ໃຫ້ວັນເດືອນປີເກີດເດັກ.
- ກໍລະນີວັນເກີດ ແລະ ເດືອນເກີດບໍ່ສາມາດລົບໄດ້ໃຫ້ຢືມຈໍານວນວັນເດືອນປີດັ່ງນີ້:

  1 ເດືອນ ມີ 30 ວັນ; 1 ປີ ມີ 12 ເດືອນ.

| | | |
|---|---|---|
| ຕົວຢ່າງ: | ວັນເຂົ້າຮຽນ | ວັນທີ 1 ເດືອນ 9 ປີ 2014 |
| | ວັນ ເດືອນ ປີເກີດ | ວັນທີ 5 ເດືອນ 10 ປີ 2009 |

ຂັ້ນຕອນທີ 1:

1. ວັນທີ 1 ລົບໃຫ້ວັນທີ 5 ບໍ່ໄດ້ໃຫ້ຢືມ1ເດືອນ (30 ວັນ) ຈາກເດືອນ (9).

   ຈຳນວນວັນທັງໝົດ 30 ວັນ +1 ວັນ = 31ວັນ.

2. ເດືອນ 9 ຖືກຢືມ 1 ເດືອນຈະຍັງເຫຼືອເປັນເດືອນ 8 ແລະ ເດືອນ 8 ລົບໃຫ້ເດືອນ 10 ບໍ່ໄດ້ໃຫ້ຢືມ 1 ປີ (12 ເດືອນ) ຈາກປີ (2014).

   ຈຳນວນວັນທັງໝົດ 12 ເດືອນ +8 ເດືອນ = 20 ເດືອນ.

3. ປີ 2014 ຖືກຢືມ 1 ປີ ຈະຍັງເຫຼືອເປັນປີ 2013.

| | | | | | | | |
|---|---|---|---|---|---|---|---|
| ຂັ້ນຕອນທີ 2: | ວັນເຂົ້າຮຽນ: | 1 | 9 | 2014 | ປ່ຽນເປັນ | 31 | 20 | 2013 |
| | | | | | (ລົບ) _ | | | |
| | ວັນເດືອນປີເກີດ: | | | | | 5 | 10 | 2009 |
| | | | | | | ---------- | ---------- | ---------- |
| | | | | | | 26 | 10 | 0004 |

ສະຫຼຸບ: ມື້ເຂົ້າຮຽນເດັກຈະມີອາຍຸ 4 ປີ 10 ເດືອນ 26 ວັນ

ຄ. ຄຳແນະນຳການບັນທຶກພັດທະນາການປະຈຳພາກຮຽນ

- ການບັນທຶກຂໍ້ມູນ

ໃຫ້ຄູຂຽນຜົນການຕິດຕາມໃສ່ແຕ່ລະຂໍ້ໂດຍການສັງລວມຂໍ້ມູນຈາກການສັງເກດເດັກຕາມການປະຕິບັດກິດຈະກຳຕ່າງໆຈາກການສັງເກດການເຮັດກິດຈະກຳປະຈຳວັນຫຼາຍຄັ້ງຕາມຫົວຂໍ້ດັ່ງນີ້:

1. ຂໍ້ມູນສ່ວນຕົວເດັກ.
2. ຂໍ້ມູນກ່ຽວກັບພໍ່ແມ່ (ການໝາຍຊົນເຜົ່າໃຫ້ຄູສອບຖາມຜູ້ປົກຄອງເດັກ ແລະ ໝາຍຕາມຊື່ເອີ້ນລວມຕາມຕາຕະລາງຂໍ້ມູນຊົນເຜົ່າທີ່ຖືກຮັບຮອງຈາກກອງປະຊຸມໃຫຍ່).
3. ຂໍ້ມູນກ່ຽວກັບອ້າຍ, ເອື້ອຍ, ນ້ອງຄີງ.
4. ຂໍ້ມູນກ່ຽວກັບໝູ່ເພື່ອນທີ່ເດັກຮັກແພງ.
5. ຂໍ້ມູນການຍ້າຍໂຮງຮຽນ.
6. ແຜນຜັງການເດີນທາງຈາກໂຮງຮຽນໄປຫາເຮືອນເດັກ.
   (ແຜນຜັງການເດີນທາງຈາກໂຮງຮຽນໄປຫາເຮືອນເດັກໃຫ້ຜູ້ປົກຄອງເປັນຜູ້ແຕ້ມ)
7. ປະຫວັດດ້ານສຸຂະພາບ.
8. ການຈະເລີນເຕີບໃຫຍ່ທາງດ້ານຮ່າງກາຍ.
9. ບັນທຶກເວລາມາໂຮງຮຽນ.
10. ພັດທະນາການໃນແຕ່ລະດ້ານ.
11. ສະຫຼຸບຜົນພັດທະນາການປະຈຳພາກຮຽນ.
12. ຄວາມຄິດເຫັນຂອງຜູ້ປົກຄອງປະຈຳພາກຮຽນ.
13. ການຄັດເລືອກຜົນງານສິລະປະສ້າງສັນ (ແຕ້ມ, ປັ້ນ, ຮ້ອຍ, ຈີກ, ຕັດ ແລະ ຕິດ) ປະຈຳເດືອນຕາມໜ່ວຍການສອນທີ 1-8 ຫຼື ປຶ້ມບົດເຝິກຫັດ.
14. ຮູບແຕ້ມ ຫຼື ການຂຽນທີ່ເດັກພາກພູມໃຈ ແລະ ເລືອກເອງໃນແຕ່ລະພາກຮຽນ.

- ການຈັດລຳດັບຄຸນນະພາບ ແລະ ການສະຫຼຸບພັດທະນາການ.

1. ການຈັດລຳດັບຄຸນນະພາບໃນການຕິດຕາມພັດທະນາການໃຫ້ປະຕິບັດເປັນ 3 ລະດັບຕາມເກນທີ່ກຳນົດໄວ້.
2. ການສະຫຼຸບພັດທະນາການພາກຮຽນທີ 1 ແລະ ພາກຮຽນທີ 2 ໃນແຕ່ລະດ້ານໃຫ້ຄູຄິດໄລ່ຕົວຈິງຕາມຈຳນວນຂໍ້ທີ່ເດັກສາມາດປະຕິບັດໄດ້ໃນ 3 ລະດັບຄຸນນະພາບ ດີ 1, ພໍໃຊ້ 2, ຄວນປັບປຸງ 3.

**ຕົວຢ່າງ:** ພັດທະນາການດ້ານພາສາມີທັງໝົດ 16 ຂໍ້, ໄດ້ດີ 04 ຂໍ້, ພໍໃຊ້ 08 ຂໍ້,ຄວນປັບປຸງ 04ຂໍ້: 5,9,11,15.

- ການຂຽນຄຳຄິດເຫັນໃຫ້ຄູຂຽນສະເພາະຂໍ້ທີ່ຄວນປັບປຸງໃສ່ໃນຕາຕະລາງຫ້ອງຄວາມຄິດເຫັນ.
- ການບັນທຶກເພີ່ມເຕີມພັດທະນາການ ຫຼື ພຶດຕິກຳທີ່ຄວນສົ່ງເສີມ ແລະ ພັດທະນາໃຫ້ຄູຂຽນຈຸດດີເດັ່ນຂອງເດັກໃນແຕ່ລະພັດທະນາການ.

- ຄວາມຄິດເຫັນຂອງຜູ້ປົກຄອງ

ການພາຍຄວາມຄິດເຫັນຂອງຜູ້ປົກຄອງ

- ຄູແນະນຳຜູ້ປົກຄອງສັງເກດລູກຂອງຕົນເປັນແຕ່ລະວັນ, ອາທິດ, ເດືອນຕາມຄຸນລັກສະນະ ຫຼື ພຶດຕິກຳທີ່ເດັກສະແດງອອກເວລາຢູ່ເຮືອນຕາມຫົວຂໍ້ໃນຕາຕະລາງ.
- ໃຫ້ຜູ້ປົກຄອງຕີລາຄາ ຫຼື ຮ່ວມກັບຄູຂຽນສິ່ງທີ່ລູກຕົນເອງສາມາດເຮັດໄດ້, ໂດຍປະຕິບັດຕາມເກນລະດັບຄຸນນະພາບ ດີ, ພໍໃຊ້, ຄວນປັບປຸງ.

- ການຄັດເລືອກຜົນງານ

- ການຄັດເລືອກຜົນງານ ຫຼື ຄວາມພາກພູມໃຈປະຈຳໜ່ວຍການສອນແຕ່ລະເດືອນໃຫ້ເດັກເປັນຜູ້ຄັດເລືອກຜົນງານການແຕ້ມ, ການຂີດຂຽນ ແລະ ການຕັດ-ຕິດຕາມໃຈ, ຄູຊ່ວຍຂຽນຊື່ຫົວຂໍ້, ວັນ, ເດືອນ. ປີປະຕິບັດກິດຈະກຳ, ຈັດລະດັບຄຸນນະພາບ ແລະ ຂຽນຄຳຄິດເຫັນຕາມເກນລະດັບຄຸນນະພາບທີ່ເດັກໄດ້ຮັບໃສ່ຫ້ອງຫວ່າງ.
- ການຕິດຜົນງານ ຫຼື ຮູບແຕ້ມປະຈຳພາກຮຽນໃຫ້ເດັກເປັນຜູ້ຄັດເລືອກ, ຄູຊ່ວຍຂຽນຊື່ຫົວຂໍ້, ວັນ, ເດືອນປີປະຕິບັດກິດຈະກຳ, ຈັດລະດັບຄຸນນະພາບ ແລະ ຂຽນຄຳຄິດເຫັນຕາມເກນລະດັບຄຸນນະພາບທີ່ເດັກປະຕິບັດໄດ້ ໃສ່ບ່ອນຕິດຮູບ.

- ການບັນທຶກການຈະເລີນເຕີບໃຫຍ່ຂອງຮ່າງກາຍ

- ການບັນທຶກນ້ຳໜັກ ແລະ ລວງສູງໃຫ້ບັນທຶກ 2 ຄັ້ງໃນໜຶ່ງພາກຮຽນວັນເວລາແມ່ນເລີ່ມຕົ້ນພາກຮຽນ ແລະ ທ້າຍພາກຮຽນໂດຍຄູເປັນຜູ້ບັນທຶກເອງ.
- ການວັດແທກລວງສູງໃຫ້ປະຕິບັດໃນວັນດຽວກັບວັນຊັ່ງນ້ຳໜັກ.

- ວັນເວລາຊັ່ງນ້ຳໜັກຕົວຈິງໃຫ້ໂຮງຮຽນກຳນົດເອົາເອງ, ໂດຍປະຕິບັດຕາມຕາຕະລາງການກຳນົດໄລຍະເວລາໃນແຕ່ລະພາກຮຽນ.
- ພາກຮຽນທີ 1: ຄັ້ງທີ 1 ອາທິດທີໜຶ່ງເດືອນກັນຍາ, ຄັ້ງທີ 2 ອາທິດທີສີ່ເດືອນທັນວາ.
- ພາກຮຽນທີ 2: ຄັ້ງທີ 1 ອາທິດທີໜຶ່ງເດືອນກຸມພາ, ຄັ້ງທີ 2 ອາທິດທີສາມເດືອນພຶດສະພາ.

ການຊັ່ງນ້ຳໜັກໃນແຕ່ລະຄັ້ງໃຫ້ຂຽນຕົວເລກໃສ່ເປັນກິໂລກຼາມ, ແຕ່ລະພາກຮຽນຊັ່ງ 2 ຄັ້ງຈາກນັ້ນຈຶ່ງທຽບໃສ່ມາດຖານຂອງຕາຕະລາງນ້ຳໜັກຂອງກະຊວງສາທາລະນະສຸກກຳນົດໄວ້.

ການແທກລວງສູງຕາມຕາຕະລາງມາດຖານລວງສູງຂອງເດັກ ໃຫ້ອີງໃສ່ປຶ້ມບັນທຶກການຈະເລີນເຕີບໃຫຍ່ຂອງເດັກ (ປຶ້ມຕິດຕາມສຸຂະພາບແມ່ ແລະ ເດັກ) ກະຊວງສາທາລະນະສຸກໂຮງໝໍແມ່ ແລະ ເດັກ.

## ຂ. ການບັນທຶກຂໍ້ມູນໃສ່ປຶ້ມຕິດຕາມພັດທະນາການເດັກປະຈຳພາກຮຽນ

ຮູບເດັກ

ຊັ້ນອະນຸບານ ປີທີ 3

ຊື່ໂຮງຮຽນ: *ອະນຸບານດົງໂດກ*

ປະເພດໂຮງຮຽນ ☑ ລັດ ຫຼື ☐ ເອກກະຊົນ

ທີ່ຕັ້ງໂຮງຮຽນ *ບ້ານ ສະພັງເມິກ* ເມືອງ ໄຊທານີ, ແຂວງ/*ນະຄອນຫຼວງວຽງຈັນ*

ຊື່: *ນາງ ຄຳວຽງ* ນາມສະກຸນ *ແກ້ວສະອາດ*

ເລກປະຈຳຕົວ: *1059*

ວັນເດືອນປີເກີດ *06/03/2009* ອາຍຸ *4* ປີ *05* ເດືອນ *25* ວັນ

ສົກຮຽນ *2014-2015* ຊັ້ນຮຽນ *ອ. ບ. 3* ຫ້ອງ ຂ

ຊື່ຄູປະຈຳຫ້ອງ: *ນາງ ຄຳດີ*

ຊື່ຜູ້ອຳນວຍການໂຮງຮຽນ: *ນາງ ວອນມະນີ*

- ຂໍ້ມູນປະຫວັດນັກຮຽນ:

  ຊື່ ແລະ ນາມສະກຸນ *ນາງ ຄຳວຽງ ແກ້ວສະອາດ* ຊື່ນ້ອຍ ນາງ ເບ ວັນ ເດືອນ ປີເກີດ *06/03/200*9

  ສະຖານທີ່ເກີດ: ບ້ານ ດອນໜູນ ເມືອງ ໄຊທານີ ແຂວງ */ນະຄອນຫຼວງວຽງຈັນ,*

  ປະເທດ: *ລາວ*, ສັນຊາດ: *ລາວ* ຊົນເຜົ່າ: *ໄທເໜືອ*; ສາສະໜາ: *ພຸດ*

  ທີ່ຢູ່ປະຈຸບັນຕາມປຶ້ມສຳມະໂນຄົວເລກທີ: 112 ໜ່ວຍ *04* ຮ່ອມ *03.*

  ຖະໜົນ: ເມືອງ ໄຊທານີ ແຂວງ */ນະຄອນຫຼວງວຽງຈັນ* ເບີໂທລະສັບ *021 213161*

- ຂໍ້ມູນກ່ຽວກັບພໍ່, ແມ່

| ລາຍການ | ພໍ່ | ແມ່ | ໝາຍເຫດ |
|---|---|---|---|
| ຊື່ ແລະ ນາມສະກຸນ | ທ. ຄຳແພງ | ນ. ວຽງມະນີ | |
| ວັນເດືອນປີເກີດ | 12/04/1970 | 01/12/1975 | |
| ສັນຊາດ | ລາວ | ລາວ | |
| ຊົນເຜົ່າ | ໄຕເໜືອ | ພວນ | |
| ລະດັບການສຶກສາສູງສຸດ | ປະລິຍາຕີຣ | ປະລິຍາຕີຣ | |
| ອາຊີບ | ພະນັກງານ | ພະນັກງານ | |
| ບ່ອນເຮັດວຽກ | ກະຊວງອຸສາຫະກຳ | ມະຫາວິທະຍາໄລແຫ່ງຊາດ | |
| ທີ່ຢູ່ປະຈຸບັນ | ສາລາຄຳ | ສາລາຄຳ | |
| ເບີໂທລະສັບ | | | |

- ຂໍ້ມູນກ່ຽວກັບອ້າຍ, ເອື້ອຍ, ນ້ອງຄືງ.

| ລ/ດ | ຊື່ ແລະ ນາມສະກຸນ | ວັນ, ເດືອນ, ປີເກີດ | ລະດັບການສຶກສາ | ອາຊີບ | ກ່ຽວຂ້ອງ |
|---|---|---|---|---|---|
| 1 | ທ. ຄຳຫຼ້າ | *30/07/2012* | | ເດັກ | ນ້ອງຊາຍ |
| 2 | ນ. ວຽງສິນ | *04/02/2007* | | ນັກຮຽນ | ເອື້ອຍ |
| 3 | | | | | |

- ຂໍ້ມູນກ່ຽວກັບເພື່ອນທີ່ເດັກຮັກແພງ.

| ຊັ້ນຮຽນ | ຊື່ ແລະ ນາມສະກຸນ | ບ່ອນຢູ່ | ໂທລະສັບ |
|---|---|---|---|
| ອ. ບ. 1 | ນາງ ຕາມົນ | ບ. ໂພນຕ້ອງ | |
| ອ. ບ. 2 | ນາງ ສາຍໃຈ | ບ. ນາທົ່ມ | |
| ອ.ບ. 3 | ນາງ ຄຳມະນີ | ບ. ໜອງວຽງຄຳ | |

- ຂໍ້ມູນການຍ້າຍໂຮງຮຽນ.

| |
|---|
| ຍ້າຍຈາກໂຮງຮຽນເດີມ ເມື່ອວັນທີ່................ ເດືອນ ................ ປີ .............. |
| ຊື່ໂຮງຮຽນ ............. ບ້ານ ............. ເມືອງ .............. ແຂວງ ............. |
| ເຫດຜົນ ................................................................ |
| ................................................................ .... |
| ເລີ່ມເຂົ້າຮຽນໃນໂຮງຮຽນແຫ່ງນີ້ເມື່ອວັນທີ່ ............. ເດືອນ .............. ປີ ............ |

ແຜນຜັງການເດີນທາງຈາກໂຮງຮຽນໄປຫາເຮືອນຂອງເດັກ.

| |
|---|
| |

ໝາຍເຫດ: ການແຕ້ມແຜນຜັງການເດີນທາງແມ່ນໃຫ້ຜູ້ປົກຄອງເປັນຜູ້ແຕ້ມໃຫ້.

## ກ. ປະຫວັດດ້ານສຸຂະພາບ

1). ການເກີດ: ☑ ປົກກະຕິ ☐ ບໍ່ປົກກະຕິພິການມາແຕ່ເກີດ

2). ໝວດເລືອດ: ☑A ☐B ☐AB ☐O

3). ສຸຂະພາບແຂ້ວ ແລະ ປາກ: ແຂ້ວແນງ ☑ ; ແຂ້ວບໍ່ແນງ ☐

5). ພູມແພ້ອາຫານຊະນິດໃດ: ນົມອຸ້ນຫວານ

6). ພະຍາດປະຈຳຕົວທີ່ພົບ: ................................................

7). ນັກຮຽນມີຄວາມບົກພ່ອງທາງດ້ານ.

ການໄດ້ຍິນ: ☐ໄດ້ຍິນດີ ☐ບໍ່ໄດ້ຍິນ

ການເວົ້າ: ☐ເວົ້າແຈ້ງ ☐ເວົ້າບໍ່ແຈ້ງ

ການເບິ່ງເຫັນ: ☐ເບິ່ງເຫັນດີ ☐ບໍ່ເຫັນດີ

☐ອື່ນໆ ........................................................

8). ເຄີຍປ່ວຍໜັກ ຫຼື ປະສົບອຸບັດຕິເຫດຮ້າຍແຮງທີ່ຕ້ອງເຂົ້າປິ່ນປົວໃນໂຮງໝໍ:

☐ ເຄີຍ ☑ ບໍ່ເຄີຍ.

9). ບຸກຄົນທີ່ຕິດຕໍ່ໄດ້ກໍລະນີສຸກເສີນ

ຊື່ ................... .ນາມສະກຸນ .................... ເບີໂທລະສັບ..............

ກ່ຽວຂ້ອງເປັນ:. .............................................

10). ການສັກຢາປ້ອງກັນພະຍາດ

| ການສັກຢາປ້ອງກັນພະຍາດ | ຄັ້ງທີ 1<br>ວັນທີ, ເດືອນ, ປີ | ຄັ້ງທີ 2<br>ວັນທີ, ເດືອນ, ປີ | ໝາຍເຫດ |
|---|---|---|---|
| 1. ຄໍຕີບ, ໄອໄກ່, ບາດທະຍັກ | | | |
| 2. ໂປລີໂອ | | | |
| 3. ອັກເສບຕັບເບ | | | |
| 4. ຢອດຢາວິຕາມິນອາ | | | |
| 5. ກິນຢາຂ້າແມ່ທ້ອງ | | | |

## ຂ. ການຈະເລີນເຕີບໃຫຍ່ທາງດ້ານຮ່າງກາຍ (ໂພຊະນາການ)

1. ພາກຮຽນທີ 1

| ເວລາຕິດຕາມ | ນ້ຳໜັກ | ທຽບຜົນການຕິດຕາມໃສ່ເກນມາດຕະຖານນ້ຳໜັກ | | | ລວງສູງ | ທຽບຜົນການຕິດຕາມໃສ່ເກນມາດຕະຖານລວງສູງ | | |
|---|---|---|---|---|---|---|---|---|
| | | ນ້ຳໜັກປົກກະຕິ | ນ້ຳໜັກເກີນ | ນ້ຳໜັກຫຼຸດ | | ລວງສູງປົກກະຕິ | ລວງສູງເກີນ | ລວງສູງຫຼຸດ |
| ຄັ້ງທີ 1 ວັນ, ເດືອນ, ປີ............ | | 27 ກິໂລກຼາມ | | | | | | |
| ຄັ້ງທີ 2 ວັນ, ເດືອນ, ປີ........... | | | | 26 ກິໂລກຼາມ | | | | |

- **ການແທກຮອບແຂນ:** ໃຫ້ນຳໃຊ້ເຄື່ອງແທກຮອບແຂນ ແລະ ອ່ານຜົນຕາມເຄື່ອງແທກຮອບແຂນຂອງ ກະຊວງສາທາລະນະສຸກນຳໃຊ້.

## ຄ. ບັນທຶກເວລາມາໂຮງຮຽນ

| ເດືອນ | ຈຳນວນວັນຮຽນໃນແຕ່ລະເດືອນ | ຈຳນວນວັນມາຮຽນ | ຈຳນວນວັນຂາດຮຽນ | ໝາຍເຫດ |
|---|---|---|---|---|
| ກັນຍາ | 23 | 23 | 0 | |
| ຕຸລາ | 20 | 19 | 01 | ເປັນໄຂ້ |
| ພະຈິກ | | | | |
| ທັນວາ | | | | |
| ມັງກອນ | | | | |
| ກຸມພາ | | | | |
| ມີນາ | | | | |
| ເມສາ | | | | |
| ພຶດສະພາ | | | | |
| ລວມ | | | | |

ຕົວຢ່າງ:

**ງ. ພັດທະນາການໃນແຕ່ລະດ້ານ**

5. ພັດທະນາການດ້ານພາສາ

| ລ/ດ | ລາຍການ | ພາກຮຽນທີ 1 | | | ພາກຮຽນທີ 2 | | |
|---|---|---|---|---|---|---|---|
| | | 1 | 2 | 3 | 1 | 2 | 3 |
| 1 | ຟັງ ແລະ ນຳເລື່ອງທີ່ໄດ້ຟັງມາເລົ່າຕໍ່ໄດ້ | | | ✓ | | | ✓ |
| 2 | ຕັ້ງໃຈຟັງ ແລະ ບໍ່ເວົ້າສອດແຊກຜູ້ອື່ນ | | | | | | |
| 3 | ເວົ້າເປັນປະໂຫຍກ ຫຼື ເລົ່າເປັນເລື່ອງສັ້ນຈາກການສັງເກດສິ່ງຕ່າງໆ | | | | | | |
| 4 | ສົນທະນາຕອບຄຳຖາມເປັນປະໂຫຍກສັ້ນຈາກການຟັງເພງ, ຄຳຄ່ອງ, ນິທານ | | | | | | |
| 5 | ຕອບຂໍ້ສົງໄສດ້ວຍການໃຊ້ຄຳເວົ້າອະທິບາຍ ຫຼື ສະແດງທ່າທາງ | | | | | | |
| 6 | ບອກຊື່,ສັນຍະລັກເຄື່ອງໃຊ້, ເຄື່ອງຮຽນ, ເຄື່ອງ ຫຼິ້ນຂອງຕົນເອງ ແລະ ຜູ້ອື່ນ | | | | | | |
| 7 | ຖາມຄຳຖາມ, ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ | | | | | | |
| 8 | ເບິ່ງຮູບພາບພ້ອມທັງເວົ້າຊື່ ຫຼື ອ່ານຕາມຮູບພາບ | | | | | | |
| 9 | ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ | | | | | | |
| 10 | ອ່ານອອກສຽງຄຳທີ່ມີສະຫຼະຕາມຮູບພາບ | | | | | | |
| 11 | ອ່ານອອກສຽງຄຳທີ່ມີວັນນະຍຸດ ່ ້ ຕາມຮູບພາບ | | | | | | |
| 12 | ອ່ານອອກສຽງຄຳທີ່ມີຕົວສະກົດ (ກ, ນ, ງ, ດ, ບ, ມ, ຍ, ວ ) | | | | | | |
| 13 | ສັງເກດ, ບອກຮູບຮ່າງສະຫຼະທີ່ມີສຽງຄ້າຍຄືກັນ (ສະຫຼະສຽງສັ້ນ, ສຽງຍາວ) | | | | | | |
| 14 | ຂີດເສັ້ນ ຫຼື ແຕ້ມຮູບດ້ວຍຕົນເອງ | | | | | | |
| 15 | ຂຽນພະຍັນຊະນະ ແລະ ສະຫຼະຖືກຕາມຫຼັກການ ຂຽນພາສາລາວ | | | | | | |
| 16 | ຂຽນຄຳສັບທີ່ມີສະຫຼະ, ວັນນະຍຸດ, ຕົວສະກົດຖືກຕາມຫຼັກການຂຽນພາສາລາວ | | | | | | |

## ຈ. ສະຫຼຸບຜົນພັດທະນາການປະຈຳພາກຮຽນ

1. ພາກຮຽນທີ 1 (ໝາຍເຫດ: ພາກຮຽນທີ 2 ນຳໃຊ້ຕາຕະລາງຄືກັບພາກຮຽນທີ 1)

| ລາຍການ | ລະດັບຄຸນນະພາບ | | |
|---|---|---|---|
| | ດີ | ພໍໃຊ້ | ຄວນປັບປຸງ |
| 1. ພັດທະນາການດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | ✓ | | |
| 2. ພັດທະນາການດ້ານອາລົມ-ຈິດໃຈ | | ✓ | |
| 3. ພັດທະນາການດ້ານສັງຄົມ | | ✓ | |
| 4. ພັດທະນາການດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | | ✓ | |
| 5. ພັດທະນາການດ້ານພາສາ | | | ✓ |

ບັນທຶກເລກຂໍ້ ແລະ ຂໍ້ຄວາມຈາກພັດທະນາການທີ່ຄວນປັບປຸງ:

. . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ຊື່ ແລະ ລາຍເຊັນຄູປະຈຳຫ້ອງ                ຊື່ ແລະ ລາຍເຊັນຜູ້ອຳນວຍການ

## ສ. ຄວາມຄິດເຫັນຂອງຜູ້ປົກຄອງປະຈຳພາກຮຽນ

ພາກຮຽນທີ 1 (ໝາຍເຫດ: ນຳໃຊ້ຮ່າງບັນທຶກນີ້ໃນພາກຮຽນທີ 1 ແລະ ພາກຮຽນທີ 2)

| ລັກສະນະພຶດຕິກຳທີ່ເດັກສະແດງອອກເວລາຢູ່ເຮືອນ | ພາກຮຽນທີ1 | | |
|---|---|---|---|
| | 1 | 2 | 3 |
| 1. ຕື່ນນອນລ້າງໜ້າ, ຖູແຂ້ວ, ອາບນ້ຳໄດ້ເອງ | | | |
| 2. ຄວບຄຸມຕົນເອງໃນການຮັບປະທານອາຫານເປັນເວລາ | | | |
| 3. ມີຄວາມຮັບຜິດຊອບເຮັດບົດເຝິກຫັດຢ່າງສະໝ່ຳສະເໝີ | | | |
| 4. ມີຄວາມສາມັກຄີຫຼິ້ນກັບໝູ່ ແລະ ອ້າຍ, ເອື້ອຍ, ນ້ອງ | | | |
| 5. ເຄົາລົບ, ເຊື່ອຟັງ ແລະ ປະຕິບັດຕາມຄຳສອນຂອງພໍ່ແມ່ | | | |
| 6. ຮັກສາສຸຂະພາບ ແລະ ຄວາມສະອາດຂອງຮ່າງກາຍ | | | |
| 7. ປະຢັດສິ່ງຂອງເຄື່ອງໃຊ້ສ່ວນຕົວ ແລະ ສ່ວນລວມ | | | |
| 8. ຮ່ວມກິດຈະກຳກັບບຸກຄົນໃນຄອບຄົວ | | | |
| 9. ມີຄວາມສັດຊື່ສຸດຈະລິດ | | | |
| 10. ມີຄວາມດຸໝັ່ນ ແລະ ພາກພຽນ | | | |

ບັນທຶກລັກສະນະພຶດຕິກຳທີ່ຄວນປັບປຸງ:

. . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . . .

ຊື່ ແລະ ນາມສະກຸນຜູ້ປົກຄອງ

## ຊ. ການຄັດເລືອກຜົນງານສິລະປະສ້າງສັນ (ແຕ້ມ, ຂີດຂຽນ ແລະ ຕັດ-ຕິດ) ຕາມໜ່ວຍການສອນທີ 1-8

| ວັນ, ເດືອນ, ປີ | ຊື່ໜ່ວຍການຮຽນ-ການສອນ | ຊື່ຜົນງານທີ່ເດັກພູມໃຈ | ລະດັບຄຸນນະພາບ | | |
|---|---|---|---|---|---|
| | | | 1 | 2 | 3 |
| | 1. ຕົວຂອງຂ້ອຍ | | | | |
| | 2. ຄອບຄົວຂອງຂ້ອຍ | | | | |
| | 3. ບ້ານຂອງຂ້ອຍ | | | | |
| | 4. ໂຮງຮຽນຂອງຂ້ອຍ | | | | |
| | 5. ທຳມະຊາດອ້ອມຕົວເຮົາ | | | | |
| | 6. ສິ່ງແວດລ້ອມອ້ອມຕົວເຮົາ | | | | |
| | 7. ການຄົມມະນາຄົມ ແລະ ການສື່ສານ | | | | |
| | 8. ສິ່ງຕ່າງໆ ອ້ອມຕົວເຮົາ | | | | |

## ຍ. ຮູບແຕ້ມ ຫຼື ການຂີດຂຽນທີ່ເດັກພາກພູມໃຈ ແລະ ເລືອກເອງໃນແຕ່ລະພາກຮຽນ

ຕົວຢ່າງ: ຮູບແຕ້ມ ຫຼື ການຂຽນໃນພາກຮຽນທີ 1

## 6. ການບັນທຶກຂໍ້ມູນປຶ້ມຮຽກຊື່ ແລະ ບັນທຶກພັດທະນາການເດັກ

ການນຳໃຊ້ປຶ້ມຮຽກຊື່ ແລະ ບັນທຶກພັດທະນາການເດັກດັ່ງນີ້:

6.1 ສຶກສາພຶດຕິກຳ, ຄວາມສາມາດຂອງເດັກ ແລະ ວິທີການຕິດຕາມໃນປຶ້ມຕິດຕາມພັດທະນາການເດັກໃຫ້ເຂົ້າໃຈ.

6.2 ສັງເກດພຶດຕິກຳໃນພັດທະນາການແຕ່ລະດ້ານທີ່ຈະຕິດຕາມໃນສະຖານະການປົກກະຕິ, ໃນເວລາເດັກເຮັດກິດຈະກຳປະຈຳວັນຢ່າງຕໍ່ເນື່ອງ ແລະ ສັງເກດຫຼາຍໆ ຄັ້ງຈົນແນ່ໃຈວ່າເປັນພຶດຕິກຳທີ່ແທ້ຈິງ.

6.3 ບັນທຶກພຶດຕິກຳທີ່ໄດ້ຈາກການສັງເກດໃນແບບບັນທຶກພັດທະນາການ ແລະ ວັນ, ເດືອນ, ປີທີ່ສັງເກດໄປພ້ອມ, ຖ້າຫາກວ່າພຶດຕິກຳໃດບໍ່ທັນສັງເກດເຫັນໃຫ້ຕິດຕາມຊ່ວຍເຫຼືອເດັກຕໍ່ໄປ ແລະ ຄວນຈັດກິດຈະກຳເສີມ ເພື່ອໃຫ້ເດັກໄດ້ສະແດງພຶດຕິກຳໃນແຕ່ລະພັດທະນາການ.

6.4 ກ່ອນຈົບພາກຮຽນແຕ່ລະພາກຄູສອນນຳຂໍ້ມູນຈາກປຶ້ມຮຽກຊື່ ແລະ ບັນທຶກພັດທະນາການປະຈຳວັນມາສະຫຼຸບ ແລະ ມີຄຳເຫັນ ພ້ອມທັງບັນທຶກເຂົ້າໃນປຶ້ມພັດທະນາການຂອງເດັກ.

6.5 ບັນທຶກຂໍ້ມູນທີ່ໄດ້ຈາກການສັງເກດຕະຫຼອດພາກຮຽນ ໃນປຶ້ມລາຍງານປະຈຳພາກຮຽນ ເພື່ອລາຍງານຜູ້ປົກຄອງ.

6.6 ການບັນທຶກຂໍ້ມູນມີ 2 ຢ່າງຄື: ການບັນທຶກຄວາມຮູ້ສຶກຂອງເດັກ ຫຼື ການບັນທຶກກ່ຽວກັບພັດທະນາການທາງດ້ານອາລົມ-ຈິດໃຈ, ການນຳຜົນງານສິລະປະສ້າງສັນຂອງເດັກມາຕິດໃນປຶ້ມລາຍງານປະຈຳພາກຮຽນ.

1) ການບັນທຶກຄວາມຮູ້ສຶກຂອງເດັກ ຫຼື ການບັນທຶກກ່ຽວກັບພັດທະນາການທາງດ້ານອາລົມ-ຈິດໃຈ ຄູຄວນປະຕິບັດດັ່ງນີ້:
   - ບັນທຶກຕາມທີ່ເດັກເວົ້າ ແລະ ເລົ່າ ໂດຍບໍ່ໃສ່ຂໍ້ຄວາມຕື່ມ ຫຼື ແປທີ່ເປັນຄວາມຄິດຂອງຄູ.
   - ຄັດເລືອກຂໍ້ຄວາມທີ່ສະແດງຄວາມຮູ້ສຶກຂອງເດັກ, ເພື່ອບັນທຶກໃນປຶ້ມລາຍງານປະຈຳພາກຮຽນ ຄູຄວນພິຈາລະນາຂໍ້ຄວາມທີ່ເປັນຄວາມຮູ້ສຶກທີ່ດີ, ຄວາມປະທັບໃຈ, ຄວາມຕ້ອງການ ຫຼື ຄວາມສົນໃຈຂອງເດັກ.

2) ການນຳຜົນງານສິລະປະສ້າງສັນຂອງເດັກມາຕິດໃນປຶ້ມລາຍງານປະຈຳພາກຮຽນ ຄູຄວນປະຕິບັດດັ່ງນີ້:
   - ໃຫ້ໂອກາດເດັກເປັນຜູ້ຄັດເລືອກຜົນງານດ້ວຍຕົນເອງ ເພື່ອສ້າງຄວາມພາກພູມໃຈໃນຄວາມສຳຄັນຂອງຕົນເອງ.
   - ຄູຂຽນຄຳບັນຍາຍຕາມທີ່ເດັກເລົ່າໃຫ້ຄູຟັງໃສ່ແຕ່ລະຮູບພາບ ທີ່ໃຫ້ເດັກສັງເກດຈາກປຶ້ມບົດເຝິກຫັດ ຫຼື ຮູບທີ່ກ່ຽວກັບໜ່ວຍການຮຽນ.

6.7 ເລີ່ມຕົ້ນພາກຮຽນທີ 2 ຄູສັງເກດພຶດຕິກຳທຸກລາຍການ ໂດຍດຳເນີນການແບບດຽວກັບພາກຮຽນທີ 1

**ຕົວຢ່າງ: ການບັນທຶກປຶ້ມຮຽກຊື່ ແລະ ບັນທຶກພັດທະນາການເດັກ**

**ກ. ຂໍ້ມູນກ່ຽວກັບເດັກ**

| ລ/ດ | ເລກປະຈຳຕົວ | ຊື່ ແລະ ນາມສະກຸນ | ຊື່ນ້ອຍ | ເບີໂທລະສັບຜູ້ປົກຄອງ |
|---|---|---|---|---|
| 1 | 01 | ນາງ ກອງມະນີ | ນາງ ແອ | 021 213161 |
| 2 | 02 | ນາງ ບຸນນຳ ພັດແສງ | | |
| 3 | 03 | ທ້າວ ຄຳພູ ພະຈັນ | | |

**ຂ. ຂໍ້ມູນກ່ຽວກັບພໍ່, ແມ່**

1. ຂໍ້ມູນກ່ຽວກັບພໍ່

| ລ/ດ | ຊື່ ແລະ ນາມສະກຸນ | ວັນ,ເດືອນ,ປີເກີດ | ສັນຊາດ | ຊົນເຜົ່າ | ລະດັບການສຶກສາ | ອາຊີບ | ບ່ອນເຮັດວຽກ | ທີ່ຢູ່ປະຈຸບັນ | ເບີໂທລະສັບ |
|---|---|---|---|---|---|---|---|---|---|
| 1 | ທ້າວ ວຽງ | 05/10/1975 | ລາວ | ລື້ | ປະລິນຍາຕີ | ພະນັກງານ | ກະຊວງສຶກສາທິການ ແລະ ກິລາ | ບ້ານສາຍລົມ | |
| 2 | | | | | | | | | |

2. ຂໍ້ມູນກ່ຽວກັບແມ່

| ລ/ດ | ຊື່ ແລະ ນາມສະກຸນ | ວັນ, ເດືອນ, ປີເກີດ | ສັນຊາດ | ຊົນເຜົ່າ | ລະດັບການສຶກສາ | ອາຊີບ | ບ່ອນເຮັດວຽກ | ທີ່ຢູ່ປະຈຸບັນ | ເບີໂທລະສັບ |
|---|---|---|---|---|---|---|---|---|---|
| 1 | ນາງ ສາຍໃຈ | 05/10/1980 | ລາວ | ພວນ | ມ.6 | ຄ້າຂາຍ | ຕະຫຼາດເຊົ້າ | ບ້ານສາຍລົມ | |
| 2 | | | | | | | | | |

**ຄ. ບັນທຶກຜົນການຊັ່ງນ້ຳໜັກ ແລະ ການວັດແທກລວງສູງ**

| ລ/ດ | ຊື່ ແລະ ນາມສະກຸນ | ພາກຮຽນທີ 1 | | | | ພາກຮຽນທີ 2 | | | |
|---|---|---|---|---|---|---|---|---|---|
| | | ນ້ຳໜັກ | | ລວງສູງ | | ນ້ຳໜັກ | | ລວງສູງ | |
| | | ຄັ້ງທີ 1 ວັນທີ 1/9/15 | ຄັ້ງທີ 2 ວັນທີ 20/12/15 | ຄັ້ງທີ 1 ວັນທີ 1/9/15 | ຄັ້ງທີ 2 ວັນທີ 20/12/15 | ຄັ້ງທີ 1 ວັນທີ... | ຄັ້ງທີ 2 ວັນທີ... | ຄັ້ງທີ 1 ວັນທີ... | ຄັ້ງທີ 2 ວັນທີ... |
| 1 | ທ. ວຽງ | | | | | | | | |
| 2 | | | | | | | | | |

## ງ. ສະຫຼຸບການຊັ່ງນ້ຳໜັກ ແລະ ແທກລວງສູງທີ່ເດັກຄວນໄດ້ຮັບການປັບປຸງປະຈຳພາກຮຽນ

| ວັນເດືອນປີ | ລາຍການ | ຈຳນວນເດັກບໍ່ຜ່ານເກນ | ຄິດເປັນເປີເຊັນ % | ຂຽນລາຍຊື່ນັກຮຽນທີ່ມີນ້ຳໜັກ ແລະ ລວງສູງ, ຫຼຸດຕ່ຳກວ່າເກນ ຫຼື ຫຼາຍກວ່າເກນ |
|---|---|---|---|---|
| ຄັ້ງທີ 1 ວັນທີ ..... | ນ້ຳໜັກ | 02 | | ................... ............. |
| ຄັ້ງທີ 1 ວັນທີ ..... | ລວງສູງ | 03 | | ................................. |
| ຄັ້ງທີ 2 ວັນທີ ..... | ນ້ຳໜັກ | | | .................................. |
| ຄັ້ງທີ 2 ວັນທີ ..... | ລວງສູງ | | | .................................. |
| ຄັ້ງທີ 1 ວັນທີ ..... | ແທກຮອບແຂນ ຫຼື ແຜ່ນທຽບສີ | | | .................................. |
| ຄັ້ງທີ 2 ວັນທີ ..... | ແທກຮອບແຂນ ຫຼື ແຜ່ນທຽບສີ | | | .................................. |

ການຄິດໄລ່ເປັນສ່ວນຮ້ອຍ (ເປີເຊັນ): ຈຳນວນເດັກທີ່ປະຕິບັດໄດ້ (ຄູນ) 100 (ຫານ)ຈຳນວນເດັກທັງໝົດ.

ຕົວຢ່າງ: 02×100: 25 = 4%

## ຈ. ການບັນທຶກເວລາມາ-ຂາດຮຽນປະຈຳເດືອນ ..... ......................................

| ວັນທີ | 1 | 2 | 3 | 4 | 5 | 6 | 7 | 8 | 9 | 1 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 | 25 | 26 | 27 | 28 | 29 | 30 | 31 | ລວມ ວັນ ຂາດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ລ/ດ | | | | | | | | | | | | | | | | | | | | | | | | | | | | | | | | |
| 1 | ✓ | | | | | | | | | | | | | | ✓ | | | | | | | | | | | | | | | ✓ | ✓ | 04 |
| 2 | | | | | | | | | | | | | | | | | | | | | | | | | | | ✓ | | | | | 01 |
| 3 | | | | | | | | | | | | | | | | ✓ | ✓ | | | | | | | | | | | | | | | 02 |

## ສ. ສະຫຼຸບເວລາຮຽນໃນແຕ່ລະເດືອນ

| ລ/ດ | ກັນຍາ ຈຳນວນວັນ ຮຽນ...21....... | | ຕຸລາ ຈຳນວນວັນ ຮຽນ...24....... | | ພະຈິກ ຈຳນວນວັນ ຮຽນ.......... | | ທັນວາ ຈຳນວນວັນ ຮຽນ.......... | | ມັງກອນ ຈຳນວນວັນ ຮຽນ.......... | | ກຸມພາ ຈຳນວນວັນ ຮຽນ.......... | | ມີນາ ຈຳນວນວັນ ຮຽນ.......... | | ເມສາ ຈຳນວນວັນ ຮຽນ.......... | | ພຶດສະພາ ຈຳນວນວັນ ຮຽນ...... | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ມາ | ຂາດ | ມາ | ຂາດ | ມາ | ຂາດ | ມາ | ຂາດ | ມາ | ຂາດ | ມາ | ຂາດ | ມາ | ຂາດ | ມາ | ຂາດ | ມາ | ຂາດ |
| 1 | 19 | 02 | 20 | 04 | | | | | | | | | | | | | | |
| 2 | | | | | | | | | | | | | | | | | | |
| 3 | | | | | | | | | | | | | | | | | | |

## ຊ. ການສັງເກດພຶດຕິກຳໃນພັດທະນາການດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ

(ໝາຍເຫດ: 1 ດີ, 2 ພໍໃຊ້, 3 ຄວນປັບປຸງ)

| ລ/ດ | 1. ລ້າງມື, ລ້າງໜ້າ, ຖູແຂ້ວຖືກວິທີ | | | | | | 2. ພໍໃຈກິນອາຫານທີ່ມີປະໂຫຍດຖືກຕ້ອງຕາມເວລາ | | | | | | 3. ດື່ມນ້ຳສະອາດດ້ວຍຕົນເອງ | | | | | | 4. ຄວບຄຸມຕົນເອງໃນການຂັບຖ່າຍ ແລະ ບອກຄວາມຕ້ອງການເມື່ອຈະໄປຫ້ອງນ້ຳ | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ພາກຮຽນທີ 1 | | | ພາກຮຽນທີ 2 | | | ພາກຮຽນ ທີ 1 | | | ພາກຮຽນ ທີ 2 | | | ພາກຮຽນ ທີ 1 | | | ພາກຮຽນ ທີ 2 | | | ພາກຮຽນ ທີ 1 | | | ພາກຮຽນທີ 2 | | |
| | 1 | 2 | 3 | 1 | 2 | 3 | 1 | 2 | 3 | 1 | 2 | 3 | 1 | 2 | 3 | 1 | 2 | 3 | 1 | 2 | 3 | 1 | 2 | 3 |
| 1 | | ✓ | | | | ✓ | | ✓ | | | | ✓ | | | ✓ | | | ✓ | | ✓ | | | ✓ | |
| 2 | | | | | | | | | | | | | | | | | | | | | | | | |

**ດ. ສະຫຼຸບພັດທະນາການທີ່ເດັກຄວນໄດ້ຮັບການປັບປຸງ ໃນແຕ່ລະຂໍ້ປະຈຳພາກຮຽນ, ພາກຮຽນທີ 1**

| ລ/ດ | ລາຍການ | ຈຳນວນຂໍ້ຄວນປັບປຸງ | ຄິດເປັນເປີເຊັນ % | ຂຽນໝາຍເລກຂໍ້ ແລະ ຂຽນຂໍ້ຄວາມທີ່ຄວນປັບປຸງໃນແຕ່ລະຂໍ້ |
|---|---|---|---|---|
| 1. | ພັດທະນາການດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ | 04 | | *ຄວນປັບປຸງ ຂໍ້ 3, 6, 8, 10* |
| 2. | ພັດທະນາການດ້ານອາລົມ, ຈິດໃຈ | | | ............................<br>............................ |
| 3. | ພັດທະນາການດ້ານສັງຄົມ | | | .................... ......... |
| 4. | ພັດທະນາການດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ | | | ............................<br>............................ |
| 5. | ພັດທະນາການດ້ານພາສາ | | | ............................ |

ການຄິດໄລ່ເປັນສ່ວນຮ້ອຍ (ເປີເຊັນ): ຈຳນວນຂໍ້ທີ່ປະຕິບັດໄດ້ ຄູນ 100 ຫານ ຈຳນວນຂໍ້ທັງໝົດ.

ຕົວຢ່າງ: 04×100: 16 = 25%

## 7. ການເກັບຜົນງານໃນແຟ້ມສະສົມຜົນງານຂອງເດັກ

ການສ້າງແຟ້ມສະສົມຜົນງານ ເພື່ອຕິດຕາມປະເມີນຜົນພັດທະນາການເດັກຕາມສະພາບຄວາມເປັນຈິງ ໂດຍພິຈາລະນາຜົນງານຂອງເດັກເປັນລາຍບຸກຄົນ ຈາກປຶ້ມຕິດຕາມຜົນງານສິລະປະສ້າງສັນມີຂັ້ນຕອນດັ່ງນີ້:

**ຂັ້ນຕອນທີ 1:** ກຳນົດຈຸດປະສົງແຟ້ມສະສົມຜົນງານ.

ກຳນົດຈຸດປະສົງແຟ້ມສະສົມຜົນງານ, ຄູຕ້ອງສຶກສາຂັ້ນຕອນຂອງແຜນຈັດປະສົບການ ຫຼື ແຜນການສອນ ເພື່ອກະກຽມ ແລະ ປະຕິບັດດັ່ງນີ້:

1). ກຳນົດ ແລະ ກຽມຈັດຫາສື່ການຮຽນເຊັ່ນ: ປຶ້ມຕິດຕາມຜົນງານສິລະປະສ້າງສັນ, ບົດເຝິກຫັດ, ຮ່າງແບບຮູບ, ແບບຂຽນພະຍັນຊະນະ ຫຼື ຕົວເລກເພື່ອໃຫ້ເດັກໄດ້ປະຕິບັດຕາມ ແລະ ເກັບໃນແຟ້ມສະສົມຜົນງານລາຍບຸກຄົນ.

2). ກຳນົດໄລຍະເວລາໃນການຈັດເກັບຜົນງານຄື: ສັງລວມເປັນ 1 ເດືອນ, 1 ພາກຮຽນ ຫຼື 1 ປີການສຶກສາ.

3). ກຳນົດວິທີເກັບຜົນງານທີ່ເດັກເຮັດສຳເລັດໃນແຕ່ລະວັນຕາມກິດຈະກຳຕ່າງໆ.

4). ກຳນົດວຽກທີ່ເດັກຈະຕ້ອງປະຕິບັດຮ່ວມກັນໃຫ້ຊັດເຈນ.

5). ກຳນົດເກນການປະເມີນຜົນງານເດັກເປັນລະດັບຄຸນນະພາບ, ໃນ 3 ລະດັບ ດີ, ພໍໃຊ້, ຄວນປັບປຸງ.

6). ຊີ້ແຈງໃຫ້ຄູ, ຜູ້ປົກຄອງຮັບຊາບ ແລະ ເຂົ້າໃຈວິທີການຄັດເລືອກຜົນງານ ເພື່ອເກັບມ້ຽນໃນແຟ້ມສະສົມຜົນງານ.

**ຂັ້ນຕອນທີ 2:** ການສັງລວມຜົນງານ ແລະ ການຈັດເກັບຜົນງານ.

ການສັງລວມຜົນງານ ແລະ ການຈັດເກັບຜົນງານຂອງເດັກມີດັ່ງນີ້:

1). ສັງລວມຜົນງານກິດຈະກຳປະຈຳວັນ ຈາກປຶ້ມຄູ, ເດັກ ແລະ ຜູ້ປົກຄອງຮ່ວມກັນປະເມີນ, ຈຸດີ, ຈຸດເດັ່ນ ແລະ ແກ້ໄຂຜົນງານທີ່ບົກຜ່ອງ.

2). ນຳຜົນງານຂອງເດັກ ແລະ ຫຼັກຖານການປະເມີນມາເກັບສະສົມໄວ້ໃນແຟ້ມສະສົມຜົນງານຊົ່ວຄາວ ເຊິ່ງອາດຈະເປັນແຟ້ມເອກະສານ, ກ່ອງ, ປຶ້ມບັນທຶກ ຫຼື ອຸປະກອນອື່ນໆ ຕາມຄວາມເໝາະສົມ.

3). ວິທີການຈັດເກັບຜົນງານສາມາດເຮັດໄດ້ຫຼາຍວິທີເຊັ່ນ:

- ແຍກຜົນງານທີ່ປະຕິບັດຕາມກິດຈະກຳປະຈຳວັນຕາມໜ່ວຍການຮຽນຮູ້.
- ແຍກຜົນງານຕາມໄລຍະເວລາທີ່ກຳນົດໃຫ້ເກັບໃນແຕ່ລະຄັ້ງ (ກຳນົດໄລຍະເວລາ 1 ເດືອນ).

4). ບັນທຶກວັນເດືອນປີທີ່ເດັກຈັດທຳຜົນງານ ເພື່ອສະດວກແກ່ການຊອກຫາ ແລະ ນຳມາໃຊ້ໃນໂອກາດຕໍ່ໄປ.

**ຂັ້ນຕອນທີ 3:** ການຄັດເລືອກຜົນງານ.

ການຄັດເລືອກຜົນງານຂອງເດັກມີດັ່ງນີ້:

1). ຂະບວນການຈັດທຳຜົນງານເດັກເປັນລາຍບຸກຄົນຈັດເປັນຂັ້ນຕອນທີ່ສຳຄັນເພາະຈະຕ້ອງໃຫ້ເດັກເລືອກຜົນງານຂອງຕົນເອງ.

2). ຄັດເລືອກຜົນງານເດັກໃນ 1 ເດືອນ ຫຼື ປະມານ 4 ເລື່ອງການຮຽນຮູ້ ໃນ 1 ໜ່ວຍການຮຽນ-ການສອນໂດຍປະຕິບັດທຸກໆ 1 ເດືອນ.

3). ຄູ, ເດັກ ແລະ ຜູ້ປົກຄອງຈະຕ້ອງມີການຄັດເລືອກຜົນງານຮ່ວມກັນໃຫ້ເຫຼືອຜົນງານເປັນຈຳນວນໜ້ອຍທີ່ສຸດ ແລະ ເປັນທີ່ພໍໃຈຂອງເດັກແຕ່ລະຄົນ.

**ຂັ້ນຕອນທີ 4:** ການສ້າງສັນຜົນງານໃຫ້ມີລັກສະນະສະເພາະຕົວ.

ການສ້າງສັນຜົນງານໃຫ້ມີລັກສະນະສະເພາະຕົວມີດັ່ງນີ້:

1). ເດັກຄັດເລືອກຜົນງານທີ່ມີຄຸນນະພາບຕາມເກນການປະເມີນມາເກັບໄວ້ໃນແຟ້ມສະສົມຜົນງານຂອງຕົນ.

2). ຄູ ແລະ ເດັກຮ່ວມກັນຈັດລຳດັບຜົນງານ, ຈັດວາງເຂົ້າໃນແຟ້ມສະສົມຜົນງານໃຫ້ມີລັກສະນະສະເພາະຕົວ, ສະເພາະກຸ່ມ ຫຼື ສະເພາະຫ້ອງຮຽນ.

**ຂັ້ນຕອນທີ 5:** ການສະທ້ອນຄວາມຄິດເຫັນ ຫຼື ຄວາມຮູ້ສຶກຕໍ່ຜົນງານ.

ການສະທ້ອນຕົນເອງໝາຍເຖິງການສະແດງອອກທາງຄວາມຄິດ, ຄວາມຮູ້ສຶກຕໍ່ຜົນງານທີ່ຄັດເລືອກໄວ້ທັງຜົນງານສະເພາະຕົວເດັກ ຫຼື ຜົນງານຂອງກຸ່ມ.

1). ເດັກຮູ້ສຶກຢ່າງໃດຕໍ່ຜົນງານຂອງຕົນ.

2). ຜົນງານທີ່ເດັກ ຫຼື ກຸ່ມພໍໃຈຫຼາຍທີ່ສຸດມີຫຍັງແດ່, ການສະແດງຂໍ້ມູນຍ້ອນກັບຈະເຮັດໃຫ້ເດັກໄດ້ຄິດວິເຄາະ ແລະ ຮູ້ຜົນການທຳງານທີ່ສຳເລັດເຮັດໃຫ້ເດັກເບິ່ງເຫັນຈຸດເດັ່ນ, ຈຸດດ້ອຍຂອງຕົນເອງ ແລະ ກຸ່ມ.

ວິທີການສະທ້ອນຕົນເອງ: ສາມາດປະຕິບັດໄດ້ 2 ວິທີຄືການໃຫ້ເດັກນຳຜົນງານນັ້ນມາສະແດງ ແລະ ເລົ່າເຖິງເບື້ອງຫຼັງໃນການປະຕິບັດກິດຈະກຳນັ້ນ ຫຼື ໃຫ້ຄູຊ່ວຍຂຽນຂໍ້ຄວາມສັ້ນທີ່ເດັກບອກເຖິງຄວາມຮູ້ສຶກທີ່ມີຕໍ່ຜົນງານ.

**ຂັ້ນຕອນທີ 6:** ການກວດສອບຜົນງານຂອງຕົນເອງ.

ການກວດສອບຜົນງານຄວນໃຫ້ໂອກາດເດັກມີສ່ວນຮ່ວມກັບຄູ ຫຼື ຜູ້ປົກຄອງໃນການກວດສອບຜົນງານເກັບສະສົມໄວ້ໃນແຟ້ມຂອງຕົນເອງ ຫຼື ກຸ່ມ ເພື່ອພິຈາລະນາ ແລະ ປັບປຸງຜົນງານໃຫ້ມີຄຸນນະພາບຕໍ່ໄປ.

**ຂັ້ນຕອນທີ 7:** ການປະເມີນແຟ້ມສະສົມຜົນງານ.

ການປະເມີນແຟ້ມສະສົມຜົນງານ ເພື່ອໃຊ້ເປັນຫຼັກຖານໃນການສະແດງຜົນການຮຽນຮູ້ ຫຼື ຈັດລະດັບຜົນການຮຽນຂອງເດັກນັ້ນຄວນປະເມີນເປັນລະດັບຄຸນນະພາບຕາມຂະບວນການດັ່ງນີ້:

1). ການກວດສອບຜົນງານ ໃຫ້ຄູສຳຫຼວດຄວາມຖືກຕ້ອງຂອງຜົນງານ ໂດຍປຽບທຽບກັບເກນທີ່ກຳນົດໄວ້.

2). ການປະເມີນຜົນງານໂດຍໃຫ້ຄູ ແລະ ເດັກຮ່ວມກັນຕັດສິນຄຸນຄ່າຂອງຜົນງານພາຍຫຼັງການກວດສອບແລ້ວ ແລະ ມີການຈັດລຳດັບຄຸນນະພາບຂອງຜົນງານເຊັ່ນ: ດີ, ພໍໃຊ້, ຄວນປັບປຸງ ຫຼື ໃຊ້ຄຳວ່າຜ່ານ ກັບ ບໍ່ຜ່ານ ເປັນຕົ້ນ.

3). ນຳສະເໜີການໄຈ້ແຍກ ຫຼື ວິພາກຜົນງານ, ຄູ ແລະ ເດັກຮ່ວມກັນແລກປ່ຽນຂໍ້ຄິດເຫັນຕ່າງໆ ກ່ຽວກັບຜົນງານ ຫຼັງຈາກກວດສອບຕາມຫຼັກເກນແລ້ວ.

- ສິ່ງທີ່ຄວນຄຳນຶງການປະເມີນຜົນງານໃນແຟ້ມສະສົມຜົນງານຂອງເດັກນັ້ນບໍ່ໄດ້ເນັ້ນການກວດສອບຜົນງານວ່າ: ຖືກ ຫຼື ຜິດ, ດີ ຫຼື ບໍ່ດີ ແຕ່ຈະເນັ້ນສິ່ງທີ່ຈະເປັນປະໂຫຍດຕໍ່ການພັດທະນາຜົນງານໃຫ້ກ້າວໜ້າ ເປັນຕົ້ນແມ່ນການສະເໜີໃຫ້ປັບປຸງສິ່ງທີ່ເຮັດບໍ່ທັນໄດ້ດີ.

**ຂັ້ນຕອນທີ 8:** ການປະຊຸມແລກປ່ຽນປະສົບການ.

ການປະຊຸມແລກປ່ຽນປະສົບການເປັນຂັ້ນຕອນທີ່ເປີດໂອກາດໃຫ້ຜູ້ທີ່ກ່ຽວຂ້ອງ: ເດັກ, ຜູ້ປົກຄອງ ແລະ ຄູໄດ້ແລກປ່ຽນຄວາມຄິດເຫັນ ກ່ຽວກັບແຟ້ມສະສົມຜົນງານຕາມຫຼັກການຮຽນຮູ້ແບບມີສ່ວນຮ່ວມທີ່ຈະເປັນຂໍ້ມູນຍ້ອນກັບໃນການປັບປຸງຜົນງານໃຫ້ດີຍິ່ງຂຶ້ນ.

ຮູບແບບຂອງການປະຊຸມອາດຈະເຮັດຢ່າງບໍ່ເປັນທາງການ: ມີການເວົ້າລົມແລກປ່ຽນຄວາມຄິດເຫັນກັນເປັນສ່ວນຕົວລະຫວ່າງເດັກເຊິ່ງເປັນເຈົ້າຂອງຜົນງານກັບຄູ ຫຼື ປະຊຸມແບບເປັນທາງການທີ່ໂຮງຮຽນຈັດຂຶ້ນ ໂດຍມີຜູ້ປົກຄອງ ແລະ ຄູເຂົ້າຮ່ວມ.

**ຂັ້ນຕອນທີ 9:** ການປັບປຸງຜົນງານໃຫ້ດີ.

ຫຼັງຈາກມີການປະຊຸມແລກປ່ຽນປະສົບການຕາມຂັ້ນຕອນທີ 8 ແລ້ວຄູແນະນຳໃຫ້ເດັກປັບປຸງຜົນງານໃນແຟ້ມສະສົມຜົນງານຂອງຕົນໃຫ້ດີກວ່າເດີມ.

**ຂັ້ນຕອນທີ 10:** ການຈັດນິທັດສະການແຟ້ມສະສົມຜົນງານ.

ການຈັດນິທັດສະການສະແດງຜົນງານຂອງແຟ້ມສະສົມຜົນງານ ເພື່ອໃຫ້ເດັກເກີດຄວາມພາກພູມໃຈໃນຄວາມສຳເລັດຂອງຕົນເອງ, ເກີດແຮງຈູງໃຈໃນການຮຽນຫຼາຍຂຶ້ນ, ນອກນັ້ນຍັງເປັນການບອກໃຫ້ຊຸມຊົນ, ຜູ້ປົກຄອງໄດ້ຮັບຮູ້ເຖິງຄວາມກ້າວໜ້າໃນການຮຽນຮູ້ຂອງເດັກ, ຄວາມສຳເລັດໃນການຈັດການສຶກສາຂອງໂຮງຮຽນ.

ໝາຍເຫດ: ຂັ້ນຕອນທີ 7-10 ໃຫ້ດຳເນີນໃນໄລຍະທ້າຍພາກຮຽນທີ 2 ເພື່ອສະຫຼຸບພັດທະນາການ ຫຼື ປະເມີນຜົນການຮຽນຮູ້ຂອງເດັກ.

# ພາກທີ IV. ການເລືອກອຸປະກອນການຮຽນ-ການສອນ, ເຄື່ອງຫຼິ້ນ ແລະ ການເລືອກປຶ້ມອ່ານເສີມປະສົບການຊັ້ນອະນຸບານສຶກສາປີທີ 3

## 1. ການເລືອກອຸປະກອນການຮຽນ ແລະ ເຄື່ອງຫຼິ້ນ

### 1.1 ເງື່ອນໄຂການເລືອກອຸປະກອນການຮຽນ-ການສອນ ແລະ ເຄື່ອງຫຼິ້ນ

1) ເໝາະສົມກັບໄວ ແລະ ຄວາມສາມາດຂອງເດັກ.
2) ສອດຄ່ອງກັບຫຼັກສູດ ແລະ ແຜນການຈັດປະສົບການ.
3) ໃຫ້ເດັກໄດ້ຫຼິ້ນຮ່ວມກັນເປັນກຸ່ມໃຫຍ່, ກຸ່ມຍ່ອຍ ແລະ ຫຼິ້ນເປັນບຸກຄົນ.
4) ມີຄວາມປອດໄພ, ສີສັນບໍ່ແຈ້ງຫຼາຍ ແລະ ໃຊ້ສີທີ່ບໍ່ເປັນພິດ.
5) ຂະໜາດຂອງສື່, ເຄື່ອງຫຼິ້ນບໍ່ນ້ອຍເກີນໄປຈົນເດັກສາມາດກືນກິນ ຫຼື ເອົາເຂົ້າດັງ ແລະ ໃຫຍ່ເກີນໄປຈົນເດັກຍົກບໍ່ໄດ້ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ເດັກໃນເວລາຫຼິ້ນ.
6) ມີຄວາມແຂງແຮງ, ທົນທານ, ບໍ່ແຕກຫັກງ່າຍ.
7) ສະດວກຕໍ່ການນຳມາໃຊ້ ແລະ ການເຄື່ອນຍ້າຍ.

8) ສີ່ ແລະ ເຄື່ອງຫຼິ້ນມີຫຼາຍຢ່າງທີ່ສົ່ງເສີມໃຫ້ເດັກເກີດທັກສະຂະບວນການພັດທະນາຄວາມພ້ອມໃນການຮຽນຕາມຫຼັກສູດດັ່ງນີ້:

- ກະຕຸ້ນໃຫ້ເດັກເກີດຈິນຕະນາການສ້າງສັນ.
- ພັດທະນາດ້ານຮ່າງກາຍນຳໃຊ້ປະສາດສຳຜັດຕ່າງໆ.
- ພັດທະນາດ້ານອາລົມ-ຈິດໃຈ ແລະ ສັງຄົມຈາກການຫຼິ້ນຮ່ວມກັນກັບໝູ່ເພື່ອນ.
- ພັດທະນາດ້ານສະຕິປັນຍາໃຫ້ເດັກໄດ້ໃຊ້ຄວາມຄິດ, ເກີດໄຫວພິບ ແລະ ເກີດການຮຽນຮູ້ຈາກການຫຼິ້ນ.

## 1.2 ປະເພດອຸປະກອນການຮຽນ ແລະ ເຄື່ອງຫຼິ້ນ

ອຸປະກອນການຮຽນ ແລະ ເຄື່ອງຫຼິ້ນສຳລັບເດັກມີຫຼາຍປະເພດເຊັ່ນ: ເຄື່ອງຫຼິ້ນປະດິດສ້າງ, ເຄື່ອງຫຼິ້ນສຳຜັດ, ເຄື່ອງຫຼິ້ນເຝິກທັກສະການເຄື່ອນໄຫວ,

1) ເຄື່ອງຫຼິ້ນປະດິດສ້າງ

ເຄື່ອງຫຼິ້ນປະດິດສ້າງປະເພດບ໋ອກມີຫຼາຍຂະໜາດແຕກຕ່າງກັນເຮັດດ້ວຍໄມ້, ປະລັດສະຕິກ ແລະ ມີຮູບຊົງໜ່ວຍມົນ, ກ້ອນສາກ, ສາມແຈ, ທີ່ກົມສາມາດນຳມາປະດິດສ້າງດ້ວຍການຕໍ່, ຈັດລຽນໃຫ້ເປັນຮູບຕ່າງໆຕາມແບບ ແລະ ຈິນຕະນາການຂອງເດັກ,

2) ເຄື່ອງສຳຜັດ

ເຄື່ອງສຳຜັດປະເພດຟັງສຽງ, ຈັບບາຍ, ດົມກິ່ນ, ຊີມລົດຊາດ, ເບິ່ງເຫັນທີ່ມີຢູ່ໃນທຳມະຊາດ ແລະ ສິ່ງທີ່ປະດິດຂຶ້ນເພື່ອໃຊ້ໃນການຮຽນຮູ້ກ່ຽວກັບທຳມະຊາດ ແລະ ການເຝິກແອບທັກສະຊີວິດໃນການດຳລົງຊີວິດປະຈຳວັນເຊັ່ນ:

- ເຄື່ອງສຳຜັດປະເພດຟັງສຽງ: ເຄື່ອງຫຼິ້ນທີ່ມີສຽງດົນຕີ ຫຼື ເພງຮ້ອງ, ສຽງຈາກທຳມະຊາດ, ສຽງລົດ ແລະ ເຄື່ອງຈັກ.
- ເຄື່ອງສຳຜັດປະເພດຈັບບາຍ: ເຄື່ອງຫຼິ້ນທີ່ມີຮູບຊົງຕ່າງໆ, ຄຸນລັກສະນະອ່ອນ-ແຂງ, ໜາ-ບາງ, ກ້ຽງ-ຊາ, ຮ້ອນ-ເຢັນ.
- ເຄື່ອງສຳຜັດປະເພດດົມກິ່ນ: ດອກໄມ້, ເຄື່ອງແຕ່ງກິ່ນ, ໝາກໄມ້.
- ເຄື່ອງສຳຜັດປະເພດຊີມລົດຊາດ: ຜັກ, ໝາກໄມ້, ເຄື່ອງປຸງລົດຊາດ(ເກືອ, ນ້ຳຕານ)ທີ່ມີລົດຊາດຫວານ, ສົ້ມ, ເຄັມ.
- ເຄື່ອງສຳຜັດປະເພດເບິ່ງເຫັນ: ເຄື່ອງຫຼິ້ນ, ເຄື່ອງໃຊ້, ເຄື່ອງນຸ່ງຫົ່ມ, ເຄື່ອງຮຽນ, ຕົວອັກສອນ, ອາຫານ, ຜັກ, ໝາກໄມ້, ສັດລ້ຽງ, ດິນ, ຫີນ. ຊາຍ, ນ້ຳ, ອາກາດ. ຕົ້ນໄມ້, ລົດ, ເຄື່ອງຈັກອື່ນໆ,

3) ເຄື່ອງເຝິກທັກສະການເຄື່ອນໄຫວ

ເຄື່ອງເຝິກທັກສະການເຄື່ອນໄຫວທຸກພາກສ່ວນຂອງຮ່າງກາຍທີ່ມີໃນທຳມະຊາດ ແລະ ສິ່ງທີ່ປະດິດຂຶ້ນເຊັ່ນ: ປະເພດລົດຖີບ, ກົງລໍ້, ບ້ວງລອດ. ໂອນຊາ...

- ສິ່ງທີ່ມີໃນທຳມະຊາດ: ຂັ້ນໄດເຮືອນ, ດິນ, ທ່ອນໄມ້, ຕໍໄມ້ທີ່ສາມາດເຕັ້ນຂ້າມ ຫຼື ໄຕໄດ້.
- ສິ່ງທີ່ປະດິດຂຶ້ນ: ລົດຖີບ, ກົງລໍ້, ບ້ວງລອດ. ໂອນຊາ.

## 1.3 ການເຝິກໃຫ້ເດັກເກັບມ້ຽນເຄື່ອງຫຼິ້ນ

ເດັກມັກຫຼິ້ນ ແລະ ຮຽນຮູ້ຈາກອຸປະກອນທີ່ຫຼາກຫຼາຍຊະນິດ, ແຕ່ການເກັບມ້ຽນເຄື່ອງຫຼິ້ນ, ອຸປະກອນການຮຽນເດັກມັກຈະເມີນເສີຍ, ການໃຫ້ເດັກມີສ່ວນຮ່ວມໃນການເກັບມ້ຽນເຄື່ອງຫຼິ້ນຢ່າງມ່ວນຊື່ນເດັກຈະໄດ້ເຝິກທັກສະຄວາມມີລະບຽບວິໄນ, ຄວາມອົດທົນ, ຄວາມຮັບຜິດຊອບ, ຄວາມສະອາດ, ການແຂ່ງຂັນກັນເກັບມ້ຽນເປັນກິດຈະກຳທີ່ເດັກມັກເຂົ້າຮ່ວມດ້ວຍຄວາມສະມັກໃຈ.

ການເກັບມ້ຽນຄວນປະຕິບັດດັ່ງນີ້:

1). ອອກແບບເຄື່ອງພາຍປະເພດເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ຕ່າງໆໂດຍໃຫ້ເດັກມີສ່ວນຮ່ວມໃນການເລືອກ.

2). ນຳໃຊ້ອຸປະກອນທີ່ເໝາະສົມກັບການບັນຈຸເຄື່ອງຫຼິ້ນ, ເຄື່ອງໃຊ້ແຕ່ລະຊະນິດ.

3). ກຳນົດບ່ອນເກັບມ້ຽນ ແລະ ຈັດວາງໄວ້ບ່ອນເດັກສາມາດເກັບມ້ຽນໄດ້ງ່າຍ.

## 2. ການເລືອກປຶ້ມອ່ານເສີມປະສົບການ

### 2.1 ຄຸນລັກສະນະປຶ້ມອ່ານເສີມປະສົມການສຳລັບເດັກອາຍຸ 5-6 ປີ

ນອກຈາກປຶ້ມຮຽນໃນແຕ່ລະໜ່ວຍການສອນແລ້ວການກຳນົດປຶ້ມອ່ານເສີມປະສົບການສຳລັບເດັກອາຍຸ 5-6 ປີ ທີ່ນຳມາໃຊ້ ເພື່ອພັດທະນາເດັກຮອບດ້ານຢ່າງຕໍ່ເນື່ອງ, ຕ້ອງຍຶດຫຼັກການທີ່ວ່າ: *"ໜຶ່ງແນວຄິດເດັກສາມາດຮຽນຮູ້ໄດ້ຫຼາຍກິດຈະກຳ, ໜຶ່ງກິດຈະກຳເດັກສາມາດຮຽນຮູ້ໄດ້ຫຼາຍທັກສະ ແລະ ຫຼາຍປະສົບການສຳຄັນ"*. ສິ່ງສຳຄັນທີ່ຄວນຄຳນຶງເຖິງຫາກເດັກມີປະສົບການທີ່ດີ ແລະ ມີຄວາມມ່ວນຊື່ນໃນການໃຊ້ປຶ້ມຈະເປັນສ່ວນສຳຄັນທີ່ຊ່ວຍປູກຝັງຈິດສຳນຶກໃຫ້ເດັກມີນິດໄສຮັກການອ່ານໄດ້ເປັນຢ່າງດີ.

ດັ່ງນັ້ນປຶ້ມອ່ານເສີມປະສົບການຄວນມີຫຼາຍແບບໃຫ້ເດັກໄດ້ມີໂອກາດເລືອກ, ໄດ້ສຳຜັດ, ໄດ້ເບິ່ງ ແລະ ອ່ານປຶ້ມເລື້ອຍໆ ຈະເຮັດໃຫ້ເດັກຄຸ້ນເຄີຍກັບການໃຊ້ປຶ້ມ ແລະ ຄຸ້ນເຄີຍກັບຕົວອັກສອນ ເຊິ່ງມີຄຸນລັກສະນະດັ່ງນີ້:

1). ສອດຄ່ອງກັບຫຼັກການຈັດການຮຽນການສອນຕາມຫຼັກສູດການສຶກສາຊັ້ນອະນຸບານ ປີທີ 3.

2). ກົງກັບຈຸດປະສົງ ແລະ ເລື່ອງທີ່ສອນໂດຍໃຫ້ມີປະສົບການພື້ນຖານທີ່ສອດຄ່ອງຕໍ່ການຮຽນຮູ້ຂອງເດັກ.

3). ເໝາະສົມກັບໄວ ແລະ ຄວາມສາມາດຂອງເດັກ.

4). ເໝາະສົມກັບສະພາບແວດລ້ອມຂອງທ້ອງຖິ່ນທີ່ເດັກອາໄສຢູ່.

5). ເນື້ອໃນ, ວິທີການທີ່ນຳມາສະເໜີໃນປຶ້ມຄວນສົ່ງເສີມໃຫ້ເດັກມີໂອກາດເຝິກແອບຄົ້ນຄິດ ແລະ ກ້າສະແດງວາມຄິດເຫັນດ້ວຍຄວາມໝັ້ນໃຈ, ນຳໃຊ້ງ່າຍ ແລະ ໃຊ້ໄດ້ຫຼາຍກິດຈະກຳ.

6). ຮູບພາບຕ້ອງຊັດເຈນເໝາະສົມກັບໄວອາຍຸ, ການອອກແບບຮູບພາບຢ່າງລຽບງ່າຍເຮັດໃຫ້ເລື່ອງຕໍ່ເນື່ອງ ແລະ ຕ້ອງເປັນຮູບພາບທີ່ບໍ່ເຮັດໃຫ້ເດັກເກີດຄວາມຢ້ານ.

7). ຊະນິດເຈ້ຍ, ສີເໝາະສົມກັບສາຍຕາ, ບໍ່ໃຊ້ສີສະທ້ອນແສງ ແລະ ມີຊ່ອງຫວ່າງພັກສາຍຕາ, ມີຂະໜາດເໝາະສົມ.

8). ພາສາທີ່ໃຊ້ຄວນມີລັກສະນະເປັນພາສາທີ່ໃຊ້ໃນຊີວິດປະຈຳວັນເຊັ່ນ: ພາສາສັນຍະລັກ, ຄຳຄ່ອງ (ກາບກອນ) ທີ່ສົ່ງເສີມໃຫ້ເດັກມີຈິນຕະນາການ.

9). ຈຳນວນໜ້າ ແລະ ຈຳນວນຄຳສັບເໝາະສົມກັບໄວ.

10). ຂະໜາດຂອງຕົວອັກສອນເໝາະສົມກັບຂະໜາດຂອງຮູບເຫຼັ້ມ.

### 2.2 ເງື່ອນໄຂການເລືອກປຶ້ມອ່ານເສີມປະສົບການ

1). ເລືອກປຶ້ມນິທານ, ກາບກອນ, ເພງ ແລະ ອື່ນໆທີ່ສົ່ງເສີມການຮຽນຮູ້ຂອງເດັກອະນຸບານ, ເຊິ່ງໄດ້ຮວບຮວມຈາກການພິຈາລະນາຄັດເລືອກຂອງໜ່ວຍງານທີ່ກ່ຽວຂ້ອງ.

2). ເລືອກປຶ້ມອ່ານເສີມປະສົບການທີ່ສົ່ງເສີມ ແລະ ພັດທະນາຜູ້ຮຽນຕາມມາດຖານທີ່ກຳນົດໄວ້ໃນຫຼັກສູດຊັ້ນອະນຸບານສຶກສາ ປີທີ 3.

**ອະທິບາຍຄຳສັບ**

1. ເຈຕະຄະຕິ: ທ່າທີ ຫຼື ຄວາມຮູ້ສຶກຂອງບຸກຄົນຕໍ່ສິ່ງໃດສິ່ງໜຶ່ງ.
2. ຄວາມສຳພັນ: ພົວພັນ, ຜູກພັນ, ກ່ຽວຂ້ອງ.
3. ກະຕືລືລົ້ນ: ຢາກເຮັດຢາກທຳ, ຫ້າວຫັນວ່ອງໄວ, ຂຶ້ນໃຈຢາກເຮັດ.
4. ທັດສະນະຄະຕິ: ແນວຄວາມຄິດເຫັນ.
5. ຈິນຕະນາການ: ອາການຄຶດ, ຄວາມຄຶດ, ແນວຄິດ.
6. ພັດທະນາການ: ການທຳຄວາມຈະເລີນ, ການປ່ຽນແປງໃນທາງກ້າວໜ້າ, ການພັດທະນາໃນທາງຈະເລີນຂຶ້ນ.
7. ກິດຈະກຳສິລະປະສ້າງສັນກ່ຽວກັບງານສິລະປະສຶກສາເຊັ່ນ: ການແຕ້ມ-ທາສີ, ການປັ້ນ, ການພິມ, ການພັບ, ການຈີກ-ຕິດ, ພັບ, ຂີດ-ຂຽນພະຍັນຊະນະ, ຕົວເລກຕາມຮອຍຈ້ຳທີ່ສິ່ງເສີມ.
8. ກິດຈະກຳວົງມົນ: ກິດຈະກຳທີ່ຈັດໃຫ້ເດັກໄດ້ຟັງ, ເວົ້າ, ສັງເກດ, ຄິດ ແລະ ປະຕິບັດການທົດລອງເພື່ອໃຫ້ເກີດຄວາມຄິດລວມຍອດ ແລະ ເພີ່ມທັກສະຕ່າງໆ.
9. ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ກິດຈະກຳເຄື່ອນໄຫວທີ່ຮ່າງກາຍ ແລະ ຈິດໃຈມີປະຕິກິລິຍາຕອບສະໜອງຕໍ່ຈັງຫວະ ແລະ ສຽງດົນຕີ.
10. ກິດຈະກຳຫຼິ້ນຕາມມຸມ: ກິດຈະກຳທີ່ຈັດໃຫ້ເດັກໄດ້ຫຼິ້ນກັບສື່ສິ່ງພິມ, ອຸປະກອນ ແລະ ເຄື່ອງຫຼິ້ນຢ່າງອິດສະລະໃນມຸມການຫຼິ້ນ, ເດັກໄດ້ຮຽນຮູ້ປະສົບການຊີວິດຈາກການຫຼິ້ນຕາມມຸມ, ເດັກໄດ້ພັດທະນາຄວາມຄິດສ້າງສັນໄດ້ມ່ວນຊື່ນກັບການຫຼິ້ນ ທີ່ຕອບສະໜອງຄວາມຕ້ອງການຕາມທຳມະຊາດຂອງເດັກ.
11. ກິດຈະກຳຫຼິ້ນກາງແຈ້ງ: ກິດຈະກຳທີ່ຈັດໃຫ້ເດັກໄດ້ມີໂອກາດເຄື່ອນໄຫວຮ່າງກາຍ ແລະ ປະກອບກິດຈະກຳການຫຼິ້ນຕ່າງໆໃນບ່ອນທີ່ໂລ່ງແຈ້ງເຊັ່ນ: ໃນເດີ່ນຫຼິ້ນ, ຕາມຮົ່ມຕົ້ນໄມ້ ຫຼື ໃນຫ້ອງຮຽນ.
12. ກິດຈະກຳເກມການສຶກສາກິດຈະກຳການຫຼິ້ນທີ່ພັດທະນາຜູ້ຮຽນໃນການຄົ້ນຄິດຜ່ານຮູບແບບຂອງເກມຕ່າງໆ ເຊັ່ນ: ເກມຈັບຄູ່, ເກມລຽນລຳດັບ, ຕໍ່ຮູບພາບລອດໂຕ ຫຼື ໂດມິໂນ.
13. ກິດຈະກຳທີ່ເນັ້ນເດັກເປັນໃຈກາງ: ກິດຈະກຳທີ່ຄູອອກແບບໂດຍເນັ້ນໃຫ້ເດັກໄດ້ຮຽນຮູ້ຈາກເລື່ອງທີ່ຕົນເອງຕ້ອງການຜ່ານກິດຈະກຳທາງກາຍເຊັ່ນ: ການສຳຫຼວດ, ສັງເກດ, ການຢິບ, ການຄີບ ແລະ ຈັບບາຍ, ດົມກິ່ນ, ຟັງສຽງ, ຊີມລົດ, ການທົດລອງປະຕິບັດ, ການຄິດແກ້ໄຂບັນຫາ ໂດຍຄູເປັນຜູ້ອອກແບບສະຖານະການ ຫຼື ບັນຫາທີ່ຕັ້ງເອົາໄວ້ລ່ວງໜ້າ ແລະ ຄູຄອຍດູແລແນະນຳການຮຽນຮູ້ໃຫ້ເດັກ.
14. ບຼັອກ: ເຄື່ອງຫຼິ້ນທີ່ມີຮູບຊົງກັບ, ກ້ອນ, ທ່ໍ ແລະ ໜ່ວຍມົນ.

**ເອກະສານອ້າງອີງ**


1. ຫຼັກສູດອະນຸບານ ປີ 2012.
2. ປຶ້ມແຜນການຈັດປະສົບການອະນຸບານ 1 ປີ 1999.
3. ປຶ້ມຕິດຕາມພັດທະນາການເດັກອະນຸບານ ປີ 1999.
4. ປຶ້ມຄູ່ມືຄູການຈັດກິດຈະກຳການສອນຊັ້ນອະນຸບານ ປີ 2005.
5. ປຶ້ມຕິດຕາມພັດທະນາການຂອງນັກຮຽນຫ້ອງກຽມປະຖົມ ປີ 2010.
6. ປຶ້ມຮຽກຊື່ ແລະ ໃຫ້ຄະແນນນັກຮຽນອະນຸບານ ປີ 2010.
7. ປຶ້ມຕິດຕາມສຸຂະພາບແມ່ ແລະ ເດັກ, ກະຊວງສາທາລະນະສຸກໂຮງໝໍແມ່ ແລະ ເດັກ ປີ 2012.